# ພຣະທັມເຢເຣມີຢາ


| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 | 32 |
| 33 | 34 | 35 | 36 | 37 | 38 | 39 | 40 |
| 41 | 42 | 43 | 44 | 45 | 46 | 47 | 48 |
| 49 | 50 | 51 | 52 | | | | |


## ເຢເຣມີຢາ

JEREMIAH

### 1

Chapter 1

1 ຕໍ່ໄປນີ້ແມ່ນຖ້ອຍຄໍາ ແລະການກະທໍາຂອງເຢເຣມີຢາ ບຸດຂອງຮີນກີຢາ ຜູ້ເປັນປະໂຣຫິດຄົນນຶ່ງໃນເມືອງອານາໂທດ
ໃນແຜ່ນດິນຂອງເບັນຢາມິນ
2 ພຣະຜູ້ເປັນເຈົ້າໄດ້ຊົງກ່າວຕໍ່ເຢເຣມີຢາໃນຣັຊການໂຢຊີຢາ ໂອຣົດຂອງອາໂມນ ກະສັດແຫ່ງຢູດາໃນປີທີສິບສາມ
ຂອງຣັຊການນີ້
3 ແລະມີມາໃນຣັຊການຂອງເຢຮົວອາກິມ ໂອຣົດຂອງໂຢຊີຢາກະສັດແຫ່ງຢູດາ ຈົນເຖິງປາຍປີທີສິບເອັດແຫ່ງຣັຊການ
ເຊເດກີຢາ ໂອຣົດຂອງໂຢຊີຢາກະສັດແຫ່ງຢູດາ ຈົນເຖິງການກວາດເຢຣູຊາເລັມໄປເປັນຊະເລີຍໃນເດືອນທີຫ້າ

Jeremiah’s call and Commission

4 ພຣະຄໍາຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
5 “ເຮົາໄດ້ຮູ້ຈັກເຈົ້າ ກ່ອນທີ່ເຮົາໄດ້ເຮັດໃຫ້ເຈົ້າເປັນຕົວຕົນຢູ່ໃນທ້ອງແມ່ ເຮົາໄດ້ເລືອກເຈົ້າໄວ້ແລ້ວ ກ່ອນເຈົ້າເກີດ
ເຮົາໄດ້ແຕ່ງຕັ້ງເຈົ້າເປັນຜູ້ບໍຣິສຸດແລ້ວ ແລະໄດ້ສະຖາປະນາໃຫ້ເຈົ້າເປັນຜູ້ປະກາດພຣະທັມແກ່ນາໆຊາດ”
6 ແລ້ວຂ້າພະເຈົ້າໄດ້ທູນຕອບວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງບໍ່ຮູ້ວ່າຈະເວົ້າຢ່າງໃດ ເພາະວ່າ ຂ້າພຣະອົງຍັງ
ນ້ອຍ”
7 ແຕ່ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ, “ຢ່າເວົ້າວ່າເຈົ້າຍັງນ້ອຍ ເພາະວ່າເຮົາຈະໃຊ້ເຈົ້າໄປຫາປະຊາຊົນ ແລ້ວ
ຈົ່ງບອກທຸກສິ່ງທີ່ເຮົາຈະສັ່ງເຈົ້າແກ່ພວກເຂົາ
8 ເຈົ້າຢ່າສູ່ຢ້ານຄົນເຫລົ່ານັ້ນ ເພາະວ່າເຮົາຈະຢູ່ປົກປັກຮັກສາເຈົ້າ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ”
9 ຄັນແລ້ວ ພຣະຜູ້ເປັນເຈົ້າໄດ້ຊົງເດ່ພຣະຫັດມາໃສ່ປາກຂ້າພະເຈົ້າ ແລະຊົງກ່າວຕໍ່ຂ້າພະເຈົ້າວ່າ, “ເບິ່ງດູ ເຮົາໄດ້ເອົາ
ຄໍາເວົ້າຂອງເຮົາໃສ່ໃນປາກຂອງເຈົ້າແລ້ວ
10 ມື້ນີ້ເຮົາໃຫ້ເຈົ້າມີອໍານາດເຫນືອປະຊາຊາດ ແລະຣາຊອານາຈັກທັງຫລາຍ ເພື່ອຖອນຮາກແລະຮື້ຖົ້ມເສັຽ ເພື່ອທໍາ
ລາຍແລະເຮັດໃຫ້ລົ້ມລົງ ເພື່ອກໍ່ຂຶ້ນແລະປູກຝັງໄວ້”
11 ພຣະຜູ້ເປັນເຈົ້າຊົງຖາມຂ້າພະເຈົ້າວ່າ, “ເຢເຣມີຢາເອີຍ ເຈົ້າໄດ້ເຫັນຫຍັງ” ຂ້າພະເຈົ້າໄດ້ທູນຕອບວ່າ, “ຂ້າພຣະອົງ
ໄດ້ເຫັນງ່າຂອງກົກອັລມັນ”

12 ແລ້ວພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ, “ຖືກແລ້ວ ເຮົາກຳລັງເຝົ້າບັງຄັບໃຫ້ຄຳເວົ້າຂອງເຮົາເປັນຈິງຂຶ້ນ”
13 ຕໍ່ມາພຣະຜູ້ເປັນເຈົ້າຊົງຖາມຂ້າພະເຈົ້າວ່າ, “ເຈົ້າໄດ້ເຫັນຫຍັງອີກບໍ” ຂ້າພະເຈົ້າໄດ້ທູນຕອບວ່າ, “ຂ້າພຣະອົງໄດ້
ເຫັນຫມໍ້ຫນ່ວຍນຶ່ງຢູ່ທາງທິດເຫນືອ ມັນກຳລັງຟົດແລະປາກຫມໍ້ນັ້ນປິ່ນມາທາງພີ້”
14 ແລ້ວພຣະອົງຊົງກ່າວຕໍ່ຂ້າພະເຈົ້າວ່າ, “ເຫດຮ້າຍຈະເກີດຂຶ້ນທາງທິດເຫນືອ ແລ້ວຈະລຸກລາມເຜົາຜານຄົນທັງປວງທີ່
ອາສັຍຢູ່ໃນແຜ່ນດິນນີ້
15 ຈົ່ງຟັງສິ່ງທີ່ເຮົາກ່າວ ຄືເຮົາຈະເອີ້ນຊົນຊາດທີ່ຢູ່ທາງເຫນືອນັ້ນມາຫມົດ ກະສັດທັງຫລາຍຂອງເຂົາກໍຈະມາ ກະສັດ
ແຕ່ລະອົງຈະຕັ້ງກອງບັນຊາການຂອງຕົນໄວ້ຕໍ່ຫນ້າປະຕູກຸງເຢຣູຊາເລັມຕິດກັບກຳແພງ ແລະຕໍ່ຫນ້າປະຕູຫົວເມືອງ
ອື່ນໆໃນຣາຊອານາຈັກຢູດາ
16 ເຮົາຈະລົງໂທດຄົນທັງຫລາຍດ້ວຍວ່າເຂົາໄດ້ເຮັດບາບ ຄືໄດ້ປະຖິ້ມເຮົາ ໄດ້ເຜົາເຄື່ອງຫອມບູຊາຖວາຍແກ່ພຣະອື່ນ
ແລະໄດ້ຂາບໄຫວ້ຮູບໂຄຣົບທີ່ເຂົາເອງສ້າງຂຶ້ນ
17 ເຈົ້າຈົ່ງກ້າຫານ ແລະຈົ່ງໄປບອກທຸກໆສິ່ງທີ່ເຮົາສັ່ງເຈົ້ານັ້ນແກ່ເຂົາ ບັດນີ້ ເຈົ້າຢ່າສູ່ຢ້ານເຂົາ ບໍ່ດັ່ງນັ້ນເຮົາຈະເຮັດໃຫ້
ເຈົ້າຢ້ານເຂົາຫລາຍຂຶ້ນເມື່ອເຈົ້າຢູ່ນຳເຂົາ
18 ຈົ່ງຟັງ ເຢເຣມີຢາເອີຍ ຄືທຸກໆຄົນໃນປະເທດນີ້ ທັງກະສັດຂອງຊາວຢູດາ ຂ້າຣາຊການ ປະໂຣຫິດ ແລະປະຊາຊົນ
ທັງປວງ
19 ເຂົາທັງຫລາຍຈະຕໍ່ສູ້ເຈົ້າ ແຕ່ມື້ນີ້ເຮົາຈະເຮັດໃຫ້ເຈົ້າສາມາດຕໍ່ສູ້ຂັດຂວາງເຂົາໄດ້ ເຈົ້າຈະເປັນເຫມືອນນະຄອນທີ່ມີ
ການປ້ອງກັນຢ່າງດີ ຈະເປັນເຫມືອນເສົາເຫລັກ ແລະກຳແພງທອງເຫລືອງ ພວກເຂົາຈະບໍ່ຊະນະເຈົ້າ ເພາະວ່າເຮົາ
ຈະຢູ່ປົກປັກຮັກສາເຈົ້າ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ”

## 2 ການບໍ່ເຊື່ອຟັງຂອງຊາວອິສຣາເອນ

God Pleads with Israel to Repent

1 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ, “
2 ຈົ່ງໄປປະກາດໃສ່ຫູຂອງກຸງເຢຣູຊາເລັມວ່າ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ວ່າ ເຮົາລະນຶກເຖິງຄວາມຊື່ສັດ ຄາວເມື່ອ
ເຈົ້າຍັງຫນຸ່ມ ລະນຶກເຖິງຄວາມຮັກທີ່ເຈົ້າມີຕໍ່ເຮົາຄາວມື້ແຕ່ງງານ ພວກເຈົ້າຕິດຕາມເຮົາໄປທົ່ວຖິ່ນກັນດານ ຄືພູມີ
ປະເທດທີ່ບໍ່ໄດ້ປູກຝັງ
3 ຊາວອິສຣາເອນເອີຍ ໃນເວລານັ້ນພວກເຈົ້າເປັນຂອງເຮົາທັງຫມົດ ເປັນຫມາກຜົນອັນດີທີ່ສຸດຈາກການເກັບກ່ຽວ
ຂອງເຮົາ ເຮົາເຮັດໃຫ້ທຸກຄົນທີ່ທຳຮ້າຍເຈົ້າໄດ້ຮັບຄວາມເດືອດຮ້ອນ ແລະໃຫ້ເຂົາໄດ້ຮັບຄວາມທຸກຍາກລຳບາກ
ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ”

**ບາບຂອງບັນພະບຸຣຸດຊາວອິສຣາເອນ**

4 ເຊື້ອສາຍຂອງຢາໂຄບ ແລະບັນດາຄອບຄົວອິສຣາເອນເອີຍ ຈົ່ງຟັງຖ້ອຍຄຳຂອງພຣະຜູ້ເປັນເຈົ້າເທີ້ນ
5 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ບັນພະບຸຣຸດຂອງພວກເຈົ້າເຫັນວ່າເຮົາໄດ້ເຮັດຜິດຫຍັງ ຈຶ່ງໄດ້ພາກັນຫນີຈາກໄປ ພວກ
ເຂົາໄດ້ນັບຖືຮູບອັນໄຮ້ປໂຍດ ຈຶ່ງກາຍເປັນຄົນທີ່ບໍ່ມີປໂຍດ
6 ເຖິງແມ່ນວ່າເຮົາໄດ້ຊ່ອຍເຂົາໃຫ້ອອກຈາກປະເທດເອຢິບ ໄດ້ນຳພາເຂົາຜ່ານຖິ່ນກັນດານ ຜ່ານປະເທດທີ່ມີພູແລະ
ໂສກເຫວ ຜ່ານປະເທດທີ່ແຫ້ງແລ້ງແລະມີອັນຕະລາຍ ໃນບ່ອນທີ່ບໍ່ມີຄົນຜ່ານໄປແລະອາສັຍຢູ່ ພວກເຂົາກໍບໍ່ໄດ້ເອົາ
ໃຈໃສ່ໃນເຮົາ
7 ເຮົາໄດ້ນຳພວກເຂົາເຂົ້າໄປຢູ່ໃນແຜ່ນດິນທີ່ອຸດົມສົມບູນ ເພື່ອກິນຜົນລະປູກແລະສິ່ງອື່ນໆໃນແຜ່ນດິນນັ້ນ ແຕ່ພວກ
ເຂົາໄດ້ເຂົ້າມາສໍ້ໂກງແຜ່ນດິນຂອງເຮົາ ໄດ້ເຮັດໃຫ້ແຜ່ນດິນທີ່ເຮົາຍົກໃຫ້ແກ່ເຂົາເສື່ອມເສັຽໄປ

8 ພວກປະໂຣຫິດບໍ່ໄດ້ສົນໃຈໃນພຣະຜູ້ເປັນເຈົ້າ ພວກນັກທັມກໍບໍ່ຮູ້ຈັກເຮົາ ຜູ້ປົກຄອງກໍເປັນກະບົດຕໍ່ສູ້ເຮົາ ຜູ້ປະກາດ
ພຣະທັມກໍປະກາດໃນພຣະນາມຂອງພຣະບາອານ ແລະໄດ້ຂາບໄຫວ້ຮູບພຣະທີ່ຊ່ອຍຫຍັງບໍ່ໄດ້

**ພຣະຜູ້ເປັນເຈົ້າຊົງພິພາກສາໂທດໄພ່ພົນຂອງພຣະອົງ**

9 ດ້ວຍເຫດນີ້ ເຮົາພຣະຜູ້ເປັນເຈົ້າຈຶ່ງຈະນຳຄະດີມາຕໍ່ສູ້ໄພ່ພົນຂອງເຮົາອີກ ແລະມາຕໍ່ສູ້ພວກຫລານເຫລັນຂອງເຂົາ
ດ້ວຍ

10 ຈົ່ງຂ້າມໄປເຖິງເກາະໄຊປຣັສ ແລ້ວກໍເບິ່ງ ຫລືໃຊ້ຄົນໄປເຖິງເມືອງເກດາຣ໌ ແລ້ວພິຈາຣະນາເບິ່ງຄັກໆວ່າເຄີຍມີຫຍັງ
ເກີດຂຶ້ນເຫມືອນສິ່ງນີ້ຫລືບໍ່

11 ໃນໂລກນີ້ມີຊາດໃດແດ່ເຄີຍມີພຣະຂອງຕົນ ເຖິງແມ່ນວ່າພຣະເຫລົ່ານັ້ນບໍ່ແມ່ນພຣະແທ້ກໍດີ ແຕ່ໄພ່ພົນຂອງເຮົາໄດ້
ປະເຮົາແລ້ວ ຄືປະພຣະເຈົ້າອົງນຳກຽດມາໃຫ້ເຂົາ ໄປຫາພຣະທີ່ຊ່ອຍເຫລືອຫຍັງບໍ່ໄດ້

12 ດັ່ງນັ້ນ ເຮົາພຣະຜູ້ເປັນເຈົ້າຈຶ່ງສັ່ງໃຫ້ທ້ອງຟ້າຫວັ່ນໄຫວຢ່າງຮຸນແຮງ ເພື່ອໃຫ້ຄົນເກີດການອັສຈັນແລະຕື່ນຕົກໃຈ

13 ໄພ່ພົນຂອງເຮົາໄດ້ເຮັດບາບສອງຢ່າງຄື ໄດ້ປະຖິ້ມເຮົາຜູ້ເປັນນ້ຳບໍ່ທີ່ມີຊີວິດ ແລະໄດ້ຂຸດນ້ຳສ້າງສຳລັບຕົນເອງ ແຕ່
ສ້າງນັ້ນບໍ່ມີນ້ຳ"

**ຜົນແຫ່ງຄວາມບໍ່ເຊື່ອຟັງຂອງຊາວອິສຣາເອນ**

14 "ຊາວອິສຣາເອນບໍ່ໄດ້ເປັນຂ້ອຍທາດ ບໍ່ໄດ້ເກີດມາເປັນຂ້ອຍທາດ ຖ້າຢ່າງນັ້ນເປັນຫຍັງສັດຕຣູຈຶ່ງຕາມນ່າຈັບເຂົາ

15 ສັດຕຣູໄດ້ຮ້ອງແຜດສຽງໃສ່ເຂົາເຫມືອນດັ່ງສິງ ພວກເຂົາໄດ້ແຜດສຽງໃສ່ຢ່າງຮຸນແຮງ ແລະໄດ້ເຮັດໃຫ້ແຜ່ນດິນຂອງ
ອິສຣາເອນເປັນຖິ່ນກັນດານ ຫົວເມືອງຂອງເຂົາກໍຖືກທຳລາຍແລະບໍ່ມີຄົນອາສັຍຢູ່

16 ນອກຈາກນີ້ຊາວເມືອງເມັມຟິສ ແລະເມືອງຕາປານເຣສ ຍັງໄດ້ທຸບຕີຫົວຂອງຊາວອິສຣາເອນແຕກ

17 ພວກເຈົ້າໄດ້ນຳສິ່ງນີ້ມາໃສ່ພວກເຈົ້າເອງ ໃນຂນະທີ່ເຮົາພາເຈົ້າໄປຕາມທາງ ເຈົ້າໄດ້ປະຖິ້ມເຮົາ ຄືພຣະຜູ້ເປັນເຈົ້າ
ຂອງເຈົ້າ

18 ບັດນີ້ ເຈົ້າຫວັງປໂຍດອັນໃດທີ່ຈະໄປປະເທດເອຢິບ ຫວັງຈະດື່ມນ້ຳໃນແມ່ນ້ຳນິນບໍ ຫວັງປໂຍດອັນໃດທີ່ຈະໄປປະ
ເທດອັສຊີເຣັຽ ຫວັງຈະດື່ມນ້ຳໃນແມ່ນ້ຳເອີຟຣາດບໍ

19 ພວກເຈົ້າຈະຖືກໂທດຍ້ອນຄວາມຊົ່ວຂອງເຈົ້າເອງ ແລະຍ້ອນປະຖິ້ມເຮົາ ທີ່ພວກເຈົ້າປະຖິ້ມພຣະຜູ້ເປັນເຈົ້າພຣະ
ເຈົ້າຂອງພວກ ເຈົ້າ ແລະບໍ່ຢ້ານກົວເຮົາອີກຕໍ່ໄປນັ້ນ ພວກເຈົ້າຈະຮູ້ດອກວ່າມັນຂົມຂື່ນແລະຊົ່ວຮ້າຍພຽງໃດ ເຮົາພ
ຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາໄດ້ກ່າວດັ່ງນີ້ແຫລະ"

**ອິສຣາເອນບໍ່ຍອມຂາບໄຫວ້ພຣະຜູ້ເປັນເຈົ້າ**

20 "ເຫິງນານມາແລ້ວທີ່ເຈົ້າບໍ່ຍອມຢູ່ໃຕ້ອຳນາດຂອງເຮົາ ບໍ່ຍອມເຊື່ອຟັງເຮົາແລະເວົ້າວ່າ ຂ້າພະເຈົ້າຈະບໍ່ຮັບໃຊ້ພຣະ
ອົງ ແຕ່ຢູ່ເທິງພູແລະໃຕ້ກົກໄມ້ສັກສິດ ພວກເຈົ້າໄດ້ເຮັດປມາດເຫມືອນຍິງໂສເພນີ

21 ເຮົາໄດ້ປູກເຈົ້າໄວ້ເຫມືອນເຄືອອະງຸ່ນພັນດີ ເຫມືອນແນວພັດຢ່າງດີທີ່ສຸດ ແຕ່ແລ້ວເປັນຫຍັງເຈົ້າຈຶ່ງກາຍເປັນ
ເຫມືອນອະງຸ່ນພັນບໍ່ດີທີ່ເຮົາບໍ່ສົນໃຈອີກຕໍ່ໄປແລ້ວ

22 ເຖິງແມ່ນເຈົ້າຈະລ້າງຕົວຂອງເຈົ້າດ້ວຍນ້ຳຢາ ແລະໃສ່ສະບູຫລາຍໆ ເຮົາກໍຍັງເຫັນຄວາມເປິະເປື້ອນອັນເນື່ອງມາ
ຈາກບາບຂອງເຈົ້າຢູ່ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ

23 ເຈົ້າຈະເວົ້າໄດ້ຢ່າງໃດວ່າບໍ່ໄດ້ເຮັດຜິດ ແລະເວົ້າວ່າເຄີຍຂາບໄຫວ້ພຣະບາອານ ຈົ່ງຄິດເບິ່ງດູວ່າ ເຈົ້າໄດ້ເຮັດບາບ
ໃນຮ່ອມພູຢ່າງໃດແດ່ ຈົ່ງສຳນຶກໃນສິ່ງທີ່ໄດ້ເຮັດນັ້ນ ເຈົ້າເປັນເຫມືອນອູດແມ່ທີ່ກຳລັງຄຶກຄະນອງທີ່ປ່ອຍໃຫ້ມັນໄປ
ໄດ້ຕາມໃຈ

24 ເຈົ້າເປັນເຫມືອນລໍແມ່ທີ່ແລ່ນຖືເຊິງຢູ່ໃນຖິ່ນກັນດານ ເມື່ອມັນຢາກຖືເຊິງຢ່າງຮຸນແຮງ ໃຜຈະບັງຄັບມັນໄດ້ ລໍເຖິກກໍ
ປະສົມພັນກັບມັນໄດ້ງ່າຍ ລໍແມ່ຈະປາກົດໃຫ້ເຫັນເລື້ອຍໆໃນຣະດູຕິດເຊິງ

25 ຢ່າແລ່ນຈົນເກີບເຊັ່ງ ແລະຄໍແຫ້ງ ແຕ່ເຈົ້າໄດ້ເວົ້າວ່າ, “ບໍ່ເປັນຫຍັງດອກ ຂ້າພະເຈົ້າຍິນດີນັບຖືພຣະຕ່າງປະເທດແລະ
ຈະຕິດຕາມໄປ”
26 “ຂະໂມຍນັ້ນເມື່ອຖືກຈັບຍ່ອມລະອາຍສັນໃດ ພວກເຈົ້າປະຊາຊົນອິສຣາເອນທັງຫມົດຮວມທັງກະສັດ ເຈົ້ານາຍ ປະ
ໂຣຫິດ ແລະຜູ້ປະກາດພຣະທັມກໍຈະລະອາຍສັນນັ້ນ
27 ພວກເຈົ້າຈະລະອາຍທີ່ເວົ້າກັບກົກໄມ້ວ່າ, “ອາດຍາເປັນພໍ່ຂອງຂ້ານ້ອຍ” ແລະເວົ້າກັບກ້ອນຫີນວ່າ, “ອາດຍາເປັນ
ແມ່ຂອງຂ້ານ້ອຍ” ເຣື່ອງນີ້ຈະເກີດຂຶ້ນຍ້ອນເຈົ້າປະຖິ້ມເຮົາ ແລະບໍ່ຕ່າວມາຫາເຮົາ ແຕ່ເມື່ອເຈົ້າຕົກທຸກໄດ້ຍາກ ເຈົ້າ
ຈະຮ້ອງຂໍໃຫ້ເຮົາມາຊ່ອຍ
28 ພຣະທີ່ເຈົ້າເຮັດຂຶ້ນສຳລັບຕົວເອງນັ້ນຢູ່ໃສ ເມື່ອຕົກທຸກໄດ້ຍາກ ຈົ່ງໃຫ້ມັນຊ່ອຍຕີ້ຖ້າວ່າຈະຊ່ອຍໄດ້ ຊາວຢູດາເອີຍ
ພວກເຈົ້ານັ້ນມີພຣະຫລາຍທໍ່ກັບມືເມືອງ
29 ເຮົາພຣະຜູ້ເປັນເຈົ້າຂໍຖາມວ່າ ເປັນຫຍັງເຈົ້າຈຶ່ງຮ້ອງທຸກຕໍ່ເຮົາ ພວກເຈົ້າທັງຫມົດໄດ້ກະບົດຕໍ່ສູ້ເຮົາ
30 ເຮົາໄດ້ລົງໂທດເຈົ້າ ແຕ່ພວກເຈົ້າບໍ່ຫລາບ ເຈົ້າບໍ່ຍອມຮັບເອົາການດັດສັນດານນັ້ນ ແລະໄດ້ຂ້າຜູ້ປະກາດພຣະທັມ
ຂອງຕົນເຫມືອນສິງຕົວຮ້າຍກາດ
31 ຄົນຣຸ່ນນີ້ເອີຍ ພວກເຈົ້າທັງຫລາຍຈົ່ງຕັ້ງໃຈຟັງສິ່ງທີ່ເຮົາຈະເວົ້າ ເຮົາເປັນເຫມືອນຖິ່ນກັນດານແກ່ອິສຣາເອນຫລື
ແລະເຫມືອນແຜ່ນດິນທີ່ເປັນອັນຕະລາຍຕໍ່ພວກເຈົ້າບໍ ໄພ່ພົນຂອງເຮົາ ເປັນຫຍັງພວກເຈົ້າຈຶ່ງເວົ້າວ່າ ຈະເຮັດຕາມ
ໃຈຂອງຕົນ ແລະຈະບໍ່ມາຫາເຮົາອີກຕໍ່ໄປ”
32 ຍິງສາວຈະລືມເຄື່ອງເອ້ຂອງຕົນໄດ້ບໍ ແລະເຈົ້າສາວຈະລືມເຄື່ອງແຕ່ງຕົວໃນງານສົມຣົດໄດ້ບໍ ແຕ່ໄພ່ພົນຂອງເຮົາ
ໄດ້ລືມເຮົາເປັນເວລາດົນນານແລ້ວ
33 ເຈົ້າຮູ້ຈັກວິທີຍົວະເຍົ້າໃຫ້ຄົນມາຫລົງຮັກ ແມ່ນແຕ່ແມ່ຈ້າງກໍຍັງຮຽນນຳເຈົ້າ
34 ເສື້ອຂອງເຈົ້າໄດ້ເປິະເປື້ອນດ້ວຍເລືອດຂອງຄົນທຸກຍາກທີ່ບໍ່ມີຄວາມຜິດ ແລະເລືອດຂອງຄົນທີ່ບໍ່ເຄີຍລັກຂອງໃນ
ເຮືອນເຈົ້າ
35 ແຕ່ທັງໆທີ່ເປັນດັ່ງນີ້ພວກເຈົ້າກໍຍັງເວົ້າວ່າ, “ຕົນບໍ່ມີຄວາມຜິດ ແລະວ່າພຣະຜູ້ເປັນເຈົ້າບໍ່ຄຽດຮ້າຍພວກເຈົ້າອີກຕໍ່ໄປ
ແຕ່ເຮົາພຣະຜູ້ເປັນເຈົ້າຈະລົງໂທດເຈົ້າຍ້ອນເຈົ້າເວົ້າວ່າບໍ່ໄດ້ເຮັດບາບ
36 ດ້ວຍເຫດໃດເຈົ້າຈຶ່ງປ່ຽນເສັ້ນທາງເດີນຢ່າງງ່າຍດາຍ ເຈົ້າຈະຜິດຫວັງຍ້ອນປະເທດເອຢິບ ເຫມືອນເຄີຍຜິດຫວັງ
ຍ້ອນປະເທດອັສຊີເຣັຽມາແລ້ວ
37 ເຈົ້າຈະໄດ້ອອກໄປຈາກເອຢິບດ້ວຍ ຈະລະອາຍຄົນທັງຫລາຍຈົນເບິ່ງຫນ້າໃຜບໍ່ໄດ້ ເຮົາພຣະຜູ້ເປັນເຈົ້າໄດ້ປະຖິ້ມ
ຄົນທັງຫລາຍທີ່ເຈົ້າໄວ້ໃຈ ແລະພວກເຂົາຈະບໍ່ນຳຄວາມສຳເຣັດມາສູ່ເຈົ້າ”

## 3 ຄວາມບໍ່ສັດຊື່ຂອງອິສຣາເອນ

Unfaithful Israel

1 ຖ້າຊາຍຄົນໃດຢ່າຮ້າງພັຣຍາຂອງຕົນ ແລະນາງກໍໄປຈາກລາວເສັຽ ແລະໄປເປັນພັຣຍາຂອງຊາຍອີກຄົນນຶ່ງ ລາວຈະ
ກັບໄປຫານາງຫລື ແຜ່ນດິນນັ້ນຈະບໍ່ເປິະເປື້ອນຫລາຍຫລື ເຈົ້າໄດ້ຫລິ້ນຊູ້ກັບຄົນຮັກຫລາຍແລ້ວ ແລະເຈົ້າຈະກັບມາ
ຫາເຮົາຫລື ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ
2 ຈົ່ງແຫງນຫນ້າຂຶ້ນສູ່ຈອມພູສູງພຸ້ນດູ ມີບ່ອນໃດແດ່ທີ່ບໍ່ມີຄົນມານອນ ເຈົ້າໄດ້ນັ່ງຄອຍຄົນຮັກຂອງເຈົ້າຢູ່ທີ່ຮິມທາງ
ຢ່າງຄົນອາຣັບໃນຖິ່ນກັນດານ ເຈົ້າໄດ້ກະທຳໃຫ້ແຜ່ນດິນເປິະເປື້ອນດ້ວຍການເປັນຍິງແມ່ຈ້າງຢ່າງຊົ່ວຮ້າຍຂອງເຈົ້າ
3 ເຫດສັນນັ້ນຝົນຈຶ່ງບໍ່ໄດ້ຕົກຕາມຣະດູການ ແລະຝົນປາຍຣະດູຈຶ່ງຂາດໄປ ແຕ່ເຈົ້າມີຫນ້າຜາກຂອງຍິງແມ່ຈ້າງ ເຈົ້າ
ປະຕິເສດບໍ່ຍອມອາຍ

4 ບັດນີ້ເຈົ້າຮ້ອງເອີ້ນເຮົາບໍ່ແມ່ນຫລືວ່າ, “ພຣະບິດາຂອງຂ້າພຣະອົງ ພຣະອົງຊົງເປັນສະຫາຍຕັ້ງແຕ່ຂ້າພຣະອົງຍັງ
ເປັນສາວ
5 ພຣະອົງຈະຊົງພຣະພິໂຣດຢູ່ເປັນນິດຫລື ພຣະອົງຈະຊົງພຣະພິໂຣດຢູ່ຈົນເຖິງທີ່ສຸດປາຍຫລື “ເຈົ້າໄດ້ເວົ້າແລ້ວ ແຕ່
ເຈົ້າກໍຍັງກະທຳຄວາມຊົ່ວຊ້າທຸກຢ່າງຊຶ່ງເຈົ້າກະທຳໄດ້”

**ຊົງອ້ອນວອນໃຫ້ອິສຣາເອນແລະຢູດາກັບໃຈໃຫມ່**

A Call to Repentance

6 ພຣະຜູ້ເປັນເຈົ້າຊົງກ່າວກັບຂ້າພະເຈົ້າໃນຣັຊການຂອງກະສັດໂຢຊີຢາວ່າ, “ເຈົ້າບໍ່ເຫັນຫລືວ່າເຂົາເຮັດຫຍັງ ຄືອິສຣາ
ເອນຜູ້ບໍ່ສັດຊື່ ເຂົາຂຶ້ນໄປເທິງພູສູງທຸກຫນ່ວຍ ແລະຢູ່ກ້ອງກົກໄມ້ຂຽວສົດທຸກກົກ ແລ້ວກໍໄປຫລິ້ນຊູ້ຢູ່ທີ່ນັ້ນ
7 ແລະເຮົາຄິດວ່າ “ເມື່ອເຂົາເຮັດຢ່າງນີ້ຈົນຫມົດແລ້ວ ເຂົາຈະກັບມາຫາເຮົາ” ແຕ່ເຂົາກໍບໍ່ກັບມາ ແລະຢູດານ້ອງສາວ
ທີ່ທໍຣະຍົດນັ້ນກໍເຫັນ
8 ນາງເຫັນວ່າເພາະການລ່ວງປະເວນີທັງສິ້ນຂອງອິສຣາເອນຜູ້ບໍ່ສັດຊື່ ເຮົາໄດ້ໄລ່ນາງໄປພ້ອມກັບໃຫ້ຫນັງສືຢ່າຮ້າງ
ແຕ່ຢູດານ້ອງສາວທີ່ທໍຣະຍົດນັ້ນກໍບໍ່ຢ້ານກົວ ນາງກໍກັບໄປຫລິ້ນຊູ້ນຳອີກ
9 ເພາະການເປັນຍິງແມ່ຈ້າງເປັນການຖືເບົາແກ່ເຂົາຫລາຍ ເຂົາກໍກະທຳໃຫ້ແຜ່ນດິນເປິະເປື້ອນໄປ ໂດຍໄປລ່ວງປະເວ
ນີກັບໂງ່ນຫີນແລະຕົ້ນໄມ້
10 ເຖິງແມ່ນເຂົາໄດ້ເຮັດສິ່ງທັງຫມົດຢ່າງນີ້ແລ້ວຢູດານ້ອງສາວທີ່ທໍຣະຍົດຂອງເຂົາກໍບໍ່ໄດ້ຫັນກັບມາຫາເຮົາດ້ວຍສິ້ນ
ສຸດໃຈ ແຕ່ໄດ້ແກ້ງເຮັດວ່າໄດ້ກັບມາ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ”
11 ແລ້ວພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ, “ອິສຣາເອນຜູ້ບໍ່ສັດຊື່ຍັງສຳແດງຕົວວ່າ ມີຜິດໜ້ອຍກວ່າຢູດາທີ່ທໍຣະ
ຍົດ
12 ຈົ່ງໄປປະກາດຖ້ອຍຄຳເຫລົ່ານີ້ໄປທາງເຫນືອກ່າວວ່າ, “ພຣະຜູ້ເປັນເຈົ້າກ່າວວ່າ ອິສຣາເອນຜູ້ບໍ່ຊື່ສັດເອີຍ ກັບມາ
ເຖີດ ເຮົາຈະບໍ່ເບິ່ງເຈົ້າດ້ວຍຄວາມພິໂຣດ ເພາະເຮົາປະກອບດ້ວຍພຣະກະຣຸນາຄຸນ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້
ແຫລະ ເຮົາຈະບໍ່ພິໂຣດເປັນນິດ
13 ພຽງແຕ່ຍອມຮັບຄວາມຜິດຂອງເຈົ້າວ່າເຈົ້າໄດ້ກະບົດຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ແລະທ່ຽວເອົາໃຈພຣະອື່ນ
ທີ່ກ້ອງກົກໄມ້ຂຽວສົດທຸກກົກ ແລະເຈົ້າບໍ່ໄດ້ຟັງສຽງຂອງເຮົາ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ
14 ພຣະຜູ້ເປັນເຈົ້າໄດ້ກ່າວວ່າ, ລູກຫລານທີ່ບໍ່ສັດຊື່ ກັບມາເຖີດ ເພາະເຮົາເປັນນາຍຂອງເຈົ້າ ເຮົາຈະຮັບເຈົ້າຈາກເມືອງ
ແລະຈາກຕະກູນລະຄົນສອງຄົນ ແລະເຮົາຈະນຳເຈົ້າມາເຖິງຊີໂອນ
15 “ແລະເຮົາຈະໃຫ້ຜູ້ລ້ຽງແກະຄົນທີ່ພໍໃຈເຮົາແກ່ເຈົ້າ ຜູ້ຊຶ່ງຈະລ້ຽງເຈົ້າດ້ວຍຄວາມຮູ້ແລະຄວາມເຂົ້າໃຈ
16 ແລະເມື່ອເຈົ້າທະວີແລະເພີ້ມຂຶ້ນໃນແຜ່ນດິນນັ້ນ ໃນຄັ້ງນັ້ນ ພຣະຜູ້ເປັນເຈົ້າໄດ້ກ່າວວ່າ ເຂົາທັງຫລາຍຈະບໍ່ກ່າວ
ອີກວ່າ, “ຫີບຄຳສັນຍາແຫ່ງພຣະເຈົ້າ” ເຣື່ອງນີ້ຈະບໍ່ມີຢູ່ໃນໃຈ ບໍ່ມີໃຜກ່າວເຖິງ ບໍ່ມີໃຜຄິດເຖິງ ຈະບໍ່ກະທຳກັນອີກ
ເລີຍ
17 ໃນຄັ້ງນັ້ນຈະເອີ້ນກຸງເຢຣູຊາເລັມວ່າເປັນພຣະທີ່ນັ່ງຂອງພຣະຜູ້ເປັນເຈົ້າ ແລະບັນດາປະຊາຊາດຈະຮອບຮວມກັນ
ເຂົ້າມາຫາຍັງ ພຣະພັກຂອງພຣະຜູ້ເປັນເຈົ້າໃນກຸງເຢຣູຊາເລັມ ແລະເຂົາຈະບໍ່ຕິດຕາມໃຈອັນຊົ່ວຂອງເຂົາຢ່າງ
ດື້ດ້ານອີກຕໍ່ໄປ
18 ໃນສມັຍນັ້ນເຊື້ອສາຍຂອງຢູດາຈະເດີນມາກັບເຊື້ອສາຍຂອງອິສຣາເອນ ເຂົາທັງສອງຈະຮວມກັນມາຈາກແຜ່ນດິນ
ຝ່າຍເຫນືອມາຍັງແຜ່ນດິນຊຶ່ງເຮົາມອບໃຫ້ແກ່ບັນພະບຸຣຸດຂອງເຈົ້າໃຫ້ເປັນມໍຣະດົກ
19 “ເຮົາຄິດວ່າ ເຮົາຈະຕັ້ງເຈົ້າໄວ້ຖ້າມກາງບຸດທັງຫລາຍຂອງເຮົາຢ່າງໃດດີຫນໍ ແລະໃຫ້ແຜ່ນດິນທີ່ຫນ້າປາຖນາແກ່ເຈົ້າ
ເປັນມໍຣະດົກທີ່ສວຍງາມທີ່ສຸດໃນບັນດາປະຊາຊາດ ແລະເຮົາຄິດວ່າເຈົ້າຈະເອີ້ນເຮົາວ່າພຣະບິດາຂອງຂ້າພຣະອົງ
ແລະຈະບໍ່ຫັນໜີຈາກການຕິດຕາມເຮົາ

20 ພຣະຜູ້ເປັນເຈົ້າໄດ້ກ່າວວ່າ, “ເຊື້ອສາຍອິສຣາເອນເອີຍ ແນ່ນອນທີ່ພັຣຍາທໍຣະຍົດປະຖິ້ມຜົວຂອງນາງສັນໃດ ເຈົ້າກໍ
ໄດ້ທໍຣະຍົດຕໍ່ເຮົາສັນນັ້ນ”
21 ເຂົາໄດ້ຍິນສຽງມາຈາກທີ່ພູສູງ ເປັນສຽງຮ້ອງໄຫ້ແລະສຽງວິງວອນຂອງບຸດທັງຫລາຍຂອງອິສຣາເອນ ເພາະເຂົາໄດ້
ປ່ຽນທາງຂອງເຂົາເສັຽແລ້ວ ເຂົາໄດ້ລືມພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາ
22 “ບັນດາບຸດທີ່ບໍ່ສັດຊື່ເອີຍ ຈົ່ງກັບມາເຖີດ ເຮົາຈະຮັກສາໃຫ້ດີ ແລະເຮັດໃຫ້ສັດຊື່” ເບິ່ງແມ ຂ້າພຣະອົງທັງຫລາຍມາ
ຫາພຣະອົງແລ້ວ ເພາະພຣະອົງຊົງເປັນພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພຣະອົງ”
23 ແທ້ຈິງ ຄວາມຫວັງວ່າຈະໄດ້ຄວາມພົ້ນຈາກຈ້າຍພູແລະຈາກໜ່ວຍພູທັງຫລາຍກໍໄຮ້ປໂຍດ ແທ້ຈິງ ຄວາມພົ້ນຂອງ
ອິສຣາເອນນັ້ນຢູ່ໃນພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
24 “ແຕ່ວ່າສິ່ງທີ່ຫນ້າອາຍນັ້ນໄດ້ກັດກິນສິ່ງທັງປວງທີ່ບັນພະບຸຣຸດຂອງເຮົາໄດ້ສ້າງສາໄວ້ ຕັ້ງແຕ່ເຮົາຍັງເປັນເດັກນ້ອຍຢູ່
ຄືຝູງແກະ ຝູງງົວ ບຸດຊາຍ ແລະບຸດຍິງທັງຫລາຍຂອງເຂົາ
25 ໃຫ້ເຮົານອນລົງຈົມຢູ່ໃນຄວາມອາຍຂອງເຮົາ ແລະໃຫ້ຄວາມອັບອາຍຂາຍຫນ້າປົກຄຸມເຮົາໄວ້ ເພາະເຮົາໄດ້ກະທຳ
ບາບຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ ທັງຕົວເຮົາແລະບັນພະບຸຣຸດຂອງເຮົາຕັ້ງແຕ່ເຮົາເປັນເດັກນ້ອຍຢູ່ຈົນທຸກວັນ
ນີ້ ແລະເຮົາບໍ່ໄດ້ເຊື່ອຟັງພຣະສຸຣະສຽງແຫ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ”

## 4 ພຣະຜູ້ເປັນເຈົ້າຊົງເອີ້ນໃຫ້ປ່ຽນໃຈໃຫມ່

A Call to Repentanct

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ປະຊາຊົນອິສຣາເອນເອີຍ ຖ້າພວກເຈົ້າຢາກຈະກັບຄືນມາກໍຈົ່ງກັບມາຫາເຮົາເທີນ ໃຫ້
ຖິ້ມຮູບໂຄຣົບທີ່ເຮົາກຽດຊັງນັ້ນເສັຽ ແລະຢ່າຫນີຫ່າງຈາກເຮົາໄປ
2 ຖ້າພວກເຈົ້າສາບານໃນນາມຂອງພຣະຜູ້ເປັນເຈົ້າຜູ້ມີຊີວິດຢູ່ດ້ວຍຄວາມຈິງ ຄວາມຍຸດຕິທັມແລະຄວາມສັດຊື່ ຊາດ
ທັງປວງກໍຈະອ້ອນວອນໃຫ້ເຮົາອວຍພອນເຂົາ ແລະເຂົາທັງຫລາຍກໍຈະສັຣເສີນເຮົາ”
3 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຊາວຢູດາ ແລະຊາວເຢຣູຊາເລັມວ່າ, “ຈົ່ງໄຖນາເຮື້ອຂອງເຈົ້າ ຢ່າຫວ່ານເມັດເຂົ້າລົງໃນກໍ
ຫນາມ
4 ຊາວຢູດາ ແລະເຢຣູຊາເລັມເອີຍ ຈົ່ງຮັກສາຄຳຫມັ້ນສັນຍາທີ່ເຈົ້າມີຕໍ່ເຮົາພຣະຜູ້ເປັນເຈົ້າຂອງເຈົ້າ ແລະຈົ່ງມອບຈິດ
ໃຈຂອງເຈົ້າໃຫ້ແກ່ເຮົາ ຢ້ານວ່າຄວາມຄຽດຮ້າຍຂອງເຮົາຈະເຜົາໄຫມ້ເຫມືອນໄຟ ເນື່ອງຈາກຄວາມຊົ່ວທີ່ພວກເຈົ້າ
ໄດ້ກະທຳ ໄຟນັ້ນຈະເຜົາໄຫມ້ແລະຈະບໍ່ມີໃຜມອດໄດ້

**ຊາວຢູດາຖືກບຸກຣຸກ**

Invasion and Desolation of Judah Threatened

5 ຈົ່ງເປົ່າແກໃຫ້ດັງໄປທົ່ວປະເທດ ໃຫ້ຮ້ອງສຽງດັງຊັດແຈ້ງ ເພື່ອບອກປະຊາຊົນຢູດາແລະເຢຣູຊາເລັມ ແລ່ນເຂົ້າໄປໃນ
ເມືອງທີ່ມີປ້ອມປ້ອງກັນ
6 ໃຫ້ຍົກທຸງມຸ້ງຫນ້າໄປຍັງເມືອງຊີໂອນ ຈົ່ງແລ່ນໄປໃຫ້ພົ້ນ ຢ່າຊ້າຢູ່ ພຣະຜູ້ເປັນເຈົ້າຈະນຳເອົາຄວາມຮ້າຍ ແລະການ
ທຳລາຍອັນຍິ່ງໃຫຍ່ມາຈາກທາງທິດເຫນືອ
7 ສິງໄດ້ອອກມາຈາກບ່ອນລີ້ຂອງມັນແລ້ວ ຜູ້ທຳລາຍນາໆຊາດໄດ້ເດີນອອກມາຈາກບ່ອນຂອງມັນ ເພື່ອທຳລາຍຊາວ
ຢູດາໃຫ້ຫມົດສິ້ນໄປ ຫົວເມືອງທັງຫລາຍຂອງຊາວຢູດາຈະເພພັງຮ້າງເປົ່າ ແລະຈະບໍ່ມີໃຜອາສັຍຢູ່ໃນເມືອງເຫລົ່າ
ນັ້ນ
8 ດ້ວຍເຫດນີ້ ຈົ່ງນຸ່ງເຄື່ອງໄວ້ທຸກແລະຮ້ອງໄຫ້ຄວນຄາງ ເພາະວ່າພຣະພິໂຣດອັນຮຸນແຮງຂອງພຣະຜູ້ເປັນເຈົ້າບໍ່ໄດ້
ຫັນຫນີໄປຈາກຊາວຢູດາເລີຍ”

9 ພຣະຜູ້ເປັນເຈົ້າກ່າວວ່າ, “ໃນວັນນັ້ນທັງກະສັດແລະພວກເຈົ້ານາຍຈະຫມົດກຳລັງໃຈ ບັນດາປະໂຣຫິດຈະຕົກຕະລຶງ ແລະຜູ້ປະກາດພຣະທັມກໍຈະອັສຈັນໃຈ”

10 ແລ້ວຂ້າພະເຈົ້າຈຶ່ງທູນວ່າ, “ຂ້າແດ່ພຣະເຈົ້າ ພຣະອົງຊົງລໍ້ລວງຊົນຊາດນີ້ ແລະກຸງເຢຣູຊາເລັມຢ່າງຫມົດສິ້ນວ່າ “ເຈົ້າທັງຫລາຍຈະຢູ່ເຢັນເປັນສຸກ” ແຕ່ທີ່ຈິງດາບໄດ້ມາເຖິງຊີວິດຂອງເຂົາທັງຫລາຍ”

11 ໃນຄັ້ງນັ້ນ ເຂົາຈະກ່າວແກ່ຊົນຊາດນີ້ ແລະແກ່ກຸງເຢຣູຊາເລັມວ່າ ລົມຮ້ອນຈາກທີ່ພູສູງໃນຖິ່ນກັນດານພັດມາສູ່ບຸດຕຣີປະຊາຊົນຂອງເຮົາ ບໍ່ແມ່ນຈະມາຟັດຫລືມາຊຳຮະ

12 ກະແສລົມທີ່ແຮງເກີນແກ່ການນີ້ໄດ້ມາເຖິງຕາມຄຳຂອງເຮົາ ຜູ້ທີ່ກ່າວຄຳຕັດສິນເຂົານີ້ຄື ເຮົາເອງ”

13 ເບິ່ງແມ, ເຂົາຂຶ້ນມາເຫມືອນເມກ ຣົດຮົບຂອງເຂົາເຫມືອນລົມບ້າຫມູ ມ້າທັງຫລາຍຂອງເຂົາໄວຍິ່ງກວ່ານົກອິນຊີ ວິບັດແກ່ເຮົາທັງຫລາຍ ເພາະວ່າເຮົາຈະຕ້ອງພິນາດ

14 ກຸງເຢຣູຊາເລັມເອີຍ ຈົ່ງລ້າງຈິດໃຈຂອງເຈົ້າໃຫ້ພົ້ນຈາກຄວາມຊົ່ວຮ້າຍ ເພື່ອເຈົ້າຈະລອດໄດ້ ຄວາມຄິດຊົ່ວຮ້າຍຂອງເຈົ້ານັ້ນຈະສິງຢູ່ໃນໃຈຂອງເຈົ້າເຖິງປານໃດ

15 ເພາະວ່າມີສຽງປະກາດມາຈາກເມືອງດານ ແລະໂຄສະນາຄວາມຊົ່ວຮ້າຍຈາກພູເຂົາເອຟຣາອີມ

16 ຈົ່ງເຕືອນບັນດາປະຊາຊາດວ່າ ເຂົາກຳລັງມາແລ້ວ ຈົ່ງກ່າວແກ່ກຸງເຢຣູຊາເລັມວ່າ ບັນດາຜູ້ລ້ອມມາຈາກແຜ່ນດິນໄກ ເຂົາທັງ ຫລາຍໂຮ່ຮ້ອງເຂົ້າໃສ່ຫົວເມືອງຢູດາ

17 ເຂົາທັງຫລາຍລ້ອມຢູດາໄວ້ຮອບເຫມືອນຜູ້ດູແລເຝົ້ານາ ເພາະວ່າຢູດາໄດ້ກະບົດຕໍ່ເຮົາ ພຣະຜູ້ເປັນເຈົ້າກ່າວວ່າດັ່ງນີ້ແຫລະ

18 ວິຖີແລະການກະທຳທັງຫລາຍຂອງເຈົ້າ ໄດ້ນຳເຣື່ອງນີ້ມາເຫນືອເຈົ້າ ນີ້ແຫລະເປັນເຄາະກັມຂອງເຈົ້າແລະມັນຂົມຂື່ນ ມັນຈຶ່ງແທງຈິດໃຈຂອງເຈົ້າໃຫ້ຊອດ”

Sorrow for a Doomed Nation

19 ແສນຣະທົມ ແສນຣະທົມ ຂ້າກໍບິດຕົວດ້ວຍຄວາມເຈັບປວດ ໂອ ຫນັງດວງໃຈຂອງຂ້າເອີຍ ຈິດໃຈຂອງຂ້າກໍວຸ້ນວາຍ ຂ້າຈະມິດງຽບຢູ່ບໍ່ໄດ້ ເພາະຂ້າໄດ້ຍິນສຽງເຂົາສັດ ສຽງປຸກຂອງສົງຄາມ

20 ຄວາມຫາຍນະໄລ່ຕິດຕາມຄວາມຫາຍນະ ແຜ່ນດິນທັງສິ້ນກໍຖືກປະຮ້າງ ບັນດາເຕັນຂອງຂ້າກໍຖືກທຳລາຍໃນທັນທີທັນໃດ ມ່ານທັງຫລາຍຂອງຂ້າກໍຖືກທຳລາຍຢ່າງໄວໆ

21 ຂ້າຈະຕ້ອງມອງເບິ່ງທຸງ ແລະຟັງສຽງເຂົາສັດເຖິງນານປານໃດ

22 “ເພາະປະຊາຊົນຂອງເຮົາໂງ່ຈ້າ ເຂົາທັງຫລາຍບໍ່ຮູ້ຈັກເຮົາ ເຂົາທັງຫລາຍເປັນລູກຫລານທີ່ໂງ່ ເຂົາທັງຫລາຍບໍ່ມີຄວາມເຂົ້າໃຈ ເຂົາທັງຫລາຍເກັ່ງໃນການທຳຄວາມຊົ່ວ ແຕ່ເຂົາບໍ່ເຂົ້າໃຈທີ່ຈະທຳດີ”

23 ຂ້າພະເຈົ້າມອງເບິ່ງພື້ນດິນໂລກ ແລະເຫັນເປັນບ່ອນຮ້າງແລະວ່າງເປົ່າ ແລະມອງເບິ່ງຟ້າສວັນ ໃນນັ້ນກໍບໍ່ມີຄວາມສວ່າງ

24 ຂ້າພະເຈົ້າມອງເບິ່ງພູເຂົາ ເຫັນມັນກຳລັງສັ່ນຢູ່ ເນີນເຂົາກໍແກວ່ງໄປແກວ່ງມາ

25 ຂ້າພະເຈົ້າມອງເບິ່ງ ແລະເຫັນບໍ່ມີມະນຸດເລີຍ ນົກທັງປວງແຫ່ງທ້ອງອາກາດໄດ້ຫນີໄປແລ້ວ

26 ຂ້າພະເຈົ້າມອງເບິ່ງ ເຫັນດິນແດນທີ່ແຕ່ກ່ອນເປັນດິນທີ່ອຸດົມສົມບູນກໍກາຍເປັນຖິ່ນກັນດານ ແລະຫົວເມືອງທັງສິ້ນກໍສລັກຫັກພັງໄປ ຕໍ່ພຣະພັກພຣະຜູ້ເປັນເຈົ້າ ຕໍ່ພຣະພິໂຣດອັນຮ້ອນແຮງຂອງພຣະອົງ

27 ເພາະພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ວ່າ, “ແຜ່ນດິນທັງຫມົດຈະເປັນທີ່ຮົກຮ້າງ ຫວ່າງເປົ່າ ແຕ່ພຣະອົງຈະບໍ່ທຳລາຍແຜ່ນດິນໂລກໃຫ້ຈົບກັ້ງງ

28 ເພາະເຣື່ອງນີ້ໂລກຈະໄວ້ທຸກ ແລະຟ້າສວັນເບື້ອງເທິງຈະດຳມືດ ເພາະເຮົາໄດ້ລັ່ນວາຈາແລ້ວ ເຮົາໄດ້ຫມາຍໃຈໄວ້ແລ້ວ ເຮົາຈະບໍ່ປ່ຽນໃຈຫລືຫັນກັບ”

29 ເມື່ອໄດ້ຍິນສຽງພົນມ້າແລະນັກທະນູ ຊາວເມືອງທຸກແຫ່ງກໍຫນີໄປ ເຂົາເຂົ້າໄປຢູ່ໃນພຸ່ມໄມ້ ແລະປີນປ່າຍໄປຖ້ຳ
ກາງໂງ່ນຫີນ ທົ່ວເມືອງທຸກແຫ່ງກໍຖືກປະຖິ້ມ ແລະບໍ່ມີມະນຸດອາສັຍຢູ່ໃນເມືອງເຫລົ່ານັ້ນເລີຍ
30 ເຈົ້າຜູ້ທີ່ຖືກປະຮ້າງເອີຍ ທີ່ເຈົ້າແຕ່ງຕົວສີແດງນັ້ນເຈົ້າເຮັດຫຍັງກັນ ແລະທີ່ເຈົ້າປະດັບຕົວດ້ວຍອາພອນທອງຄຳ ທີ່
ເຈົ້າຂຍາຍ ດວງຕາໃຫ້ກວ້າງດ້ວຍແຕ້ມສີ ເຈົ້າແຕ່ງຕົວໃຫ້ງາມເສັຽເປົ່າ ຄົນຮັກຂອງເຈົ້າດູຫມິ່ນເຈົ້າ ເຂົາທັງຫລາຍສ
ແວງຫາຊີວິດຂອງເຈົ້າ
31 ເພາະເຮົາໄດ້ຍິນສຽງເຫມືອນສຽງຍິງອອກລູກຮ້ອງຄາງ ແສນເຈັບປວດເໝືອນຈະອອກລູກທົ່ວປີ ສຽງຮ້ອງແຫ່ງບຸດຕ
ຣີຊີໂອນນັ້ນແທບຈະຂາດໃຈ ຢຽດແຂນຂອງນາງອອກຮ້ອງວ່າ “ວິບັດແກ່ຂ້າ ຂ້າອ່ອນເປັ້ຽຢູ່ຕໍ່ຫນ້າຜູ້ຂ້າຄົນ”

## 5 ບາບຂອງເຢຣູຊາເລັມແລະຢູດາ

The Utter Corruption of God’s People

1 ຈົ່ງແລ່ນໄປແລ່ນມາຢູ່ໃນຖນົນກຸງເຢຣູຊາເລັມ ຈົ່ງມອງແລະສັງເກດ ຈົ່ງຄົ້ນຫາຕາມເດີ່ນເມືອງເບິ່ງດູວ່າ ຈະໄດ້ພົບ
ມະນຸດຈັກຄົນນຶ່ງຫລືບໍ ຄືຄົນທີ່ກະທຳການຍຸດຕິທັມແລະສແວງຫາຄວາມຈິງ ເພື່ອເຮົາຈະໄດ້ອະພັຍໂທດໃຫ້ແກ່
ເມືອງນັ້ນ
2 ເຖິງເຂົາທັງຫລາຍເວົ້າວ່າ, “ຕາບໃດທີ່ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ແທ້” ເຂົາກໍຍັງສາບານບໍ່ຈິງຢ່າງແນ່ນອນ
3 ຂ້າແດ່ພຣະເຈົ້າ ພຣະເນດຂອງພຣະອົງຊົງຫາຄວາມສັດຊື່ບໍ່ແມ່ນຫລື ພຣະອົງຊົງຂ້ຽນຕີເຂົາທັງຫລາຍ ແຕ່ເຂົາກໍບໍ່ຮູ້
ສຶກສຳນຶກ  ພຣະອົງຊົງລ້າງຜານເຂົາ ແຕ່ເຂົາທັງຫລາຍປະຕິເສດບໍ່ຍອມດີຂຶ້ນ ເຂົາໄດ້ກະທຳໃຫ້ຫນ້າຂອງເຂົາແຂງ
ກະດ້າງຍິ່ງກວ່າຫີນ ເຂົາປະຕິເສດບໍ່ຍອມກັບໃຈ
4 ແລ້ວຂ້າພະເຈົ້າທູນວ່າ, “ຄົນເຫລົ່ານີ້ເປັນແຕ່ຜູ້ນ້ອຍ ເຂົາບໍ່ມີຄວາມຄິດ ເພາະເຂົາບໍ່ຮູ້ຈັກພຣະມັກຄາຂອງພຣະເຈົ້າ
ບໍ່ຮູ້ຈັກພຣະທັມຂອງພຣະເຈົ້າຂອງເຂົາ
5 ຂ້າພຣະອົງຈະໄປຫາພວກຜູ້ໃຫຍ່ ແລະຈະເວົ້າກັບເຂົາທັງຫລາຍ ເພາະເຂົາຮູ້ຈັກພຣະມັກຄາຂອງພຣະເຈົ້າ ແລະຮູ້
ຈັກພຣະທັມຂອງພຣະເຈົ້າຂອງເຂົາ” ແຕ່ເຂົາທັງຫລາຍທຸກຄົນກໍໄດ້ຫັກແອກເສັຽ ເຂົາທັງຫລາຍໄດ້ປະຕິເສດທີ່ຈະ
ເຊື່ອຟັງພຣະອົງອີກດ້ວຍ
6 ເຫດສັນນັ້ນ ສິງຈາກປ່າຈະມາສັງຫານເຂົາ ຫມາປ່າຈາກປ່າດົງຈະທຳລາຍເຂົາ ທຸກຄົນທີ່ໄປຈາກເມືອງເຫລົ່ານັ້ນຈະ
ຖືກຈີກເປັນຕ່ອນໆ ເພາະວ່າຄວາມທໍຣະຍົດຂອງເຂົາຫລວງຫລາຍ ການຫລອກລວງຂອງເຂົາກໍໃຫຍ່ຍິ່ງ
7 “ເຮົາຈະໃຫ້ອະພັຍເຈົ້າໄດ້ຢ່າງໃດ ລູກຫລານຂອງເຈົ້າໄດ້ປະຖິ້ມເຮົາແລ້ວ ແລະໄດ້ອ້າງຜູ້ທີ່ບໍ່ແມ່ນພຣະເຈົ້າໃນການ
ທຳຄຳສາບານ ເມື່ອເຮົາລ້ຽງເຂົາໃຫ້ອີ່ເຂົາກໍທຳການລ່ວງປະເວນີ ແລ້ວກໍຍົກຂະບວນກັນໄປທີ່ເຮືອນຂອງຍິງໂສເພນີ
8 ເຂົາທັງຫລາຍເຫມືອນມ້າເຖິກທີ່ກິນອີ່ມໃນຕອນເຊົ້າ ທຸກຄົນກໍຮ້ອງຫາພັຣຍາຂອງເພື່ອນບ້ານ
9 ພຣະຜູ້ເປັນເຈົ້າກ່າວວ່າ ເພາະສິ່ງຢ່າງນີ້ ເຮົາຈະບໍ່ທຳໂທດເຂົາຫລື ແລະເຮົາບໍ່ຄວນທີ່ຈະແກ້ແຄ້ນປະຊາຊາດທີ່ເປັນ
ຢ່າງນີ້ຫລື
10 “ໄປເຖີດ ໄປຕາມແຖວຕົ້ນຫມາກອະງຸ່ນຂອງມັນແລະທຳລາຍເສັຽ ແຕ່ຢ່າໄປເຖິງອາວະສານທີ່ດຽວ ຕັດກິ່ງກ້ານຂອງ
ມັນອອກ ເພາະນັ້ນບໍ່ແມ່ນຂອງພຣະຜູ້ເປັນເຈົ້າ
11 ເພາະເຊື້ອສາຍຂອງອິສຣາເອນ ແລະເຊື້ອສາຍຂອງຢູດາໄດ້ທໍຣະຍົດຕໍ່ເຮົາຢ່າງສິ້ນເຊີງແລ້ວ    ພຣະຜູ້ເປັນເຈົ້າໄດ້
ກ່າວດັ່ງນີ້ແຫລະ
12 ເຂົາທັງຫລາຍເວົ້າມຸສາໃນເຣື່ອງພຣະຜູ້ເປັນເຈົ້າ ແລະໄດ້ກ່າວວ່າ, “ພຣະອົງບໍ່ໄດ້ຊົງກະທຳປະການໃດ ບໍ່ມີການ
ຮ້າຍອັນໃດຈະເກີດຂຶ້ນແກ່ເຮົາ ເຮົາກໍຈະບໍ່ເຫັນດາບຫລືການອຶດຢາກ
13 ຜູ້ປະກາດພຣະທັມກໍຈະເປັນແຕ່ລົມໆ ພຣະວັຈນະບໍ່ມີໃນຄົນເຫລົ່ານັ້ນ ຂໍໃຫ້ເປັນຢ່າງນັ້ນແກ່ເຂົາເຖີດ”

14 ເຫດສັນນັ້ນ ພຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາຈຶ່ງກ່າວດັ່ງນີ້ວ່າ, “ເພາະເຂົາທັງຫລາຍກ່າວຖ້ອຍຄຳເຫລົ່ານີ້ ເບິ່ງ
ແມ, ເຮົາຈະທຳຖ້ອຍຄຳຂອງເຮົາທີ່ຢູ່ໃນປາກຂອງເຈົ້າໃຫ້ເປັນໄຟ ແລະຊົນຊາດນີ້ເປັນຟືນ ແລະໄຟນັ້ນຈະເຜົາຜານ
ເຂົາເສັຽ
15 ເບິ່ງແມ, ປະຊາຊົນອິສຣາເອນເອີຍ, ເຮົາຈະນຳປະຊາຊາດຈາກແດນໄກມາສູ້ເຈົ້າທັງຫລາຍ ພຣະຜູ້ເປັນເຈົ້າກ່າວດັ່ງ
ນີ້ແຫລະ ເປັນປະຊາຊາດທີ່ທົນທານ ເປັນປະຊາຊາດດຶກດຳບັນ ເປັນປະຊາຊາດທີ່ເຈົ້າບໍ່ຮູ້ພາສາຂອງເຂົາ ເຂົາຈະ
ເວົ້າຫຍັງເຈົ້າກໍບໍ່ເຂົ້າໃຈ
16 ແຫລ່ງທະນູຂອງເຂົາເຫມືອນອຸບໂມງເປີດເຂົາເປັນທະຫານທີ່ເກັ່ງກ້າທຸກຄົນ
17 ເຂົາຈະກິນສິ່ງເຈົ້າກ່ຽວໄວ້ ແລະກິນອາຫານຂອງເຈົ້າເສັຽ ເຂົາຈະກິນບຸດຊາຍແລະບຸດຍິງຂອງເຈົ້າເສັຽ ເຂົາຈະກິນຝູງ
ແກະຝູງງົວຂອງເຈົ້າເສັຽ ເຂົາຈະກິນເຄືອອະງຸ່ນແລະຕົ້ນຫມາກເດື່ອຂອງເຈົ້າເສັຽ ເຂົາຈະທຳລາຍຕົວເມືອງທີ່ມີປ້ອມ
ຂອງເຈົ້າ ຊຶ່ງເຈົ້າວາງໃຈນັ້ນເສັຽດ້ວຍດາບ”
18 ພຣະຜູ້ເປັນເຈົ້າກ່າວວ່າ, “ເຖິງແມ່ນໃນວັນເຫລົ່ານັ້ນ ເຮົາກໍຍັງກະທຳແກ່ເຈົ້າໃຫ້ເຖິງອາວະສານ
19 ແລະເມື່ອເຈົ້າທັງຫລາຍກ່າວວ່າ, “ເປັນຫຍັງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາທັງຫລາຍຈຶ່ງກະທຳບັນດາສິ່ງເຫລົ່ານີ້
ແກ່ເຮົາ” ເຈົ້າຈິ່ງກ່າວແກ່ເຂົາວ່າ, “ເພາະເຈົ້າໄດ້ປະຖິ້ມເຮົາໄປບົວລະບັດພຣະຕ່າງດ້າວໃນແຜ່ນດິນຂອງເຈົ້າ ເຫດ
ສັນນັ້ນເຈົ້າຈະຕ້ອງໄປບົວລະບັດຄົນຕ່າງຊາດໃນແຜ່ນດິນຊຶ່ງບໍ່ແມ່ນຂອງເຈົ້າ”
20 ຈົ່ງປະກາດຂໍ້ຄວາມຕໍ່ໄປນີ້ໃນປະຊາຊົນຢາໂຄບ ຈົ່ງໂຄສະນາເຣື່ອງນີ້ໃນຢູດາ
21 “ຊົນຊາດທີ່ໂງ່ຈ້າແລະໄຣ້ຄວາມຄິດເອີຍ, ຜູ້ມີຕາ ແຕ່ເບິ່ງບໍ່ເຫັນ ຜູ້ມີຫູ ແຕ່ຟັງບໍ່ໄດ້ຍິນ ຈົ່ງຟັງຂໍ້ຄວາມນີ້
22 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຈົ້າບໍ່ຢຳເກງເຮົາຫລື ເຈົ້າບໍ່ຕົວສັ່ນຢູ່ຕໍ່ຫນ້າເຮົາຫລື ຄືເຮົາຜູ້ວາງ
ກອງຊາຍໄວ້ເປັນເຂດລ້ອມທະເລ ເປັນເຄື່ອງກີດຂວາງເປັນນິດບໍ່ໃຫ້ຜ່ານໄປໄດ້ ເຖິງວ່າຄື້ນຈະຊັດ ກໍເອົາຊະນະບໍ່ໄດ້
ເຖິງຄື້ນຈະຕີຟາດຟົ້ງກໍຂ້າມໄປບໍ່ໄດ້
23 ແຕ່ຊົນຊາດນີ້ມີໃຈດື້ດ້ານແລະກະບົດ ເຂົາໄດ້ຫັນຫນີແລະຈາກໄປເສັຽ
24 ຂໍ້ຄວາມນີ້ເຂົາບໍ່ເຄີຍຄິດຢູ່ໃນໃຈຂອງເຂົາທັງຫລາຍວ່າ “ໃຫ້ເຮົາຢຳເກງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ ຜູ້ຊົງປະ
ທານຝົນຕາມຣະດູຂອງມັນ ຄືຝົນຕົ້ນຣະດູແລະຝົນແຮງປາຍຣະດູ ແລະຊົງຮັກສາສັປດາທີ່ກຳນົດການກ່ຽວເຂົ້າໄວ້
ໃຫ້ແກ່ເຮົາ”
25 ບາບຊົ່ວຂອງເຈົ້າໄດ້ກະທຳໃຫ້ສິ່ງເຫລົ່ານີ້ຫັນໄປເສັຽ ແລະບາບຂອງເຈົ້າທັງຫລາຍກໍກັນຄວາມດີໄວ້ເສັຽຈາກເຈົ້າ
26 ເພາະຖ້າມກາງໄພ່ພົນຂອງເຮົາຈະພົບຄົນອະທັມ ເຂົາຄອຍຈອບເຫມືອນຄົນດັກນົກທີ່ຈອບຢູ່ ເຂົາວາງກັບໄວ້ເຂົາ
ດັກຄົນ
27 ເຮືອນຂອງເຂົາເຕັມດ້ວຍການທໍຣະຍົດເຫມືອນຖາດທີ່ມີນົກເຕັມ ເຫດສັນນັ້ນເຂົາຈຶ່ງໃຫຍ່ໂຕແລະຮັ່ງມີ
28 ເຂົາຈຶ່ງອ້ວນພີຈົນຕົວກ້ຽງ ໃນເຣື່ອງການກະທຳຄວາມອະທັມເຂົາລ້ຳຫນ້າ ເຂົາບໍ່ໄດ້ຕັດສິນດ້ວຍຄວາມຍຸດຕິທັມ ໃນ
ຄະດີຂອງລູກກຳພ້າ ເພື່ອໃຫ້ຄະດີນັ້ນເຖິງທີ່ສຸດ ເຂົາບໍ່ໄດ້ປ້ອງກັນສິດຂອງຄົນຂັດສົນ
29 ພຣະຜູ້ເປັນເຈົ້າກ່າວວ່າ ເພາະສິ່ງຢ່າງນີ້ ເຮົາຈະບໍ່ທຳໂທດເຂົາຫລື ແລະບໍ່ຄວນທີ່ເຮົາຈະແກ້ແຄ້ນປະຊາຊາດທີ່ເປັນ
ຢ່າງນີ້ຫລື
30 ສິ່ງທີ່ຫນ້າສງົນສົນເທແລະຫນ້າຢ້ານກົວໄດ້ເກີດຂຶ້ນໃນແຜ່ນດິນນີ້
31 ຄືຜູ້ປະກາດພຣະທັມໄດ້ປະກາດພຣະທັມປອມ ແລະບັນດາປະໂຣຫິດກໍປົກຄອງຕາມການຊີ້ມືຂອງເຂົາ ແລະໄພ່ພົນ
ຂອງເຮົາມັກທີ່ມີການຢ່າງນີ້ ແຕ່ເຈົ້າທັງຫລາຍຈະກະທຳສິ່ງໃດເມື່ອການສຸດປາຍມາເຖິງ

## 6 ຄວາມພິນາດທີ່ຈະມາເຖິງເຢຣູຊາເລັມ ແລະຢູດາ

The Imminence and Horror of the Invasion

1 ປະຊາຊົນເບັນຢາມິນເອີຍ ຈົ່ງຫນີໄປເພື່ອຄວາມປອດພັຍ ຈາກກາງກຸງເຢຣູຊາເລັມ ຈົ່ງເປົ່າເຂົາສັດໃນເມືອງເຕໂກ
ອາ ແລະຍົກສັນຍາຂຶ້ນໄວ້ເທິງເບທຮັກເຄເຣມ ເພາະເຫດຮ້າຍໂຜ່ອອກມາຈາກທິດເຫນືອ ຄືການທຳລາຍຢ່າງໃຫຍ່
ຫລວງ
2 ເຮົາຈະທຳລາຍສາວງາມແລະບອບບາງ ຄືບຸດຕຣີຂອງຊີໂອນເສັຽ
3 ຜູ້ລ້ຽງແກະພ້ອມກັບຝູງແກະຈະມາສູ້ນາງ ເຂົາຈະຕັ້ງເຕັນໄວ້ຮອບນາງ ຕ່າງກໍຈະຫາກິນຢູ່ໃນທີ່ຂອງມັນ
4 “ຈົ່ງຕຽມທຳສົງຄາມກັບນາງ ລຸກຂຶ້ນ ໃຫ້ເຮົາໂຈມຕີເວລາກາງເວັນ” ວິບັດແກ່ພວກເຮົາ ເພາະວ່າກາງເວັນຄ້ອຍເສັຽ
ແລ້ວ ເງົາຂອງເວລາຄ່ຳກໍຍາວອອກໄປ”
5 “ລຸກຂຶ້ນ ໃຫ້ເຮົາເຂົ້າຕີເວລາກາງຄືນ ແລະທຳລາຍບັນດາວັງຂອງນາງເສັຽ”
6 ເພາະພຣະເຈົ້າຈອມໂຍທາກ່າວດັ່ງນີ້ວ່າ, “ຈົ່ງປ້ຳຕົ້ນໄມ້ຂອງນາງລົງ ຈົ່ງຄູນດິນຂຶ້ນອ້ອມໄວ້ສູ້ກຸງເຢຣູຊາເລັມ ນີ້
ແຫລະນະຄອນທີ່ຕ້ອງຖືກທຳໂທດ ພາຍໃນນາງບໍ່ມີສິ່ງໃດນອກຈາກການບີບບັງຄັບ
7 ບໍ່ນ້ຳຍັງນ້ຳເຢັນໃຫ້ມີຢູ່ສເມີສັນໃດ ນາງກໍຍັງຄວາມອະທັມໃຫ້ເກີດຂຶ້ນເລື້ອຍໆສັນນັ້ນ ໄດ້ຍິນເຖິງຄວາມທາຣຸນແລະ
ການທຳລາຍມີພາຍໃນນາງ ຄວາມເຈັບປວດແລະຄວາມບາດເຈັບກໍປາກົດຕໍ່ເຮົາສເມີ
8 ກຸງເຢຣູຊາເລັມເອີຍ ຈົ່ງຮັບຄຳຕັກເຕືອນເຖີດ ຢ້ານວ່າເຮົາຈະພາກຮັກຈາກເຈົ້າໄປເສັຽ  ຢ້ານວ່າເຮົາຈະກະທຳເຈົ້າ
ໃຫ້ເປັນບ່ອນຮົກຮ້າງ ເປັນແຜ່ນດິນປາສຈາກຄົນອາສັຍ”
9 ພຣະຜູ້ເປັນເຈົ້າຈອມໂຍທາຊົງກ່າວດັ່ງນີ້ວ່າ, “ເຂົາທັງຫລາຍຈະກວາດຊົນອິສຣາເອນ ຊົນທີ່ເຫລືອຢູ່ນັ້ນເສັຽໃຫ້ກ້ຽງ
ຢ່າງເລັມເຄືອອະງຸ່ນ ເຫມືອນຄົນເກັບຫມາກອະງຸ່ນເອົາມືເກັບຫມາກຕາມກິ່ງຂອງມັນອີກເທື່ອນຶ່ງ
10 ຂ້າພະເຈົ້າຄວນຈະເວົ້າແລະໃຫ້ຄຳຕັກເຕືອນແກ່ຜູ້ໃດດີຫນໍ ເພື່ອເຂົາຈະໄດ້ເຊື່ອຟັງ ເບິ່ງແມ່, ຫູຂອງເຂົາຕັນເສັຽ
ແລ້ວ ເຂົາຟັງບໍ່ໄດ້ ເບິ່ງແມ, ພຣະວັຈນະຂອງພຣະຜູ້ເປັນເຈົ້າເປັນສິ່ງທີ່ເຂົາດູຫມິ່ນ ເຂົາບໍ່ພໍໃຈຟັງ
11 ເຫດສັນນັ້ນ ຂ້າພະເຈົ້າຈຶ່ງມີພຣະພິໂຣດຂອງພຣະຜູ້ເປັນເຈົ້າເຕັມໄປຫມົດ ຂ້າພະເຈົ້າຈະເກັບໄວ້ອີກບໍ່ໄຫວແລ້ວ
“ຈົ່ງເທອອກທົດເດັກນ້ອຍທີ່ຕາມຖນົນ ແລະທົດພວກຫນຸ່ມໆທີ່ຊຸມນຸມກັນຢູ່ດ້ວຍ ທັງຜົວແລະເມັຽກໍຈະຕ້ອງເອົາໄປ
ທັງຄົນແກ່ແລະຄົນເຖົ້າຊະຣາດ້ວຍ
12 ບ້ານເຮືອນຂອງເຂົາຈະຕ້ອງຍົກໃຫ້ເປັນຂອງຄົນອື່ນ ທັງໄຮ່ນາແລະເມັຽຂອງເຂົາດ້ວຍ ເພາະເຮົາຈະຢຽດມືຂອງເຮົາ
ອອກຕໍ່ສູ້ຊາວແຜ່ນດິນ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
13 ເພາະວ່າ ຕັ້ງແຕ່ຄົນທີ່ຕ່ຳຕ້ອຍທີ່ສຸດຈົນເຖິງຄົນໃຫຍ່ໂຕທີ່ສຸດ ທຸກຄົນໂລບຢາກໄດ້ກຳໄລ ແລະທຸກຄົນກໍກະທຳການ
ດ້ວຍຄວາມເທັດ ຕັ້ງແຕ່ຜູ້ປະກາດພຣະທັມຕລອດເຖິງປະໂຣຫິດ
14 ເຂົາທັງຫລາຍໄດ້ຮັກສາແຜແຫ່ງໄພ່ພົນຂອງເຮົາແຕ່ເລັກນ້ອຍກ່າວວ່າ “ສັນຕິສຸກ ສັນຕິສຸກ” ເມື່ອບໍ່ມີສັນຕິສຸກເລີຍ
15 ເມື່ອເຂົາກະທຳການຫນ້າລັງກຽດຊັງ ເຂົາລະອາຍຫລື ບໍ່ເລີຍ ເຂົາບໍ່ລະອາຍເສັຽເລີຍ ເຂົາບໍ່ຮູ້ຈັກວ່າຢ່າງໃດຈຶ່ງຈະ
ຂາຍຫນ້າ ເພາະສະນັ້ນເຂົາຈະລົ້ມລົງຖ້າມກາງພວກທີ່ລົ້ມແລ້ວ ເມື່ອເຮົາລົງໂທດເຂົາທັງຫລາຍ ເຂົາຈະຄວ່ຳ” ພຣະ
ຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
16 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄພ່ພົນຂອງພຣະອົງວ່າ, “ພວກເຈົ້າຈົ່ງຢືນຢູ່ໃນທາງສີ່ແຍກ ໃຫ້ຖາມຫາທາງດີ ຄືທາງເກົ່າ
ນັ້ນຢູ່ໃສ ແລ້ວໃຫ້ຍ່າງເຂົ້າໄປໃນທາງນັ້ນພວກເຈົ້າຈະມີຄວາມສງົບສຸກ ແຕ່ພວກເຈົ້າໄດ້ເວົ້າວ່າ ພວກເຮົາຈະບໍ່ຍ່າງ
ເຂົ້າໄປໃນທາງນັ້ນ
17 ເຮົາໄດ້ແຕ່ງຄົນເຝົ້າຍາມ ເພື່ອເປົ່າແກເຕືອນບອກພວກເຈົ້າ ແຕ່ພວກເຈົ້າໄດ້ເວົ້າວ່າ ພວກເຮົາຈະບໍ່ຟັງ
18 ດ້ວຍເຫດນັ້ນ ຊາດຕ່າງໆເອີຍ, ຈົ່ງຟັງແລະຊາບເທີນວ່າອັນໃດຈະເກີດຂຶ້ນແກ່ໄພ່ພົນຂອງເຮົາ
19 ໂລກເອີຍ, ຈົ່ງຟັງເທີນ ເຮົາຈະນຳເອົາພັຍວິບັດມາຍັງປະຊາຊົນເຫລົ່ານີ້ ຄືພັຍວິບັດທີ່ເຂົາສົມຄວນໄດ້ຮັບ ເພາະວ່າ
ເຂົາບໍ່ເຊື່ອຟັງຖ້ອຍຄຳຂອງເຮົາ ແລະບໍ່ໄດ້ສົນໃຈຄຳສອນຂອງເຮົາ

20 ຈະເປັນປະໂຫຍດອັນໃດແກ່ເຮົາ ທີ່ໄດ້ທູບຫອມມາແຕ່ເມືອງເຊບາ ຫລືໄດ້ເຄື່ອງຫອມມາຈາກທາງໄກ ເຮົາຈະບໍ່ຍິນດີ
ຮັບເອົາເຄື່ອງບູຊາຂອງເຂົາ
21 ດັ່ງນັ້ນ ເຮົາພຣະຜູ້ເປັນເຈົ້າຈະທຳໃຫ້ຄົນເຫລົ່ານີ້ຕຳສະດຸດ ບິດາແລະບຸດທັງຫລາຍຂອງເຂົາຈະຕາຍ ມິດສະ
ຫາຍແລະເພື່ອນບ້ານກໍຈະຕາຍເຫມືອນກັນ"
22 ພຣະຜູ້ເປັນເຈົ້າຊົງກ່າວວ່າ "ປະຊາຊົນຈະມາຈາກປະເທດທາງທິດເຫນືອ ຊາດຍິ່ງໃຫຍ່ທີ່ຢູ່ຫ່າງໄກກຳລັງຕຽມຕົວມາ
ຕໍ່ສູ້
23 ພວກເຂົາຖືຫນ້າທະນູແລະຫອກ ເປັນຄົນໂຫດຮ້າຍຂາດເມດຕາຈິດ ພວກເຂົາຂີ່ມ້າແລະຮ້ອງສຽງດັງເຫມືອນສຽງຄື້ນ
ທະເລ ແລະຕຽມພ້ອມສຳລັບຮົບເສິກຕໍ່ສູ້ເມືອງຊີໂອນ"
24 ປະຊາຊົນເຢຣູຊາເລັມໄດ້ເວົ້າວ່າ, "ເມື່ອພວກເຮົາໄດ້ຍິນຂ່າວນັ້ນ ມືຂອງພວກເຮົາໄດ້ອ່ອນເພັຽ ມີຄວາມຢ້ານກົວ
ແລະເຈັບປວດເຫມືອນຜູ້ຍິງກຳລັງຄອດບຸດ
25 ພວກເຮົາບໍ່ກ້າອອກໄປຕາມບ້ານນອກ ຫລືຍ່າງໄປຕາມຖນົນຫົນທາງ ເພາະວ່າສັດຕຣູໄດ້ຕຽມໂຈມຕີຢູ່ ແລະຄວາມ
ຢ້ານກົວກໍມີຢູ່ທຸກດ້ານ"
26 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ໄພ່ພົນຂອງເຮົາເອີຍ ຈົ່ງນຸ່ງເຄື່ອງໄວ້ທຸກ ແລະກິ້ງເກືອກຢູ່ໃນຂີ້ເຖົ່າໄຟ ຈົ່ງຮ້ອງໄຫ້ດ້ວຍ
ຄວາມຂົມຂື່ນເຫມືອນລູກຊາຍຄົນດຽວຕາຍ ເພາະວ່າຜູ້ທຳລາຍຈະເຂົ້າໂຈມຕີເຮົາໃນທັນທີທັນໃດ
27 "ເຮົາໄດ້ກະທຳໃຫ້ເຈົ້າເປັນຜູ້ໄປທົດລອງເບິ່ງໄພ່ພົນຂອງເຮົາ ແລະສຶກສາເບິ່ງຄວາມປະພຶດທັງຫລາຍຂອງເຂົາ
28 ເຂົາທັງຫລາຍເປັນກະບົດທີ່ດື້ດ້ານ ເປັນຄົນມັກກ່າວຂວັນນິນທາຄົນອື່ນ ເຂົາຫົວແຂງເຫມືອນທອງເຫລືອງແລະ
ເຫລັກກ້າ ເປັນຄົນສໍ້ໂກງທັງສິ້ນ
29 ເຕົາເຜົາເງິນກໍຮ້ອນແຮງແລ້ວ ແຕ່ສິ່ງບໍ່ດີທີ່ປົນຢູ່ນຳເງິນບໍ່ໄດ້ເປື່ອຍສູນໄປ ວຽກນັ້ນຈຶ່ງບໍ່ເປັນປະໂຫຍດ ຄົນຊົ່ວກໍຢ່າງ
ດຽວກັນນັ້ນ ຄືຍັງບໍ່ໄດ້ສູນຫາຍໄປເລີຍ
30 ຄົນທັງປວງຈະເອີ້ນເຂົາວ່າເປັນເງິນໃຊ້ບໍ່ໄດ້ ເພາະວ່າເຮົາພຣະຜູ້ເປັນເຈົ້າໄດ້ປະຖິ້ມເຂົາແລ້ວ"

## 7 ເຢເຣມີຢາເທສນາໃນວິຫານ

Jeremiah Proclaims God's Judgment on the Nation (ຢຣມ 26:4-6)

1 ພຣະຄຳຊຶ່ງມາຈາກພຣະຜູ້ເປັນເຈົ້າເຖິງເຢເຣມີຢາວ່າ,
2 "ເຈົ້າຈົ່ງຢືນຢູ່ໃນປະຕູກຳແພງພຣະວິຫານຂອງພຣະຜູ້ເປັນເຈົ້າແລະປະກາດຖ້ອຍຄຳເຫລົ່ານີ້ທີ່ນັ້ນວ່າ ບັນດາຄົນຢູ
ດາທັງປວງຜູ້ເຂົ້າມາໃນປະຕູກຳແພງນີ້ເພື່ອນະມັສການພຣະຜູ້ເປັນເຈົ້າ ຈົ່ງຟັງພຣະວັຈນະພຣະຜູ້ເປັນເຈົ້າ
3 ພຣະຜູ້ເປັນເຈົ້າຈອມໂຍທາພຣະເຈົ້າຂອງອິສຣາເອນຊົງກ່າວດັ່ງນີ້ວ່າ, "ຈົ່ງປ່ຽນທາງດຳເນີນຊີວິດແລະການກະທຳ
ຂອງພວກເຈົ້າເສັຽ ເພື່ອເຮົາຈະໃຫ້ເຈົ້າອາສັຍຢູ່ໃນທີ່ນີ້
4 ຢ່າເຊື່ອຄຳຕົວະທີ່ວ່າ ນີ້ແມ່ນພຣະວິຫານຂອງພຣະຜູ້ເປັນເຈົ້າ ພຣະວິຫານຂອງພຣະຜູ້ເປັນເຈົ້າ ພຣະວິຫານຂອງພ
ຣະຜູ້ເປັນເຈົ້າ"
5 ຈົ່ງປ່ຽນທາງດຳເນີນຊີວິດ ແລະການກະທຳຂອງພວກເຈົ້າເສັຽໃຫ້ເຮັດຕໍ່ກັນແລະກັນຢ່າງຍຸດຕິທັມ
6 ຢ່າເອົາປຽບຄົນຕ່າງດ້າວພ້ອມທັງລູກກຳພ້າແລະແມ່ຫມ້າຍ ໃຫ້ຢຸດປະຫັດປະຫານຜູ້ບໍ່ມີຄວາມຜິດໃນສະຖານທີ່ສັກ
ສິດນີ້ ແລະໃຫ້ຢຸດຂາບໄຫວ້ພຣະອື່ນເສັຽ ເພາະວ່າການກະທຳເຊັ່ນນີ້ຈະເປັນການທຳລາຍພວກເຈົ້າເອງ
7 ແລ້ວເຮົາຈະໃຫ້ພວກເຈົ້າອາສັຍຢູ່ໃນທີ່ນີ້ຕໍ່ໄປ ຄືຢູ່ໃນດິນແດນທີ່ເຮົາໄດ້ຍົກໃຫ້ບັນພະບຸຣຸດຂອງພວກເຈົ້າເປັນເຈົ້າ
ຂອງຕລອດໄປເປັນນິດນັ້ນ
8 ເບິ່ງດູ ພວກເຈົ້າໄວ້ໃຈໃນຄຳຕົວະ

9 ເຈົ້າຈະລັກສິ່ງຂອງ ຂ້າຄົນ ລ່ວງເກີນຜົວເມັຽຜູ້ອື່ນ ສາບົດສາບານດ້ວຍຄຳບໍ່ຈິງ ຖວາຍບູຊາແກ່ພຣະບາອານ ແລະ
ຂາບໄຫວ້ ພຣະອື່ນທີ່ພວກເຈົ້າບໍ່ຮູ້ຈັກ
10 ທຳແຕ່ສິ່ງທີ່ເຮົາກຽດຊັງ ແລະມາຢືນຢູ່ຕໍ່ຫນ້າເຮົາໃນພຣະວິຫານຂອງເຮົາ ແລ້ວກໍເວົ້າວ່າພວກເຮົາປອດພັຍແລ້ວ
11 ພວກເຈົ້າຄິດວ່າພຣະວິຫານຂອງເຮົາເປັນບ່ອນຫລົບລີ້ຂອງພວກເຈົ້າຊັ້ນບໍ ເຮົາໄດ້ເຫັນສິ່ງທີ່ພວກເຈົ້າກະທຳແລ້ວ
ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ
12 ຈົ່ງໄປເມືອງຊີໂລບ່ອນທີ່ເຮົາເລືອກໄວ້ເປັນບ່ອນຂາບໄຫວ້ແຕ່ກ່ອນ ແລ້ວຈົ່ງເບິ່ງສິ່ງທີ່ເຮົາໄດ້ກະທຳຕໍ່ເມືອງນັ້ນ
13 ຍ້ອນຄວາມຊົ່ວຂອງອິສຣາເອນໄພ່ພົນຂອງເຮົາ ພວກເຈົ້າໄດ້ກະທຳບາບທີ່ເຮົາໄດ້ກ່າວນີ້ທັງຫມົດ ເຖິງແມ່ນເຮົາໄດ້
ເວົ້າກັບພວກເຈົ້າຫລາຍເທື່ອຫລາຍທີແລ້ວກໍດີ ພວກເຈົ້າກໍຍັງບໍ່ຍອມຟັງ ແລະເມື່ອເຮົາເອີ້ນພວກເຈົ້າ ພວກເຈົ້າກໍບໍ່
ຕອບ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ
14 ດ້ວຍເຫດນີ້ເຮົາຈະກະທຳຕໍ່ບ່ອນທີ່ເຮົາໄດ້ຍົກໃຫ້ບັນພະບຸຣຸດຂອງເຈົ້າ ຄືພຣະວິຫານທີ່ພວກເຈົ້າໄດ້ອາສັຍຢູ່ນີ້
ເຫມືອນກັບໄດ້ກະທຳທີ່ເມືອງຊີໂລນັ້ນ
15 ຈະຂັບໄລ່ພວກເຈົ້າອອກໄປຈາກສາຍຕາຂອງເຮົາເຫມືອນໄດ້ກະທຳຕໍ່ຊາວເອຟຣາອິມຍາດພີ່ນ້ອງຂອງພວກເຈົ້ານັ້ນ

**ຄວາມບໍ່ເຊື່ອຟັງຂອງປະຊາຊົນ**

The People's Disovedience

16 ຝ່າຍເຈົ້າ ເຈົ້າຢ່າອ້ອນວອນສຳລັບປະຊາຊົນເຫລົ່ານີ້ ຢ່າຮ້ອງໄຫ້ຫລືອ້ອນວອນຂໍເພື່ອເຂົາ ຢ່າຂໍອະພັຍໂທດນຳເຮົາ
ເພາະວ່າເຮົາຈະບໍ່ຟັງເຈົ້າ
17 ເຈົ້າບໍ່ເຫັນສິ່ງທີ່ເຂົາທັງຫລາຍກຳລັງກະທຳໃນເມືອງທັງຫລາຍຂອງຢູດາ ແລະຕາມຖນົນໃນກຸງເຢຣູຊາເລັມຫລື
18 ຄື ເດັກນ້ອຍກໍເກັບເອົາຟືນ ພວກຜູ້ຊາຍກໍດັງໄຟ ແລະພວກຜູ້ຍິງກໍນວດແປ້ງ ເຮັດເຂົ້າຫນົມຫວານຖວາຍເຈົ້າຍິງເທິງ
ຟ້າສວັນ ພວກເຂົາໄດ້ເທເຄື່ອງດື່ມຖວາຍແກ່ພຣະອື່ນ ເພື່ອທຳໃຫ້ເຮົາເສັຽໃຈ
19 ແມ່ນເຮົາແທ້ບໍເປັນຜູ້ໄດ້ຮັບຄວາມເສັຽໃຈ ເຮົາກ່າວວ່າ ບໍ່ແມ່ນເຮົາດອກມັນແມ່ນເຂົາເອງເປັນຜູ້ເສັຽໃຈ ແລະຈະນຳ
ຄວາມລະອາຍມາສູ່ເຂົາເອງ
20 ດ້ວຍເຫດນັ້ນ ເຮົາພຣະຜູ້ເປັນເຈົ້າຈະເທຄວາມຮ້າຍອັນຮຸນແຮງຂອງເຮົາລົງໃສ່ບ່ອນນີ້ ຈະເທລົງໃສ່ທັງຄົນ ສັດເດັຽ
ຣະສານ ກົກໄມ້ແລະເຄື່ອງປູກ ຄວາມຮ້າຍຂອງເຮົາຈະລຸກໄຫມ້ເຫມືອນໄຟ ຊຶ່ງບໍ່ມີໃຜຈະມອດໄດ້
21 ໄພ່ພົນຂອງເຮົາເອີຍ, ໃຫ້ພວກເຈົ້າກິນເຄື່ອງເຜົາບູຊາເຫມືອນກິນເຄື່ອງບູຊາອື່ນໆນັ້ນເສັຽ ເຮົາພຣະຜູ້ເປັນເຈົ້າຜູ້ມີ
ອຳນາດຍິ່ງໃຫຍ່ຂອງອິສຣາເອນໄດ້ກ່າວດັ່ງນີ້ແຫລະ
22 ເມື່ອເຮົານຳບັນພະບຸຣຸດຂອງພວກເຈົ້າອອກຈາກປະເທດເອຢິບນັ້ນ ເຮົາບໍ່ໄດ້ໃຫ້ຄຳສັ່ງກ່ຽວກັບເຄື່ອງເຜົາບູຊາຫລື
ເຄື່ອງບູຊາຊະນິດອື່ນໆແກ່ເຂົາເລີຍ
23 ແຕ່ໄດ້ສັ່ງໃຫ້ເຂົາເຊື່ອຟັງເຮົາ ເພື່ອເຮົາຈະໄດ້ເປັນພຣະເຈົ້າຂອງເຂົາ ແລະເຂົາຈະໄດ້ເປັນໄພ່ພົນຂອງເຮົາ ເຮົາໄດ້
ບອກໃຫ້ເຂົາປະພຶດຕາມທາງທີ່ໄດ້ສັ່ງນັ້ນ ເພື່ອສິ່ງທັງຫລາຍຈະໄດ້ເປັນຜົນດີແກ່ພວກເຂົາ
24 ແຕ່ພວກເຂົາບໍ່ເຊື່ອຟັງຫລືເອົາໃຈໃສ່ເລີຍ ມີແຕ່ປະພຶດໄປຕາມທາງຄວາມດື້ດ້ານແລະໃຈຊົ່ວຂອງເຂົາເອງ
25 ສະນັ້ນພວກເຂົາຈຶ່ງຊົ່ວຫນັກລົງແທນທີ່ຈະດີຂຶ້ນ ຕັ້ງແຕ່ວັນທີ່ບັນພະບຸຣຸດຂອງພວກເຈົ້າອອກຈາກເອຢິບຈົນເຖິງ
ທຸກມື້ນີ້ ເຮົາໄດ້ໃຊ້ບັນດາພວກຜູ້ປະກາດພຣະທັມຂອງເຮົາໄປຫາພວກເຈົ້າຢູ່ສເມີ
26 ແຕ່ພວກເຈົ້າບໍ່ຟັງຫລືເອົາໃຈໃສ່ເລີຍ ແຮ່ງເປັນຄົນຫົວດື້ ແລະປະພຶດຊົ່ວກວ່າບັນພະບຸຣຸດຂອງພວກເຈົ້າເສັຽອີກ
27 ດ້ວຍເຫດນັ້ນ ເຈົ້າຈະກ່າວຖ້ອຍຄຳເຫລົ່ານີ້ສູ່ເຂົາຟັງ ແຕ່ເຂົາຈະບໍ່ຟັງ ເຈົ້າຈະເອີ້ນເຂົາແຕ່ເຂົາຈະບໍ່ຕອບເຈົ້າ
28 ເຈົ້າຈະບອກວ່າພວກເຂົາເປັນຊົນຊາດທີ່ບໍ່ເຊື່ອຟັງເຮົາ ທັງບໍ່ຍອມຮັບເອົາຄວາມຕັກເຕືອນຂອງເຮົາ ຄວາມສັດຊື່ໄດ້
ສູນຫາຍໄປຈາກເຂົາ ພວກເຂົາບໍ່ເວົ້າເຖິງຄວາມສັດຊື່ອີກເລີຍ

29 ຈົ່ງຮ້ອງໄຫ້ເສັ່ງໃຈ ແລະໄວ້ທຸກເທີນ ຈົ່ງແຖຜົມຂອງພວກເຈົ້າຖິ້ມເສັ່ງ ແລະຈົ່ງຮ້ອງໄຫ້ອາລັຍເຖິງຈອມພູທີ່ສູງ ເພາະ
ວ່າເຮົາ    ພຣະຜູ້ເປັນເຈົ້າໄດ້ປະຖິ້ມປະຊາຊົນເຫລົ່ານີ້ດ້ວຍຄວາມຮ້າຍຂອງເຮົາ
30 ປະຊາຊົນຢູດາໄດ້ກະທຳສິ່ງທີ່ຊົ່ວຮ້າຍ ເຂົາໄດ້ເອົາຮູບພຣະຂອງເຂົາທີ່ເຮົາກຽດຊັງມາວາງໄວ້ໃນວິຫານຂອງເຮົາ ທຳ
ໃຫ້ວິຫານນັ້ນເສື່ອມເສັ່ງ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ
31 ພວກເຂົາໄດ້ສ້າງແທ່ນບູຊາຊຶ່ງເອີ້ນວ່າ ໂຕເຟທໄວ້ໃນຮ່ອມພູແຫ່ງບຸດຊາຍຂອງ ຮິນໂນມ ເພື່ອຈະໄດ້ເອົາບຸດຊາຍ
ຍິງຂອງເຂົາມາເຜົາບູຊາ ເຮົາບໍ່ເຄີຍນຶກບໍ່ເຄີຍສັ່ງໃຫ້ເຂົາກະທຳຢ່າງນີ້ເລີຍ
32 ດ້ວຍເຫດນີ້ ເວລານັ້ນຈະຕ້ອງມາເຖິງແນ່ນອນ ເມື່ອນັ້ນຈະບໍ່ໄດ້ເອີ້ນວ່າໂຕເຟທ ຫລືຮ່ອມພູບຸດຊາຍຂອງຮິນໂນມ
ອີກຕໍ່ໄປ ແຕ່ຈະໄດ້ເອີ້ນວ່າຮ່ອມພູແຫ່ງການຂ້າຟັນກັນ ເພາະວ່າເຂົາຈະໄດ້ຝັງສົບຄົນໄວ້ໃນໂຕເຟທຈົນ ເພາະແຫ່ງ
ອື່ນບໍ່ມີບ່ອນວ່າງແລ້ວ
33 ແລະສົບຂອງຊົນຊາດນີ້ຈະເປັນອາຫານຂອງນົກໃນອາກາດ ແລະແກ່ສັດແຫ່ງແຜ່ນດິນໂລກ ແລະບໍ່ມີໃຜຈະຂັບໄລ່
ໃຫ້ມັນໄປເສັ່ງໄດ້
34 ເຮົາຈະທຳໃຫ້ສຽງຂອງຄວາມມ່ວນຊື່ນຍິນດີ ແລະສຽງຂອງເຈົ້າບ່າວເຈົ້າສາວໃນເມືອງທັງຫລາຍຂອງຢູດາ ແລະໃນ
ຖນົນກຸງເຢຣູຊາເລັມສິ້ນສຸດລົງ”

# 8

Chapter 8

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ ໃນການຄັ້ງນັ້ນ ກະດູກຂອງບັນດາກະສັດຢູດາ ກະດູກເຈົ້ານາຍຂອງຢູດາ ກະດູກປະໂຣ
ຫິດ ກະດູກຜູ້ປະກາດພຣະທັມ ແລະກະດູກຂອງຊາວເມືອງເຢຣູຊາເລັມຈະມີຄົນເອົາອອກມາຈາກອຸບໂມງຂອງເຂົາ
ທັງຫລາຍເຫລົ່ານັ້ນ
2 ແລະເຂົາຢາຍກະດູກເຫລົ່ານັ້ນອອກຕໍ່ຫນ້າດວງອາທິດ ດວງຈັນ ແລະບໍຣິວານແຫ່ງຟ້າສວັນທັງສິ້ນ ຊຶ່ງເຂົາທັງ
ຫລາຍຮັກແລະບົວຣະບັດ ຊຶ່ງເຂົາໄດ້ຕິດຕາມ ຊຶ່ງເຂົາໄດ້ສແວງຫາແລະນະມັສການ ຈະບໍ່ມີໃຜຮວບຮວມຫລືຝັງກະ
ດູກເຫລົ່ານີ້ ແຕ່ຈະເປັນເຫມືອນຝຸ່ນຢາຍເດັ່ງຣະດາດຢູ່ຕາມຫນ້າດິນ
3 ບັນດາຄົນທີ່ເຫລືອຢູ່ຈາກຄອບຄົວຮ້າຍນີ້ ຊຶ່ງຕົກຄ້າງຢູ່ໃນສະຖານທີ່ທັງຫລາຍຊຶ່ງເຮົາໄດ້ຂັບໄລ່ເຂົາໄປ ຈະເລືອກ
ຄວາມຕາຍຫລາຍກວ່າທີ່ຈະມີຊີວິດຢູ່ ພຣະຜູ້ເປັນເຈົ້າກ່າວວ່າດັ່ງນີ້

**ບາບແລະການພິພາກສາລົງໂທດ**

The Blind Perversity of the Whole Nation

4 “ເຈົ້າຈົ່ງເວົ້າກັບເຂົາທັງຫລາຍວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເມື່ອມະນຸດລົ້ມລົງ ເຂົາຈະບໍ່ລຸກຂຶ້ນອີກຫລື ຖ້າຜູ້ນຶ່ງ
ຜູ້ໃດຫັນໜີໄປ ເຂົາຈະບໍ່ກັບມາຫລື
5 ເປັນຫຍັງຊົນຊາດນີ້ຄືເຢຣູຊາເລັມຈຶ່ງໄດ້ຫັນໜີໄປ ເປັນການບໍ່ສັດຊື່ຢູ່ເປັນນິດ ເຂົາຍຶດການຫລອກລວງໄວ້ຫມັ້ນ
ເຂົາທັງຫລາຍປະຕິເສດບໍ່ຍອມກັບ
6 ເຮົາໄດ້ຕັ້ງໃຈແລະຄອຍຟັງ ແຕ່ເຂົາທັງຫລາຍກໍເວົ້າບໍ່ຖືກຕ້ອງ ບໍ່ມີຄົນໃດກັບໃຈຈາກການອະທັມຂອງຕົນ ກ່າວວ່າ,
“ຂ້າໄດ້ເຮັດຫຍັງແດ່” ທຸກຄົນຫັນໄປຕາມທາງຂອງເຂົາເອງເຫມືອນມ້າແລ່ນເອົາຫົວມຸ້ງໜ້າເຂົ້າໄປໃນສົງຄາມ
7 ແມ້ວ່ານົກກະສາດຳເທິງຟ້າຍັງຮູ້ຈັກເວລາກຳນົດຂອງມັນ ແລະນົກເຂົາ ນົກນາງແອ່ນ ແລະນົກກຽນ ໄດ້ຮັກສາເວລາ
ມາຂອງມັນ ແຕ່ໄພ່ພົນຂອງເຮົາ ບໍ່ຮູ້ຈັກກົດຫມາຍຂອງພຣະຜູ້ເປັນເຈົ້າ
8 “ເຈົ້າຈະເວົ້າໄດ້ຢ່າງໃດວ່າ ເຮົາມີປັນຍາ ແລະພຣະທັມຂອງພຣະຜູ້ເປັນເຈົ້າກໍຢູ່ກັບເຮົາ” ແຕ່ເບິ່ງແມ, ປາກກາຂອງ
ພວກອາຣັກ ໄດ້ກະທຳໃຫ້ພຣະທັມເປັນຄຳຕົວະ

9 ຄົນມີປັນຍາຈະໄດ້ຮັບຄວາມອາຍ ເຂົາຈະຢ້ານກົວແລະຖືກຈັບຕົວໄປ ເຂົາໄດ້ປະຕິເສດພຣະຄຳຂອງພຣະຜູ້ເປັນ
ເຈົ້າ ແລະປັນຍາຢ່າງໃດມີໃນຕົວເຂົາ
10 ເຫດສັນນັ້ນ ເຮົາຈະໃຫ້ເມັຽຂອງເຂົາຕົກໄປເປັນຂອງຄົນອື່ນ ໃຫ້ໄຮ່ນາຂອງເຂົາຕົກແກ່ຜູ້ທີ່ຈະໄດ້ຮັບ ເພາະວ່າຕັ້ງ
ແຕ່ຄົນທີ່ຕ່ຳຕ້ອຍທີ່ສຸດເຖິງຄົນທີ່ໃຫຍ່ທີ່ສຸດ ທຸກຄົນໂລບຢາກໄດ້ກຳໄລ ຕັ້ງແຕ່ຜູ້ປະກາດພຣະທັມເຖິງປະໂຣຫິດ ທຸກ
ຄົນກໍທຳການສໍ້ໂກງເຂົາ
11 ເຂົາໄດ້ຮັກສາແຜແຫ່ງປະຊາກອນຂອງເຮົາແຕ່ເລັກນ້ອຍ ກ່າວວ່າ, “ສັນຕິສຸກ ສັກຕິສຸກ” ໃນເມື່ອບໍ່ມີສັນຕິສຸກເສັຽ
ເລີຍ
12 ເມື່ອເຂົາກະທຳການທີ່ຫນ້າກຽດຊັງເຂົາອາຍບໍ່ ບໍ່ດອກ ເຂົາບໍ່ເຄີຍມີຄວາມອາຍ ເຂົາບໍ່ຮູ້ຈັກຄວາມອັບອາຍຂາຍ
ຫນ້າ ເຫດສັນນັ້ນເຂົາຈະລົ້ມລົງຖ້າມກາງພວກທີ່ລົ້ມແລ້ວ ເມື່ອເຮົາລົງໂທດເຂົາທັງຫລາຍເຂົາຈະລົ້ມຂວ້ຳລົງ ພຣະ
ຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
13 ພຣະຜູ້ເປັນເຈົ້າກ່າວວ່າ ເມື່ອເຮົາຈະຮວບຮວມເຂົາ ກໍເຫັນວ່າເຄືອອະງຸ່ນບໍ່ມີຜົນ ຫລືຕົ້ນຫມາກເດື່ອບໍ່ມີຜົນ ເຖິງ
ແມ່ນວ່າໃບກໍຫ່ຽວແຫ້ງໄປ ແລະສິ່ງໃດທີ່ເຮົາໃຫ້ເຂົາກໍສູນເສັຽໄປຈາກເຂົາ”
14 ເປັນຫຍັງເຮົາຈຶ່ງນັ່ງເສີຍຢູ່ ຈົ່ງພາກັນມາ ໃຫ້ເຮົາເຂົ້າໄປໃນຫົວເມືອງທີ່ມີປ້ອມແລະພິນາດເສັຽທີ່ນັ້ນເຖີດ ເພາະພຣະ
ຜູ້ເປັນເຈົ້າພຣະເຈົ້າຂອງເຮົາຈະຊົງໃຫ້ເຮົາພິນາດແລະຊົງປະທານນ້ຳບີຫມີໃຫ້ເຮົາດື່ມ ເພາະເຮົາໄດ້ກະທຳບາບຕໍ່
ພຣະຜູ້ເປັນເຈົ້າ
15 ເຮົາມອງຫາສັນຕິພາບ ແຕ່ບໍ່ມີຄວາມດີຫຍັງເກີດຂຶ້ນເລີຍ ເຮົາມອງຫາເວລາຮັກສາໃຫ້ຫາຍແຕ່ປະລິບຄວາມຫນ້າ
ຢ້ານກົວ
16 “ສຽງຄະນອງແຫ່ງມ້າຂອງເຂົາກໍໄດ້ຍິນມາຈາກເມືອງດານ ແຜ່ນດິນທັງສິ້ນກໍຫວັ່ນໄຫວ ດ້ວຍສຽງຮ້ອງຂອງກອງມ້າ
ຂອງເຂົາທັນໃຈ ພວກມັນມາກິນແຜ່ນດິນແລະສິ່ງທັງປວງທີ່ຢູ່ເທິງນັ້ນຈົນຫມົດ ທັງເມືອງແລະຜູ້ທີ່ອາສັຍຢູ່ໃນເມືອງ
17 ເພາະ ເບິ່ງແມ, ເຮົາກຳລັງສົ່ງງູເຂົ້າມາຖ້າມກາງເຈົ້າ ຄືງູພິດຊຶ່ງຈະຜູກດ້ວຍມົນບໍ່ໄດ້ ແລະມັນຈະກັດເຈົ້າທັງຫລາຍ”
ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ”

The Prophet Mourns for the People

18 ຄວາມທຸກລະທົມຂອງຂ້າພະເຈົ້ານີ້ເຫລືອທີ່ຈະຮັກສາ ຈິດໃຈຂອງຂ້າພະເຈົ້າກໍປ່ວຍຢູ່ພາຍໃນ
19 ຟັງເດີ ສຽງຮ້ອງໄຫ້ແຫ່ງລູກສາວໄພ່ພົນຂອງຂ້າພະເຈົ້າ ຈາກແຜ່ນດິນທັງສ່ວນກວ້າງແລະສ່ວນຍາວ “ພຣະຜູ້ເປັນ
ເຈົ້າບໍ່ໄດ້ສະຖິດໃນຊີໂອນຫລື ພຣະຣາຊາຂອງເມືອງນັ້ນບໍ່ຢູ່ໃນນັ້ນຫລື “ເປັນຫຍັງເຂົາຍົວະເຍົ້າເຮົາໃຫ້ພິໂຣດດ້ວຍ
ຮູບໂຄຣົບຂອງເຂົາ ແລະດ້ວຍພຣະຕ່າງດ້າວຂອງເຂົາ”
20 ຣະດູກ່ຽວກໍຜ່ານໄປ ຣະດູແລ້ງກໍສິ້ນລົງແລ້ວ ແລະເຮົາທັງຫລາຍກໍບໍ່ພົ້ນ”
21 ເພາະແຜລູກສາວແຫ່ງໄພ່ພົນຂອງຂ້າພະເຈົ້າ ຫົວໃຈຂ້າພະເຈົ້າຈຶ່ງເປັນແຜ ຂ້າພະເຈົ້າເສົ້າຫມອງ ແລະຄວາມຢ້ານ
ກົວກໍຍຶດຂ້າພະເຈົ້າໄວ້ຫມັ້ນ
22 ບໍ່ມີຢານ້ຳມັນໃນກີເລອາດຫລື ບໍ່ມີຫມໍປິ່ນປົວທີ່ນັ້ນຫລື ເປັນຫຍັງບາດແຜລູກສາວແຫ່ງໄພ່ພົນຂອງຂ້າພະເຈົ້າຈຶ່ງບໍ່
ກັບຄືນສູ່ສະພາບເດີມໄດ້

# 9

Chapter 9

1 ຖ້າຫົວຂອງຂ້າພະເຈົ້າເປັນນ້ຳ ແລະດວງຕາຂອງຂ້າພະເຈົ້າເປັນບໍ່ນ້ຳຕາພຸກໍຈະດີ ເພື່ອຂ້າພະເຈົ້າຈະໄດ້ຮ້ອງໄຫ້ທັງ
ກາງເວັນແລະກາງຄືນ ເພາະລູກສາວຊົນຊາດຂອງຂ້າພະເຈົ້າທີ່ຖືກຂ້າ

2 ຖ້າຂ້າພະເຈົ້າມີທີ່ພັກສຳລັບຄົນເດີນທາງ ຢູ່ທີ່ໃນຖິ່ນກັນດານກໍຈະດີ ເພື່ອຂ້າພະເຈົ້າຈະໄດ້ພາກຈາກຊົນຊາດຂອງ
ຂ້າພະເຈົ້າແລະໄປໃຫ້ພົ້ນຈາກເຂົາເສັຽ ເພາະເຂົາທັງຫລາຍເປັນຄົນລ່ວງປະເວນີທັງຫມົດ ແລະເປັນຫມູ່ຄົນທີ່ມັກທໍ
ຣະຍົດ
3 ເຂົາທັງຫລາຍງໍລີ້ນຂອງເຂົາເຫມືອນຄັນທະນູ ຄວາມຕົວະແລະບໍ່ແມ່ນສັດຈະທີ່ຈະເຣີນແຂງແຮງຂຶ້ນໃນແຜ່ນດິນ
ເພາະເຂົາທັງຫລາຍອອກຈາກຄວາມຊົ່ວຢ່າງນຶ່ງໄປສູ່ຄວາມຊົ່ວອີກຢ່າງນຶ່ງ ແລະເຂົາທັງຫລາຍບໍ່ຮູ້ຈັກເຮົາ ພຣະຜູ້
ເປັນເຈົ້າກ່າວດັ່ງນີ້ແຫລະ
4 ”ຂໍໃຫ້ທຸກຄົນລະວັງເພື່ອນບ້ານຂອງຕົນແລະຢ່າວາງໃຈໃນພີ່ນ້ອງຄົນໃດເລີຍ ເພາະວ່າພີ່ນ້ອງທຸກຄົນເປັນຄົນຫລອກ
ລວງ ແລະເພື່ອນບ້ານທຸກຄົນທ່ຽວໄປເປັນຄົນເວົ້າຂວັນນິນທາ
5 ທຸກຄົນລໍ້ລວງເພື່ອນບ້ານຂອງຕົນ ບໍ່ມີຜູ້ໃດເວົ້າຄວາມຈິງຈັກຄົນດຽວ ເຂົາໄດ້ສອນລີ້ນຂອງເຂົາໃຫ້ເວົ້າຕົວະ ເຂົາໄດ້
ກະທຳບາບຊົ່ວແລະກັບໃຈອີກບໍ່ໄດ້ແລ້ວ
6 ເຈົ້າອາສັຍຢູ່ຖ້າມກາງການລໍ້ລວງ ໂດຍການລໍ້ລວງນັ້ນເຂົາປະຕິເສດເຮົາ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
7 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ, “ເບິ່ງແມ, ເຮົາຈະຫລອມເຂົາ ແລະທົດລອງເຂົາ ເພາະເຮົາ
ຈະເຮັດຢ່າງອື່ນຕໍ່ລູກສາວໄພ່ພົນຂອງເຮົາໄດ້ຢ່າງໃດ
8 ລີ້ນຂອງເຂົາເປັນລູກສອນພິດ ມັນເວົ້າຫລອກລວງ ທຸກຄົນເວົ້າຢ່າງສັນຕິກັບເພື່ອນບ້ານຂອງເຂົາດ້ວຍປາກ ແຕ່ໃນ
ໃຈຂອງເຂົາ ເຂົາວາງແຜນການຄອຍດັກຈັບເຂົາຢູ່
9 ພຣະຜູ້ເປັນເຈົ້າກ່າວວ່າ ບໍ່ຄວນທີ່ເຮົາຈະລົງໂທດເຂົາເພາະສິ່ງເຫລົ່ານີ້ຫລື ບໍ່ຄວນທີ່ເຮົາຈະແກ້ແຄ້ນຊົນຊາດທີ່ເປັນ
ຢ່າງນີ້ຫລື
10 “ຈົ່ງຮ້ອງໄຫ້ແລະຄວນຄາງເພາະພູນັ້ນ ແລະຄໍ່າຄວນເພາະເດີ່ນຫຍ້າໃນຖິ່ນກັນດານ ເພາະວ່າມັນຖືກປະຮ້າງ ບໍ່ມີຜູ້
ໃດຜ່ານໄປມາ ບໍ່ໄດ້ຍິນສຽງສັດລ້ຽງຮ້ອງທັງນົກໃນອາກາດແລະພວກສັດໄດ້ຫນີໄປເສັຽແລ້ວ
11 ເຮົາຈະກະທຳໃຫ້ເຢຣູຊາເລັມເປັນກອງສິ່ງສລັກຫັກພັງ ເປັນທີ່ຢູ່ຂອງຫມາປ່າ ແລະເຮົາຈະກະທຳໃຫ້ຫົວເມືອງຂອງຢູ
ດາເປັນທີ່ຮົກຮ້າງບໍ່ມີຊາວເມືອງ”

**ວ່າຈະຕ້ອງພິນາດແລະຖືກເນຣະເທດ**

12 ໃຜເປັນຄົນມີປັນຍາທີ່ຈະເຂົ້າໃຈຄວາມນີ້ໄດ້ ແລະມີຜູ້ໃດທີ່ພຣະໂອດຂອງພຣະຜູ້ເປັນເຈົ້າໄດ້ກ່າວແກ່ເຂົາ ເຂົາຈຶ່ງ
ປະກາດຄວາມນັ້ນໄດ້ ເຫດໃດແຜ່ນດິນຈຶ່ງພັງທະລາຍແລະຖິ້ມໄວ້ໃຫ້ຮ້າງເປົ່າເຫມືອນຖິ່ນກັນດານ ຈຶ່ງບໍ່ມີຜູ້ໃດຜ່ານ
ໄປມາ
13 ແລະພຣະຜູ້ເປັນເຈົ້າກ່າວວ່າ, “ເພາະເຂົາທັງຫລາຍປະຖິ້ມພຣະທັມຂອງເຮົາຊຶ່ງເຮົາໄດ້ຕັ້ງໄວ້ຕໍ່ຫນ້າເຂົາ ແລະບໍ່ໄດ້
ເຊື່ອຟັງສຽງຂອງເຮົາຫລືດຳເນີນຕາມນັ້ນ
14 ແຕ່ໄດ້ດຳເນີນຕາມໃຈຂອງຕົນເອງຢ່າງດື້ດ້ານ ແລະໄດ້ຕິດຕາມພວກພຣະບາອານເໝືອນທີ່ບັນພະບຸຣຸດໄດ້ສັ່ງສອນ
ເຂົາໄວ້
15 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນຈຶ່ງກ່າວວ່າ ເບິ່ງແມ, ເຮົາຈະລ້ຽງຊົນຊາດນີ້ໃຫ້ກິນ
ພືດຂົມແລະໃຫ້ນໍ້າບີຫມີແກ່ເຂົາດື່ມ
16 ເຮົາຈະກະຈາຍເຂົາໄປຖ້າມກາງປະຊາຊາດທີ່ເຂົາເອງແລະບັນພະບຸຣຸດຂອງເຂົາບໍ່ຮູ້ຈັກ ແລະເຮົາຈະສົ່ງດາບໃຫ້ໄລ່
ຕິດຕາມເຂົາທັງຫລາຍ ຈົນເຮົາຈະທຳລາຍເຂົາຈົ້ນໝົດສິ້ນ”

The People Mourn in Judgment

17 ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ, “ຈົ່ງຕຶກຕອງເບິ່ງ ແລະເອີ້ນຍິງທີ່ຮ້ອງໄຫ້ໃຫ້ມາ ຈົ່ງໃຫ້ຄົນໄປຕາມຍິງທີ່ຊຳ
ນານມາ

18 ໃຫ້ເຂົາຟ້າວສົ່ງສຽງຄໍ່າຄວນເພື່ອເຮົາທັງຫລາຍ ເພື່ອນໍ້າຕາຈະອາບຕາຂອງເຮົາ ແລະຫນັງຕາຂອງເຮົາຈະມີນໍ້າຕາພຸ
ອອກມາ
19 ເພາະໄດ້ຍິນສຽງຄໍ່າຄວນຈາກຊີໂອນ “ເຮົາທັງຫລາຍຖືກທຳລາຍພຽງໃດແລ້ວ ເຮົາອັບອາຍຫລາຍ ເພາະເຮົາໄດ້
ອອກຈາກແຜ່ນດິນ ເພາະເຂົາໄດ້ທຳລາຍທີ່ອາສັຍຂອງເຮົາລົງ”
20 ຍິງເອີຍ, ຈົ່ງຟັງພຣະຄຳຈາກພຣະໂອດຂອງພຣະຜູ້ເປັນເຈົ້າ ແລະໃຫ້ຫູຂອງເຈົ້າຮັບພຣະຄຳຈາກພຣະໂອດຂອງ
ພຣະອົງ ຈົ່ງສອນບົດຄໍ່າຄວນແກ່ລູກສາວຂອງເຈົ້າ ຈົ່ງສອນບົດເພງສົບແກ່ເພື່ອນບ້ານຂອງນາງທຸກຄົນ
21 ເພາະຄວາມຕາຍໄດ້ຂຶ້ນມາເຂົ້າປ່ອງຢ້ຽມຂອງເຮົາ ມັນເຂົ້າມາໃນວັງທັງຫລາຍຂອງເຮົາ ຕັດພວກເດັກນ້ອຍໆອອກ
ເສັຽຈາກຖນົນຫົນທາງ ແລະຕັດຄົນຫນຸ່ມອອກເສັຽຈາກເດີ່ນເມືອງ”
22 ຈົ່ງເວົ້າວ່າ, “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ສົບມະນຸດຈະລົ້ມລົງ ເຫມືອນຂີ້ສັດຕົກຕາມທົ່ງ ເຫມືອນຟ່ອນເຂົ້າລົ້ມ
ຕາມຜູ້ກ່ຽວ ແລະບໍ່ມີຜູ້ໃດຈະເກັບ”ຄວາມຮູ້ເຣື່ອງພຣະເຈົ້າເປັນສັກສີຂອງມະນຸດ
23 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ຢ່າໃຫ້ຜູ້ມີປັນຍາອວດໃນສະຕິປັນຍາຂອງຕົນ ຢ່າໃຫ້ຊາຍສະກັນອວດໃນຄວາມເຂັ້ມ
ແຂງຂອງຕົນ ຢ່າໃຫ້ຄົນຮັ່ງມີອວດໃນຄວາມມັ່ງຄັ່ງຂອງຕົນ
24 ແຕ່ໃຫ້ຜູ້ອວດ ອວດໃນສິ່ງນີ້ຄືໃນການທີ່ເຂົາເຂົ້າໃຈແລະຮູ້ຈັກເຮົາ ວ່າເຮົາຄືພຣະຜູ້ເປັນເຈົ້າ ຊົງສຳແດງຄວາມຮັກ
ຫມັ້ນຄົງ ຄວາມຍຸດຕິທັມ ແລະຄວາມຊອບທັມໃນໂລກ ເພາະວ່າເຮົາພໍໃຈໃນສິ່ງເຫລົ່ານີ້ ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ”
25 ພຣະຜູ້ເປັນເຈົ້າກ່າວວ່າ ເບິ່ງແມ, ວັນເວລາກຳລັງມາເຖິງແລ້ວ ເມື່ອເຮົາຈະລົງໂທດບັນດາຜູ້ທີ່ຮັບພິທີຕັດແລະ
ເຫມືອນບໍ່ໄດ້ຮັບພິທີຕັດ ຄື
26 ເອຢິບ ຢູດາ ເອໂດມ ແລະຄົນອັມໂມນ ໂມອາບ ແລະທຸກຄົນທີ່ອາສັຍຢູ່ໃນຖິ່ນກັນດານ ບັນດາຄົນທີ່ແຖຜົມຈອນຫູ
ເພາະບັນດາປະຊາຊາດເຫລົ່ານີ້ບໍ່ໄດ້ເຂົ້າຮັບພິທີຕັດ ແລະບັນດາປະຊາຊົນອິສຣາເອນກໍບໍ່ໄດ້ຮັບເຂົ້າພິທີຕັດທາງ
ໃຈ”

## 10 ພຣະເຈົ້າປອມແລະພຣະເຈົ້າແທ້

Idolatry Has Brought Ruin on Israel

1 ປະຊາຊົນອິສຣາເອນເອີຍ ຈົ່ງຟັງຖ້ອຍຄຳຊຶ່ງພຣະຜູ້ເປັນເຈົ້າກ່າວກັບເຈົ້າ
2 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ຢ່າເຮັດຕາມບັນດາປະຊາຊາດ ຫລືຢ່າຢ້ານກົວເພາະຫມາຍສຳຄັນຂອງທ້ອງຟ້າ
ຕາມທີ່ບັນດາປະຊາຊາດຢ້ານກົວນັ້ນ
3 ເພາະທັມນຽມຂອງຊົນຊາດທັງຫລາຍກໍປອມ ເຂົາຕັດຕົ້ນໄມ້ມາຈາກປ່າຕົ້ນນຶ່ງ ເປັນສິ່ງທີ່ມືຊ່າງໄດ້ກະທຳດ້ວຍ
ຂວານ
4 ເຂົາທັງຫລາຍກໍເອົາເງິນແລະທອງມາປະດັບ ເຂົາຕອກໄວ້ແຫນ້ນດ້ວຍຄ້ອນແລະຕະປູ ມັນກໍເຄື່ອນໄຫວໄປມາບໍ່ໄດ້
5 ຮູບໂຄຣົບຂອງເຂົາກໍເຫມືອນຫຸ່ນໄລ່ກາຢູ່ໃນສວນຫມາກແຕງກວາ ມັນເວົ້າບໍ່ໄດ້ ຄົນຕ້ອງຂົນມັນໄປເພາະມັນຍ່າງບໍ່
ໄດ້ ຢ່າຢ້ານມັນເລີຍເພາະມັນທຳຮ້າຍບໍ່ໄດ້ ມັນກໍທຳດີບໍ່ໄດ້ເຫມືອນກັນ”
6 ຂ້າແດ່ພຣະຜູ້ເປັນເຈົ້າ ບໍ່ມີຜູ້ໃດເຫມືອນພຣະອົງ ພຣະອົງຊົງເປັນໃຫຍ່ ແລະພຣະນາມຂອງພຣະອົງມີຣິດຫລາຍ
7 ຂ້າແດ່ພຣະຣາຊາແຫ່ງບັນດາປະຊາຊາດ ຜູ້ໃດຈະບໍ່ຢຳເກງພຣະອົງ ເພາະພຣະອົງສົມຄວນແກ່ການຢ່າງນີ້ ເພາະໃນ
ບັນດານັກປາດຂອງບັນດາປະຊາຊາດ ແລະໃນບັນດາຣາຊອານາຈັກທັງສິ້ນຂອງເຂົາ ບໍ່ມີຜູ້ໃດເຫມືອນພຣະອົງ
8 ເຂົາທັງຫລາຍທັງຊົ່ວຊ້າແລະໂງ່ຈ້າ ການຕິສອນຂອງຮູບໂຄຣົບນັ້ນກໍເປັນແຕ່ໄມ້
9 ເຄື່ອງເງິນທຸບນັ້ນເຂົາເອົາມາຈາກທາຊິດ ແລະເອົາທອງຄຳມາຈາກເມືອງອຸຟາດ ເປັນຜົນງານຂອງຊ່າງສີມື ແລະ
ເປັນຜົນນໍ້າມືຂອງຊ່າງຄຳ ເສື້ອຜ້າຂອງຮູບໂຄຣົບນັ້ນສີຄາມແລະສີມ່ວງ ເປັນຜົນງານຂອງຄົນຊຳນານທັງນັ້ນ

10 ແຕ່ພຣະຜູ້ເປັນເຈົ້າເປັນພຣະເຈົ້າທ່ຽງແທ້ ພຣະອົງຊົງເປັນພຣະເຈົ້າຜູ້ຊົງພຣະຊົນແລະເປັນພຣະມະຫາກະສັດຕລອດ
ໄປເປັນນິດ ພໍຊົງພຣະພິໂຣດແຜ່ນດິນກໍຫວັ່ນໄຫວ ແລະບັນດາປະຊາຊາດຈະທົນຕໍ່ຄວາມພິໂຣດຂອງພຣະອົງບໍ່ໄດ້
11 (ເຈົ້າຈົ່ງເວົ້າກັບເຂົາທັງປວງດັ່ງນີ້ວ່າ, “ບັນດາພຣະທີ່ບໍ່ໄດ້ຊົງສ້າງສວັນແລະໂລກຈະພິນາດໄປຈາກໂລກແລະຈາກ
ພາຍໃຕ້ສວັນ”)
12 ຜູ້ຊົງສ້າງໂລກດ້ວຍຣິດເດດຂອງພຣະອົງ ຜູ້ຊົງສະຖາປະນາພິພົບໄວ້ດ້ວຍພຣະສະຕິປັນຍາຂອງພຣະອົງ ແລະຊົງແຜ່
ທ້ອງຟ້າອອກດ້ວຍຄວາມເຂົ້າໃຈຂອງພຣະອົງ
13 ເມື່ອພຣະອົງຊົງເປັ່ງພຣະສຸຣະສຽງກໍມີສຽງນໍ້າຢ່າງຫລວງຫລາຍໃນທ້ອງຟ້າ ແລະຊົງກະທຳໃຫ້ຫມອກລອຍຂຶ້ນຈາກ
ປາຍພິພົບ ຊົງກະທຳຟ້າແມບເຫລື້ອມເພື່ອຝົນ ແລະຊົງນຳລົມມາຈາກພຣະຄັງຂອງພຣະອົງ
14 ມະນຸດທຸກຄົນຊົ່ວຊ້າ ແລະບໍ່ມີຄວາມຮູ້ ຊ່າງຄຳທຸກຄົນຈະໄດ້ອາຍເພາະຮູບໂຄຣົບຂອງຕົນ ເພາະຮູບໂຄຣົບຫລໍ່ຂອງ
ເຂົາເປັນຂອງປອມ ແລະບໍ່ມີລົມຫາຍໃຈໃນຮູບໂຄຣົບນັ້ນ
15 ມັນເປັນຂອງໄຮ້ຄ່າ ແລະເປັນຜົນງານທີ່ຫນ້າເຍາະເຍີ້ຍ ມັນຈະຕ້ອງພິນາດເມື່ອເຖິງເວລາການລົງໂທດ
16 ພຣະອົງຜູ້ຊົງເປັນສ່ວນຂອງຢາໂຄບບໍ່ເຫມືອນສິ່ງເຫລົ່ານີ້ ເພາະພຣະອົງຊົງເປັນຜູ້ທີ່ກໍ່ຮ່າງທຸກສິ່ງຂຶ້ນ ແລະອິສຣາ
ເອນເປັນເຜົ່າທີ່ເປັນມໍຣະດົກຂອງພຣະອົງ ພຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາເປັນພຣະນາມຂອງພຣະອົງ

**ຄວາມຮົກຮ້າງຂອງຢູດາ**

The Coming Exile

17 ເຈົ້າທັງຫລາຍທີ່ອາສັຍຢູ່ພາຍໃຕ້ການຖືກລ້ອມເອີຍ ຈົ່ງເກັບສິ່ງຂອງຂອງເຈົ້າຈາກພື້ນດິນ
18 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ເບິ່ງແມ, ເຮົາຈະແກວ່ງຊາວແຜ່ນດິນອອກໄປເສັຽ ໃນເວລານີ້ ແລະເຮົາຈະນຳ
ຄວາມທຸກໃຈມາເຖິງເຂົາເພື່ອໃຫ້ເຂົາຮູ້ສຶກ”
19 ວິບັດແກ່ຂ້າພະເຈົ້າ ເພາະຄວາມເຈັບປວດຂອງຂ້າພະເຈົ້າ ບາດແຜຂອງຂ້າພະເຈົ້າກໍຮ້າຍແຮງ ແຕ່ຂ້າພະເຈົ້າເຄີຍ
ເວົ້າວ່າ “ແທ້ຈິງນີ້ເປັນຄວາມທຸກໃຈ ແລະຂ້າພະເຈົ້າຈະຕ້ອງທົນເອົາ”
20 ເຕັນຂອງຂ້າພະເຈົ້າກໍຖືກທຳລາຍ ແລະເຊືອກຂອງຂ້າພະເຈົ້າກໍຂາດ ລູກໆຂອງຂ້າພະເຈົ້າຈາກຂ້າພະເຈົ້າໄປຫມົດ
ແລະບໍ່ມີເຂົາອີກແລ້ວ ບໍ່ມີຜູ້ນຶ່ງຜູ້ໃດທີ່ຈະກາງເຕັນໃຫ້ຂ້າພະເຈົ້າອີກ ແລະແຂວນມ່ານກັ້ງຂອງຂ້າພະເຈົ້າໃຫ້
21 ເພາະວ່າຜູ້ລ້ຽງແກະກໍຊົ່ວຮ້າຍ ແລະບໍ່ໄດ້ທູນຖາມພຣະຜູ້ເປັນເຈົ້າ ເຫດສັນນັ້ນເຂົາຈຶ່ງບໍ່ໄດ້ຈະເຣີນຂຶ້ນແລະຝູງແກະ
ຂອງເຂົາກໍກະຈັດກະຈາຍໄປ
22 ຈົ່ງຟັງເດີ ນັ້ນເປັນສຽງລື ເບິ່ງແມ, ມາເຖິງແລ້ວ ສຽງອຶກກະທຶກຍິ່ງໃຫຍ່ຈາກແດນເຫນືອ ມາກະທຳໃຫ້ຫົວເມືອງຢູດາ
ເປັນທີ່ຮົກຮ້າງໃຫ້ເປັນທີ່ຢູ່ຂອງຫມາປ່າ
23 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຊາບແລ້ວວ່າທາງຂອງມະນຸດບໍ່ຢູ່ທີ່ຕົວເຂົາ ຄືບໍ່ຢູ່ທີ່ມະນຸດຜູ້ຊຶ່ງດຳເນີນໄປທີ່ຈະ
ນຳບາດກ້າວຂອງຕົນເອງ
24 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໂຜດຕີສອນຂ້າພຣະອົງພຽງຕາມຂນາດ ບໍ່ແມ່ນດ້ວຍຄວາມພິໂຣດຂອງພຣະອົງ ຢ້ານ
ວ່າພຣະອົງຈະຊົງນຳຂ້າພຣະອົງມາເຖິງຄວາມສູນເປົ່າ
25 ຂໍພຣະອົງຊົງເທພຣະພິໂຣດຂອງພຣະອົງເຫນືອເຫລົ່າປະຊາຊາດທີ່ບໍ່ຮູ້ຈັກພຣະອົງ ແລະເຫນືອບັນດາຕະກູນຜູ້ບໍ່
ອອກພຣະນາມຂອງພຣະອົງ ເພາະເຂົາທັງຫລາຍໄດ້ເຜົາຜານຢາໂຄບ ເຂົາໄດ້ກືນທ່ານເສັຽແລະເຜົາຜານທ່ານເສັຽ
ແລະກະທຳທີ່ອາສັຍຂອງທ່ານໃຫ້ຮົກຮ້າງໄປ.

## 11 ເຢເຣມີຢາກັບຄຳຫມັ້ນສັນຍາ

Israel and Judah Have Broken the Covenant

1 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ເຢເຣມີຢາວ່າ,

2 “ເຈົ້າຈົ່ງຟັງເນື້ອແທ້ແຫ່ງຄຳຫມັ້ນສັນຍານີ້ ແລ້ວໃຫ້ບອກຊາວຢູດາແລະຊາວກຸງເຢຣູຊາເລັມວ່າ
3 ເຮົາພຣະຜູ້ເປັນເຈົ້າຂອງອິສຣາເອນໄດ້ສາບແຊ່ງທຸກໆຄົນທີ່ບໍ່ປະຕິບັດຕາມຄຳຫມັ້ນສັນຍານີ້
4 ມັນເປັນຄຳຫມັ້ນສັນຍາທີ່ເຮົາໄດ້ໃຫ້ແກ່ບັນພະບຸຣຸດຂອງພວກເຂົາ ເມື່ອຄາວເຮົາພາເຂົາອອກມາຈາກເອຢິບ ຄືປະ
ເທດທີ່ເປັນເຫມືອນເຕົາຫລອມເຫລັກສຳລັບພວກເຂົານັ້ນ ເຮົາໄດ້ບອກໃຫ້ເຂົາເຊື່ອຟັງຄຳຂອງເຮົາ ແລະໃຫ້ກະທຳ
ທຸກຢ່າງທີ່ເຮົາໄດ້ສັ່ງໄວ້ ເຮົາໄດ້ບອກເຂົາວ່າ ຖ້າພວກເຂົາເຊື່ອຟັງເຂົາຈະໄດ້ເປັນໄພ່ພົນຂອງເຮົາ
5 ເຮົາຈະເປັນພຣະຜູ້ເປັນເຈົ້າຂອງເຂົາ ແລ້ວເຮົາຈະຮັກສາຄຳຫມັ້ນສັນຍາທີ່ວ່າ ຈະຍົກປະເທດອັນຮັ່ງມີແລະອຸດົມສົມ
ບູນໃຫ້ແກ່ບັນພະບຸຣຸດຂອງເຂົາ ດັ່ງທີ່ພວກເຂົາໄດ້ມີແລ້ວໃນທຸກວັນນີ້” ແລ້ວເຢເຣມີຢາໄດ້ທູນຕອບວ່າ, “ໂດຍ, ຂ້າ
ພຣະອົງຈະເວົ້າດັ່ງນັ້ນ”
6 ຂນະນັ້ນພຣະຜູ້ເປັນເຈົ້າຈຶ່ງຊົງບອກເຢເຣມີຢາວ່າ, “ຈົ່ງໄປຍັງຫົວເມືອງຕ່າງໆຂອງຊາວຢູດາແລະໄປຕາມຖນົນຫົນ
ທາງໃນກຸງເຢຣູຊາເລັມ ແລ້ວປ່າວປະກາດຖ້ອຍຄຳຂອງເຮົາຢູ່ທີ່ນັ້ນ ໃຫ້ບອກປະຊາຊົນຟັງເນື້ອແທ້ແຫ່ງຄຳຫມັ້ນສັນ
ຍານີ້ ແລະໃຫ້ເຂົາປະພຶດຕາມ
7 ເມື່ອເຮົາພາບັນພະບຸຣຸດຂອງເຂົາອອກຈາກເອຢິບ ເຮົາໄດ້ເຕືອນເຂົາຢ່າງເດັດຂາດໃຫ້ເຊື່ອຟັງຄຳຂອງເຮົາ ແລະໄດ້
ເຕືອນເຂົາຕໍ່ມາຈົນເຖິງທຸກວັນນີ້ ແຕ່ເຂົາບໍ່ໄດ້ເຊື່ອຟັງແລະເຮັດຕາມເລີຍ
8 ພວກເຂົາທຸກຄົນຍິ່ງພາກັນດື້ດ້ານແລະທຳຊົ່ວຕໍ່ໄປເຫມືອນເດີມ ເຮົາໄດ້ສັ່ງເຂົາໃຫ້ເຊື່ອຟັງຄຳຫມັ້ນສັນຍາ ແຕ່ເຂົາ
ໄດ້ປະຕິເສດ ດັ່ງນັ້ນ ເຮົາຈຶ່ງນຳໂທດທັງປວງທີ່ກ່າວຢູ່ໃນນັ້ນມາຖືກພວກເຂົາ”
9 ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ເຢເຣມີຢາວ່າ, “ປະຊາຊົນຢູດາ ແລະຊາວກຸງເຢຣູຊາເລັມກຳລັງຄິດກະບົດຕໍ່ສູ້ເຮົາ
10 ພວກເຂົາໄດ້ກັບຄືນໄປເຮັດບາບ ແລະບໍ່ຍອມທຳຕາມສິ່ງທີ່ເຮົາບອກເຫມືອນບັນພະບຸຣຸດຂອງເຂົາ ເຂົາໄດ້ຂາບ
ໄຫວ້ພຣະອື່ນ ຊາວອິສຣາເອນແລະຊາວຢູດາໄດ້ທຳຜິດຄຳຫມັ້ນສັນຍາທີ່ເຮົາໃຫ້ໄວ້ກັບບັນພະບຸຣຸດຂອງເຂົາ
11 ດັ່ງນັ້ນແຫລະ, ເຮົາພຣະຜູ້ເປັນເຈົ້າຈຶ່ງເຕືອນວ່າຈະນຳພັຍວິບັດມາສູ່ເຂົາ ເຂົາຈະຫລົບຫລີກບໍ່ໄດ້ ແລະເມື່ອຮ້ອງຂໍ
ໃຫ້ເຮົາຊ່ອຍເຫລືອ ເຮົາຈະບໍ່ຟັງສຽງຂອງເຂົາ
12 ເມື່ອນັ້ນປະຊາຊົນຢູດາແລະຊາວກຸງເຢຣູຊາເລັມຈະໄປຮ້ອງໃຫ້ຂໍຄວາມຊ່ອຍເຫລືອຈາກພຣະທີ່ເຂົາຖວາຍບູຊາ ແຕ່
ວ່າເມື່ອພັຍວິບັດມາເຖິງ ພຣະເຫລົ່ານີ້ຈະຊ່ອຍພວກເຂົາໃຫ້ລອດພົ້ນບໍ່ໄດ້
13 ປະຊາຊົນຢູດາມີພຣະເຊື່ອຖືຫລາຍທໍ່ກັນກັບມີເມືອງ ແລະຊາວນະຄອນເຢຣູຊາເລັມກໍຕັ້ງແທ່ນສຳລັບຖວາຍບູຊາພ
ຣະບາອານຫລາຍທໍ່ກັນກັບຖນົນຫົນທາງໃນກຸງເຢຣູຊາເລັມ
14 ເຢເຣມີຢາເອີຍ, ເຈົ້າຢ່າອ້ອນວອນຫລືທູນຂໍຕໍ່ເຮົາເພື່ອປະຊາຊົນເຫລົ່ານີ້ ເມື່ອເຂົາຕົກທຸກໄດ້ຍາກແລະຮ້ອງຂໍໃຫ້
ເຮົາຊ່ອຍ ເຮົາຈະບໍ່ຟັງສຽງຂອງເຂົາ”
15 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ປະຊາຊົນຜູ້ທີ່ເຮົາຮັກກຳລັງທຳຊົ່ວ ເຂົາມີສິດຫຍັງຈຶ່ງມາຢູ່ໃນວິຫານຂອງເຮົາ ເຂົາຄິດ
ວ່າຈະຫນີພົ້ນຈາກຄວາມຫລົ້ມຈົມໄດ້ດ້ວຍການບະບົນຂອງເຂົາ ແລະດ້ວຍການເຜົາສັດບູຊາຢ່າງນັ້ນບໍ ເຂົາຄຶດຈະ
ຫນີໃຫ້ພົ້ນດ້ວຍວິທີຢ່າງນີ້ບໍ
16 ຄັ້ງນຶ່ງເຮົາໄດ້ເອີ້ນເຂົາວ່າ ກົກຫມາກກອກໃບຂຽວສົດແລະມີຫມາກງາມ ແຕ່ບັດນີ້ເຮົາຈະມາຢ່າງສນັ່ນຫວັ່ນໄຫວ
ເຫມືອນສຽງຟ້າຮ້ອງ ເພື່ອຈູດໃບແລະຫັກງ່າມັນຖິ້ມ
17 ເຮົາພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ ຜູ້ໄດ້ປູກຝັງຊາວອິສຣາເອນແລະຊາວຢູດາ ແຕ່ບັດນີ້ເຮົາຈະນາບຂູ່ເຂົາດ້ວຍພັຍວິ
ບັດອັນຮ້າຍແຮງ ມັນແມ່ນເຂົາເອງນຳພັຍວິບັດນີ້ມາໃສ່ຕົນເອງ ເພາະວ່າເຂົາໄດ້ກະທຳຜິດ ເຮົາໄດ້ຮ້າຍເຂົາດ້ວຍວ່າ
ເຂົາໄດ້ຖວາຍບູຊາແກ່ ພຣະບາອານ”

**ການປອງຮ້າຍເຢເຣມີຢາ**

Jeremiah’s Life Threatened

18 ພຣະຜູ້ເປັນເຈົ້າຊົງສຳແດງແກ່ຂ້າພະເຈົ້າ ແລະຂ້າພະເຈົ້າກໍຮູ້ ແລ້ວພຣະອົງຊົງສຳແດງກັມຂອງເຂົາແກ່ຂ້າພຣະອົງ

19 ແຕ່ຂ້າພຣະອົງເປັນເໝືອນລູກແກະສຸພາບໂຕໜຶ່ງ ຊຶ່ງຖືກພາມາເຖິງບ່ອນຂ້າ ຂ້າພຣະອົງບໍ່ຊາບເລີຍວ່າຂ້າພຣະອົງເອງໄດ້ຖືກເຂົາວາງແຜນການຕໍ່ສູ້ໂດຍກ່າວວ່າ “ໃຫ້ເຮົາທຳລາຍຕົ້ນໄມ້ກັບຜົນຂອງມັນເສັຽດ້ວຍ ໃຫ້ເຮົາຕັດເຂົາອອກເສັຽຈາກແດນຄົນເປັນ ເພື່ອຊື່ຂອງເຂົາຈະບໍ່ເປັນທີ່ຣະລຶກເຖິງອີກເລີຍ”

20 ແຕ່ວ່າ ຂ້າແດ່ພຣະຜູ້ເປັນເຈົ້າຈອມໂຍທາ ຜູ້ຊຶ່ງພິພາກສາຢ່າງຊອບທັມ ຜູ້ຊຶ່ງທົດລອງດູຫົວໃຈແລະຈິດ ຂໍໃຫ້ຂ້າພຣະອົງແລເຫັນການແກ້ແຄ້ນຂອງພຣະອົງຕົກແກ່ເຂົາ ເພາະຂ້າພຣະອົງໄດ້ມອບເຣື່ອງຂອງຂ້າພຣະອົງໄວ້ກັບພຣະອົງແລ້ວ

21 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ກ່ຽວກັບຄົນເມືອງອານາໂທດ ຜູ້ສແວງຫາຊີວິດຂອງຂ້າພະເຈົ້າ ແລະກ່າວວ່າ “ຢ່າປະກາດພຣະຄຳໃນພຣະນາມຂອງພຣະຜູ້ເປັນເຈົ້າ ຫລືບໍ່ດັ່ງນັ້ນເຈົ້າຈະຕາຍດ້ວຍມືຂອງເຮົາ”

22 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາຊົງກ່າວວ່າ “ເບິ່ງແມ, ເຮົາຈະລົງໂທດເຂົາທັງປວງ ພວກຄົນໜຸ່ມຈະຕາຍດ້ວຍດາບ ບັນດາບຸດຊາຍແລະບຸດຍິງຂອງເຂົາຈະຕາຍດ້ວຍການອຶດຢາກ

23 ຈະບໍ່ມີເຫລືອຈັກຄົນດຽວ ເພາະເຮົາຈະນຳຄວາມຮ້າຍມາສູ່ເມືອງອານາໂທດ ຄືປີແຫ່ງການລົງໂທດເຂົາ

## 12 ເຢເຣມີຢາຮັບທຸກແລະພຣະເຈົ້າຮັບຕອບ

Jeremiah Complains to God

1 ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອຂ້າພຣະອົງສູ້ຄະດີກັບພຣະອົງ ພຣະອົງກໍຊົງເປັນຝ່າຍຖືກ ເຖິງປານນັ້ນຂ້າພຣະອົງຍັງຂໍທູນສເນີມູນຄະດີຂອງຂ້າພຣະອົງຕໍ່ພຣະອົງ ເຫດໃດທາງຂອງຄົນອະທັມຈຶ່ງຈະເຣີນຂຶ້ນ ເຫດໃດທຸກຄົນທີ່ທໍຣະຍົດກໍຢູ່ເຢັນເປັນສຸກ

2 ພຣະອົງຊົງປູກເຂົາທັງຫລາຍແລະເຂົາທັງຫລາຍກໍຢັ່ງຮາກລົງ ເຂົາທັງຫລາຍງອກງາມຂຶ້ນແລະບັງເກີດຜົນ ພຣະອົງຊົງຢູ່ໃກ້ທີ່ປາກຂອງເຂົາ ແຕ່ໄກຈາກໃຈຂອງເຂົາ

3 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຊົງຮູ້ຈັກຂ້າພຣະອົງ ພຣະອົງຊົງເຫັນຂ້າພຣະອົງ ແລະຊົງທົດລອງຄວາມຄິດຂອງຂ້າພຣະອົງທີ່ມີຕໍ່ພຣະອົງ ຂໍຊົງດຶງເຂົາອອກມາເໝືອນແກະສຳລັບການຂ້າ ແລະຕັ້ງເຂົາທັງຫລາຍໄວ້ຕ່າງຫາກເພື່ອມື້ຂ້າ

4 ແຜ່ນດິນນີ້ຈະໄວ້ທຸກດົນປານໃດ ແລະຜັກຫຍ້າຕາມທົ່ງນາທຸກແຫ່ງຈະຫ່ຽວແຫ້ງໄປດົນປານໃດ ເພາະຄວາມອະທັມຂອງຜູ້ທີ່ອາສັຍຢູ່ໃນນັ້ນ ສັດແລະນົກກໍຖືກກວາດເອົາໄປຈົນສິ້ນ ເພາະເຂົາວ່າ “ພຣະອົງຈະບໍ່ທອດພຣະເນດບັ້ນສຸດປາຍຂອງເຮົາທັງຫລາຍ”

God Replies to Jeremiah

5 “ຖ້າເຈົ້າແລ່ນແຂ່ງກັບມະນຸດ ແລະເຂົາເຮັດໃຫ້ເຈົ້າອິດເມື່ອຍ ເຈົ້າຈະແຂ່ງກັບມ້າໄດ້ຢ່າງໃດ ແລະຖ້າເຈົ້າຍັງລົ້ມລົງໃນແຜ່ນດິນທີ່ປອດພັຍ ເຈົ້າຈະເຮັດຢ່າງໃດໃນດົງລຸ່ມແມ່ນ້ຳຈໍແດນ

6 ເຫດວ່າພີ່ນ້ອງຂອງເຈົ້າແລະເຊື້ອສາຍຂອງບິດາເຈົ້າ ເຖິງວ່າເຂົາກໍໄດ້ກະທຳການທໍຣະຍົດຕໍ່ເຈົ້າ ເຂົາຍັງຮ້ອງຢ່າງເຕັມສຽງໄລ່ຕາມເຈົ້າໄປ ເຖິງວ່າເຂົາເວົ້າຖ້ອຍຄຳຢ່າງດີກັບເຈົ້າ ຢ່າເຊື່ອເຂົາເລີຍ

7 “ເຮົາໄດ້ປະຖິ້ມວິຫານຂອງເຮົາ ເຮົາໄດ້ແກວ່ງມໍຣະດົກຂອງເຮົາຖິ້ມ ເຮົາໄດ້ມອບຜູ້ທີ່ຮັກຂອງຈິດໃຈເຮົາໄວ້ໃນມືສັດຕຣູຂອງເຂົາ

8 ມໍຣະດົກຂອງເຮົາໄດ້ກາຍເປັນເໝືອນສິງໃນປ່າຕໍ່ເຮົາ ເຂົາແຜດສຽງຮ້ອງຂອງເຂົາເຂົ້າໃສ່ເຮົາ ເຫດສັນນັ້ນເຮົາຈຶ່ງກຽດຊັງເຂົາ

9 ມໍຣະດົກຂອງເຮົາເປັນແກ່ເຮົາເໝືອນນົກລາຍດ່າງ ນົກລາຍດ່າງທີ່ຢູ່ອ້ອມຮອບໄດ້ຕໍ່ສູ້ເຂົາ ໄປເຖີດ ໄປເຕົ້າໂຮມສັດປ່າທັງສິ້ນ ນຳພວກເຂົາມາກິນເສັຽ

10 ຜູ້ລ້ຽງແກະຈຳນວນຫລາຍໄດ້ທຳລາຍສວນອະງຸ່ນຂອງເຮົາເສັຽ ເຂົາທັງຫລາຍໄດ້ຢຽບຢໍ່າສວນຂອງເຮົາລົງ ເຂົາທັງ
ຫລາຍໄດ້ກະທຳສວນທີ່ເຮົາມັກຫລາຍໃຫ້ກາຍເປັນຖິ່ນກັນດານທີ່ຮ້າງເປົ່າ

11 ເຂົາທັງຫລາຍໄດ້ກະທຳສວນຂອງເຮົາໃຫ້ຮ້າງເປົ່າ ເມື່ອຮ້າງເປົ່າສວນນັ້ນກໍໄວ້ທຸກຕໍ່ເຮົາ ແຜ່ນດິນທັງສິ້ນກໍຖືກປະໃຫ້
ຮ້າງເປົ່າ ເພາະບໍ່ມີຜູ້ໃດເອົາໃຈໃສ່ເຣື່ອງນັ້ນ

12 ຜູ້ທຳລາຍລ້າງໄດ້ມາເທິງບັນດາທີ່ສູງທັງປວງໃນຖິ່ນກັນດານ ເພາະວ່າແສງດາບຂອງພຣະຜູ້ເປັນເຈົ້າທຳລາຍຈາກ
ປາຍແຜ່ນດິນນີ້ໄປເຖິງປາຍອີກຂ້າງນຶ່ງ ມະນຸດບໍ່ມີສັນຕິພາບ

13 ເຂົາທັງຫລາຍໄດ້ຫວ່ານເຂົ້າສາລີແຕ່ໄດ້ກ່ຽວຫນາມ ເຂົາໄດ້ກະທຳໃຫ້ຕົນເອງອິດເມື່ອຍແຕ່ບໍ່ໄດ້ກຳໄລຫຍັງ ເຈົ້າທັງ
ຫລາຍຈິ່ງລະອາຍດ້ວຍຜົນການກ່ຽວຂອງເຈົ້າ ດ້ວຍເຫດຄວາມພິໂຣດອັນຮຸນແຮງຂອງພຣະຜູ້ເປັນເຈົ້າ”

14 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ດ້ວຍເຣື່ອງເພື່ອນບ້ານທີ່ຊົ່ວຊ້າຂອງເຮົາ ຜູ້ທີ່ໄດ້ແຕະຕ້ອງມໍຣະດົກຊຶ່ງເຮົາໄດ້ໃຫ້ອິສ
ຣາເອນໄພ່ພົນຂອງເຮົາສືບມໍຣະດົກນັ້ນ ເບິ່ງແມ, ເຮົາຈະຖອນເຂົາທັງຫລາຍຂຶ້ນຈາກແຜ່ນດິນຂອງເຂົາ ແລະເຮົາຈະ
ຖອນເຊື້ອສາຍຢູດາຈາກຖ້າມກາງເຂົາທັງຫລາຍ

15 ແລະຫລັງຈາກທີ່ເຮົາໄດ້ຖອນເຂົາທັງຫລາຍຂຶ້ນແລ້ວ ເຮົາຈະມີຄວາມເມດຕາຕໍ່ເຂົາອີກ ໃຫ້ທຸກຄົນມາຍັງມໍຣະດົກ
ຂອງຕົນແລະຍັງແຜ່ນດິນຂອງຕົນ

16 ແລະຈະເກີດກໍຣະນີຂຶ້ນວ່າ ຖ້າເຂົາທັງຫລາຍຈະອົດສາສຶກສາທາງແຫ່ງໄພ່ພົນຂອງເຮົາ ຄືປະຕິຍານໃນນາມຂອງ
ເຮົາວ່າ “ຕາບໃດທີ່ພຣະເຈົ້າຜູ້ຊົງພຣະຊົນຢູ່” ຢ່າງທີ່ເຂົາໄດ້ສອນໄພ່ພົນຂອງເຮົາໃຫ້ປະຕິຍານໂດຍພຣະບາອານ
ແລ້ວເຂົາຈະໄດ້ຮັບການສ້າງຂຶ້ນໄວ້ຢູ່ຖ້າມກາງໄພ່ພົນຂອງເຮົາ

17 ແຕ່ຖ້າເຂົາທັງຫລາຍບໍ່ຟັງ ແລ້ວເຮົາຈະຖອນປະຊາຊາດນັ້ນຂຶ້ນແລະທຳລາຍເຂົາຈົນສິ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ”

## 13 ບົດຮຽນຈາກຜ້າຄາດແອວທີ່ເປື່ອຍ

The Linen Loincloth

1 ພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າດັ່ງນີ້ວ່າ, “ຈົ່ງໄປຊື້ຜ້າປ່ານຄາດແອວມາຜືນນຶ່ງ ຄາດແອວຂອງເຈົ້າໄວ້ແລະຢ່າ
ຈຸ່ມນໍ້າ”

2 ຂ້າພະເຈົ້າຈຶ່ງຊື້ຜ້າຄາດແອວຜືນນຶ່ງຕາມພຣະຄຳຂອງພຣະເຈົ້າ ແລະຄາດແອວຂອງຂ້າພະເຈົ້າໄວ້

3 ແລະຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າຄັ້ງທີສອງວ່າ,

4 “ຈົ່ງເອົາຜ້າຄາດແອວຊຶ່ງເຈົ້າໄດ້ຊື້ມາ ຊຶ່ງຢູ່ທີ່ແອວຂອງເຈົ້າ ແລະຈົ່ງລຸກຂຶ້ນໄປຍັງແມ່ນໍ້າເອີຟຣາດ ແລະເຊື່ອງຜ້ານັ້ນ
ໄວ້ໃນຫລືບຫີນແຫ່ງນຶ່ງ”

5 ຂ້າພະເຈົ້າກໍໄປ ແລະເຊື່ອງຜ້ານັ້ນໄວ້ຂ້າງແມ່ນໍ້າເອີຟຣາດ ດັ່ງທີ່ພຣະຜູ້ເປັນເຈົ້າຊົງບັນຊາຂ້າພະເຈົ້າ

6 ຕໍ່ມາອີກຫລາຍວັນພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ, “ຈົ່ງລຸກຂຶ້ນໄປຍັງແມ່ນໍ້າເອີຟຣາດ ແລະເອົາຜ້າຄາດແອວ
ຊຶ່ງເຮົາໄດ້ສັ່ງເຈົ້າໃຫ້ເຊື່ອງໄວ້ນັ້ນ ເອົາອອກມາເສັຽຈາກທີ່ນັ້ນ

7 ແລ້ວຂ້າພະເຈົ້າກໍໄປທີ່ແມ່ນໍ້າເອີຟຣາດ ແລະຂຸດເອົາຜ້າຄາດແອວມາຈາກທີ່ຊຶ່ງຂ້າພະເຈົ້າໄດ້ເຊື່ອງໄວ້ ເບິ່ງແມ, ຜ້າ
ຄາດແອວນັ້ນເປື່ອຍຫມົດຈົນໃຊ້ການຫຍັງບໍ່ໄດ້

8 ແລ້ວຖ້ອຍຄຳຂອງພຣະຜູ້ເປັນເຈົ້າກໍມາຍັງຂ້າພະເຈົ້າວ່າ,

9 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາກໍຈະທຳລາຍຄວາມທະນົງໃຈຂອງຢູດາ ແລະຄວາມທະນົງໃຈອັນຍິ່ງໃຫຍ່ຂອງເຢ
ຣູຊາເລັມເສັຽຢ່າງນັ້ນແຫລະ

10 ຄືຊົນຊາດທີ່ຊົ່ວຮ້າຍນີ້ ຜູ້ປະຕິເສດບໍ່ຟັງຖ້ອຍຄຳຂອງເຮົາ ຜູ້ທີ່ດື້ກະທຳຕາມໃຈຂອງຕົນເອງ ແລະໄດ້ຕິດຕາມພຣະ
ອື່ນເພື່ອຈະບົວລະບັດແລະນະມັສການພຣະເຫລົ່ານັ້ນ ຈະເປັນເຫມືອນຜ້າຄາດແອວນີ້ຊຶ່ງຈະໃຊ້ການຫຍັງກໍບໍ່ໄດ້

11 ເພາະຜ້າຄາດແອວຕິດຢູ່ທີ່ແອວຂອງມະນຸດສັນໃດເຮົາກໍໄດ້ກະທຳໃຫ້ປະຊາຊົນທັງປວງຂອງອິສຣາເອນແລະປະຊາ
ຊົນທັງປວງຂອງຢູດາຕິດຢູ່ກັບເຮົາສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ ເພື່ອເຂົາທັງຫລາຍຈະເປັນໄພ່ພົນ ຊື່ສຽງ ທີ່ສັຣ
ເສີນ ແລະທີ່ພູມໃຈແກ່ເຮົາ ແຕ່ເຂົາທັງຫລາຍກໍບໍ່ຟັງ

Symbol of the Wine-jars

12 "ສະນັ້ນ ເຈົ້າຈົ່ງກ່າວຖ້ອຍຄຳນີ້ແກ່ເຂົາທັງຫລາຍ ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ "ເຫລົ້າອະ
ງຸ່ນຈະເຕັມໄຫທຸກຫນ່ວຍ" ແລະເຂົາທັງຫລາຍຈະເວົ້າກັບເຈົ້າວ່າ "ເຮົາບໍ່ຮູ້ຫລືວ່າເຫລົ້າອະງຸ່ນຈະຕ້ອງເຕັມໄຫທຸກ
ຫນ່ວຍ"

13 ແລ້ວເຈົ້າຈົ່ງເວົ້າກັບເຂົາທັງຫລາຍວ່າ "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະໃຫ້ຊາວແຜ່ນດິນນີ້ທັງສິ້ນເຕັມ
ໄປດ້ວຍຄວາມມຶນເມົາ ຄືກະສັດທັງຫລາຍຂອງຜູ້ປະທັບເທິງບັນລັງຂອງດາວິດ ພວກປະໂຣຫິດ ພວກຜູ້ປະກາດ
ພຣະທັມ ແລະຊາວກຸງເຢຣູຊາເລັມທັງສິ້ນ

14 ແລະພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະແກ່ວງເຂົາທັງຫລາຍໃຫ້ຊົນກັນແລະກັນ ພວກພໍ່ກໍຊົນກັບລູກ ເຮົາຈະບໍ່ສົງສານ
ຫລືບໍ່ໄວ້ຊີວິດ ຫລືມີຄວາມເມດຕາທີ່ເຮົາຈະບໍ່ທຳລາຍເຂົາ"

Exile Threatened

15 ຈົ່ງຟັງແລະງ່ຽງຫູຟັງ ຢ່າເຍີ່ຍິ່ງຈອງຫອງໄປເລີຍ ເພາະພຣະຜູ້ເປັນເຈົ້າຊົງລັ່ນພຣະວາຈາແລ້ວ
16 ຈົ່ງຖວາຍພຣະກຽດແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າທັງຫລາຍ ກ່ອນທີ່ພຣະອົງຈະຊົງນຳຄວາມມືດມາ ກ່ອນທີ່
ຕີນຂອງເຈົ້າຈະສະດຸດເທິງພູທີ່ມີແສງສ່ອງ ແລະຂນະເມື່ອເຈົ້າທັງຫລາຍມອງຫາຄວາມສວ່າງ ພຣະອົງຊົງກັບໃຫ້
ເປັນຄວາມມືດຄຶ້ມ ແລະຊົງກະທຳໃຫ້ເປັນຄວາມມືດຕຶບ

17 ແຕ່ຖ້າເຈົ້າທັງຫລາຍບໍ່ຟັງ ຈິດໃຈຂອງຂ້າພະເຈົ້າກໍຈະຮ້ອງໄຫ້ລັບໆເພາະຄວາມທະນົງໃຈຂອງເຈົ້າ ຕາຂອງຂ້າພະ
ເຈົ້າຈະຮ້ອງໄຫ້ຢ່າງໜັກ ແລະມີນ້ຳຕາອາບຫນ້າ ເພາະຝູງແກະຂອງຂ້າພະເຈົ້າຖືກຕ້ອນເອົາໄປເປັນຊະເລີຍ

18 ຈົ່ງກ່າວແກ່ພຣະຣາຊາແລະພຣະຣາຊີນີວ່າ "ຂໍຊົງປະທັບໃນທີ່ຕ່ຳ ເພາະວ່າມົງກຸດອັນງາມຂອງພຣະອົງໄດ້ຫລົ່ນ
ລົງຈາກພຣະສຽນຂອງພຣະອົງແລ້ວ"

19 ຫົວເມືອງແຫ່ງເນເກັບກໍຖືກປິດ ຊຶ່ງບໍ່ມີໃຜຈະເປີດໄດ້ ຢູດາທັງສິ້ນກໍຖືກກວາດໄປເປັນຊະເລີຍແລ້ວ ພວກທັງສິ້ນ
ນີ້ຖືກກວາດໄປແລ້ວ

20 "ຈົ່ງເງີຍຫນ້າຂອງເຈົ້າຂຶ້ນເບິ່ງ ເຂົາເຫລົ່ານັ້ນທີ່ມາຈາກທິດເຫນືອ ຝູງແກະທີ່ໄດ້ມອບໄວ້ໃຫ້ແກ່ເຈົ້ານັ້ນຢູ່ໃສ ຄືຝູງ
ແກະທີ່ງົດງາມຂອງເຈົ້ານັ້ນ

21 ເຈົ້າຈະວ່າຢ່າງໃດເມື່ອເຂົາຕັ້ງຄົນເຫລົ່ານັ້ນ ຜູ້ຊຶ່ງຕົວເຈົ້າເອງໄດ້ສອນໃຫ້ເປັນມິດກັບເຈົ້າ ໄວ້ເປັນປະມຸກຂອງເຈົ້າ
ຄວາມເຈັບປວດຈະບໍ່ເຂົ້າມາຄອບງຳເຈົ້າ ເຫມືອນຢ່າງຄວາມເຈັບປວດຂອງຜູ້ຍິງທີ່ກຳລັງເກີດລູກຫລື

22 ແລະຖ້າເຈົ້າວ່າໃນໃຈຂອງເຈົ້າວ່າ "ເປັນຫຍັງສິ່ງເຫລົ່ານີ້ຈຶ່ງເກີດກັບຂ້ອຍ" ກໍເພາະບາບຊົ່ວທີ່ຫລວງຫລາຍໃຫຍ່ໂຕ
ຂອງເຈົ້າ ສິ້ນເສື້ອຂອງເຈົ້າຈຶ່ງຕ້ອງຖືກຍົກຂຶ້ນແລະເຈົ້າຖືກຂົ່ມຂືນ

23 ຄົນເອທິໂອເປັຽປ່ຽນຜິວພັນຂອງຕົນເອງໄດ້ຫລື ຫລືເສືອດາວປ່ຽນລາຍຂອງມັນ ຖ້າໄດ້ແລ້ວເຈົ້າທັງຫລາຍຜູ້ທີ່ເຄີຍ
ກະທຳຄວາມຊົ່ວຈະມາກະທຳຄວາມດີກໍໄດ້

24 ເຮົາຈະກະຈັດກະຈາຍເຂົາທັງຫລາຍໄປເຫມືອນແກບທີ່ຖືກລົມຈາກຖິ່ນກັນດານ

25 ນີ້ເປັນສ່ວນຂອງເຈົ້າ ເປັນສ່ວນທີ່ເຮົາໄດ້ຕວງອອກໃຫ້ແກ່ເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ ເພາະເຈົ້າໄດ້ລືມ
ເຮົາ ແລະໄວ້ວາງໃຈໃນການມຸສາ

26 ສະນັ້ນ ເຮົາເອງຈະຍົກເສື້ອຄຸມຂອງເຈົ້າມາປົກຫນ້າເຈົ້າ ຄືໃຫ້ເຫັນຄວາມອັບອາຍຂາຍຫນ້າຂອງເຈົ້າ

27 ເຮົາໄດ້ເຫັນການທີ່ໜ້າກຽດຊັງຂອງເຈົ້າ ການລ່ວງປະເວນີຂອງເຈົ້າແລະການຄໍ່າຄວນຫາ ການຫລິ້ນຊູ້ຕາມຣາຄະ
ຂອງເຈົ້າເທິງຈ້າຍພູທັງຫລາຍທີ່ໃນທົ່ງນາ ໂອ ເຢຣູຊາເລັມເອີຍ, ວິບັດແກ່ເຈົ້າອີກດົນປານໃດ ເຈົ້າຈຶ່ງຈະຍອມກະທຳ
ໃຫ້ເຈົ້າສະອາດໄດ້"

## 14 ຂ່າວກ່ຽວກັບຄວາມແຫ້ງແລ້ງ

The Great Drought

1 ພຣະຄຳຂອງພຣະຜູ້ເປັນເຈົ້າຊຶ່ງມາເຖິງເຢເຣມີຢາ ກ່ຽວດ້ວຍເລື່ອງຄວາມແຫ້ງແລ້ງວ່າ,
2 "ຢູດາໄວ້ທຸກ ແລະປະຕູເມືອງທັງປວງຂອງນາງກໍອ່ອນກຳລັງລົງ ປະຊາຊົນຂອງນາງກໍແຕ່ງດຳ ໜ້າກົ້ມຢູ່ເທິງແຜ່ນ
ດິນ ແລະສຽງຮ້ອງຂອງເຢຣູຊາເລັມກໍຂຶ້ນໄປ
3 ເຈົ້ານາຍຂອງນາງສັ່ງຄົນໃຊ້ຂອງເຂົາໃຫ້ໄປຕັກນໍ້າ ເຂົາທັງຫລາຍໄປຍັງທີ່ຂັງນໍ້າເຫັນວ່າບໍ່ມີນໍ້າ ເຂົາທັງຫລາຍກໍກັບ
ໄປດ້ວຍພາຊະນະເປົ່າ ເຂົາທັງຫລາຍໄດ້ອາຍແລະຂາຍໜ້າ ເຂົາຈຶ່ງຄຸມຫົວຂອງເຂົາທັງຫລາຍເສັຽ
4 ເພາະເຣື່ອງແຜ່ນດິນທີ່ແຫ້ງແລ້ງ ເນື່ອງຈາກບໍ່ມີຝົນຕົກເທິງແຜ່ນດິນ ຊາວນາທັງຫລາຍກໍອັບອາຍ ເຂົາທັງຫລາຍຈຶ່
ງຄຸມຫົວຂອງເຂົາເສັຽ
5 ແມ່ນແຕ່ກວາງໂຕແມ່ທີ່ຢູ່ໃນທ້ອງທົ່ງກໍປະຖິ້ມລູກທີ່ອອກໃຫມ່ຂອງມັນເສັຽ ເພາະວ່າບໍ່ມີຫຍ້າ
6 ລໍປ່າຢືນຢູ່ເທິງທີ່ສູງໂລ້ນ ມັນຫາຍໃຈຫອບເຫມືອນກັບຫມາປ່າ ຕາຂອງມັນກໍມືດມົວ ເພາະວ່າບໍ່ມີຜັກຫຍ້າ
7 "ແມ້ວ່າບາບຊົ່ວຂອງຂ້າພຣະອົງທັງຫລາຍກໍເປັນພຍານປັກປຳຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງໂຜດ
ເພື່ອເຫັນແກ່ພຣະນາມຂອງພຣະອົງ ບັນດາການກັບສັດຂອງຂ້າພຣະອົງທັງຫລາຍກໍມາກຍິ່ງ ຂ້າພຣະອົງທັງຫລາຍ
ກະທຳບາບຕໍ່ພຣະອົງ
8 ຂ້າແດ່ພຣະອົງຜູ້ເປັນຄວາມຫວັງແຫ່ງອິສຣາເອນ ເປັນພຣະຜູ້ຊ່ອຍຂອງເຂົາຍາມລຳບາກ ເຫດໃດພຣະອົງຈະຊົງ
ເປັນເຫມືອນແຂກເມືອງໃນແຜ່ນດິນ ຫລືເຫມືອນຄົນເດີນທາງແລະອາສັຍຄ້າງພຽງຄືນດຽວ
9 ເຫດໃດພຣະອົງຈະຊົງເປັນເຫມືອນຊາຍທີ່ກຳລັງງົງ ຫລືເຫມືອນຄົນທີ່ມີກຳລັງຫລາຍແຕ່ຊ່ອຍໃຜບໍ່ໄດ້ ຂ້າແດ່ພຣະຜູ້
ເປັນເຈົ້າ ເຖິງປານນັ້ນກໍດີ ພຣະອົງຊົງສະຖິດຖ້າມກາງຂ້າພຣະອົງທັງຫລາຍ ຄົນເຂົາເອີ້ນພວກຂ້າພຣະອົງໂດຍພຣະ
ນາມຂອງພຣະອົງ ຂໍຢ່າຊົງປະຂ້າພຣະອົງທັງຫລາຍໄວ້ເສັຽ"
10 ພຣະຜູ້ເປັນເຈົ້າຊົງກ່າວກັບຊົນຊາດນີ້ວ່າ ເຂົາທັງຫລາຍຮັກທີ່ຈະພະເນຈອນໄປຢ່າງນີ້ ເຂົາທັງຫລາຍບໍ່ຢັບຢັ້ງຕີນ
ຂອງເຂົາໄວ້ ສະນັ້ນພຣະຜູ້ເປັນເຈົ້າຈຶ່ງບໍ່ຊົງໂຜດເຂົາ ພຣະອົງຈະຊົງຣະລຶກເຖິງບາບຊົ່ວຂອງເຂົາ ແລະລົງໂທດການ
ຜິດບາບຂອງເຂົາ"
11 ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ, "ຢ່າຮ້ອງຂໍໃຫ້ເຮົາຊ່ອຍເຫລືອຄົນເຫລົ່ານີ້
12 ຖ້າຫາກເຂົາຖືສິນອົດອາຫານ ເຮົາກໍຈະບໍ່ຟັງສຽງຮ້ອງໄຫ້ຂໍຄວາມຊ່ອຍເຫລືອຂອງເຂົາ ຖ້າຫາກເຜົາສັດແລະຖວາຍ
ອາຫານແກ່ເຮົາ ເຮົາກໍຈະບໍ່ຮັບເອົາ ແຕ່ຈະຂ້າເຂົາໃນເວລາສົງຄາມ ໂດຍໃຫ້ອຶດຢາກແລະເຈັບໄຂດ້ວຍພຍາດ

Denunciation of Lying Prophets

13 ແລ້ວຂ້າພະເຈົ້າໄດ້ກ່າວວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຊາບແລ້ວວ່າ ພວກຜູ້ປະກາດພຣະທັມຈະບອກປະ
ຊາຊົນວ່າບໍ່ມີສົງຄາມ ແລະການອຶດຢາກດອກ ເພາະວ່າພຣະອົງຈະໃຫ້ມີແຕ່ຄວາມສງົບສຸກເທົ່ານັ້ນໃນແຜ່ນດິນ
ຂອງພວກຂ້າພຣະອົງ"
14 ແຕ່ພຣະຜູ້ເປັນເຈົ້າຊົງຕອບວ່າ, "ພວກຜູ້ປະກາດພຣະທັມຈະໃຊ້ນາມຂອງເຮົາເວົ້າຕົວະ ເຮົາບໍ່ໄດ້ໃຊ້ໃຫ້ເຂົາໄປ ບໍ່
ໄດ້ສັ່ງຫລືບອກເຂົາສິ່ງທີ່ເຂົາບອກເຈົ້າແມ່ນນິມິດທີ່ບໍ່ໄດ້ມາຈາກເຮົາ ເປັນຄຳປະກາດທີ່ໄຮ້ຜົນ ແລະເປັນສິ່ງທີ່ເຂົາ
ນຶກຝັນເອົາເອງ

15 ເຮົາພຣະຜູ້ເປັນເຈົ້າຈະບອກເຈົ້າເຖິງສິ່ງທີ່ເຮົາຈະເຮັດກັບພວກປະກາດພຣະທັມຜູ້ທີ່ເຮົາບໍ່ໄດ້ໃຊ້ໄປ ຄືພວກທີ່ເວົ້າໃນ
ນາມຂອງເຮົາວ່າ ເສິກສົງຄາມແລະການອຶດຢາກຈະບໍ່ເກີດຂຶ້ນໃນແຜ່ນດິນນີ້ ເຮົາຈະຂ້າຜູ້ນັ້ນໃຫ້ຕາຍດ້ວຍເສິກສົງ
ຄາມ ແລະການອຶດຢາກ
16 ປະຊາຊົນຜູ້ທີ່ໄດ້ຍິນພວກປະກາດກ່າວດັ່ງນີ້ ກໍຈະຕາຍດ້ວຍເສິກສົງຄາມແລະການອຶກຢາກເຫມືອນກັນ ຊາກສົບ
ຂອງເຂົາຈະຖືກຖິ້ມໄວ້ຕາມຖນົນໃນກຸງເຢຣູຊາເລັມ ແລະຈະບໍ່ມີຜູ້ໃດຝັງສົບຂອງເຂົາ ເຫດການນີ້ຈະເກີດຂຶ້ນກັບ
ພວກເຂົາທັງຫມົດ ທັງລູກເມັຽຂອງພວກເຂົາດ້ວຍ ເຮົາຈະທຳໃຫ້ເຂົາໄດ້ຮັບຜົນຊົ່ວຍ້ອນການກະທຳຊົ່ວຂອງເຂົາເອງ
17 ດຽວນີ້ ເຈົ້າຈົ່ງເວົ້າກັບປະຊາຊົນວ່າ “ຂ້າພະເຈົ້າຢາກຮ້ອງໄຫ້ຕລອດໄປ ຢາກໃຫ້ນ້ຳຕາອອກຕລອດມື້ຕລອດຄືນ
ເພາະວ່າບຸດສາວພົມມະຈາຣີແຫ່ງຊົນຊາດຂອງຂ້າພະເຈົ້າເຈັບໄຂຫລາຍ ຍ້ອນພວກເຂົາຖືກທຳຮ້າຍຢ່າງຮຸນແຮງ
18 ເມື່ອຂ້າພະເຈົ້າອອກໄປຕາມທົ່ງນາກໍພົບເຫັນຊາກສົບຄົນຕາຍຍ້ອນເສິກສົງຄາມ ເມື່ອເຂົ້າໄປໃນເມືອງກໍພົບເຫັນ
ຄົນຕາຍຍ້ອນການອຶດຢາກ ແຕ່ພວກປະກາດພຣະທັມແລະປະໂຣຫິດໄດ້ເຮັດວຽກຕໍ່ໄປໂດຍພວກເຂົາບໍ່ຮູ້ວ່າມີຫຍັງ
ໄດ້ເກີດຂຶ້ນ

**ປະຊາຊົນສາລະພາບຜິດຕໍ່ພຣະຜູ້ເປັນເຈົ້າ**

The People Plead for Mercy

19 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງປະຖິ້ມຊາວຢູດາເດັດຂາດແລ້ວບໍ ຊົງກຽດຊັງປະຊາຊົນເມືອງຊີໂອນແລ້ວບໍ ເປັນ
ຫຍັງຈຶ່ງຊົງທຳຮ້າຍພວກຂ້າພຣະອົງຢ່າງຫນັກຈົນພວກຂ້າພຣະອົງບໍ່ສາມາດຮັກສາໃຫ້ດີໄດ້ ພວກຂ້າພຣະອົງໄດ້ລໍ
ຄອຍຄວາມສົງບສຸກແຕ່ບໍ່ເຫັນຫຍັງເກີດຂຶ້ນເລີຍ ພວກຂ້າພຣະອົງຫວັງວ່າຈະໄດ້ຮັບການຮັກສາໃຫ້ດີແຕ່ພັຍວິບັດ
ກັບເກີດມາແທນ
20 ຂ້າແດ່ພຣະຜູ້ເປັນເຈົ້າ ພວກຂ້າພຣະອົງຍອມສາລະພາບທີ່ໄດ້ທຳບາບ ແລະທີ່ບັນພະບຸຣຸດຂອງພວກຂ້າພຣະອົງໄດ້
ທຳກໍດີ ພວກຂ້າພຣະອົງໄດ້ທຳບາບຕໍ່ສູ້ພຣະອົງແທ້
21 ຢ່າຄຽດຊັງພວກຂ້າພຣະອົງຖ້ອນ ຈົ່ງເຫັນແກ່ພຣະນາມຂອງພຣະອົງ ຂໍຢ່ານຳຄວາມເສື່ອມເສັຽມາຍັງກຸງເຢຣູຊາເລັມ
ບ່ອນພຣະບັນລັງອັນສງ່າຣາສີຂອງພຣະອົງຕັ້ງຢູ່ ຂໍຈົ່ງຮັກສາຄຳຫມັ້ນສັນຍາທີ່ພຣະອົງຊົງໃຫ້ໄວ້ກັບພວກຂ້າພຣະອົງ
ຂໍຢ່າຍົກເລີກເສັຽ
22 ຝົນບໍ່ໄດ້ຕົກລົງມາຍ້ອນພຣະນາໆຊາດ ຫລືຍ້ອນທ້ອງຟ້າ ມີແຕ່ພຣະອົງໆດຽວທ່ນັ້ນທີ່ທຳສິ່ງເຫລົ່ານີ້ໄດ້ ພວກຂ້ພຣະ
ອົງຫວັງໃຈໃນພຣະອົງ

## 15 ຄາວພິພາກສາປະຊາຊົນຢູດາ

Punishment Is Inevitable

1 ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ, “ເຖິງແມ່ນວ່າໂມເຊແລະຊາມູເອນຈະຢືນອ້ອນວອນຢູ່ຕໍ່ຫນ້າເຮົາ ເຮົາ
ກໍຈະບໍ່ມີໃຈເມດຕາປະຊາຊົນເຫລົ່ານີ້ເລີຍ ຈົ່ງໃຫ້ເຂົາຫນີໄປພົ້ນສາຍຕາຂອງເຮົາເສັຽ
2 ຖ້າພວກເຂົາຖາມເຈົ້າວ່າ ຈະໃຫ້ພວກເຮົາໄປໃສ ຈົ່ງບອກເຂົາດັ່ງນີ້, “ຄົນເຫລົ່ານັ້ນທີ່ກຳນົດໃຫ້ຕາຍດ້ວຍເຊື້ອໂຣກກໍ
ຈະຕາຍຢ່າງນັ້ນ ຄົນເຫລົ່ານັ້ນທີ່ກຳນົດໃຫ້ຕາຍດ້ວຍເສິກສົງຄາມກໍຈະຕາຍຢ່າງນັ້ນ ຄົນເຫລົ່ານັ້ນທີ່ກຳນົດໃຫ້ຕາຍ
ດ້ວຍການອຶດຢາກກໍຈະຕາຍຢ່າງນັ້ນ ຄົນທີ່ກຳນົດໃຫ້ຖືກຈັບໄປເປັນຊະເລີຍກໍຈະຖືກຈັບໄປ
3 ເຮົາພຣະຜູ້ເປັນເຈົ້າໄດ້ຕັດສິນໃຈແລ້ວວ່າ ຈະໃຫ້ສິ່ງຫນ້າຢ້ານສີ່ຢ່າງນີ້ເກີດຂຶ້ນກັບພວກເຂົາ ຄືເຂົາຈະຕ້ອງຕາຍ
ດ້ວຍເສິກສົງຄາມ ຊາກສົບຈະຖືກຫມາດຶງແກ່ໄປ ຝູງນົກຈະສັບຕອດກິນ ແລະເຫລືອນັ້ນສັດປ່າຈະກິນອີກ
4 ເຮົາຈະເຮັດໃຫ້ນາໆຊາດທົ່ວໂລກຕົກໃຈຢ້ານ ສິ່ງທີ່ເກີດຂຶ້ນກັບພວກເຂົາ ເນື່ອງຈາກສິ່ງທີ່ມານັສເຊ ບຸດເຮເຊກີຢາ
ໄດ້ກະທຳໃນກຸງເຢຣູຊາເລັມ ເມື່ອຄາວພຣະອົງຊົງເປັນກະສັດຂອງຊາວຢູດານັ້ນ”
5 ເຢຣູຊາເລັມເອີຍ ໃຜຈະສົງສານເຈົ້າຫລືໃຜຈະເສັຽໃຈກັບເຈົ້າ ໃຜຈະແວະມາຖາມທຸກສຸກຂອງເຈົ້າ

6 ພຣະຜູ້ເປັນເຈົ້າກ່າວວ່າ ເຈົ້າໄດ້ປະຕິເສດເຮົາ ເຈົ້າຖອຍຫລັງເລື້ອຍໄປ ເຮົາຈຶ່ງໄດ້ຢຽດມືອອກໄປຕໍ່ສູ້ເຈົ້າ ແລະທຳ
ລາຍເຈົ້າ ເຮົາເມື່ອຍອິດຕໍ່ການຜ່ອນຜັນແລ້ວ
7 ເຮົາໄດ້ຊັດເຂົາດ້ວຍສ້ອມຊັດເຂົ້າ ໃນບັນດາປະຕູແຫ່ງເມືອງນັ້ນ ເຮົາໄດ້ທຳໃຫ້ລູກຂອງເຂົາທັງຫລາຍຕາຍ ເຮົາໄດ້
ທຳລາຍປະຊາຊົນຂອງເຮົາ ເຂົາທັງຫລາຍບໍ່ໄດ້ຫັນກັບຈາກພຶດຕິການຂອງເຂົາ
8 ເຮົາກະທຳໃຫ້ຍິງຫມ້າຍຂອງເຂົາມີຫລາຍ ຍິ່ງກວ່າຊາຍໃນທະເລ ໃນຕອນກາງເວັນ ເຮົາໄດ້ນຳຜູ້ທຳລາຍມາສູ່ບັນ
ດາແມ່ຂອງຄົນຫນຸ່ມທັງຫລາຍ ເຮົາໄດ້ກະທຳໃຫ້ຄວາມແສນຣະທົມແລະຄວາມສຍົດສຍອງຕົກເຫນືອນາງໂດຍທັນ
ທີທັນໃດ
9 ນາງທີ່ມີບຸດເຈັດຄົນກໍອ່ອນກຳລັງ ນາງສລົບໄປແລ້ວ ດວງຕາເວັນຂອງນາງຕົກເມື່ອຍັງເວັນຢູ່ ນາງໄດ້ຮັບຄວາມລະ
ອາຍແລະຖືກຫຍາມນ້ຳຫນ້າ ເຮົາຈະມອບຜູ້ທີ່ເຫລືອຢູ່ໃຫ້ແກ່ດາບຕໍ່ຫນ້າສັດຕຣູຂອງເຂົາ ພຣະຜູ້ເປັນເຈົ້າຊົງກ່າວ
ດັ່ງນີ້ແຫລະ"

Jeremiah Complains Again and Is Reassured

10 ແມ່ເອີຍ, ວິບັດແກ່ຂ້ານ້ອຍ ທີ່ແມ່ໄດ້ເກີດຂ້ານ້ອຍມາ ເປັນຄົນທີ່ໃຫ້ເກີດການແບ່ງແຍກແລະການຊິງດີແກ່ແຜ່ນດິນ
ທັງສິ້ນ ຂ້ານ້ອຍກໍບໍ່ໄດ້ໃຫ້ຢືມ ຫລືຂ້ານ້ອຍກໍບໍ່ໄດ້ຢືມເຂົາ ແຕ່ເຂົາທຸກຄົນແຊ່ງຂ້ານ້ອຍ
11 ຂ້າແດ່ພຣະຜູ້ເປັນເຈົ້າ ຖ້າຂ້າພຣະອົງບໍ່ໄດ້ອ້ອນວອນພຣະອົງເພື່ອຄວາມດີຂອງເຂົາ ຖ້າຂ້າພຣະອົງບໍ່ໄດ້ທູນຂໍຕໍ່ພ
ຣະອົງເພື່ອສັດ ຕຣູໃນເວລາລຳບາກແລະໃນເວລາທຸກໃຈກໍປ່ອຍໃຫ້ເປັນໄປຢ່າງນັ້ນເຖີດ ພຣະອົງເຈົ້າຂ້າ
12 ມີຜູ້ນຶ່ງຜູ້ໃດຫັກເຫລັກໄດ້ຫລື ຄືເຫລັກຈາກທິດເຫນືອແລະທອງສຳຣິດ
13 ຫລັກຖານບ້ານຊ່ອງແລະຊັບສົມບັດຂອງເຈົ້າຈະມອບໃຫ້ເປັນຂອງຍຶດບໍ່ຄິດຄ່າເພາະບາບທັງສິ້ນຂອງເຈົ້າຕລອດທົ່ວ
ດິນແດນຂອງເຈົ້າ
14 ເຮົາຈະກະທຳໃຫ້ເຈົ້າບົວຣະບັດສັດຕຣູຂອງເຈົ້າໃນແຜ່ນດິນຊຶ່ງເຈົ້າບໍ່ຮູ້ຈັກເພາະຄວາມໂກດຂອງເຮົາ ເຮົາກໍ່ໄຟຂຶ້ນ
ຊຶ່ງຈະໄຫມ້ຢູ່ເປັນນິດ

**ພຣະເຈົ້າຊົງເລົ້າໂລມເຢເຣມີຢາ**

15 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຊາບ ຂໍຊົງຣະລຶກເຖິງຂ້າພຣະອົງ ແລະຢ້ຽມຢາມຂ້າພຣະອົງ ຂໍຊົງແກ້ແຄ້ນຜູ້ຂົ່ມ
ເຫັງຂ້າພຣະອົງເພື່ອຂ້າພຣະອົງ ເພາະການອົດກັ້ນພຣະທັຍຂອງພຣະອົງນັ້ນ ຂໍຢ່າຊົງນຳຂ້າພຣະອົງໄປເສັຽ ຂໍຊົງ
ໂຜດຮູ້ວ່າຂ້າພຣະອົງທົນການຕິຕຽນດ້ວຍເຫັນແກ່ພຣະອົງ
16 ເມື່ອພົບພຣະວັຈນະຂອງພຣະອົງແລ້ວ ຂ້າພຣະອົງກໍກິນເສັຽ ພຣະວັຈນະຂອງພຣະອົງເປັນຄວາມຊື່ນບານແກ່ຂ້າພ
ຣະອົງ ແລະເປັນຄວາມປິຕິຍິນດີແຫ່ງຈິດໃຈຂອງຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຈອມໂຍທາ ເພາະວ່າ
ເຂົາເອີ້ນຂ້າພຣະອົງຕາມ ພຣະນາມຂອງພຣະອົງ
17 ຂ້າພຣະອົງບໍ່ໄດ້ນັ່ງຢູ່ໃນຫມູ່ຄົນທີ່ພາກັນສນຸກສນານ ທັງຂ້າພຣະອົງກໍບໍ່ໄດ້ຍິນດີ ຂ້າພຣະອົງນັ່ງຢູ່ຄົນດຽວ ເພາະວ່າ
ພຣະຫັດຂອງພຣະອົງຢູ່ເທິງຂ້າພຣະອົງ ເພາະພຣະອົງຊົງໃຫ້ຂ້າພຣະອົງເຕັມດ້ວຍຄວາມກິ້ວ
18 ເຫດໃດຄວາມເຈັບຂອງຂ້າພຣະອົງບໍ່ໄດ້ຢຸດຢັ້ງ ບາດແຜຂອງຂ້າພຣະອົງກໍຮັກສາບໍ່ຫາຍ ມັນບໍ່ຍອມຫາຍ ພຣະອົງ
ຊົງເປັນເຫມືອນລຳທານຫລອກລວງແກ່ຂ້າພຣະອົງຫລື ຫລືຢ່າງນ້ຳທີ່ເຫືອດແຫ້ງ
19 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈຶ່ງກ່າວວ່າ, "ຖ້າເຈົ້າກັບມາ ເຮົາຈະໃຫ້ເຈົ້າກັບສູ່ສະພາບດີ ແລະເຈົ້າຈະຢືນຢູ່ຕໍ່ຫນ້າ
ເຮົາ ຖ້າເຈົ້າອອກປາກເວົ້າແຕ່ສິ່ງປະເສີດ ແລະບໍ່ເວົ້າສິ່ງຊົ່ວ ເຈົ້າຈະເປັນເຫມືອນປາກຂອງເຮົາ ເຂົາທັງຫລາຍຈະ
ຫັນກັບມາຫາເຈົ້າ ແຕ່ເຈົ້າຢ່າຫັນໄປຫາເຂົາ
20 ເຮົາຈະກະທຳໃຫ້ເຈົ້າເປັນກຳແພງປ້ອມທອງສຳຣິດແກ່ຊົນຊາດນີ້ ເຂົາທັງຫລາຍກໍຈະຕໍ່ສູ້ກັບເຈົ້າ ແຕ່ເຂົາຈະບໍ່ຊະ
ນະເຈົ້າ ເພາະເຮົາຢູ່ກັບເຈົ້າ ຈະຊ່ວຍໃຫ້ລອດແລະຊ່ວຍກູ້ເຈົ້າ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້
21 ເຮົາຈະຊ່ວຍກູ້ເຈົ້າຈາກມືຂອງຄົນອະທັມ ແລະໄຖ່ເຈົ້າຈາກກຳມືຂອງຄົນທີ່ໂຫດຮ້າຍ"

## 16 ພຣະເຈົ້າຊົງພິພາກສາລົງໂທດປະຊາຊົນ

Jeremiah’s Celibacy and Message

1 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

2 “ເຈົ້າຢ່າມີພັຣຍາ ເຈົ້າຢ່າມີລູກຊາຍຫລືລູກຍິງໃນທີ່ນີ້

3 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າເຣື່ອງລູກຊາຍແລະລູກຍິງທີ່ເກີດໃນທີ່ນີ້ ແລະຊົງກ່າວເຖິງພວກແມ່ທີ່ເກີດລູກ
ເຫລົ່ານັ້ນ ແລະພວກພໍ່ທີ່ໃຫ້ບັງເກີດຄົນເຫລົ່ານັ້ນໃນແຜ່ນດິນນີ້ວ່າ

4 ເຂົາທັງຫລາຍຈະຕາຍດ້ວຍໂຣກຮ້າຍ ຈະບໍ່ມີການໂອ່ຍຄາງອາລັຍເຂົາທັງຫລາຍ ຫລືຈະບໍ່ມີໃຜຈັດການຝັງເຂົາ ເຂົາ
ຈະເປັນເຫມືອນກອງຝຸ່ນທີ່ຢູ່ເທິງພື້ນແຜ່ນດິນ ເຂົາທັງຫລາຍຈະພິນາດດ້ວຍດາບແລະການອຶດຢາກ ແລະສົບທັງ
ຫລາຍຂອງເຂົາຈະເປັນອາຫານຂອງນົກໃນອາກາດແລະຂອງສັດແຫ່ງແຜ່ນດິນ

5 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຢ່າເຂົ້າໄປໃນເຮືອນທີ່ຄ່ຳຄວນ ຫລືໄປໂອ່ຍຄາງ ຫລືໄປເສັຽໃຈນຳ ພຣະຜູ້ເປັນ
ເຈົ້າກ່າວວ່າ ເພາະເຮົາໄດ້ເອົາພອນສັນຕິສຸກຂອງເຮົາໄປຈາກຊົນຊາດນີ້ແລ້ວ ທັງຄວາມຮັກຫມັ້ນຄົງ ແລະກະຣຸນາ
ຄຸນຂອງເຮົາ

6 ທັງຜູ້ໃຫຍ່ຜູ້ນ້ອຍຈະຕາຍໃນແຜ່ນດິນນີ້ ຈະບໍ່ມີໃຜຈັດການຝັງເຂົາ ບໍ່ມີໃຜມາໂອ່ຍຄາງອາລັຍເຂົາ ຫລືມາຂີດຕົວ
ຫລືມາແຖຫົວເພື່ອເຂົາ

7 ບໍ່ມີຜູ້ໃດຫັກເຂົ້າຈີ່ໃຫ້ແກ່ຄົນໄວ້ທຸກ ເພື່ອຈະອອຍໃຈເຂົາເພາະເຫດຄົນທີ່ຕາຍນັ້ນ ເພາະພໍ່ແມ່ຂອງເຂົາຈຶ່ງບໍ່ມີໃຜ
ມອບຖ້ວຍແຫ່ງຄວາມເລົ້າໂລມໃຈໃຫ້ເຂົາດື່ມ

8 ເຈົ້າຢ່າເຂົ້າໄປນັ່ງກິນແລະດື່ມກັບເຂົາໃນເຮືອນທີ່ມີການລ້ຽງ

9 ເພາະພຣະຜູ້ເປັນເຈົ້າຈອມໂຍທາພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ, “ເບິ່ງແມ ເຮົາຈະກະທຳໃຫ້ສຽງບັນເທີງ
ແລະສຽງລົ້ນເລີງ ສຽງເຈົ້າບ່າວແລະສຽງເຈົ້າສາວ ຂາດຈາກສະຖານທີ່ນີ້ຕໍ່ຫນ້າຕໍ່ຕາຂອງເຈົ້າທັງຫລາຍແລະໃນວັນ
ຂອງເຈົ້າ

10 “ເມື່ອເຈົ້າບອກຖ້ອຍຄຳເຫລົ່ານີ້ແກ່ຊົນຊາດນີ້ ແລະເຂົາທັງຫລາຍເວົ້າກັບເຈົ້າວ່າ, “ເປັນຫຍັງພຣະຜູ້ເປັນເຈົ້າຈຶ່ງຊົງ
ປະກາດໂທດຍິ່ງໃຫຍ່ທັງສິ້ນນີ້ໃຫ້ຕົກແກ່ເຮົາ ບາບຊົ່ວຂອງເຮົາຄືຫຍັງ ເຮົາໄດ້ກະທຳບາບຫຍັງຕໍ່ພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງເຮົາ”

11 ແລ້ວເຈົ້າຈຶ່ງກ່າວແກ່ເຂົາທັງຫລາຍວ່າ “ພຣະຜູ້ເປັນເຈົ້າກ່າວວ່າ ເພາະບັນພະບຸຣຸດຂອງເຈົ້າໄດ້ປະຖິ້ມເຮົາ ແລະໄດ້
ຕິດຕາມພຣະອື່ນ ແລະໄດ້ບົວຣະບັດ ແລະນະມັສການພຣະນັ້ນ ແລະໄດ້ປະຖິ້ມເຮົາ ແລະບໍ່ໄດ້ຮັກສາພຣະທັມຂອງ
ເຮົາ

12 ແລະເພາະເຈົ້າທັງຫລາຍໄດ້ກະທຳຊົ່ວຮ້າຍຍິ່ງກວ່າບັນພະບຸຣຸດຂອງເຈົ້າ ເພາະເບິ່ງແມ ເຈົ້າທຸກໆຄົນໄດ້ຕິດຕາມເຈ
ຕະນາຊົ່ວຮ້າຍດື້ດ້ານຂອງຕົນເອງ ປະຕິເສດບໍ່ຍອມຟັງເຮົາ

13 ເຫດສັນນັ້ນ ເຮົາຈະແກວ່ງເຈົ້າອອກເສັຽຈາກແຜ່ນດິນຊຶ່ງເຈົ້າຫລືບັນພະບຸຣຸດຂອງເຈົ້າບໍ່ຮູ້ຈັກ ແລະທີ່ນັ້ນເຈົ້າຈະບົວ
ຣະບັດພຣະອື່ນທັງກາງເວັນແລະກາງຄືນ ເພາະເຮົາຈະບໍ່ສຳແດງພຣະຄຸນແກ່ເຈົ້າເລີຍ”

God Will Restore Israel

(ຢຣມ 23:7-8)

14 ພຣະຜູ້ເປັນເຈົ້າກ່າວວ່າ ເພາະສັນນັ້ນ ເບິ່ງແມ, ວັນເດືອນຈະມາເຖິງ ເມື່ອບໍ່ມີໃຜກ່າວຕໍ່ໄປອີກວ່າ “ພຣະຜູ້ເປັນເຈົ້າ
ຊົງນຳປະຊາ ຊົນອິສຣາເອນອອກມາຈາກແຜ່ນດິນເອຢິບຊົງພຣະຊົນຢູ່ສັນໃດ”

15 ແຕ່ຈະເວົ້າວ່າ, "ພຣະຜູ້ເປັນເຈົ້າຊົງນຳປະຊາຊົນອິສຣາເອນອອກມາຈາກແດນເຫນືອ ແລະອອກມາຈາກບັນດາປະ
ເທດຊຶ່ງພຣະອົງໄດ້ຊົງຂັບໄລ່ເຂົາໃຫ້ໄປຢູ່ນັ້ນ ຊົງພຣະຊົນຢູ່ສັນໃດ" ເພາະເຮົາຈະນຳເຂົາທັງຫລາຍກັບມາສູ່ແຜ່ນດິນ
ຂອງເຂົາເອງ ຊຶ່ງເຮົາໄດ້ຍົກໃຫ້ບັນພະບຸຣຸດຂອງເຂົາແລ້ວນັ້ນ
16 ພຣະຜູ້ເປັນເຈົ້າກ່າວວ່າ, "ເບິ່ງແມ, ເຮົາຈະສົ່ງຊາວປະມົງມາຈຳນວນຫລາຍ ແລະເຂົາຈະຈັບເຂົາທັງຫລາຍ ພາຍ
ຫລັງເຮົາຈະໃຫ້ເຂົາພານາຍພານມາຈຳນວນຫລາຍ ນາຍພານຈະລ້າເຂົາທັງຫລາຍຕາມພູທຸກໜ່ວຍ ແລະຕາມຈ້າຍ
ພູທຸກໜ່ວຍແລະຕາມໂງ່ນຫີນ
17 ເພາະວ່າ ເຮົາມອງເບິ່ງການກະທຳທັງສິ້ນຂອງເຂົາ ຈະປິດບັງໄວ້ຈາກເຮົາບໍ່ໄດ້ ແລະບາບຊົ່ວຂອງເຂົາທັງຫລາຍຈະ
ເຊື່ອງພົ້ນຕາເຮົາບໍ່ໄດ້
18 ແລະເຮົາຈະຕອບສນອງຄວາມຊົ່ວແລະບາບຂອງເຂົາເປັນສອງເທົ່າ ເພາະເຂົາໄດ້ກະທຳໃຫ້ແຜ່ນດິນຂອງເຮົາເປັນ
ມົນທິນໄປດ້ວຍຊາກຂອງສິ່ງທີ່ໜ້າຂີ້ດຽດເປິະເປື້ອນ ແລະກະທຳໃຫ້ມໍຣະດົກຂອງເຮົາເຕັມໄປດ້ວຍສິ່ງທີ່ໜ້າກຽດ
ຊັງຂອງພວກເຂົາ"
19 ຂ້າແດ່ພຣະເຈົ້າ ພຣະກຳລັງແລະທີ່ກຳບັງເຂັ້ມແຂງຂອງຂ້າພຣະອົງ ເປັນທີ່ລີ້ພັຍຂອງຂ້າພຣະອົງໃນວັນຍາກລຳບາກ
ບັນດາປະຊາຊາດຈະມາເຝົ້າພຣະອົງຈາກທີ່ສຸດປາຍໂລກແລະທູນວ່າ, "ບັນພະບຸຣຸດຂອງເຮົາບໍ່ໄດ້ຮັບມໍຣະດົກອັນ
ໃດ ນອກຈາກສິ່ງມຸສາ ຄືສິ່ງໄຮ້ຄ່າຊຶ່ງບໍ່ມີປໂຍດອັນໃດໃນຕົວ
20 ມະນຸດຈະສ້າງພຣະໄວ້ສຳລັບຕົນເອງໄດ້ຫລື ສິ່ງຢ່າງນັ້ນບໍ່ແມ່ນພຣະ"
21 "ເພາະສະນັ້ນ ເບິ່ງແມ, ເຮົາຈະກະທຳໃຫ້ເຂົາຮູ້ຈັກ ການຄັ້ງນີ້ເຮົາຈະກະທຳໃຫ້ເຂົາຮູ້ຈັກຣິດເດດຂອງເຮົາແລະຣິດ
ທານຸພາບຂອງເຮົາ ແລະເຂົາທັງຫລາຍຈະຮູ້ວ່ານາມຂອງເຮົາຄືພຣະຜູ້ເປັນເຈົ້າ"

## 17 ບາບຊຶ່ງຈາຣຶກໄວ້ໃນທີ່ຈິດໃຈຂອງຢູດາ

Judah's Sin And Punishment

1 "ບາບຂອງຢູດານັ້ນບັນທຶກໄວ້ດ້ວຍປາກກາເຫລັກ ດ້ວຍປາຍເພັດຈາຣຶກໄວ້ເທິງແຜ່ນແຫ່ງຈິດໃຈຂອງເຂົາແລະເທິງ
ຍອດທີ່ແທ່ນບູຊາຂອງເຂົາທັງຫລາຍ
2 ຝ່າຍບຸດຫລານຂອງເຂົາກໍລະນຶກເຖິງແທ່ນບູຊາແລະເຫລົ່າອາເຊຣິມຂອງເຂົາຂ້າງຕົ້ນໄມ້ສົດທຸກກົກ ແລະເທິງຈ້າຍ
ພູສູງ
3 ເທິງພູທີ່ຢູ່ກາງທົ່ງ ເຮົາຈະໃຫ້ຫລັກຖານບ້ານຊ່ອງແລະຊັບສົມບັດຂອງເຈົ້າເປັນຂອງຍຶດ ເປັນຄ່າແຫ່ງບາບຂອງເຈົ້າ
ຕລອດທົ່ວແຜ່ນດິນຂອງເຈົ້າ
4 ເຈົ້າຈະຕ້ອງປ່ອຍມືຂອງເຈົ້າຈາກມໍຣະດົກຊຶ່ງເຮົາໄດ້ຍົກໃຫ້ແກ່ເຈົ້າ ແລະເຮົາຈະກະທຳໃຫ້ເຈົ້າບົວຣະບັດສັດຕຣູ
ຂອງເຈົ້າໃນແຜ່ນດິນຊຶ່ງເຈົ້າບໍ່ຮູ້ຈັກ ເພາະຄວາມພິໂຣດຂອງເຮົາ ເຮົາກໍ່ໄຟຂຶ້ນຊຶ່ງຈະໄໝ້ຢູ່ເປັນນິດ"
5 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, "ຄົນທີ່ວາງໃຈໃນມະນຸດ ແລະໃຫ້ເນື້ອຫນັງເປັນມືຂອງເຂົາ ແລະໃຈຂອງເຂົາຫັນອອກ
ຈາກພຣະຜູ້ເປັນເຈົ້າ ຄົນນັ້ນກໍເປັນທີ່ສາບແຊ່ງ
6 ເຂົາເປັນເຫມືອນພຸ່ມໄມ້ທີ່ຢູ່ໃນທະເລຊາຍ ແລະບໍ່ເຫັນຄວາມດີອັນໃດມາເຖິງເລີຍ ເຂົາຈະອາສັຍຢູ່ໃນແຜ່ນດິນທີ່
ແຕກຣະແຫງທີ່ໃນຖິ່ນກັນດານ ໃນແຜ່ນດິນເຄັມທີ່ບໍ່ມີຄົນອາສັຍ
7 "ຄົນທີ່ວາງໃຈໃນພຣະຜູ້ເປັນເຈົ້າຍ່ອມໄດ້ຮັບພຣະພອນ ຄືຜູ້ທີ່ຄວາມວາງໃຈຂອງເຂົາຢູ່ໃນພຣະຜູ້ເປັນເຈົ້າ
8 ເຂົາເປັນເຫມືອນຕົ້ນໄມ້ທີ່ປູກໄວ້ຮິມນ້ຳ ຊຶ່ງຢັ່ງຮາກຂອງມັນອອກໄປຂ້າງລຳນ້ຳ ເມື່ອແດດສ່ອງມາເຖິງກໍບໍ່ຢ້ານ
ເພາະໃບຂອງມັນຂຽວຢູ່ສເມີ ແລະບໍ່ກະວົນກະວາຍໃນປີທີ່ແຫ້ງແລ້ງ ເພາະມັນບໍ່ຢຸດທີ່ຈະອອກຜົນ"
9 ຈິດໃຈກໍເປັນຕົວລໍ້ລວງເຫນືອກວ່າສິ່ງໃດທັງຫມົດ ມັນເສື່ອມຊາມຢ່າງຮ້າຍແຮງຫລາຍ ຜູ້ໃດຈະຮູ້ຈັກໃຈນັ້ນ

10 “ເຮົາຄືພຣະຜູ້ເປັນເຈົ້າກວດຄົ້ນເບິ່ງຈິດ ແລະທົດລອງເບິ່ງໃຈ ເພື່ອໃຫ້ແກ່ທຸກຄົນຕາມການກະທຳຂອງເຂົາ ຕາມຜົນ
ແຫ່ງການກະທຳຂອງເຂົາ
11 ເຫມືອນນົກກະທາທີ່ຮວບຮວມລູກຊຶ່ງມັນບໍ່ໄດ້ຟັກສັນໃດ ຄົນທີ່ໄດ້ຄວາມມັ່ງຄັ່ງມີມາຢ່າງບໍ່ເປັນທັມກໍເປັນສັນນັ້ນ ພໍ
ເຖິງກາງວັຍ ມັນກໍພາກຈາກຄົນນັ້ນເສັຽ ແລະໃນຕອນປາຍຂອງເຂົາ ເຂົາຈະເປັນຄົນບ້າ
12 ທີ່ຕັ້ງແຫ່ງສະຖານສັກສິດຂອງເຮົາທັງຫລາຍ ເປັນພຣະທີ່ນັ່ງຮຸ່ງເຮືອງຊຶ່ງຕັ້ງຢູ່ສູງຕັ້ງແຕ່ເດີມນັ້ນ
13 ຂ້າແດ່ພຣະເຈົ້າ ຄວາມຫວັງແຫ່ງອິສຣາເອນ ບັນດາຄົນເຫລົ່ານັ້ນທີ່ປະຖິ້ມພຣະອົງຈະຕ້ອງຮັບຄວາມອັບອາຍ ບັນ
ດາຄົນທັງປວງທີ່ຫັນໄປຈາກພຣະອົງຈະຕ້ອງຈາຣຶກໄວ້ໃນແຜ່ນດິນໂລກ ເພາະເຂົາໄດ້ປະຖິ້ມພຣະຜູ້ເປັນເຈົ້າຜູ້ເປັນ
ແຫລ່ງນ້ຳແຫ່ງຊີວິດເສັຽ

Jeremiah Prays for Vindication

14 ຂ້າແດ່ພຣະເຈົ້າ ຂໍຊົງຮັກສາຂ້າພຣະອົງ ຂ້າພຣະອົງຈະໄດ້ຫາຍ ຂໍຊົງຊ່ອຍຂ້າພຣະອົງຂ້າພຣະອົງຈຶ່ງຈະລອດ ເພາະ
ພຣະອົງເປັນທີ່ສັຣເສີນຂອງຂ້າພຣະອົງ
15 ເບິ່ງແມ, ເຂົາທັງຫລາຍໄດ້ເວົ້າກັບຂ້າພຣະອົງວ່າ, “ພຣະຄຳຂອງພຣະຜູ້ເປັນເຈົ້າຢູ່ໃສ ໃຫ້ມາເຖີດ”
16 ຂ້າພຣະອົງບໍ່ໄດ້ຫາໂອກາດເລີກເປັນຜູ້ລ້ຽງແກະທີ່ຕາມພຣະອົງໄປ ຂ້າພຣະອົງກໍບໍ່ປະສົງວັນແຫ່ງຄວາມຫາຍນະ
ພຣະອົງຊົງຊາບແລ້ວສິ່ງຊຶ່ງອອກມາຈາກຮີມສົບຂອງຂ້າພຣະອົງກໍຖືກຕ້ອງຕໍ່ພຣະພັກຂອງພຣະອົງ
17 ຂໍຢ່າຊົງເປັນເຫດໃຫ້ຂ້າພຣະອົງຕົກໃຈຢ້ານກົວເລີຍ ພຣະອົງຊົງເປັນທີ່ລີ້ພັຍຂອງຂ້າພຣະອົງໃນວັນຮ້າຍ
18 ຜູ້ໃດຂົ່ມເຫັງຂ້າພຣະອົງຂໍໃຫ້ເຂົາໄດ້ຮັບຄວາມລະອາຍ ແຕ່ຂໍຢ່າໃຫ້ຂ້າພຣະອົງໄດ້ຮັບຄວາມລະອາຍ ຂໍໃຫ້ເຂົາຕົກ
ໃຈຢ້ານກົວ ແຕ່ຢ່າໃຫ້ຂ້າພຣະອົງຕົກໃຈຢ້ານກົວເລີຍ ຂໍຊົງນຳວັນຮ້າຍມາຕົກເຫນືອເຂົາ ຂໍຊົງທຳລາຍເຂົາດ້ວຍ
ການທຳລາຍອັນຊັບຊ້ອນ

**ຕ້ອງຮັກສາວັນສະບາໂຕໃຫ້ບໍຣິສຸດ**

Hallow the Sabbath Day

19 ພຣະຜູ້ເປັນເຈົ້າກ່າວແກ່ຂ້າພະເຈົ້າດັ່ງນີ້ວ່າ, “ຈົ່ງໄປຢືນໃນປະຕູເມືອງ ຊຶ່ງບັນດາກະສັດແຫ່ງຢູດາສະເດັດເຂົ້າ ແລະ
ຊຶ່ງພຣະອົງສະເດັດອອກ ແລະໃນປະຕູທັງຫລາຍຂອງເຢຣູຊາເລັມ
20 ແລະກ່າວແກ່ເຂົາທັງຫລາຍວ່າ “ທ່ານທັງຫລາຍຜູ້ເປັນກະສັດຂອງຢູດາ ແລະບັນດາຄົນຢູດາ ແລະຊາວເຢຣູຊາເລັມ
ທັງສິ້ນ ຜູ້ຊຶ່ງເຂົ້າທາງປະຕູເຫລົ່ານີ້ ຈົ່ງຟັງພຣະຄຳຂອງພຣະຜູ້ເປັນເຈົ້າ
21 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ຈົ່ງລະວັງເພື່ອເຫັນແກ່ຊີວິດຂອງເຈົ້າທັງຫລາຍ ຢ່າໄດ້ຫາບຫາມສິ່ງໃດໃນວັນສະບາ
ໂຕ ຫລືນຳຂອງນັ້ນເຂົ້າທາງບັນດາປະຕູເຢຣູຊາເລັມ
22 ແລະຢ່າຫາບຫາມສິ່ງໃດຂອງເຈົ້າອອກຈາກບ້ານໃນວັນສະບາໂຕ ຫລືກະທຳງານໃດໆ ແຕ່ຈົ່ງຮັກສາວັນສະບາໂຕ
ໄວ້ໃຫ້ບໍຣິສຸດ ດັ່ງທີ່ເຮົາໄດ້ສັ່ງບັນພະບຸຣຸດຂອງເຈົ້າໄວ້
23 ເຖິງປານນັ້ນເຂົາກໍບໍ່ຟັງຫລືງ່ຽງຫູຟັງ ແຕ່ກະທຳຄໍຂອງເຂົາທັງຫລາຍໃຫ້ແຂງ ເພື່ອຈະບໍ່ໄດ້ຍິນແລະບໍ່ຮັບຄຳຕັກ
ເຕືອນ
24 ພຣະຜູ້ເປັນເຈົ້າກ່າວວ່າ, “ຖ້າເຈົ້າເຊື່ອຟັງເຮົາ ແລະບໍ່ນຳສິ່ງຂອງໃດໆເຂົ້າມາທາງປະຕູເມືອງນີ້ໃນວັນສະບາໂຕ ແຕ່
ຮັກສາວັນສະບາໂຕໃຫ້ບໍຣິສຸດ ແລະບໍ່ກະທຳງານໃນວັນນັ້ນ
25 ແລ້ວຈະມີກະສັດແລະເຈົ້ານາຍ ຜູ້ປະທັບເທິງບັນລັງແຫ່ງດາວິດສະເດັດເຂົ້າທາງປະຕູທັງຫລາຍຂອງເມືອງນີ້ສະເດັດ
ມາໃນຣົດຮົບ ແລະເທິງມ້າ ທັງບັນດາກະສັດແລະເຈົ້ານາຍຂອງພຣະອົງ ທັງຄົນຢູດາແລະຊາວເຢຣູຊາເລັມ ແລະ
ເມືອງນີ້ຈະມີຄົນອາສັຍຢູ່ເປັນນິດ

26 ແລະປະຊາຊົນຈະມາຈາກຫົວເມືອງແຫ່ງຢູດາ ແລະຈາກທີ່ຊຶ່ງຢູ່ຮອບເຢຣູຊາເລັມ ຈາກແຜ່ນດິນເບັນຢາມິນ ຈາກ
ຕີນພູຕ່າງໆ ຈາກພູທັງຫລາຍ ແລະຈາກເນເກັບ ນຳເອົາເຄື່ອງເຜົາບູຊາ ແລະເຄື່ອງສັກກາຣະບູຊາ ເຄື່ອງທັນຍາບູຊາ
ແລະກຳຍານ ແລະນຳເຄື່ອງບູຊາໂມທະນາພຣະຄຸນມາຍັງວິຫານຂອງພຣະຜູ້ເປັນເຈົ້າ
27 ແຕ່ຖ້າເຈົ້າທັງຫລາຍບໍ່ຟັງເຮົາເພື່ອຮັກສາວັນສະບາໂຕໃຫ້ບໍຣິສຸດ ແລະບໍ່ແບກສິ່ງຂອງເຂົ້າທາງປະຕູທັງຫລາຍຂອງ
ເຢຣູຊາເລັມໃນວັນສະບາໂຕແລ້ວເຮົາຈະກໍ່ໄຟໄວ້ໃນປະຕູເມືອງເຫລົ່ານັ້ນ ແລະໄຟນັ້ນຈະເຜົາຜານຣາຊວັງທັງ
ຫລາຍຂອງເຢຣູຊາເລັມ ແລະຈະມອດກໍບໍ່ໄດ້"

## 18 ເຢເຣມີຢາທີ່ເຮືອນຂອງຊ່າງປັ້ນຫມໍ້

The Potter and the Clay

1 ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ,

2 "ຈົ່ງລຸກຂຶ້ນໄປຍັງເຮືອນຂອງຊ່າງປັ້ນຫມໍ້ ແລ້ວເຮົາຈະເວົ້າໃຫ້ເຈົ້າຟັງຢູ່ທີ່ນັ້ນ"

3 ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງລົງໄປທີ່ນັ້ນ ແລະເຫັນຊ່າງປັ້ນຫມໍ້ກຳລັງຊຸ່ມຫມໍ້ຂອງເຂົາຢູ່

4 ໃນເວລານັ້ນ ເມື່ອໃດເຂົາປັ້ນດິນຫນຽວເປັນພາຊນະຢ່າງນຶ່ງບໍ່ໄດ້ ເຂົາກໍເອົາດິນຫນຽວອັນເກົ່ານັ້ນ ເຮັດເປັນພາຊນະ
ຢ່າງອື່ນອີກ

5 ຂນະນັ້ນ ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ,

6 "ປະຊາຊົນອິສຣາເອນເອີຍ ເຮົາຈະທຳກັບເຈົ້າເຫມືອນຢ່າງຊ່າງປັ້ນຫມໍ້ທຳກັບດິນຫນຽວນັ້ນບໍ່ໄດ້ບໍ ດິນຫນຽວຢູ່ໃນມື
ຊ່າງປັ້ນຫມໍ້ສັນໃດ ພວກເຈົ້າກໍຢູ່ໃນມືຂອງເຮົາສັນນັ້ນ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ

7 ຖ້າເວລາໃດເຮົາກ່າວວ່າຈະຖອນຮາກ ຈະຮື້ຖິ້ມ ຈະທຳລາຍຊາດຫລືອານາຈັກໃດໆ

8 ແຕ່ຖ້າຊາດນັ້ນຫັນຫນີຈາກການທຳຊົ່ວເສັຽ ເຮົາກໍຈະປ່ຽນໃຈຈາກສິ່ງທີ່ເຮົາກ່າວວ່າຈະກະທຳນັ້ນເສັຽ

9 ອີກຢ່າງນຶ່ງ ຖ້າເຮົາກ່າວວ່າຈະປຸກ ຫລືສ້າງປະເທດຫລືອານາຈັກໃດຂຶ້ນ

10 ແຕ່ຖ້າຊາດນັ້ນກະທຳຊົ່ວບໍ່ເຊື່ອຟັງເຮົາ ເຮົາກໍຈະປ່ຽນໃຈຈາກສິ່ງທີ່ເຮົາກ່າວວ່າຈະກະທຳນັ້ນເສັຽ

11 ດັ່ງນັ້ນແຫລະ ເຈົ້າຈົ່ງບອກປະຊາຊົນຢູດາ ແລະຊາວກຸງເຢຣູຊາເລັມວ່າ ເຮົາກຳລັງວາງແຜນການຕໍ່ສູ້ ແລະຈັດຕຽມ
ການລົງໂທດເຂົາຢູ່ ຈົ່ງບອກໃຫ້ເຂົາເຊົາດຳເນີນຊີວິດໃນທາງບາບເສັຽ ໃຫ້ປ່ຽນທາງແລະສິ່ງທີ່ກຳລັງເຮັດຢູ່ນັ້ນ

Israel's Stubborn Idolatry

12 ແຕ່ພວກເຂົາຈະຕອບວ່າ ພວກເຮົາບໍ່ປ່ຽນດອກ ຈະເຮັດຊົ່ວຕໍ່ໄປຕາມຄວາມພໍໃຈຂອງເຮົາເອງ"

13 ດັ່ງນັ້ນແຫລະ, ເຮົາພຣະຜູ້ເປັນເຈົ້າຈຶ່ງກ່າວດັ່ງນີ້ວ່າ ຈົ່ງໄປທ່ຽວຖາມເບິ່ງຖ້າມກາງປະຊາຊາດວ່າ ຜູ້ໃດເຄີຍໄດ້ຍິນ
ເຫມືອນຢ່າງນີ້ ອິສຣາເອນພົມມະຈາຣີນັ້ນໄດ້ກະທຳສິ່ງອັນຫນ້າຢ້ານກົວ

14 ພູສູງເລບານອນບໍ່ເຄີຍຂາດຫິມມະ ກະແສນ້ຳເຢັນໃນພູບໍ່ເຄີຍບົກແຫ້ງ ສິ່ງເຫລົ່ານີ້ບໍ່ເຄີຍມີຈັກເທື່ອ ແຕ່ປະຊາຊົນອິ
ສຣາເອນໄດ້ເຮັດສິ່ງນຶ່ງອັນຫນ້າຢ້ານພິລຶກ

15 ຄືພວກເຂົາໄດ້ລືມເຮົາເສັຽ ໄດ້ເຜົາເຄື່ອງຫອມບູຊາແກ່ພຣະອື່ນ ໄດ້ຕຳສະດຸດໃນທາງທີ່ເຂົາເດີນ ບໍ່ໄດ້ເຮັດຕາມຮີດ
ເກົ່າຄອງຫລັງອີກຕໍ່ໄປ ແຕ່ເດີນຕາມທາງທີ່ຍັງບໍ່ໄດ້ດັດແປງ

16 ໄດ້ເຮັດໃຫ້ແຜ່ນດິນນີ້ເສື່ອມເສັຽໄປ ຈະເປັນແຜ່ນດິນທີ່ຫນ້າກຽດຊັງຕລອດໄປເປັນນິດ ຄົນທັງປວງທີ່ຜ່ານໄປທີ່ນັ້ນ
ຈະເຫັນສິ່ງອັນຫນ້າຢ້ານກົວ ເຂົາຈະສັ່ນຫົວດ້ວຍຄວາມປລາດໃຈ

17 ເຮົາຈະເຮັດໃຫ້ໄພ່ພົນຂອງເຮົາກະຈັດກະຈາຍໄປຕໍ່ຫນ້າສັດຕຣູຂອງເຂົາ ເຫມືອນລົມຕາເວັນອອກພັດເປົ່າຂີ້ດິນ
ເຮົາຈະຫັນຫລັງໃສ່ເຂົາເມື່ອໄພວິບັດມາເຖິງເຂົາ ແລະຈະບໍ່ຊ່ອຍເຫລືອເຂົາ"

A Plot against Jeremiah

18 ຂນະນັ້ນປະຊາຊົນພາກັນເວົ້າວ່າ, “ໃຫ້ພວກເຮົາຫາເຣື່ອງໂຈມຕີ ແລະກຳຈັດເຢເຣມີຢາເທາະ ເພາະວ່າພວກເຮົາມີ
ພວກປະໂຣຫິດສຳລັບສັ່ງສອນ ມີພວກນັກປາດສຳລັບປຶກສາ ແລະມີພວກຜູ້ປະກາດພຣະທັມສຳລັບເທສນາພຣະ
ຄຳຂອງພຣະເຈົ້າຢູ່ ສະນັ້ນຈົ່ງຢ່າຟັງສິ່ງທີ່ເຂົາເວົ້າ”

19 ດ້ວຍເຫດນັ້ນ ເຢເຣມີຢາຈຶ່ງອ້ອນວອນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຟັງຖ້ອຍຄຳທີ່ຂ້າພຣະອົງຈະກາບ
ທູນ ແລະຟັງເຣື່ອງທີ່ສັດຕຣູກ່າວຮ້າຍປ້າຍສີໃສ່ຂ້າພຣະອົງແດ່ຖ້ອນ

20 ຄືວ່າເຂົາຈະເຮັດການຮ້າຍຕອບແທນການດີຂອງຂ້າພຣະອົງ ດ້ວຍວ່າພວກເຂົາໄດ້ຂຸດຫລຸມໃຫ້ຂ້າພຣະອົງຕົກລົງ ຂໍ
ຊົງໂຜດລະນຶກເຖິງທີ່ຂ້າພຣະອົງໄດ້ມາກາບທູນບໍ່ໃຫ້ພຣະອົງຊົງລົງໂທດເຂົາດ້ວຍພຣະພິໂຣດ

21 ຂ້າແດ່ພຣະຜູ້ເປັນເຈົ້າ ບັດນີ້ ຂໍພຣະອົງຊົງທຳໃຫ້ລູກຂອງເຂົາອຶດຢາກຈົນເຖິງແກ່ຄວາມຕາຍ ໃຫ້ພວກເຂົາຕາຍໃນ
ເສິກສົງຄາມ ພວກແມ່ຍິງກໍໃຫ້ສູນເສັຽຜົວແລະລູກຂອງຕົນ ໃຫ້ຜູ້ຊາຍຕາຍດ້ວຍພຍາດຕ່າງໆ ພວກຄົນຫນຸ່ມກໍໃຫ້
ຕາຍໃນສນາມຮົບ

22 ຂໍຊົງໂຜດສົ່ງກອງທະຫານເຂົ້າໄປປຸ້ນບ້ານເຮືອນຂອງເຂົາຢ່າງທີ່ເຂົາບໍ່ຮູ້ຕົວ ຂໍຊົງທຳໃຫ້ເຂົາຮ້ອງໄຫ້ດ້ວຍຄວາມ
ຢ້ານ ເພາະວ່າເຂົາໄດ້ຂຸດຫລຸມໃຫ້ຂ້າພຣະອົງຕົກລົງແລະໄດ້ເຮັດແຮ້ວດັກຈັບຂ້າພຣະອົງ

23 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຊົງຊາບແຜນການເຂົາຈະສັງຫານຂ້າພຣະອົງແລ້ວ ຂໍຢ່າໃຫ້ອະພັຍຄວາມຜິດ
ແລະຍົກໂທດໃຫ້ເຂົາເລີຍ ຈົ່ງທຳໃຫ້ເຂົາລົ້ມລົງດ້ວຍຄວາມຜ່າຍແພ້ແລະລົງໂທດດ້ວຍພຣະພິໂຣດຖ້ອນ”

## 19 ບົດຮຽນຈາກພາຊນະແຕກ

The Broken Earthenware Jug

1 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ຈົ່ງໄປຊື້ຫມໍ້ດິນຂອງຊ່າງປັ້ນຫມໍ້ມາຫນ່ວຍນຶ່ງ ແລ້ວໃຫ້ເອົາຫົວຫນ້າປະຊາຊົນກັບປະ
ໂຣຫິດອະວຸໂສບາງຄົນ

2 ແລ້ວໃຫ້ໄປຍັງຮ່ອມພູຮິນໂນມ ອອກໄປທາງປະຕູເມືອງທີ່ມີຊື່ວ່າ ປະຕູໂຮງປັ້ນຫມໍ້ດິນ ໃຫ້ຂ້າພະເຈົ້າປະກາດພຣະ
ຄຳຂອງພຣະອົງຢູ່ທີ່ນັ້ນ

3 ພຣະຜູ້ເປັນເຈົ້າຊົງບອກໃຫ້ຂ້າພະເຈົ້າເວົ້າວ່າ “ພວກກະສັດຢູດາແລະຊາວເຢຣູຊາເລັມເອີຍ ຈົ່ງຟັງເທີ້ນ ເຮົາພຣະຜູ້
ເປັນເຈົ້າອົງຍິ່ງໃຫຍ່ຂອງຊາວອິສຣາເອນໄດ້ກ່າວດັ່ງນີ້ ເຮົາຈະນຳພັຍວິບັດມາຍັງບ່ອນນີ້ ຊຶ່ງຈະດັງກ້ອງກັງວານຢູ່ໃນ
ຫູຂອງທຸກໆຄົນທີ່ໄດ້ຍິນເຣື່ອງນີ້

4 ທີ່ທຳດັ່ງນີ້ກໍເພາະວ່າປະຊາຊົນໄດ້ປະຖິ້ມເຮົາ ແລະໄດ້ທຳສະຖານທີ່ນີ້ເສື່ອມເສັຽດ້ວຍການເຜົາຖວາຍບູຊາແກ່ພຣະ
ອື່ນ ຄືພຣະທີ່ເຂົາເອງຫລືບັນພະບຸຣຸດຂອງເຂົາ ຫລືພວກກະສັດຂອງຊາວຢູດາບໍ່ຮູ້ຈັກ ພວກເຂົາໄດ້ຂ້າຄົນຜູ້ບໍ່ມີ
ຄວາມຜິດຈຳນວນຫລາຍຢູ່ໃນສະຖານທີ່ນີ້

5 ໄດ້ກໍ່ແທ່ນສຳລັບພຣະບາອານ ເພື່ອຈະເຜົາບຸດຊາຍຂອງເຂົາເສັຽໃນໄຟເປັນເຄື່ອງເຜົາບູຊາແດ່ພຣະບາອານ ຊຶ່ງເຮົາ
ບໍ່ໄດ້ບັນຊາຫລືໃຫ້ສິດອຳນາດ ຫລືໄດ້ນຶກໃນໃຈຂອງເຮົາ

6 ດັ່ງນັ້ນແຫລະ, ເຮົາພຣະຜູ້ເປັນເຈົ້າຈຶ່ງກ່າວວ່າ ເມື່ອເວລານັ້ນມາເຖິງ ສະຖານທີ່ນີ້ຈະບໍ່ໄດ້ເອີ້ນວ່າ ໂຕເຟທຫລືຮ່ອມ
ພູຮິນໂນມອີກເລີຍ ແຕ່ຈະຖືກເອີ້ນວ່າຮ່ອມພູແຫ່ງການຂ້າຟັນກັນ

7 ໃນສະຖານທີ່ນີ້ເຮົາຈະທຳລາຍແຜນການທັງປວງຂອງຊາວຢູດາແລະຊາວເຢຣູຊາເລັມ ຈະໃຫ້ສັດຕຣູຂອງເຂົາມີຊັຍ
ຊະນະແລະຂ້າເຂົາຕາຍໃນສະຫນາມຮົບ ຈະໃຫ້ນົກແລະສັດປ່າທັງຫລາຍກິນຊາກສົບຂອງເຂົາ

8 ຈະນຳພັຍວິບັດອັນຫນ້າຢ້ານເຊັ່ນນີ້ມາຍັງເມືອງນີ້ ເພື່ອທຸກຄົນທີ່ຍ່າງຜ່ານໄປມາຈະໄດ້ຕົກໃຈ ແລະອັສຈັນໃນເຫດ
ການທີ່ເກີດຂຶ້ນ

9 ເມື່ອເວລາສັດຕຣູລ້ອມເມືອງແລະຈະຂ້າເຂົານັ້ນ ເຮົາຈະທຳໃຫ້ຄົນຜູ້ອາສັຍຢູ່ທີ່ນັ້ນກິນລູກຂອງຕົນ ແລະກິນເພື່ອນ
ບ້ານເປັນອາຫານໃນເວລາຄັບຂັນ"
10 ແລ້ວພຣະຜູ້ເປັນເຈົ້າຊົງບອກໃຫ້ຂ້າພະເຈົ້າ ທັບຫມໍ້ຕໍ່ຫນ້າຄົນທັງຫລາຍທີ່ມີດ້ວຍກັນ ແລະຊົງບອກໃຫ້ເວົ້າຕໍ່ເຂົາວ່າ
11 "ພຣະຜູ້ເປັນເຈົ້າຜູ້ມີອຳນາດຍິ່ງໃຫຍ່ຊົງກ່າວດັ່ງນີ້ ເຮົາຈະທຸບຕີປະຊາຊົນແລະມ້າງເພເມືອງນີ້ຢ່າງດຽວກັນກັບທັບ
ຫມໍ້ດິນ ຊຶ່ງຈະຈອດໃຫ້ດີອີກບໍ່ໄດ້ ພວກເຂົາຈະຝັງສົບຄົນຕາຍໄວ້ໃນໂຕເຟທ ເພາະວ່າໃນບ່ອນອື່ນຈະບໍ່ມີບ່ອນຝັງ
12 ອັນນີ້ແມ່ນສິ່ງທີ່ເຮົາຈະທຳຕໍ່ເມືອງແລະຄົນຜູ້ຢູ່ໃນເມືອງນີ້ ຈະທຳໃຫ້ເປັນເຫມືອນໂຕເຟທ ເຮົາພຣະຜູ້ເປັນເຈົ້າໄດ້
ກ່າວດັ່ງນີ້ແຫລະ
13 ເຮືອນທັງຫລາຍໃນກຸງເຢຣູຊາເລັມ ແລະວັງທັງຫລາຍຂອງກະສັດຢູດາຈະເສື່ອມເສັຽເຫມືອນດັ່ງຮ່ອມພູໂຕເຟທ
ເພາະວ່າເຂົາຈະໄດ້ເຜົາເຄື່ອງຫອມຖວາຍດວງດາວ ແລະໄດ້ເທເຄື່ອງດື່ມຖວາຍແກ່ພຣະອື່ນຢູ່ເທິງຫລັງຄາເຮືອນ
ເຫລົ່ານີ້"
14 ແລ້ວຂ້າພະເຈົ້າໄດ້ອອກຈາກ ໂຕເຟທ ຄືບ່ອນພຣະຜູ້ເປັນເຈົ້າຊົງໃຊ້ຂ້າພະເຈົ້າໄປປະກາດພຣະວັຈນະຂອງພຣະອົງ
ນັ້ນ ຂ້າພະເຈົ້າໄດ້ຢືນຢູ່ໃນເດີ່ນພຣະວິຫານ ແລະເວົ້າກັບປະຊາຊົນທັງປວງວ່າ,
15 "ພຣະຜູ້ເປັນເຈົ້າຜູ້ມີອຳນາດອັນຍິ່ງໃຫຍ່ຂອງຊາວອິສຣາເອນຊົງກ່າວວ່າ ເຮົາຈະນຳພັຍວິບັດມາຍັງເມືອງນີ້ ແລະມາ
ຍັງບ້ານເມືອງທັງຫລາຍທີ່ຢູ່ໃກ້ຄຽງ ເພາະວ່າພວກເຈົ້າຫົວດື້ແລະບໍ່ເຊື່ອຟັງຄຳຂອງເຮົາ"

## 20 ເຢເຣມີຢາຖືກຈັບຂັງໄວ້

Jeremiah Persecuted by Pashhur

1 ເມື່ອປັສຮູຣ໌ປະໂຣຫິດບຸດຂອງອິມເມີ ຜູ້ເປັນນາຍໃຫຍ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ໄດ້ຍິນເຢເຣມີຢາປະ
ກາດພຣະທັມເຖິງສິ່ງເຫລົ່ານີ້
2 ປັສຮູຣ໌ກໍຕີເຢເຣມີຢາຜູ້ປະກາດພຣະທັມແລະຈັບທ່ານໃສ່ກັບຕົນໄວ້ໃນປະຕູສູງ ຊຶ່ງຕັ້ງຢູ່ທາງປະຕູເບັນຢາມິນດ້ານ
ເທິງພຣະວິຫານຂອງພຣະຜູ້ເປັນເຈົ້າ
3 ມື້ອື່ນເຊົ້າມາ ປັສຮູຣ໌ກໍເອົາເຢເຣມີຢາອອກຈາກກັບຕົນ ເຢເຣມີຢາເວົ້າຕໍ່ທ່ານວ່າ, "ພຣະຜູ້ເປັນເຈົ້າບໍ່ໄດ້ເອີ້ນຊື່ຂອງ
ທ່ານວ່າປັສຮູຣ໌ ແຕ່ຊົງເອີ້ນວ່າ ຜູ້ຍ້ານກົວຄວາມວຸ້ນວາຍໃນທຸກໆບ່ອນ
4 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ເບິ່ງແມ, ເຮົາຈະເຮັດໃຫ້ເຈົ້າກັບມິດສະຫາຍຂອງເຈົ້າຢ້ານກົວວຸ້ນວາຍ ເຈົ້າຈະ
ເຫັນເຂົາທັງຫມົດຕາຍດ້ວຍດາບຂອງສັດຕຣູ ເຮົາຈະມອບຊາວຢູດາທັງປວງຢູ່ໃຕ້ອຳນາດຂອງກະສັດບາບີໂລນ
ແລະຄົນອື່ນໆກໍຈະຖືກຂ້າຕາຍ
5 ເຮົາຈະໃຫ້ສັດຕຣູຂອງເຂົາປຸ້ນເອົາຊັບສົມບັດອັນມີຄ່າຂອງກະສັດຢູດາ ແລະທຸກໆສິ່ງກໍຈະຖືກນຳໄປຍັງເມືອງບາບີ
ໂລນ
6 ສຳລັບເຈົ້າກັບຄອບຄົວຂອງເຈົ້າ ຈະຖືກຈັບໄປຍັງບາບີໂລນເຫມືອນກັນ ເຈົ້າຈະຕາຍແລະຖືກຝັງໄວ້ນຳມິດສະຫາຍ
ຜູ້ເຈົ້າເວົ້າຕົວະເຂົານັ້ນ"

**ບົດຄ່ຳຄວນຂອງເຢເຣມີຢາ**

Jeremiah Denounces His Persecutors

7 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຫລອກລວງຂ້າພຣະອົງ ແລະຂ້າພຣະອົງກໍຖືກຫລອກລວງ ພຣະອົງຊົງມີກຳລັງ
ຍິ່ງກວ່າຂ້າ ພຣະອົງ ແລະພຣະອົງກໍຊະນະຂ້າພຣະອົງເປັນທີ່ໃຫ້ເຂົາຫົວເລາະຂ້າພຣະອົງຕລອດມື້ ທຸກຄົນເຍາະ
ເຍີ້ຍຂ້າພຣະອົງ
8 ເພາະວ່າຂ້າພຣະອົງເວົ້າເມື່ອໃດຂ້າພຣະອົງຮ້ອງໃຫ້ຊ່ອຍ ຂ້າພຣະອົງຮ້ອງຂຶ້ນວ່າ, "ຮຸນແຮງ ພິນາດ" ເພາະວ່າພຣະ
ວັຈນະຂອງພຣະຜູ້ເປັນເຈົ້າໄດ້ເປັນເຫດໃຫ້ຂ້າພຣະອົງເປັນທີ່ຕຳຫນິແລະເຍາະເຍີ້ຍຕລອດມື້

9 ຖ້າຂ້າພຣະອົງຈະກ່າວວ່າ, “ຂ້າພະເຈົ້າຈະບໍ່ອ້າງເຖິງພຣະອົງ ຫລືກ່າວໃນພຣະນາມຂອງພຣະອົງອີກ” ກໍມີສິ່ງໃນໃຈຂອງຂ້າ ພຣະອົງເຫມືອນໄຟໄຫມ້ອັດຢູ່ໃນກະດູກຂອງຂ້າພຣະອົງ ແລະຂ້າພຣະອົງກໍອ່ອນເປັ້ຍທີ່ຕ້ອງອັດມັນໄວ້ ແລະຂ້າພຣະອົງກໍອັດໄວ້ບໍ່ໄຫວ

10 ເພາະຂ້າພຣະອົງໄດ້ຍິນສຽງຊຸບຊິບຫລາຍ ຄວາມຫວາດສຽວຢູ່ຮອບທຸກດ້ານ ມິດສະຫາຍທີ່ຄຸ້ນເຄີຍທັງສິ້ນຂອງຂ້າພຣະອົງກ່າວວ່າ, “ໃສ່ຄວາມເຂົາ ໃຫ້ເຮົາໃສ່ຄວາມເຂົາ” ເຂົາເຝົ້າເບິ່ງຄວາມຫລົ້ມຈົມຂອງຂ້າພຣະອົງ “ຫາກວ່າເຂົາຈະຖືກຫລອກລວງແລ້ວເຮົາຊະນະເຂົາໄດ້ ແລະທຳການແກ້ແຄ້ນເຂົາ”

11 ແຕ່ພຣະຜູ້ເປັນເຈົ້າຊົງຢູ່ຂ້າງຂ້າພະເຈົ້າ ດັ່ງນັກຮົບທີ່ຫນ້າຢ້ານ ເຫດສັນນັ້ນຜູ້ຂົ່ມເຫັງຂ້າພະເຈົ້າຈະສະດຸດ ເຂົາຈະບໍ່ຊະນະຂ້າພະເຈົ້າ ເຂົາຈະຂາຍຫນ້າຫລາຍ ເພາະເຂົາກະທຳບໍ່ສຳເຣັດ ຄວາມອັປຍົດອົດສູເປັນນິດຂອງເຂົານັ້ນຈະບໍ່ມີວັນລືມ

12 ຂ້າແດ່ພຣະຜູ້ເປັນເຈົ້າຈອມໂຍທາຜູ້ຊົງທົດລອງຄົນຊອບທັມ ຜູ້ທອດພຣະເນດທັງໃຈແລະຈິດ ຂໍໃຫ້ຂ້າພຣະອົງໄດ້ເຫັນການແກ້ແຄ້ນຂອງພຣະອົງເຫນືອເຂົາທັງຫລາຍ ເພາະຂ້າພຣະອົງໄດ້ທູນສເນີຄະດີຂອງຂ້າພຣະອົງແລ້ວ

13 ຈົ່ງຮ້ອງເພງຖວາຍພຣະຜູ້ເປັນເຈົ້າ ຈົ່ງສັຣເສີນພຣະຜູ້ເປັນເຈົ້າ ເພາະວ່າພຣະອົງຊົງຊ່ອຍກູ້ຊີວິດຂອງຜູ້ຂັດສົນ ໃຫ້ພົ້ນຈາກມືຂອງຜູ້ກະທຳຄວາມຊົ່ວຮ້າຍ

14 ຂໍຢ່າໃຫ້ວັນທີ່ຂ້າພະເຈົ້າເກີດມານັ້ນຮັບພອນ ຢ່າໃຫ້ວັນທີ່ມານດາຂອງຂ້າພະເຈົ້າຄອດຂ້າພະເຈົ້າໄດ້ຮັບພອນ

15 ຂໍໃຫ້ຊາຍຄົນນັ້ນຖືກສາບ ຄືຄົນທີ່ເຂົານຳຂ່າວໄປບອກບິດາຂ້າພະເຈົ້າວ່າ “ບຸດຊາຍຄົນນຶ່ງເກີດມາແກ່ທ່ານແລ້ວ” ອັນກະທຳໃຫ້ບິດາມີຄວາມຍິນດີຫລາຍ

16 ຂໍໃຫ້ຊ່ອຍຄົນນັ້ນເຫມືອນກັບບັນດາເມືອງ ຊຶ່ງພຣະຜູ້ເປັນເຈົ້າຊົງຄວ່ຳເສັຽແລະບໍ່ໄດ້ຊົງກັບພຣະທັຍ ຂໍໃຫ້ເຂົາໄດ້ຍິນສຽງຮ້ອງໄຫ້ຊ່ອຍໃນເວລາຕອນເຊົ້າແລະໃຫ້ໄດ້ຍິນສຽງໂອຍວາຍໃນເວລາທ່ຽງ

17 ເພາະເຂົາບໍ່ໄດ້ຂ້າຂ້າພະເຈົ້າເສັຽຕັ້ງແຕ່ໃນທ້ອງ ໃຫ້ມານດາຂອງຂ້າພະເຈົ້າເປັນຫລຸມຝັງສົບຂອງຂ້າພະເຈົ້າ ແລະທ້ອງນັ້ນຈະໄດ້ໃຫຍ່ຢູ່ເປັນນິດ

18 ເປັນຫຍັງຂ້າພະເຈົ້າຈຶ່ງອອກມາຈາກທ້ອງ ມາເຫັນຄວາມລຳບາກແລະຄວາມທຸກ ແລະວັນຄືນຂອງຂ້າພະເຈົ້າກໍສິ້ນເປືອງໄປດ້ວຍຄວາມອັບອາຍ

## 21 ທຳນວາຍເຖິງການທີ່ເຢຣູຊາເລັມຈະຖືກທຳລາຍ

Jerusalem Will Fall to Nebuchadrezzar

1 ຕໍ່ໄປນີ້ເປັນຖ້ອຍຄຳຊຶ່ງມາຈາກພຣະຜູ້ເປັນເຈົ້າເຖິງເຢເຣມີຢາ ເມື່ອກະສັດເຊເດກີຢາຊົງໃຊ້ໃຫ້ປັສຊູ ບຸດມັນຄີຢາ ແລະເຊຟັນຢາປະໂຣຫິດ ບຸດມາອາຊັຍຢາໄປຫາເຢເຣມີຢາວ່າ,

2 “ຂໍຈົ່ງທູນຖາມພຣະຜູ້ເປັນເຈົ້າເພື່ອເຮົາ ເພາະເນບູກາດເນັດຊາກະສັດບາບີໂລນກຳລັງທຳສົງຄາມກັບເຮົາ ບາງເທື່ອພຣະຜູ້ເປັນເຈົ້າຈະຊົງກະທຳກັບເຮົາຕາມບັນດາພຣະຣາຊກິດອັນອັສຈັນຂອງພຣະອົງ ແລະຈະຊົງກະທຳໃຫ້ເນບູກາດເນັດຊາຖອຍທັບໄປຈາກເຮົາ”

3 ແລ້ວເຢເຣມີຢາບອກເຂົາທັງສອງວ່າ,

4 “ທ່ານຈົ່ງທູນແກ່ເຊເດກີຢາດັ່ງນີ້ວ່າ “ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະຫັນກັບຊຶ່ງຍຸດໂທປະກອນອັນຢູ່ໃນມືຂອງເຈົ້າແລະຊຶ່ງເຈົ້າໃຊ້ສູ້ຮົບກັບກະສັດບາບີໂລນແລະກັບຊົນຄັນເດອານຊຶ່ງກຳລັງລ້ອມເຈົ້າຢູ່ນອກກຳແພງ ແລະເຮົາຈະຮວບຮວມມັນມາໄວ້ໃນໃຈກາງເມືອງນີ້

5 ເຮົາເອງຈະຕໍ່ສູ້ກັບເຈົ້າດ້ວຍມືທີ່ຢຽດອອກແລະດ້ວຍແຂນທີ່ແຂງແຮງດ້ວຍຄວາມພິໂຣດ ດ້ວຍຄວາມຮ້າຍກາດແລະພິໂຣດຢ່າງຮ້າຍແຮງ

6 ແລະເຮົາຈະໂຈມຕີຊາວກຸງນີ້ ທັງຄົນແລະສັດ ແລ້ວກໍຈະຕາຍລົງດ້ວຍໂຣກລະບາດຂນາດຫນັກ

7 ພຣະຜູ້ເປັນເຈົ້າກ່າວວ່າ ພາຍຫລັງເຮົາຈະມອບເຊເດກີຢາກະສັດຂອງຢູດາ ແລະບັນດາຂ້າຣາຊການຂອງເຂົາ ແລະ
ປະຊາຊົນເມືອງນີ້ຊຶ່ງລອດຕາຍຈາກໂຣກລະບາດ ດາບແລະການອຶດຢາກໄວ້ໃນມືຂອງເນບູກາດເນັດຊາກະສັດແຫ່ງ
ບາບີໂລນ ແລະມອບໄວ້ໃນມືຂອງສັດຕຣູຂອງເຂົາທັງຫລາຍ ໃນມືຂອງຄົນເຫລົ່ານັ້ນທີ່ສແວງຫາຊີວິດຂອງເຂົາ
ທ່ານຈະຟັນເຂົາເສັຽດ້ວຍຄົມດາບ ທ່ານຈະບໍ່ສົງສານເຂົາທັງຫລາຍ ຫລືໄວ້ຊີວິດເຂົາ ຫລືມີຄວາມເມດຕາຕໍ່ເຂົາ”
8 “ແລະເຈົ້າຈົ່ງເວົ້າກັບຊົນຊາດນີ້ວ່າ “ພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາໄດ້ຕັ້ງວິຖີແຫ່ງຊີວິດແລະທາງແຫ່ງຄວາມ
ຕາຍໄວ້ຕໍ່ຫນ້າເຈົ້າ
9 ຄົນທີ່ຢູ່ໃນເມືອງນີ້ຈະຕາຍເສັຽດ້ວຍດາບ ດ້ວຍການອຶດຢາກແລະດ້ວຍໂຣກລະບາດ ແຕ່ຜູ້ທີ່ອອກໄປຍອມມອບຕົວ
ກັບຊົນຄັນດີອານຜູ້ຕັ້ງລ້ອມຢູ່ນັ້ນກໍຈະມີຊີວິດຢູ່ໄດ້ ແລະຈະມີຊີວິດຂອງຕົນເປັນຣາງວັນແຫ່ງການສົງຄາມ
10 ພຣະຜູ້ເປັນເຈົ້າກ່າວວ່າ ເພາະເຮົາໄດ້ມຸ່ງຫນ້າຕໍ່ສູ້ເມືອງນີ້ດ້ວຍຄວາມຮ້າຍບໍ່ແມ່ນດ້ວຍຄວາມດີ ຄືເມືອງນີ້ຈະຖືກ
ມອບໄວ້ໃນມືຂອງກະສັດແຫ່ງບາບີໂລນ ແລະທ່ານຈະເຜົາມັນເສັຽດ້ວຍໄຟ”

**ຄຳພະຍາກອນກ່ຽວກັບກະສັດຢູດາ**

Jeremiah Denounces His Persecutors

11 ຈົ່ງກ່າວຕໍ່ວົງວານຂອງກະສັດຢູດາວ່າ “ວົງວານດາວິດເອີຍ
12 ຈົ່ງຟັງພຣະຄຳຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ຈົ່ງໃຫ້ຄວາມຍຸດຕິທັມໃນເວລາເຊົ້າ ຈົ່ງຊ່ອຍຜູ້ທີ່
ຖືກປຸ້ນໃຫ້ພົ້ນຈາກມືຜູ້ທີ່ບີບບັງຄັບ ຢ້ານວ່າຄວາມພິໂຣດຂອງເຮົາຈະອອກໄປເຫມືອນໄຟ ແລະເຜົາໄຫມ້ຢ່າງທີ່ບໍ່ມີ
ໃຜມອດໄດ້ ເພາະການກະທຳອັນຊົ່ວຊ້າຂອງເຈົ້າທັງຫລາຍ”
13 ຊາວທີ່ລຸ່ມເອີຍ ເບິ່ງແມ, ເຮົາຕໍ່ສູ້ເຈົ້າ ສີລາແຫ່ງຖ້ານກາງທົ່ງພຽງເອີຍ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ, ພວກເຈົ້າຜູ້
ກ່າວວ່າ “ໃຜຈະລົງມາຕໍ່ສູ້ກັບເຮົາ ຫລືໃຜຈະເຂົ້າມາໃນທີ່ອາສັຍຂອງເຮົາ”
14 ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະລົງໂທດເຈົ້າທັງຫລາຍຕາມຜົນແຫ່ງການກະທຳຂອງເຈົ້າ ເຮົາຈະກໍ່ໄຟໄວ້ໃນປ່າຂອງ
ເມືອງນັ້ນ ແລະໄຟນັ້ນຈະເຜົາຜານສິ່ງຕ່າງໆທີ່ຢູ່ຮອບເມືອງນັ້ນຫມົດ”

## 22

Exhortation to Repent

1 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ຈົ່ງລົງໄປຍັງຣາຊສຳນັກຂອງກະສັດຢູດາ ແລະກ່າວຖ້ອຍຄຳເຫລົ່ານີ້ທີ່ນັ້ນ
2 ວ່າ, “ຂ້າແດ່ພຣະຣາຊາແຫ່ງຢູດາ ຜູ້ປະທັບເທິງພຣະທີ່ນັ່ງຂອງດາວິດ ຈົ່ງຟັງພຣະຄຳຂອງພຣະຜູ້ເປັນເຈົ້າ ທັງຕົວ
ທ່ານ ຂ້າຣາຊການຂອງທ່ານ ແລະປະຊາຊົນຂອງທ່ານຜູ້ເຂົ້າມາໃນປະຕູເມືອງນີ້
3 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງກະທຳຄວາມຍຸດຕິທັມແລະຄວາມຊອບທັມ ຈົ່ງຊ່ອຍຜູ້ທີ່ຖືກປຸ້ນໃຫ້ພົ້ນມືຂອງຜູ້ທີ່
ບີບບັງຄັບ ແລະຢ່າໄດ້ກະທຳຄວາມຜິດຫລືຄວາມທາຣຸນແກ່ຊົນຕ່າງດ້າວ ລູກກຳພ້າພໍ່ແລະຍິງຫມ້າຍ ຫລືຫລັ່ງ
ເລືອດທີ່ໄຮ້ຄວາມຜິດໃຫ້ເຖິງຕາຍໃນສະຖານທີ່ນີ້
4 ຖ້າທ່ານເຊື່ອຟັງຖ້ອຍຄຳຂໍ້ນີ້ຈິງ ແລ້ວຈະມີພຣະຣາຊາຜູ້ປະທັບເທິງພຣະທີ່ນັ່ງຂອງດາວິດເຂົ້າມາທາງປະຕູຂອງພຣະ
ຣາຊວັງນີ້ ສະເດັດມາໂດຍຣົດຮົບແລະມ້າທັງຕົວພຣະຣາຊາ ບັນດາຂ້າຣາຊການແລະປະຊາຊົນຂອງທ່ານນັ້ນ
5 ແຕ່ຖ້າທ່ານບໍ່ຟັງຖ້ອຍຄຳເຫລົ່ານີ້ ພຣະຜູ້ເປັນເຈົ້າກ່າວວ່າ ເຮົາສາບານໃນນາມຂອງເຮົາເອງວ່າຣາຊສຳນັກນີ້ຈະ
ເປັນທີ່ຮ້າງເປົ່າ
6 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ກ່ຽວກັບຣາຊສຳນັກແຫ່ງກະສັດຂອງຢູດາວ່າ, “ເຈົ້າເປັນເຫມືອນກີເລອາດແກ່ເຮົາ
ເປັນດັ່ງຍອດພູສູງເລບານອນ ເຖິງປານນັ້ນ ເຮົາຈະກະທຳເຈົ້າໃຫ້ເປັນຖິ່ນກັນດານ ເປັນເມືອງທີ່ບໍ່ມີຄົນອາສັຍ
7 ເຮົາຈະຕຽມຜູ້ທຳລາຍໄວ້ຕໍ່ສູ້ເຈົ້າຕ່າງກໍມີອາວຸດຂອງຕົນ ແລະເຂົາທັງຫລາຍຈະຕັດຕົ້ນສົນຢ່າງດີຂອງເຈົ້າລົງແລະ
ໂຍນເຂົ້າໃນໄຟ

8 “ແລະປະຊາຊົນຫລວງຫລາຍຈະຜ່ານເມືອງນີ້ໄປ ແລະທຸກຄົນຈະເວົ້າກັບເພື່ອນຂອງຕົນວ່າ “ເປັນຫຍັງພຣະຜູ້ເປັນ
ເຈົ້າຈຶ່ງຊົງກະທຳເຊັ່ນນີ້ແກ່ເມືອງໃຫຍ່ນີ້”
9 ແລະເຂົາທັງຫລາຍໄດ້ປະຖິ້ມຄຳໝັ້ນສັນຍາຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາ ແລະນະມັສການກັບບົວລະບັດ
ພຣະອື່ນ”
10 ຢ່າຮ້ອງໄຫ້ອາລັຍແກ່ຜູ້ທີ່ຕາຍໄປ ຢ່າເສັ່ງໃຈຍ້ອນເຂົາເລີຍ ແຕ່ຈົ່ງຮ້ອງໄຫ້ອາລັຍຜູ້ທີ່ໄປແລ້ວ ເພາະເຂົາຈະບໍ່ໄດ້ກັບ
ມາເຫັນບ້ານເກີດເມືອງນອນຂອງເຂົາອີກເລີຍ

Message to the Sons of Josiah

11 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະກ່ຽວກັບຊັນລູມບຸດໂຢຊີຢາ ກະສັດແຫ່ງຢູດາ ຜູ້ຊຶ່ງຄອງຣາດແທນໂຢຊີຢາ
ຣາຊບິດາ ແລະຜູ້ທີ່ໄປຈາກສະຖານທີ່ນີ້ “ທ່ານຈະບໍ່ໄດ້ກັບມາທີ່ນີ້ອີກ
12 ທ່ານຈະສິ້ນຊີວິດ ໃນທີ່ຊຶ່ງເຂົາຈັບທ່ານໄປເປັນຊະເລີຍ ແລະທ່ານຈະບໍ່ເຫັນແຜ່ນດິນນີ້ອີກເລີຍ”
13 “ວິບັດແກ່ເຂົາຜູ້ສ້າງວັງຂອງຕົນດ້ວຍຄວາມບໍ່ຊອບທັມ ແລະສ້າງຫ້ອງຊັ້ນເທິງໄວ້ດ້ວຍຄວາມບໍ່ຍຸດຕິທັມ ຜູ້ທີ່ທຳໃຫ້
ເພື່ອນບ້ານຂອງເຂົາບົວລະບັດເຂົາໂດຍບໍ່ໄດ້ສິ່ງໃດເລີຍ ແລະບໍ່ໄດ້ຈ່າຍຄ່າຈ້າງໃຫ້ແກ່ເຂົາ
14 ຜູ້ກ່າວວ່າ, “ເຮົາຈະສ້າງວັງໃຫຍ່ຢູ່ເອງ ກັບມີຫ້ອງຊັ້ນເທິງກວ້າງຂວາງ ແລະເຈາະປ່ອງຢ້ຽມໃສ່ຫ້ອງນັ້ນ ແລະແອ້ມ
ຝາດ້ວຍໄມ້ສົນແລະທາດ້ວຍສີແດງ
15 ເຈົ້າຄິດວ່າເຈົ້າເປັນກະສັດ ເພາະເຈົ້າແຂ່ງໄມ້ສົນກັນຫລື ຣາຊບິດາຂອງເຈົ້າບໍ່ໄດ້ກິນແລະດື່ມ ແລະກະທຳຄວາມຍຸດ
ຕິທັມແລະຄວາມຊອບທັມດອກຫລື ຝ່າຍຣາຊບິດາກໍຢູ່ເຢັນເປັນສຸກ
16 ເຂົາພິພາກສາຄະດີຂອງຄົນຈົນແລະຄົນຂັດສົນ ເຂົາກໍຢູ່ເຢັນເປັນສຸກ ເຮັດຢ່າງນີ້ເປັນການຮູ້ຈັກເຮົາຫລື ພຣະຜູ້ເປັນ
ເຈົ້າກ່າວດັ່ງນີ້ແຫລະ
17 ແຕ່ເຈົ້າມີຕາແລະໃຈ ໄວ້ພຽງຫວັງເອົາກຳໄລສ່ວນຕົວເພື່ອຫລັ່ງເລືອດທີ່ໄຮ້ຄວາມຜິດໃຫ້ເຖິງຕາຍ ແລະເພື່ອປະຕິ
ບັດການບີບບັງຄັບແລະຄວາມທາຣຸນ”
18 ດັ່ງນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ກ່ຽວກັບເຢຮີໂອອາກິມບຸດຂອງໂຢຊີຢາວ່າກະສັດແຫ່ງຢູດາວ່າ, “ເຂົາທັງຫລາຍຈະບໍ່
ໂອ່ຍຄວນອາລັຍວ່າ “ອະນິຈາ ອ້າຍເອີຍ” ຫລື “ອະນິຈາ ເອື້ອຍເອີຍ” ເຂົາທັງຫລາຍຈະບໍ່ໂອ່ຍຄວນອາລັຍວ່າ “ອະນິ
ຈາ ພຣະອົງທ່ານ” ຫລື “ອະນິຈາ ພຣະບາດສົມເດັດພຣະເຈົ້າມະຫາຊີວິດ”
19 ທ່ານຈະຖືກຝັງໄວ້ເໝືອນກັບຝັງມ້າລໍ ຄືຖືກລາກໄປໂຍນຖິ້ມໄວ້ຂ້າງນອກປະຕູເມືອງເຢຣູຊາເລັມ”
20 “ຈົ່ງຂຶ້ນໄປທີ່ເລບານອນ ແລະຮ້ອງວ່າ ແລະຈົ່ງເປັ່ງສຽງຂອງເຈົ້າໃນເມືອງບາຊານ ຈົ່ງຮ້ອງຈາກອາບາຣີມ ເພາະວ່າ
ຄົນຮັກທັງໝົດຂອງເຈົ້າຖືກທຳລາຍ
21 ເຮົາໄດ້ເວົ້າກັບເຈົ້າເມື່ອເຈົ້າຢູ່ສຸກສະບາຍ ແຕ່ເຈົ້າກ່າວວ່າ “ເຮົາຈະບໍ່ຟັງ” ນີ້ເປັນວິທີການຂອງເຈົ້າຕັ້ງແຕ່ຍັງໜຸ່ມໆ
ຄືເຈົ້າບໍ່ເຊື່ອຟັງສຽງຂອງເຮົາ
22 ລົມຈະຄວບຄຸມດູແລຜູ້ລ້ຽງແກະທັງຫລາຍຂອງເຈົ້າ ແລະບັນດາຄົນຮັກຂອງເຈົ້າຈະໄປເປັນຊະເລີຍ ແລ້ວເຈົ້າຈະອັບ
ອາຍຂາຍໜ້າ ເນື່ອງດ້ວຍຄວາມອະທັມທັງຫລາຍຂອງເຈົ້າ
23 ຊາວເມືອງເລບານອນເອີຍ ທີ່ສ້າງຮັງຢູ່ຖ້າມກາງໄມ້ສົນ ເຈົ້າຈະຄ່ຳຄວນຈັກເທົ່າໃດເມື່ອຄວາມເຈັບປວດມາເໜືອ
ເຈົ້າ ເໝືອນຢ່າງຄວາມເຈັບປວດຂອງຍິງທີ່ເກີດລູກ”

Judgment on Coniah (Jehoiachin)

24 “ພຣະຜູ້ເປັນເຈົ້າກ່າວວ່າ ຕາບໃດເຮົາມີຊີວິດຢູ່ ແມ້ວ່າໂກນີຢາ ຣາຊບຸດຂອງເຢຮີໂອອາຄິມ ກະສັດແຫ່ງຢູດາເປັນ
ແຫວນຢູ່ທີ່ມືຂວາຂອງເຮົາ ເຖິງປານນັ້ນເຮົາຈະຖອດອອກເສັຽ
25 ແລະມອບເຈົ້າໄວ້ໃນມືຂອງຄົນເຫລົ່ານັ້ນທີ່ສແວງຫາຊີວິດຂອງເຈົ້າ ໃນມືຂອງຄົນເຫລົ່ານັ້ນຊຶ່ງພວກເຈົ້າຢ້ານ ຄືວ່າ
ໃນມືຂອງເນບູກາເນັດຊາພຣະຣາຊາແຫ່ງບາບີໂລນ ແລະໃນມືຂອງຄົນຄັນເດອານ

26 ເຮົາຈະແກ່ວງເຈົ້າແລະແມ່ຜູ້ທີ່ອອກເຈົ້າໄປຍັງອີກປະເທດນຶ່ງ ທີ່ຊຶ່ງເຈົ້າບໍ່ໄດ້ເກີດທີ່ນັ້ນ ແລະເຈົ້າຈະຕາຍທີ່ນັ້ນ
27 ແຕ່ແຜ່ນດິນຊຶ່ງເຂົາອາລັຍຢາກຈະກັບໄປນັ້ນ ເຂົາຈະບໍ່ໄດ້ກັບໄປອີກ"
28 ໂກນີຢາ ຊາຍຜູ້ນີ້ເປັນຫມໍ້ທີ່ຖືກດູຫມິ່ນແລະແຕກຫລື ເປັນພາຊະນະທີ່ບໍ່ມີຜູ້ໃດມັກຫລື ເປັນຫຍັງຕົວເຂົາແລະລູກຂອງ
ເຂົາຈຶ່ງຖືກແກວ່ງແລະຖືກໂຍນເຂົ້າໄປໃນແຜ່ນດິນຊຶ່ງເຂົາທັງຫລາຍບໍ່ຮູ້ຈັກ
29 ໂອ ແຜ່ນດິນ ແຜ່ນດິນ ແຜ່ນດິນເອີຍ ຈົ່ງຟັງພຣະຄຳຂອງພຣະຜູ້ເປັນເຈົ້າ
30 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ຈົ່ງຂຽນລົງວ່າຊາຍຄົນນີ້ບໍ່ມີລູກ ເປັນຊາຍຊຶ່ງບໍ່ມີຄວາມສຳເຣັດໃນຊົ່ວຊີວິດຂອງເຂົາ
ເພາະບໍ່ມີລູກຂອງເຂົາຈັກຄົນນຶ່ງທີ່ຈະສຳເຣັດໃນການປະທັບເທິງພຣະທີ່ນັ່ງຂອງດາວິດ ແລະປົກຄອງໃນຢູດາອີກ

## 23 ຄວາມຫວັງໃນອະນາຄົດ

Restoration after Exile

1 ພຣະຜູ້ເປັນເຈົ້າຈະຊົງພິພາກສາໂທດພວກປົກຄອງທັງຫລາຍຢ່າງຮ້າຍແຮງ ຍ້ອນວ່າເຂົາໄດ້ເຮັດໃຫ້ໄພ່ພົນຂອງພ
ຣະອົງຖືກຂ້າ ແລະແຕກກະຈັດກະຈາຍໄປ
2 ຕໍ່ໄປນີ້ແມ່ນຖ້ອຍຄຳທີ່ພຣະຜູ້ເປັນເຈົ້າຂອງອິສຣາເອນຊົງກ່າວເຖິງພວກປົກຄອງ ຄືຜູ້ລ້ຽງດູໄພ່ພົນຂອງພຣະອົງວ່າ,
"ພວກເຈົ້າໄດ້ເຮັດໃຫ້ໄພ່ພົນຂອງເຮົາແຕກກະຈັດກະຈາຍໄປ ໄດ້ຂັບໄລ່ໃຫ້ເຂົາຫນີໄປ ບໍ່ໄດ້ລ້ຽງດູເຂົາ ບັດນີ້ເຮົາຈະ
ລົງໂທດເຈົ້າ ຍ້ອນວ່າເຈົ້າໄດ້ກະທຳການຊົ່ວ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ
3 ເຮົາຈະເຕົ້າໂຮມເອົາໄພ່ພົນຂອງເຮົາທີ່ຍັງເຫລືອຢູ່ອອກມາຈາກປະເທດຕ່າງໆທີ່ເຮົາໄດ້ເຮັດໃຫ້ເຂົາແຕກກະຈັດກະ
ຈາຍໄປ ແລ້ວນຳກັບຄືນມາບ້ານເມືອງຂອງເຂົາ ເຂົາຈະມີລູກຫລານເພີ້ມທະວີຂຶ້ນຢ່າງຫລວງຫລາຍ
4 ເຮົາຈະໃຫ້ມີຜູ້ປົກຄອງຊຶ່ງຈະເບິ່ງແຍງເຂົາ ເຂົາຈະບໍ່ຢ້ານຫລືຕື່ນເຕັ້ນວຸ້ນວາຍອີກຕໍ່ໄປ ຈະບໍ່ມີໃຜຈັກຄົນສູນເສັຽໄປ
ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ"

The Righteous Branch of David

(ຢຣມ 16:14-15)

5 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ວັນເວລານັ້ນຈະມາເຖິງແນ່ນອນ ໃນເວລານັ້ນເຮົາຈະເລືອກເອົາຄົນນຶ່ງຈາກເຊື້ອສາຍ
ຂອງດາວິດມາເປັນກະສັດຜູ້ຊອບທັມ ກະສັດອົງນີ້ຈະປົກຄອງຢ່າງສລາດຫລັກແຫລມ ຈະເຮັດແຕ່ສິ່ງທີ່ຊອບທັ
ມແລະຍຸດຕິທັມຕໍ່ໄພ່ຟ້າປະຊາຊົນທົ່ວປະເທດ
6 ໃນລະຫວ່າງກະສັດອົງນີ້ສເວີຍຣາຊຢູ່ນັ້ນ ປະຊາຊົນຢູດາແລະອິສຣາເອນຈະມີຄວາມສງົບສຸກ ພວກເຂົາຈະເອີ້ນຊື່
ກະສັດອົງນີ້ວ່າ ພຣະຜູ້ເປັນເຈົ້າຜູ້ຊ່ອຍເຮົາໃຫ້ລອດພົ້ນ"
7 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເວລານັ້ນມາເຖິງ ເມື່ອນັ້ນຄົນທັງຫລາຍຈະບໍ່ກ່າວສາບານອີກຕໍ່ໄປວ່າ
ແມ່ນພຣະເຈົ້າຜູ້ຊົງມີຊີວິດນຳພາປະຊາຊົນອິສຣາເອນອອກຈາກປະເທດເອຢິບ
8 ແຕ່ຈະກ່າວສາບານວ່າ ແມ່ນພຣະເຈົ້າຜູ້ຊົງມີຊີວິດນຳພາປະຊາຊົນອິສຣາເອນອອກຈາກປະເທດຝ່າຍເຫນືອ ແລະ
ອອກມາຈາກປະເທດທັງປວງທີ່ເຮົາໄດ້ໃຫ້ເຂົາກະຈັດກະຈາຍໄປນັ້ນ ແລ້ວພວກເຂົາຈະຢູ່ໃນປະເທດຂອງເຂົາເອງ"

False Prophets of Hope Denounced

9 ກ່ຽວກັບເຣື່ອງບັນດາຜູ້ປະກາດພຣະທັມມີວ່າ ໃຈຂອງຂ້າເປັນທຸກຢູ່ພາຍໃນຂ້າ ແລະດູກທັງສິ້ນຂອງຂ້າກໍສັ່ນ ຂ້າເປ
ັນເຫມືອນຄົນເມົາເຫລົ້າອະງຸ່ນ ເນື່ອງດ້ວຍພຣະຜູ້ເປັນເຈົ້າ ແລະເນື່ອງດ້ວຍພຣະວັຈນະບໍຣິສຸດຂອງພຣະອົງ
10 ເພາະວ່າ ແຜ່ນດິນນັ້ນເຕັມໄປດ້ວຍການລ່ວງປະເວນີ ດ້ວຍເຫດຄຳສາບແຊ່ງແຜ່ນດິນນັ້ນກໍໄອ້ທຸກ ແລະເດີ່ນຫຍ້າ
ໃນຖິ່ນກັນດານກໍແຫ້ງໄປ ວິຖີຂອງເຂົາທັງຫລາຍກໍຊົ່ວຊ້າ ແລະອຳນາດຂອງເຂົາທັງຫລາຍກໍບໍ່ເປັນທັມ
11 ພຣະຜູ້ເປັນເຈົ້າກ່າວວ່າ, "ທັງຜູ້ປະກາດພຣະທັມແລະປຸໂຣຫິດກໍອະທັມ ເຖິງແມ່ນວ່າໃນວິຫານຂອງເຮົາ ເຮົາກໍໄດ້
ເຫັນຄວາມຊົ່ວຂອງເຂົາ

12 ເຫດສັນນັ້ນ ຫົນທາງຂອງເຂົາທັງຫລາຍຈະຫມື່ນໃນຄວາມມືດແກ່ເຂົາ ເຂົາຈະຖືກຂັບໄລ່ເຂົ້າໄປແລະລົ້ມລົງໃນນັ້ນ
ເພາະເຮົາຈະນຳເຫດຮ້າຍມາເຫນືອເຂົາໃນປີແຫ່ງການລົງໂທດເຂົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
13 ໃນບັນດາຜູ້ປະກາດພຣະທັມແຫ່ງຊາມາເຣັຽ ເຮົາໄດ້ເຫັນສິ່ງທີ່ບໍ່ເຫມາະຢ່າງຍິ່ງ ເຂົາໄດ້ປະກາດພຣະທັມໃນນາມ
ຂອງພຣະບາອານ ແລະໄດ້ໃຫ້ອິສຣາເອນໄພ່ພົນຂອງເຮົາຫລົງໄປ
14 ແຕ່ໃນຜູ້ປະກາດພຣະທັມແຫ່ງເຢຣູຊາເລັມ ເຮົາໄດ້ເຫັນສິ່ງອັນຫນ້າຫວາດສຽວ ເຂົາລ່ວງປະເວນີແລະດຳເນີນຢູ່ໃນ
ຄວາມມຸສາ ເຂົາທັງຫລາຍຫນຸນກຳລັງມືຂອງຜູ້ກະທຳຄວາມຊົ່ວ ຈຶ່ງບໍ່ມີຜູ້ນຶ່ງຜູ້ໃດຫັນຈາກຄວາມອະທັມຂອງເຂົາ
ເຂົາທຸກຄົນກາຍເປັນເຫມືອນໂຊໂດມແກ່ເຮົາ ແລະຊາວເມືອງນັ້ນກໍເຫມືອນໂກໂມຣາ
15 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາ ຈຶ່ງຕຣັດກ່ຽວກັບເຣື່ອງຜູ້ປະກາດພຣະທັມເຫລົ່ານັ້ນວ່າ, "ເບິ່ງແມ, ເຮົາຈະ
ລ້ຽງເຂົາດ້ວຍພືດຂົມ ແລະໃຫ້ນ້ຳບີຫມີເຂົາດື່ມ ເພາະວ່າຄວາມອະທັມໄດ້ອອກໄປທົ່ວແຜ່ນດິນນີ້ ຈາກຜູ້ປະກາດພ
ຣະທັມແຫ່ງເຢຣູຊາເລັມ"
16 ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ, "ຢ່າຟັງຖ້ອຍຄຳຂອງຜູ້ປະກາດພຣະທັມ ຜູ້ປະກາດໃຫ້ທ່ານຟັງກະທຳໃຫ້
ທ່ານເຕັມດ້ວຍຄວາມຫວັງລົມໆແລ້ງໆ ເຂົາກ່າວເຖິງນິມິດແຫ່ງໃຈຂອງເຂົາເອງ ບໍ່ແມ່ນຈາກພຣະໂອດຂອງພຣະຜູ້
ເປັນເຈົ້າ
17 ເຂົາເວົ້າກັບຄົນທີ່ດູຫມິ່ນພຣະວັຈນະຂອງພຣະຜູ້ເປັນເຈົ້າສເມີວ່າ "ທ່ານຈະສຸກສະບາຍ" ແລະແກ່ທຸກຄົນທີ່ດື້ຕາມ
ໃຈຂອງຕົນເອງ ເຂົາທັງຫລາຍກ່າວວ່າ "ຈະບໍ່ມີເຫດຮ້າຍມາເຫນືອເຈົ້າ"
18 ເພາະວ່າຜູ້ໃດແດ່ທີ່ໄດ້ຢືນຢູ່ໃນພົນພັກຂອງພຣະຜູ້ເປັນເຈົ້າ ທີ່ຈະໄຕ່ຕອງເຫັນແລະຟັງພຣະວັຈນະຂອງພຣະອົງ ຫລື
ຜູ້ໃດທີ່ເຊື່ອຟັງພຣະວັຈນະຂອງພຣະອົງແລະຄອຍຟັງ
19 ເບິ່ງແມ, ນັ້ນພະຍຸຂອງພຣະຜູ້ເປັນເຈົ້າ ຄືພຣະພິໂຣດໄດ້ອອກໄປແລ້ວເປັນພະຍຸຫມຸນວຽນ ມັນຈະລະເບີດຂຶ້ນເຫນືອ
ຫົວຂອງຄົນອະທັມ
20 ຄວາມກິ້ວຂອງພຣະຜູ້ເປັນເຈົ້າຈະບໍ່ຫັນກັບຈົນກວ່າພຣະອົງຈະຊົງກະທຳໃຫ້ສຳເຣັດ ຕາມພຣະເຈຕນາແຫ່ງພຣະທັຍ
ຂອງພຣະອົງ ໃນວັນຫລັງ ຫລັງຈາກທີ່ເຈົ້າທັງຫລາຍຈະເຂົ້າໃຈເຣື່ອງນີ້ແຈ່ມແຈ້ງ
21 "ເຮົາບໍ່ໄດ້ໃຊ້ຜູ້ປະກາດພຣະທັມເຫລົ່ານັ້ນ ແຕ່ເຂົາທັງຫລາຍຍັງແລ່ນໄປ ເຮົາບໍ່ໄດ້ເວົ້າກັບເຂົາທັງຫລາຍ ແຕ່ເຂົາທັງ
ຫລາຍຍັງປະກາດພຣະທັມ
22 ແຕ່ຖ້າເຂົາທັງຫລາຍໄດ້ຢືນຢູ່ໃນການປະຊຸມຂອງເຮົາ ແລ້ວເຂົາຄົງຈະໄດ້ປ່າວຮ້ອງຖ້ອຍຄຳຂອງເຮົາຕໍ່ໄພ່ພົນຂອງ
ເຮົາ ແລະເຂົາທັງຫລາຍຄົງຈະໄດ້ໃຫ້ປະຊາຊົນຫັນກັບຈາກທາງຊົ່ວຂອງເຂົາແລ້ວ ແລະຫັນກັບຈາກຄວາມຊົ່ວຊ້າໃນ
ການກະທຳຂອງເຂົາ
23 "ພຣະຜູ້ເປັນເຈົ້າກ່າວວ່າ ເຮົາເປັນພຣະຜູ້ເປັນເຈົ້າທີ່ຢູ່ໃກ້ພຽງເອື້ອມມື ບໍ່ແມ່ນພຣະເຈົ້າທີ່ຢູ່ຫ່າງໄກດ້ວຍດອກຫລື
24 ພຣະຜູ້ເປັນເຈົ້າກ່າວວ່າ ຄົນໃດຈະຫລົບລີ້ຈາກເຮົາໄປຢູ່ໃນທີ່ລັບເພື່ອເຮົາຈະບໍ່ໄດ້ເຫັນເຂົາໄດ້ຫລື ພຣະຜູ້ເປັນເຈົ້າ
ກ່າວວ່າ ເຮົາບໍ່ໄດ້ຢູ່ເຕັມຟ້າສວັນແລະໂລກດອກຫລື
25 ເຮົາໄດ້ຍິນຜູ້ປະກາດພຣະທັມຜູ້ຊຶ່ງປະກາດພຣະທັມໃນນາມຂອງເຮົາໄດ້ກ່າວແລ້ວວ່າ "ຂ້າພະເຈົ້າຝັນໄປ ຂ້າພະ
ເຈົ້າຝັນໄປ"
26 ອີກດົນປານໃດທີ່ຄຳມຸສາຈະຢູ່ໃນໃຈຂອງຜູ້ປະກາດພຣະທັມ ຊຶ່ງປະກາດເຣື່ອງເທັດ ແລະຜູ້ປະກາດພຣະທັມຕາມ
ການຫລອກລວງແຫ່ງຈິດໃຈຂອງເຂົາເອງ
27 ຜູ້ຊຶ່ງຄິດວ່າຈະກະທຳໃຫ້ໄພ່ພົນຂອງເຮົາລືມຊື່ຂອງເຮົາ ໂດຍຄວາມຝັນຂອງເຂົາທັງຫລາຍຊຶ່ງເຂົາເລົ່າສູ່ກັນແລະກັນ
ຟັງ ເຫມືອນຢ່າງກັບບັນພະບຸຣຸດຂອງເຂົາລືມນາມຊື່ຂອງເຮົາ ໄປຕິດຕາມພຣະບາອານ
28 ຈົ່ງໃຫ້ຜູ້ປະກາດພຣະທັມທີ່ຝັນເລົ່າຄວາມຝັນ ແຕ່ໃຫ້ຄົນທີ່ມີຖ້ອຍຄຳຂອງເຮົາກ່າວຖ້ອຍຄຳຂອງເຮົາຢ່າງສຸຈຣິດ
ພຣະຜູ້ເປັນເຈົ້າກ່າວວ່າ ເຟືອງເຂົ້າມີຫຍັງແກ່ທີ່ເຫມືອນເຂົ້າສາລີ

29 ພຣະຜູ້ເປັນເຈົ້າກ່າວວ່າ ຖ້ອຍຄຳຂອງເຮົາບໍ່ເຫມືອນໄຟຫລື ຫລືເຫມືອນຄ້ອນທີ່ທຸບຫີນໃຫ້ແຕກເປັນປ່ຽງໆ
30 ພຣະຜູ້ເປັນເຈົ້າກ່າວວ່າ, "ເຫດສັນນັ້ນ ເບິ່ງແມ, ເຮົາຕໍ່ສູ້ກັບບັນດາຜູ້ປະກາດພຣະທັມ ຜູ້ຂະໂມຍຖ້ອຍຄຳຂອງເຮົາ
ຈາກກັນແລະກັນ
31 ພຣະຜູ້ເປັນເຈົ້າກ່າວວ່າ, "ເຮົາຕໍ່ສູ້ກັບຜູ້ປະກາດພຣະທັມ ຜູ້ໃຊ້ລີ້ນຂອງເຂົາກ່າວວ່າ "ພຣະຜູ້ເປັນເຈົ້າຊົງກ່າວວ່າ"
32 ພຣະຜູ້ເປັນເຈົ້າກ່າວວ່າ, "ເບິ່ງແມ, ເຮົາຕໍ່ສູ້ກັບຄົນເຫລົ່ານັ້ນທີ່ປະກາດຄວາມຝັນເທັດ ແລະຜູ້ຊຶ່ງບອກແລະນຳໄພ່
ພົນຂອງເຮົາໃຫ້ຫລົງໄປ ໂດຍຄຳຕົວະແລະຄຳໂອ້ອວດຂອງເຂົາ ເມື່ອເຮົາບໍ່ໄດ້ໃຊ້ເຂົາຫລືສັ່ງເຂົາ ເຫດສັນນັ້ນເຂົາ
ຈຶ່ງບໍ່ເປັນປໂຍດແກ່ຊົນຊາດນີ້ຢ່າງໃດເລີຍ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
33 "ເມື່ອມີໄພ່ພົນຄົນນຶ່ງຄົນໃດ ຫລືຜູ້ປະກາດພຣະທັມຄົນໃດ ຫລືປະໂຣຫິດຄົນໃດຖາມເຈົ້າວ່າ, "ພຣະຜູ້ເປັນເຈົ້າໄດ້
ກ່າວຢ່າງໃດ" ເຈົ້າຈຶ່ງຕອບເຂົາວ່າ, "ພຣະຜູ້ເປັນເຈົ້າກ່າວວ່າ ເຈົ້າທັງຫລາຍນັ້ນແຫລະເປັນພາຣະຫນັກ ແລະເຮົາຈະ
ປະຖິ້ມເຈົ້າເສັຽ
34 ແລະສ່ວນຜູ້ປະກາດພຣະທັມ ປະໂຣຫິດຫລືປະຊາຊົນຜູ້ນຶ່ງຜູ້ໃດຊຶ່ງເວົ້າວ່າ "ພາຣະຫນັກຂອງພຣະຜູ້ເປັນເຈົ້າ" ເຮົາຈະ
ລົງໂທດຜູ້ນັ້ນແລະທັງຄົວເຮືອນຂອງເຂົາ
35 ເຈົ້າທັງຫລາຍຈຶ່ງເວົ້າດັ່ງນີ້ ຄືທຸກຄົນເວົ້າກັບເພື່ອນບ້ານຂອງຕົນຫລືທຸກຄົນເວົ້າກັບພີ່ນ້ອງຂອງຕົນວ່າ, "ພຣະຜູ້ເປັນ
ເຈົ້າຕອບວ່າຢ່າງໃດ" ຫລື "ພຣະຜູ້ເປັນເຈົ້າຊົງລັ່ນວາຈາວ່າຢ່າງໃດ"
36 ແຕ່ເຈົ້າທັງຫລາຍຢ່າເອີຍວ່າ "ພາຣະຫນັກຂອງພຣະຜູ້ເປັນເຈົ້າອີກເລີຍ ເພາະວ່າພາຣະຫນັກນັ້ນເປັນຄຳຂອງແຕ່ລະ
ຄົນ ແລະເຈົ້າໄດ້ປ່ຽນແປງພຣະວັຈນະຂອງພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ພຣະຜູ້ເປັນເຈົ້າຈອມໂຍທາພຣະເຈົ້າ
ຂອງເຮົ
37 ເຈົ້າຈຶ່ງກ່າວກັບຜູ້ປະກາດພຣະທັມດັ່ງນີ້ວ່າ "ພຣະຜູ້ເປັນເຈົ້າຊົງຕອບທ່ານວ່າຢ່າງໃດ" ຫລື ພຣະຜູ້ເປັນເຈົ້າຊົງລັ່ນວາ
ຈາຢ່າງໃດ"
38 ແຕ່ຖ້າເຈົ້າທັງຫລາຍເວົ້າວ່າ "ພາຣະຫນັກຂອງພຣະຜູ້ເປັນເຈົ້າ" ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ "ເພາະເຈົ້າທັງ
ຫລາຍໄດ້ກ່າວຄຳເຫລົ່ານີ້ວ່າ "ພາຣະຫນັກຂອງພຣະຜູ້ເປັນເຈົ້າ" ເມື່ອເຮົາໃຊ້ໄປຫາເຈົ້າທັງຫລາຍເຮົາວ່າ ເຈົ້າ
ຢ່າເວົ້າວ່າ "ພາຣະຫນັກຂອງ ພຣະຜູ້ເປັນເຈົ້າ
39 ເຫດສັນນັ້ນ ເຮົາຈະຍົກເຈົ້າທັງຫລາຍຂຶ້ນເປັນແນ່ ແລະໂຍນເຈົ້າທັງຫລາຍຂຶ້ນເປັນແນ່ ທັງເຈົ້າແລະເມືອງຊຶ່ງເຮົາໄດ້
ໃຫ້ແກ່ເຈົ້າແລະແກ່ບັນພະບຸຣຸດຂອງເຈົ້າ
40 ແລະເຮົາຈະນຳຄວາມຖືກຕຳຫນິເປັນນິດ ແລະຄວາມອາຍເນື່ອງນິດມາເຫນືອເຈົ້າທັງຫລາຍ ຊຶ່ງລືມເສັຽບໍ່ໄດ້ເລີຍ"

## 24 ບົດຮຽນຈາກຫມາກເດື່ອດີແລະບໍ່ດີ

The Good and the Bad Figs

1 ຫລັງຈາກເນບູກາດເນັດຊາກະສັດແຫ່ງບາບີໂລນໄດ້ຈັບເຢໂກນີຢາ ຣາຊບຸດຂອງເຢຮີວອາກິມກະສັດແຫ່ງຢູດາໄປ
ເປັນຊະເລີຍເສັຽຈາກເຢຣູຊາເລັມພ້ອມກັບເຈົ້ານາຍແຫ່ງຢູດາ ທັງພວກຊ່າງແລະຊ່າງເຫລັກແລະນຳເຂົາມາຍັງ
ກຸງບາບີໂລນແລ້ວ ພຣະຜູ້ເປັນເຈົ້າກໍຊົງສຳແດງນິມິດແກ່ຂ້າພະເຈົ້າດັ່ງນີ້ ເບິ່ງແມ, ມີກະຕ່າສອງຫນ່ວຍໃສ່ຫມາກ
ເດື່ອ ວາງໄວ້ຫນ້າພຣະວິຫານຂອງພຣະຜູ້ເປັນເຈົ້າ
2 ກະຕ່າຫນ່ວຍນຶ່ງມີຫມາກເດື່ອຢ່າງດີ ເຫມືອນຫມາກເດື່ອທີ່ສຸກຕົ້ນຣະດູ ແຕ່ກະຕ່າອີກຫນ່ວຍນຶ່ງນັ້ນມີຫມາກເດື່ອທີ່
ບໍ່ດີຈົນກິນບໍ່ໄດ້
3 ແລະພຣະຜູ້ເປັນເຈົ້າກ່າວແກ່ຂ້າພະເຈົ້າວ່າ, "ເຢເຣມີຢາເອີຍ ເຈົ້າເຫັນຫຍັງ" ຂ້າພະເຈົ້າທູນຕອບວ່າ, "ເຫັນຫມາກ
ເດື່ອທີ່ດີກໍດີຫລາຍ ແລະທີ່ບໍ່ດີກໍຫລາຍ ບໍ່ດີຈົນກິນບໍ່ໄດ້ ພຣະເຈົ້າຂ້າ"
4 ແລ້ວພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

5 "ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ກໍເຫມືອນຢ່າງຫມາກເດື່ອທີ່ດີເຫລົ່ານີ້ແຫລະ, ເຮົາຈະຖືວ່າ
ພວກເຫລົ່ານັ້ນທີ່ຖືກກວາດໄປຈາກຢູດາຢັງດີຢູ່ ຄືຜູ້ທີ່ເຮົາໄດ້ສົ່ງໄປຈາກສະຖານທີ່ນີ້ໄປສູ່ແຜ່ນດິນຂອງຊາວຄັນເດ
ອານ
6 ເຮົາຈະຕັ້ງຕາຂອງເຮົາເພັ່ງເບິ່ງເຂົາເພື່ອຈະກະທຳຄວາມດີແລະເຮົາຈະພາເຂົາທັງຫລາຍກັບມາຍັງແຜ່ນດິນນີ້ອີກ
ເຮົາຈະສ້າງເຂົາທັງຫລາຍຂຶ້ນ ແລະຈະບໍ່ຮື້ລົງ ເຮົາຈະປູກຝັງເຂົາແລະບໍ່ຖອນເຂົາ
7 ເຮົາຈະໃຫ້ຈິດໃຈແກ່ເຂົາເພື່ອຈະຮູ້ຈັກວ່າເຮົາຄືພຣະຜູ້ເປັນເຈົ້າແລະເຂົາທັງຫລາຍຈະເປັນໄພ່ພົນຂອງເຮົາ ແລະເຮົາ
ຈະເປັນພຣະຜູ້ເປັນເຈົ້າຂອງເຂົາເພາະເຂົາທັງຫລາຍຈະກັບມາຫາເຮົາດ້ວຍຄວາມເຕັມໃຈ
8 "ແຕ່ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຫມືອນຢ່າງຫມາກເດື່ອທີ່ບໍ່ດີຊຶ່ງບໍ່ດີຫລາຍຈົນກິນບໍ່ໄດ້ນັ້ນ ເຮົາຈະກະທຳຕໍ່ເຊເດ
ກີຢາກະສັດແຫ່ງຢູດາ ທັງເຈົ້ານາຍຂອງເຂົາ ແລະຊາວເຢຣູຊາເລັມທີ່ເຫລືອຢູ່ ຜູ້ຊຶ່ງຍັງຄ້າງຢູ່ໃນແຜ່ນດິນນີ້ ແລະຜູ້ທີ່
ຍັງອາສັຍຢູ່ໃນເອຢິບ
9 ເຮົາຈະກະທຳໃຫ້ເຂົາເປັນທີ່ຫນ້າຢ້ານກົວແກ່ຣາຊອານາຈັກທັງຫລາຍໃນໂລກ ໃຫ້ເປັນທີ່ຖືກຕຳຫນິ ເປັນຂີ້ປາກ
ເປັນຄຳເຍາະເຍີ້ຍ ແລະເປັນຄຳປ້ອຍດ່າທົ່ວໄປທຸກແຫ່ງ ຊຶ່ງເຮົາຂັບໄລ່ເຂົາໃຫ້ໄປຢູ່
10 ແລະເຮົາຈະສົ່ງດາບແລະການອຶດຢາກ ແລະໂຣກລະບາດມາເຫນືອເຂົາ ຈົນເຂົາຈະຖືກທຳລາຍຢ່າງສິ້ນເຊີງຈາກ
ແຜ່ນດິນຊຶ່ງເຮົາໄດ້ໃຫ້ແກ່ເຂົາແລະແກ່ບັນພະບຸຣຸດຂອງເຂົາ"

## 25 ແຜ່ນດິນອິສຣາເອນຖືກປະຖິ້ມໃຫ້ຮ້າງເປັນເວລາເຈັດສິບປີ

The Babylonian Captivity Foretold

1 ຖ້ອຍຄຳຊຶ່ງມາເຖິງເຢເຣມີຢາກ່ຽວກັບເຣື່ອງຊົນຊາດຢູດາທັງໝົດ ໃນປີທີສີ່ແຫ່ງຣັຊການເຢຮົວອາກິມ ຣາຊບຸດຂອງ
ໂຢຊີຢາກະສັດແຫ່ງຢູດາ (ປີນັ້ນເປັນປີຕົ້ນຣັຊການຂອງເນບຸກາດເນັດຊາກະສັດຂອງກຸງບາບີໂລນ)
2 ຊຶ່ງເຢເຣມີຢາຜູ້ປະກາດພຣະທັມໄດ້ກ່າວແກ່ປະຊາຊົນຢູດາແລະແກ່ຊາວເຢຣູຊາເລັມທັງຫມົດວ່າ,
3 "ຕັ້ງແຕ່ປີທີສິບສາມຂອງໂຢຊີຢາ ຣາຊບຸດຂອງອາໂມນແຫ່ງຢູດາ ຈົນເຖິງວັນນີ້ເປັນເວລາຊາວສາມປີ ພຣະຄຳຂອງ
ພຣະເຈົ້າມາຍັງຂ້າພະເຈົ້າ ແລະຂ້າພະເຈົ້າກໍໄດ້ບອກແກ່ທ່ານທັງຫລາຍຢ່າງບໍ່ຢຸດຢັ້ງ ແຕ່ທ່ານບໍ່ໄດ້ຟັງ
4 ທ່ານບໍ່ໄດ້ຟັງຫລືງ່ຽງຫູຂອງທ່ານຟັງ ເຖິງແມ່ນວ່າພຣະຜູ້ເປັນເຈົ້າຊົງສົ່ງບັນດາຜູ້ປະກາດພຣະທັມຜູ້ຮັບໃຊ້ຂອງພຣະ
ອົງມາຢ່າງບໍ່ຢຸດຢັ້ງ
5 ກ່າວວ່າ, "ບັດນີ້ເຈົ້າທຸກຄົນຈົ່ງຫັນກັບຈາກທາງຊົ່ວຂອງຕົນແລະຈາກການກະທຳຜິດຂອງຕົນ ແລະອາສັຍຢູ່ໃນແຜ່ນ
ດິນຊຶ່ງພຣະຜູ້ເປັນເຈົ້າຊົງປະທານແກ່ເຈົ້າແລະບັນພະບຸຣຸດຂອງເຈົ້າ ຕັ້ງແຕ່ບູຮານແລະຕໍ່ໄປເປັນນິດ
6 ຢ່າໄປຕິດຕາມພຣະອື່ນເພື່ອຈະບົວລະບັດແລະນະມັສການພຣະເຫລົ່ານັ້ນ ຫລືຍົວະເຍົ້າເຮົາໃຫ້ພິໂຣດດ້ວຍຜົນງານ
ແຫ່ງມືຂອງເຈົ້າ ແລ້ວເຮົາຈະບໍ່ທຳອັນຕະຣາຍແກ່ເຈົ້າ"
7 ພຣະຜູ້ເປັນເຈົ້າກ່າວວ່າ ເຖິງປານນັ້ນເຈົ້າທັງຫລາຍກໍບໍ່ຟັງເຮົາເພື່ອເຈົ້າຈະໄດ້ຍົວະເຍົ້າເຮົາໃຫ້ພິໂຣດດ້ວຍຜົນງານ
ແຫ່ງມືຂອງເຈົ້າຊຶ່ງເປັນຜົນຮ້າຍແກ່ເຈົ້າເອງ
8 "ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈອມໂຢທາຈຶ່ງກ່າວດັ່ງນີ້ວ່າ ເພາະເຈົ້າບໍ່ເຊື່ອຟັງຖ້ອຍຄຳຂອງເຮົາ
9 ພຣະຜູ້ເປັນເຈົ້າກ່າວວ່າ ເບິ່ງແມ, ເຮົາຈະເອີ້ນເຜົ່າຊົນທັງປວງຂອງທິດເຫນືອ ແລະເນບູກາດເນັດຊາກະສັດບາບີ
ໂລນຜູ້ຮັບໃຊ້ຂອງເຮົາ ແລະເຮົາຈະນຳເຂົາທັງຫລາຍມາຕໍ່ສູ້ແຜ່ນດິນນີ້ແລະຊາວເມືອງນີ້ແລະບັນດາປະຊາຊາດ
ເຫລົ່ານີ້ຊຶ່ງຢູ່ລ້ອມຮອບ ເຮົາຈະທຳລາຍເຂົາທັງຫລາຍໃຫ້ສິ້ນເຊີງ ແລະເຮົາຈະກະທຳເຂົາໃຫ້ເປັນທີ່ຫນ້າຢ້ານກົວ
ແລະເປັນທີ່ເຍາະເຍີ້ຍແລະເປັນທີ່ຮ້າງເປົ່າເປັນນິດ
10 ນອກຈາກນີ້ ເຮົາຈະກຳຈັດສຽງບັນເທີງແລະສຽງລ້າເລີງ ສຽງເຈົ້າບ່າວແລະສຽງເຈົ້າສາວ ສຽງຫີນໂມ້ແລະແສງຕະ
ກຽງເສັຽຈາກເຈົ້າ

11 ແຜ່ນດິນນີ້ທັງໝົດຈະເປັນທີ່ຮົກຮ້າງແລະປະຖິ້ມ ແລະບັນດາປະຊາຊາດເຫລົ່ານີ້ຈະບົວລະບັດກະສັດກຸງບາລິໂລນຢູ່ເຈັດສິບປີ
12 ພຣະຜູ້ເປັນເຈົ້າກ່າວວ່າ ເມື່ອຄົບເຈັດສິບປີແລ້ວ ເຮົາຈະລົງໂທດກະສັດບາບີໂລນແລະປະຊາຊົນຊາດນັ້ນ ຄືແຜ່ນດິນຂອງຊາວຄັນເດອານ ເພາະບາບຊົ່ວຂອງເຂົາທັງຫລາຍກະທຳໃຫ້ແຜ່ນດິນນັ້ນປະຮ້າງຢູ່ເປັນນິດ
13 ເຮົາຈະນຳຖ້ອຍຄຳທັງສິ້ນໃຫ້ສຳເຣັດທີ່ແຜ່ນດິນນັ້ນ ຄືຖ້ອຍຄຳທີ່ເຮົາໄດ້ກ່າວຕໍ່ສູ້ເມືອງນັ້ນ ຄືທຸກສິ່ງທີ່ຂຽນໄວ້ໃນໜັງສືນີ້ ຊຶ່ງເຢເຣມີໄດ້ປະກາດພຣະທັມແກ່ບັນດາປະຊາຊາດທັງຫລາຍ
14 ເພາະວ່າຈະມີຫລາຍປະຊາຊາດແລະບັນດາມະກະສັດກະທຳໃຫ້ເຂົາເຫລົ່ານັ້ນເປັນທາດພ້ອມທັງພວກເຂົານຳ ແລະເຮົາຈະຕອບແທນເຂົາທັງຫລາຍຕາມການກະທຳແລະຜົນງານແຫ່ງມືຂອງເຂົາ"

**ຖ້ອຍນ້ຳອະງຸ່ນແຫ່ງພຣະພິໂຣດສຳລັບບັນດາປະຊາຊາດ**

The Cup of God's Wrath

15 ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວກັບຂ້າພະເຈົ້າວ່າ, "ຈົ່ງເອົາຖ້ອຍອະງຸ່ນແຫ່ງຄວາມພິໂຣດນີ້ໄປຈາກມືເຮົາ ແລະບັງຄັບບັນດາປະຊາຊາດຊຶ່ງເຮົາສົ່ງເຈົ້າໄປນັ້ນໃຫ້ດື່ມຈາກຖ້ອຍນັ້ນ
16 ເຂົາຈະດື່ມແລະເດີນໂຊເຊແລະເປັນບ້າໄປ ເນື່ອງດ້ວຍດາບຊຶ່ງເຮົາສົ່ງໄປຖ້າມກາງເຂົາທັງຫລາຍ"
17 ດັ່ງນັ້ນ ຂ້າພະເຈົ້າຈຶ່ງຮັບຖ້ອຍມາຈາກພຣະຫັດຂອງພຣະເຈົ້າ ແລະບັງຄັບປະຊາຊາດທັງສິ້ນ ຊຶ່ງພຣະຜູ້ເປັນເຈົ້າຊົງໃຊ້ໃຫ້ຂ້າພະເຈົ້າໄປຫານັ້ນດື່ມ
18 ຄືກຸງເຢຣູຊາເລັມແລະຫົວເມືອງແຫ່ງຢູດາ ທັງບັນດາກະສັດແລະເຈົ້ານາຍຂອງເມືອງນັ້ນກະທຳໃຫ້ເປັນທີ່ຮ້າງເປົ່າແລະປະຮ້າງເປັນທີ່ເຍີ້ຍຫຍັນແລະເປັນທີ່ສາບແຊ່ງເໝືອນທຸກວັນນີ້
19 ຟາຣາໂອກະສັດແຫ່ງເອຢິບກັບບັນດາຂ້າຣາຊການແລະເຈົ້ານາຍແລະປະຊາຊົນຂອງທ່ານນັ້ນ
20 ແລະບັນດາຊົນຕ່າງດ້າວທີ່ຢູ່ຖ້າມກາງເຂົາ ບັນດາກະສັດແຫ່ງແຜ່ນດິນອູດ ແລະບັນດາກະສັດແຫ່ງແຜ່ນດິນຟີລິສຕິນ (ຄືເມືອງ ອັສເກໂບນ ກາຊາ ເອກໂຣນ ແລະສ່ວນຊາວເມືອງອັສໂດດທີ່ເຫລືອຢູ່)
21 ເອໂດມ ໂມອາບ ແລະຄົນອັມໂມນ
22 ບັນດາກະສັດແຫ່ງເມືອງຕີເຣ ບັນດາກະສັດເມືອງຊີໂດນ ແລະບັນດາກະສັດແຫ່ງເມືອງຊາຍທະເລຟາກພຸ້ນ
23 ເມືອງເດດານ ເຕມາ ບູດ ແລະບັນດາຄົນທີ່ແຖຜົມຈອນຫູ
24 ບັນດາກະສັດແຫ່ງອາຣະເບັຽ ແລະບັນດາທະສັດແຫ່ງເຜົ່າທີ່ປະປົນກັນຢູ່ໃນຖິ່ນກັນດານ
25 ບັນດາກະສັດແຫ່ງຊິມຣີ ແລະບັນດາກະສັດແຫ່ງເອລາມ ແລະບັນດາກະສັດຂອງມີເດັຽ
26 ບັນດາກະສັດແຫ່ງເມືອງທິດເໜືອ ທັງໄກແລະໃກ້ແຕ່ລະເມືອງ ແລະບັນດາຣາຊອານາຈັກແຫ່ງໂລກຊຶ່ງຢູ່ເທິງພື້ນພິພົບແລະກະສັດແຫ່ງເຊຊັກ ຈະດື່ມພາຍຫລັງກະສັດເຫລົ່ານີ້
27 "ແລ້ວເຈົ້າຈົ່ງເວົ້າກັບເຂົາທັງຫລາຍວ່າ, "ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ຈົ່ງດື່ມໃຫ້ເມົາແລ້ວກໍຮາກອອກ ຈົ່ງລົ້ມລົງແລະຢ່າລຸກຂຶ້ນອີກເລີຍ ເນື່ອງດ້ວຍດາບຊຶ່ງເຮົາຈະສົ່ງມາຖ້າມກາງເຈົ້າທັງຫລາຍ"
28 "ແລະຖ້າເຂົາປະຕິເສດບໍ່ຮັບຖ້ອຍຈາກມືຂອງເຈົ້າດື່ມ ເຈົ້າຈົ່ງເວົ້າກັບເຂົາທັງຫລາຍວ່າ, "ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ເຈົ້າຕ້ອງດື່ມ
29 ເພາະ ເບິ່ງແມ, ເຮົາໄດ້ເລີ້ມທຳໂທດເມືອງຊຶ່ງເອີ້ນຕາມຊື່ຂອງເຮົາແລ້ວ ແລະເຈົ້າຈະລອຍນວນໄປໄດ້ໂດຍບໍ່ຖືກໂທດຫລື ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ ເຈົ້າຈະລອຍນວນໄປບໍ່ໄດ້ ເພາະເຮົາກຳລັງເອີ້ນດາບເຫລັ້ມນຶ່ງມາເໜືອຊາວແຜ່ນດິນໂລກທັງສິ້ນ
30 ເພາະສະນັ້ນ ເຈົ້າຈົ່ງປະກາດພຣະທັມເຫລົ່ານີ້ທັງໝົດສູ້ເຂົາທັງຫລາຍ ແລະກ່າວແກ່ເຂົາວ່າ "ພຣະຜູ້ເປັນເຈົ້າຈະຊົງເປັ່ງພຣະສຸຣະສຽງຈາກທີ່ສູງ ແລະຈາກທີ່ພຳນັກອັນບໍຣິສຸດຂອງພຣະອົງ ພຣະອົງຈະກ່າວ ພຣະອົງຈະເປັ່ງພຣະສຸຣະ

ສຽງຫລວງຫລາຍຕໍ່ຝູງແກະຂອງພຣະອົງ ແລະຊົງໂຮ່ຮ້ອງເໝືອນກັບຄົນທີ່ຢຽບຫມາກອະງຸ່ນໂຮ່ຮ້ອງຕໍ່ຊາວພິພົບທັງ
ຫລາຍ
31 ສຽງດັ່ງນັ້ນຈະກ້ອງໄປທົ່ວປາຍພິພົບ ເພາະພຣະຜູ້ເປັນເຈົ້າຊົງມີຄະດີກັບບັນດາປະຊາຊາດ ພຣະອົງຊົງເຂົ້າພິພາກ
ສາເນື້ອຫນັງທັງໝົດ ສ່ວນຄົນອະທັມນັ້ນພຣະອົງຈະຊົງຟັນເສັຽດ້ວຍດາບ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ”
32 “ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ເບິ່ງແມ, ໂທດຈະໄປຈາກປະຊາຊາດນີ້ເຖິງປະຊາຊາດນັ້ນ ແລະພະຍຸ
ໃຫຍ່ຈະປັ່ນປ່ວນຂຶ້ນມາຈາກສ່ວນພິພົບໂລກທີ່ໄກທີ່ສຸດ
33 “ແລະບັນດາຜູ້ທີ່ພຣະຜູ້ເປັນເຈົ້າຊົງປະຫານໃນວັນນັ້ນ ຈະມີຈາກປາຍໂລກຂ້າງນີ້ເຖິງປາຍໂລກອີກຂ້າງນັ້ນ ເຂົາ
ເຫລົ່ານັ້ນຈະບໍ່ມີຜູ້ໃດໂອ່ຍຄາງນຳ ຫລືຮວບຮວມຫລືຝັງໄວ້ ແຕ່ຈະເປັນເຫມືອນຂີ້ສັດຢູ່ເທິງພື້ນດິນ
34 ທ່ານຜູ້ລ້ຽງແກະທັງຫລາຍເອີຍ ຈົ່ງຄ່ຳຄວນແລະຮ້ອງເຖີດ ທ່ານເຈົ້າຂອງຝູງແກະ ຈົ່ງກິ້ງເກືອກໃນຂີ້ເຖົ່າ ເພາະວັນເວ
ລາຂອງການສັງຫານເຈົ້າແລະທີ່ເຈົ້າຕ້ອງກະຈັດກະຈາຍມາເຖິງແລ້ວ ແລະເຈົ້າທັງຫລາຍຈະລົ້ມລົງເຫມືອນແກະ
ເຖິກໂຕງາມ
35 ຜູ້ລ້ຽງແກະຈະບໍ່ມີທາງຫນີ ຫລືເຈົ້າຂອງຝູງແກະບໍ່ມີທາງລອດ
36 ຈົ່ງຟັງສຽງຮ້ອງຂອງຜູ້ລ້ຽງແກະແລະສຽງຄ່ຳຄວນຂອງເຈົ້າຂອງຝູງແກະ ເພາະວ່າພຣະຜູ້ເປັນເຈົ້າຊົງກຳລັງທຳລາຍ
ເດີ່ນຫຍ້າຂອງເຂົາທັງຫລາຍເສັຽ
37 ແລະຄອກແກະທີ່ສງົບສຸກກໍມິດງຽບຢູ່ ເນື່ອງດ້ວຍຄວາມພິໂຣດອັນແຮງກ້າຂອງພຣະຜູ້ເປັນເຈົ້າ
38 ພຣະອົງຊົງອອກຈາກທີ່ລີ້ບັງຂອງພຣະອົງເໝືອນສິງຫນຸ່ມ ເພາະວ່າແຜ່ນດິນຂອງເຂົາທັງຫລາຍເປັນທີ່ຮ້າງເປົ່າ ເຫດ
ດ້ວຍພຣະແສງດາບຂອງພຣະຜູ້ເປັນເຈົ້າ ແລະຍ້ອນວ່າພຣະພິໂຣດອັນແຮງກ້າຂອງພຣະອົງ

## 26 ປະຊາຊົນຂູ່ເຂັນວ່າຈະຂ້າເຢເຣມີຢາ

Jeremiah’s Prophecies in the Temple

(ຢຣມ 7:1-15)

1 ພາຍຫລັງເຢໂຮຢອາກິມພຣະຣາຊໂອຣົດຂອງໂຢຊີຢາໄດ້ເປັນກະສັດຢູດາບໍ່ເທົ່າ ພຣະວັຈນະນີ້ມາຈາກພຣະຜູ້ເປັນ
ເຈົ້າ
2 ພຣະຜູ້ເປັນເຈົ້າໄດ້ຊົງບອກເຢເຣມີຢາວ່າ, “ເຈົ້າຈົ່ງຢືນຂຶ້ນໃນເດີ່ນພຣະວິຫານ ແລ້ວປະກາດຖ້ອຍຄຳທັງຫມົດທີ່ເຮົາ
ໄດ້ບອກເຈົ້າໃຫ້ຊາວຢູດາທີ່ມາອ້ອນວອນຢູ່ທີ່ນັ້ນຟັງ ຢ່າໄດ້ເວັ້ນຈັກຄຳເລີຍ
3 ເພາະວ່າບາງທີເຂົາອາດຈະເຊື່ອຟັງ ແລະຕັດສິນໃຈເວັ້ນຈາກທາງຊົ່ວກໍໄດ້ ຖ້າເຂົາເຮັດໄດ້ດັ່ງນີ້ ເຮົາກໍຈະປ່ຽນຄວາມ
ຕັ້ງໃຈບໍ່ນຳພັຍວິບັດຍ້ອນການເຮັດຊົ່ວນັ້ນມາຍັງເຂົາ”
4 ພຣະຜູ້ເປັນເຈົ້າຊົງບອກເຢເຣມີຢາເວົ້າຕໍ່ປະຊາຊົນວ່າ, “ເຮົາພຣະຜູ້ເປັນເຈົ້າໄດ້ກ່າວວ່າ ພວກເຈົ້າຕ້ອງເຊື່ອຟັງເຮົາ
ໂດຍເຮັດຕາມພຣະທັມຄຳສອນທີ່ເຮົາໄດ້ບອກແລ້ວ
5 ຕ້ອງເອົາໃຈໃສ່ເຮັດຕາມຖ້ອຍຄຳຂອງຜູ້ຮັບໃຊ້ເຮົາ ຄືພວກຜູ້ປະກາດພຣະທັມທີ່ເຮົາໃຊ້ມາຫາພວກເຈົ້ານັ້ນ ພວກ
ເຈົ້າບໍ່ເຄີຍຟັງຄວາມເຂົາເລີຍ
6 ຖ້າບໍ່ເຮັດຕາມຄຳສັ່ງເຫລົ່ານີ້ ເຮົາຈະທຳໃຫ້ວິຫານນີ້ເປັນຫມືອນເມືອງຊີໂລ ຊົນຊາດທັງປວງທົ່ວໂລກຈະໃຊ້ຊື່ເມືອງ
ນີ້ເປັນຄຳສາບແຊ່ງ
7 ພວກປຸໂຣຫິດ ພວກຜູ້ປະກາດພຣະທັມ ແລະປະຊາຊົນທັງປວງໄດ້ຍິນເຢເຣມີຢາກ່າວດັ່ງນີ້ໃນວິຫານ
8 ພໍເຢເຣມີຢາກ່າວຖ້ອຍຄຳທີ່ພຣະຜູ້ເປັນເຈົ້າຊົງບອກສິ້ນສຸດລົງ ພວກປຸໂຣຫິດ ພວກຜູ້ປະກາດພຣະທັມ ແລະປະ
ຊາຊົນກໍຈັບກຸມເອົາເຢເຣມີຢາພ້ອມທັງຮ້ອງໃສ່ວ່າ, “ເຈົ້າຄວນຈະຕາຍຍ້ອນຄຳເວົ້າຂອງເຈົ້າ

9 ເປັນຫຍັງຈຶ່ງເວົ້າໃນນາມພຣະຜູ້ເປັນເຈົ້າວ່າ ວິຫານນີ້ຈະເປັນເຫມືອນຊີໂລ ແລະວ່າເມືອງນີ້ຈະຖືກທຳລາຍ ຈະບໍ່ມີຄົນອາສັຍຢູ່ໃນເມືອງນີ້ເລີຍ" ແລ້ວຝູງຊົນໃນວິຫານໄດ້ເຂົ້າລ້ອມເຢເຣມີຢາໄວ້
10 ເມື່ອພວກເຈົ້ານາຍຂອງຊາວຢູດາໄດ້ຊາບເຣື່ອງນີ້ ກໍພາກັນອອກຈາກພຣະຣາຊສຳນັກ ໄປນັ່ງຢູ່ໃນທາງເຂົ້າປະຕູໃຫມ່ຂອງວິຫານນັ້ນ
11 ຂນະນັ້ນພວກປຸໂຣຫິດກັບພວກປະກາດພຣະທັມໄດ້ເວົ້າຕໍ່ພວກເຈົ້ານາຍແລະປະຊາຊົນວ່າ, "ຄົນຜູ້ນີ້ສົມຄວນຈະໄດ້ຮັບໂທດເຖິງຕາຍ ເພາະວ່າເຂົາໄດ້ເວົ້າໃສ່ຮ້າຍປ້າຍສີເມືອງນີ້ ດັ່ງທີ່ພວກທ່ານໄດ້ຍິນກັບຫູຕົນເອງແລ້ວ"
12 ຕໍ່ມາ ເຢເຣມີຢາໄດ້ເວົ້າກັບພວກເຈົ້ານາຍແລະປະຊາຊົນວ່າ, "ພຣະຜູ້ເປັນເຈົ້າຊົງໃຊ້ຂ້າພະເຈົ້າມາກ່າວໃສ່ຮ້າຍປ້າຍສີວິຫານ ແລະເມືອງນີ້ ຄືກ່າວບັນດາຖ້ອຍຄຳທີ່ພວກທ່ານໄດ້ຍິນແລ້ວນັ້ນ
13 ພວກທ່ານຕ້ອງປ່ຽນທາງດຳເນີນຊີວິດແລະການປະພຶດ ຈົ່ງເຊື່ອຖ້ອຍຄຳແຫ່ງພຣະຜູ້ເປັນເຈົ້າຂອງທ່ານ ແລ້ວພຣະອົງຈະຊົງປ່ຽນພຣະທັຍບໍ່ນຳເອົາພັຍວິບັດທີ່ພຣະອົງຊົງກ່າວນັ້ນມາໃສ່ພວກທ່ານ
14 ສຳລັບຂ້າພະເຈົ້າຢູ່ໃນເງື້ອມມືຂອງພວກທ່ານແລ້ວ ຈົ່ງເຮັດກັບຂ້າພະເຈົ້າຕາມທີ່ເຫັນດີແລະຖືກຕ້ອງເທີນ
15 ຖ້າວ່າທຳຮ້າຍຂ້າພະເຈົ້າເຖິງຕາຍ ແນ່ນອນທ່ານກັບປະຊາຊົນໃນເມືອງນີ້ກໍຈະເປັນຜູ້ຂ້າຄົນທີ່ບໍ່ໄດ້ເຮັດຜິດ ເພາະວ່າແມ່ນພຣະຜູ້ເປັນເຈົ້າແທ້ທີ່ຊົງໃຊ້ຂ້າພະເຈົ້າມາບອກຖ້ອຍຄຳທັງປວງນີ້ແກ່ພວກທ່ານ"
16 ແລ້ວພວກເຈົ້ານາຍກັບປະຊາຊົນໄດ້ເວົ້າຕໍ່ພວກປຸໂຣຫິດ ແລະພວກຜູ້ປະກາດພຣະທັມວ່າ, "ບໍ່ຄວນຈະລົງໂທດຄົນຜູ້ນີ້ເຖິງຕາຍ ເພາະວ່າທີ່ເຂົາເວົ້າຕໍ່ພວກເຮົານັ້ນ ກໍເວົ້າໃນນາມພຣະຜູ້ເປັນເຈົ້າຂອງເຮົາ"
17 ຫລັງຈາກນັ້ນ ມີຜູ້ອະວຸໂສບາງຄົນໄດ້ຢືນຂຶ້ນເວົ້າກັບປະຊາຊົນທີ່ຊຸມນຸມກັນຢູ່ວ່າ,
18 "ໃນຄາວເຮເຊກີຢາເປັນກະສັດຢູດານັ້ນ ມີຜູ້ປະກາດພຣະທັມຊາວໂມເຣເຊທຜູ້ນຶ່ງຊື່ ມີກາ ໄດ້ບອກປະຊາຊົນທັງປວງວ່າ ພຣະຜູ້ເປັນເຈົ້າຜູ້ມີອຳນາດຍິ່ງໃຫຍ່ຊົງກ່າວດັ່ງນີ້ "ເມືອງຊີໂອນຈະຖືກໄຖເຫມືອນດັ່ງໄຖນາ ກຸງເຢຣູຊາເລັມຈະກາຍເປັນກອງຫີນໃຫຍ່ ແລະເທິງພູທີ່ຕັ້ງພຣະວິຫານຈະກາຍເປັນປ່າດົງ"
19 ກະສັດເຮເຊກີຢາ ແລະຊາວຢູດາທັງປວງບໍ່ໄດ້ຂ້າມີກາ ແຕ່ຊົງຢຳເກງພຣະຜູ້ເປັນເຈົ້າແລະຊົງທຳໃຫ້ພຣະອົງຊອບພຣະທັຍ ແລ້ວພຣະຜູ້ເປັນເຈົ້າໄດ້ຊົງປ່ຽນພຣະທັຍບໍ່ນຳພັຍວິບັດມາສູ່ພວກເຂົາ ບັດນີ້ພວກເຮົາກຳລັງນຳພັຍວິບັດອັນຫນ້າຢ້ານມາສູ່ພວກເຮົາເອງ"
20 (ມີຊາຍອີກຄົນນຶ່ງໄດ້ເວົ້າໃນນາມພຣະຜູ້ເປັນເຈົ້າ ຊາຍຜູ້ນີ້ຊື່ວ່າ ອຸຣີຢາບຸດຂອງເຊມັຍຢາຊາວເມືອງກີຣີອາດເຢອາຣິມ ເຂົາໄດ້ເວົ້າໃສ່ຮ້າຍເມືອງແລະປະເທດນີ້ເຫມືອນເຢເຣມີຢາໄດ້ເວົ້າ
21 ເມື່ອກະສັດເຢຮີອາກີມກັບພວກນາຍທະຫານຂອງພຣະອົງ ແລະພວກເຈົ້ານາຍໄດ້ຍິນອຸຣີຢາເວົ້າແລ້ວ ພຣະອົງກໍຫາຊ່ອງທາງຈະຂ້າອຸຣີຢາເສັຽ ແຕ່ເມື່ອອຸຣີຢາໄດ້ຮູ້ເຣື່ອງນີ້ແລ້ວ ເຂົາກໍຢ້ານຈຶ່ງປົບຫນີໄປຍັງປະເທດເອຢິບ
22 ກະສັດເຢຮີອາກີມຈຶ່ງສັ່ງເອນນາທານ ບຸດຂອງອັກໂບຣ໌ກັບຄົນອື່ນອີກບາງຄົນໄປຈັບເອົາອຸຣີຢາມາຈາກເອຢິບ
23 ພວກເຂົາໄດ້ນຳອຸຣີຢາມາໃຫ້ກະສັດເຢຮີອາກີມ ແລ້ວພຣະອົງໄດ້ຂ້າອຸຣີຢາ ແລະໄດ້ໂຍນສົບຂອງເຂົາເຂົ້າໄປໃນບ່ອນຝັງສົບ ຂອງປະຊາຊົນທົ່ວໄປ)
24 ແຕ່ເຢເຣມີຢານັ້ນບໍ່ໄດ້ຖືກມອບໃຫ້ປະຊາຊົນປະຫານຊີວິດ ຍ້ອນວ່າອາຮີການບຸດຂອງຊາຟານໄດ້ຊ່ອຍເຫລືອໄວ້

## 27 ບົດຮຽນຈາກເຣື່ອງແອກ

The Sign of the Yoke

1 ໃນຕົ້ນຣັຊການເຊເດກີຢາ ຣາຊບຸດຂອງໂຢຊີຢາ ກະສັດແຫ່ງຢູດາ ພຣະຄຳນີ້ມາຈາກພຣະຜູ້ເປັນເຈົ້າເຖິງເຢເຣມີຢາ
2 ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າດັ່ງນີ້ວ່າ "ຈົ່ງຫເຮັດສາຍຮັດແລະແອກສຳລັບຕົວເຈົ້າ ຈົ່ງສວມໃສ່ຄໍຂອງເຈົ້າ
3 ແລະສົ່ງມັນໄປຍັງກະສັດແຫ່ງເອໂດມກະສັດແຫ່ງໂມອາບແລະກະສັດແຫ່ງຄົນອັມໂມນ ກະສັດແຫ່ງຕີເຣ ແລະກະສັດແຫ່ງຊີໂດນ ດ້ວຍມືຂອງທູດທີ່ມາເຂົ້າເຝົ້າເຊເດກີຢາກະສັດແຫ່ງຢູດາທີ່ກຸງເຢຣູຊາເລັມ

4 ຈົ່ງຝາກຄຳສັ່ງເຫລົ່ານີ້ແກ່ບັນດານາຍຂອງເຂົາວ່າ, "ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້
ວ່າ ເຈົ້າຈົ່ງກ່າວເຣື່ອງຕໍ່ໄປນີ້ໃຫ້ນາຍຂອງເຈົ້າຟັງວ່າ
5 ນີ້ຄືເຮົາເອງ ຜູ້ໄດ້ສ້າງໂລກ ທັງມະນຸດແລະສັດຊຶ່ງຢູ່ໃນໂລກດ້ວຍຣິດທານຸພາບຍິ່ງໃຫຍ່ ແລະດ້ວຍແຂນທີ່ເດ່ອອກ
ຂອງເຮົາ ແລະເຮົາຈະໃຫ້ແກ່ຜູ້ໃດກໍໄດ້ສຸດແຕ່ເຮົາເຫັນຊອບ
6 ບັດນີ້ ເຮົາໄດ້ໃຫ້ແຜ່ນດິນເຫລົ່ານີ້ທັງໝົດໄວ້ໃນມືຂອງເນບຸກາດເນັດຊາກະສັດແຫ່ງບາບີໂລນຜູ້ຮັບໃຊ້ຂອງເຮົາ
ແລະເຮົາໄດ້ໃຫ້ສັດປ່າຢູ່ທົ່ງແກ່ເຂົານຳເພື່ອຈະບົວລະບັດເຂົາ
7 ບັນດາປະຊາຊາດທັງສິ້ນຈະຕ້ອງບົວລະບັດເຂົາ ລູກແລະຫລານຂອງເຂົາ ຈົນກວ່າເວລາກຳນົດແຫ່ງແຜ່ນດິນຂອງ
ທ່ານເອງຈະມາເຖິງແລ້ວຫລາຍປະຊາຊາດແລະບັນດາມະຫາກະສັດຈະກະທຳໃຫ້ທ່ານເປັນທາດຂອງເຂົາທັງຫລາຍ
8 "ແຕ່ຖ້າປະຊາຊາດໃດ ຫລືຣາຊອານາຈັກໃດ ຈະບໍ່ບົວລະບັດເນບຸກາດເນັດຊາກະສັດແຫ່ງບາບີໂລນຄົນນີ້ ແລະບໍ່
ຍອມເອົາຄໍໄວ້ໃຕ້ແອກຂອງກະສັດບາບີໂລນ ເຮົາຈະລົງໂທດປະຊາຊາດນັ້ນດ້ວຍດາບ ດ້ວຍການອຶດຢາກ ແລະ
ດ້ວຍໂຣກລະບາດ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ, ຈົນກວ່າເຮົາຈະລ້າງຜານເສັຽດ້ວຍມືຂອງເຂົາ
9 ເຫດສັນນັ້ນຢ່າຟັງຜູ້ປະກາດພຣະທັມ ຫລືຜູ້ທຳນວາຍຫລືຄົນຊ່າງຝັນຂອງເຈົ້າ ຜູ້ຊຶ່ງກ່າວແກ່ເຈົ້າວ່າ "ທ່ານຈະບໍ່ບົວ
ລະບັດກະສັດແຫ່ງບາບີໂລນດອກ"
10 ເພາະຊຶ່ງເຂົາປະກາດພຣະຄຳໃຫ້ທ່ານນັ້ນເປັນຄວາມເທັດ ທີ່ສິ່ງຜົນໃຫ້ທ່ານຕ້ອງຍົກຍ້າຍໄກໄປຈາກແຜ່ນດິນຂອງ
ທ່ານ ແລະເຮົາຈະຂັບໄລ່ທ່ານອອກໄປ ແລະທ່ານຈະພິນາດ
11 ແຕ່ປະຊາຊາດໃດຊຶ່ງເອົາຄໍຂອງຕົນວາງໄວ້ໃຕ້ແອກຂອງກະສັດແຫ່ງບາບີໂລນແລະບົວລະບັດທ່ານ ເຮົາຈະປະເຂົາ
ໄວ້ເທິງແຜ່ນດິນຂອງເຂົາ ເພື່ອໃຫ້ເຮັດໄຮ່ໄຖນາແລະໃຫ້ອາສັຍຢູ່ທີ່ນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ"
12 ຂ້າພະເຈົ້າໄດ້ທູນເຊເດກີຢາກະສັດແຫ່ງຢູດາໃນທຳນອງດຽວກັນວ່າ "ຈົ່ງເອົາຄໍຂອງທ່ານໄວ້ໃຕ້ແອກຂອງກະສັດ
ແຫ່ງບາບີໂລນ ແລະບົວລະບັດເຂົາແລະປະຊາຊົນຂອງເຂົາ ແລະຈົ່ງມີຊີວິດຢູ່
13 ເປັນຫຍັງທ່ານກັບຊົນຊາດຂອງທ່ານຈະມາຕາຍເສັຽດ້ວຍດາບ ດ້ວຍການອຶດຢາກ ແລະດ້ວຍໂຣກລະບາດ ດັ່ງທີ່
ພຣະຜູ້ເປັນເຈົ້າຊົງໄດ້ກ່າວໄວ້ກ່ຽວກັບປະຊາຊາດໃດໆ ຊຶ່ງຈະບໍ່ບົວລະບັດກະສັດແຫ່ງບາບີໂລນ
14 ຢ່າຟັງຖ້ອຍຄຳຂອງຜູ້ປະກາດພຣະທັມຜູ້ກ່າວແກ່ເຈົ້າວ່າ "ທ່ານຈະບໍ່ບົວລະບັດກະສັດແຫ່ງບາບີໂລນດອກ" ເພາະ
ຊຶ່ງທ່ານທັງຫລາຍປະກາດພຣະຄຳແກ່ທ່ານນັ້ນກໍເປັນການມຸສາ
15 ພຣະຜູ້ເປັນເຈົ້າກ່າວວ່າ, "ເຮົາບໍ່ໄດ້ໃຊ້ເຂົາ ແຕ່ເຂົາປະກາດພຣະຄຳປອມໃນນາມຂອງເຮົາ ຊຶ່ງສິ່ງຜົນໃຫ້ເຮົາຕ້ອງ
ຂັບໄລ່ເຈົ້າອອກໄປແລະເຈົ້າຈະຕ້ອງພິນາດ ທັງຕົວເຈົ້າແລະຜູ້ປະກາດພຣະທັມທັງຫລາຍຊຶ່ງປະກາດພຣະທັມໃຫ້
ແກ່ເຈົ້າ"
16 ແລະຂ້າພະເຈົ້າກໍໄດ້ເວົ້າກັບປະໂຣຫິດແລະປະຊາຊົນນີ້ທັງໝົດວ່າ "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ເບິ່ງແມ ບໍ່ຊ້າເຂົາ
ຈະນຳເຄື່ອງໃຊ້ຂອງພຣະວິຫານແຫ່ງພຣະຜູ້ເປັນເຈົ້າກັບມາຈາກກຸງບາບີໂລນ ເພາະຊຶ່ງເຂົາປະກາດພຣະທັມແກ່
ທ່ານນັ້ນກໍເປັນຄວາມເທັດ"
17 ຢ່າເຊື່ອຟັງເຂົາເລີຍ ຈົ່ງບົວລະບັດພຣະຣາຊາແຫ່ງບາບີໂລນ ແລະມີຊີວິດຢູ່ ເປັນຫຍັງເມືອງຈະຮ້າງເປົ່າ
18 ຖ້າເຂົາເຫລົ່ານັ້ນເປັນຜູ້ປະກາດພຣະທັມ ແລະຖ້າພຣະຄຳຂອງພຣະຜູ້ເປັນເຈົ້າຢູ່ກັບເຂົາ ກໍຂໍໃຫ້ເຂົາທູນວິງວອນຕໍ່
ພຣະຜູ້ເປັນເຈົ້າຈອມໂຍທາວ່າ ໃຫ້ເຄື່ອງໃຊ້ຊຶ່ງຢູ່ໃນພຣະວິຫານຂອງພຣະເຈົ້າ ແລະໃນພຣະຣາຊວັງຂອງກະສັດ
ແຫ່ງຢູດາ ແລະໃນກຸງເຢຣູຊາເລັມ ຢ່າໃຫ້ໄປຍັງບາບີໂລນ
19 ເພາະພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ກ່ຽວກັບບັນດາຕົ້ນເສົາ ອ່າງທອງສຳຣິດ ແລະຂາຕັ້ງ ແລະເຄື່ອງໃຊ້ອື່ນໆ
ທີ່ເຫລືອຢູ່ໃນເມືອງນີ້

20 ທີ່ເນບູກາດເນັດຊາກະສັດແຫ່ງບາບີໂລນບໍ່ໄດ້ຍຶດເອົາໄປ ເມື່ອທ່ານໄດ້ຈັບເອົາເຢໂກນີຢາ ຣາຊບຸດຂອງເຢຮີອອາ
ກີມກະສັດຂອງຢູດາ ແລະບັນດາຂ້າຣາຊການຜູ້ໃຫຍ່ຂອງເຢຣູຊາເລັມຖືກກວາດຕ້ອນຈາກກຸງເຢຣູຊາເລັມໄປເປັນ
ຊະເລີຍຍັງກຸງບາບີໂລນ
21 ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ກ່ຽວກັບເຣື່ອງເຄື່ອງໃຊ້ຊຶ່ງຍັງເຫລືອຢູ່ໃນພຣະວິຫານ
ຂອງພຣະຜູ້ເປັນເຈົ້າ ໃນພຣະຣາຊວັງຂອງກະສັດແຫ່ງຢູດາແລະໃນກຸງເຢຣູຊາເລັມ
22 ພຣະຜູ້ເປັນເຈົ້າກ່າວວ່າ ເຄື່ອງໃຊ້ເຫລົ່ານີ້ຈະຖືກຂົນໄປຍັງບາບີໂລນ ແລະຈະຄ້າງຢູ່ທີ່ນັ້ນຈົນເຖິງວັນທີ່ເຮົາເອົາໃຈ
ໃສ່ມັນ ແລ້ວເຮົາຈຶ່ງຈະນຳມັນກັບມາ ແລະໃຫ້ກັບຄືນສູ່ສະຖານທີ່ນີ້”

## 28 ຄຳປະກາດພຣະທັມເທັດຂອງຮານານີຢາ

Hananiah Opposes Jeremiah and Dies

1 ໃນປີດຽວກັນນັ້ນເມື່ອຕົ້ນຣັຊການເຊເດກີຢາ ກະສັດແຫ່ງຢູດາໃນເດືອນທີຫ້າປີທີສີ່ ຮານານີຢາ ບຸດຊາຍຂອງອັສຊູຜູ້
ປະກາດພຣະທັມຈາກກີເບໂອນ ໄດ້ເວົ້າກັບຂ້າພະເຈົ້າໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ຕໍ່ຫນ້າບັນດາປະໂຣຫິດ
ແລະປະຊາຊົນທັງຫລາຍວ່າ,
2 “ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ “ເຮົາໄດ້ຫັກແອກຂອງກະສັດແຫ່ງບາບີໂລນ
ແລ້ວ
3 ພາຍໃນສອງປີ ເຮົາຈະນຳເຄື່ອງໃຊ້ທັງສິ້ນຂອງພຣະວິຫານແຫ່ງພຣະຜູ້ເປັນເຈົ້າກັບມາຍັງທີ່ນີ້ ຊຶ່ງເປັນພາຊນະທີ່ເນ
ບູກາດເນັດຊາກະສັດແຫ່ງບາບີໂລນຍຶດໄປຈາກທີ່ນີ້ແລະຂົນໄປຍັງບາບີໂລນ
4 ເຮົາຈະນຳເຢໂກນີຢາ ຣາຊບຸດຂອງເຢຮີອອາກີມກະສັດແຫ່ງຢູດາແລະບັນດາຜູ້ທີ່ຖືກກວາດຈາກຢູດາ ຜູ້ຊຶ່ງໄປຍັງ
ບາບີໂລນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະວ່າ ເພາະເຮົາຈະຫັກແອກຂອງກະສັດແຫ່ງບາບີໂລນ”
5 ແລ້ວເຢເຣມີຢາຜູ້ປະກາດພຣະທັມກໍເວົ້າກັບຮານັຍຢາຕໍ່ຫນ້າບັນດາປະໂຣຫິດແລະປະຊາຊົນທັງຫລາຍຜູ້ຊຶ່ງຢູ່ໃນ
ພຣະວິຫານຂອງພຣະຜູ້ເປັນເຈົ້າ
6 ແລະເຢເຣມີຢາຜູ້ປະກາດພຣະທັມກ່າວວ່າ, “ອາແມນ ຂໍພຣະຜູ້ເປັນເຈົ້າຊົງກະທຳເຊັ່ນນັ້ນເຖີດ ຂໍພຣະຜູ້ເປັນເຈົ້າຊົງ
ກະທຳໃຫ້ຖ້ອຍຄຳຊຶ່ງທ່ານປະກາດພຣະທັມນັ້ນເປັນຈິງ ແລະນຳເຄື່ອງໃຊ້ແຫ່ງພຣະວິຫານຂອງພຣະຜູ້ເປັນເຈົ້າແລະ
ບັນດາຜູ້ຖືກກວາດໄປທັງສິ້ນກັບມາຈາກບາບີໂລນຍັງທີ່ນີ້
7 ແຕ່ກໍຂໍຟັງຖ້ອຍຄຳນີ້ຊຶ່ງຂ້າພະເຈົ້າເວົ້າໃຫ້ທ່ານໄດ້ຍິນແລະໃຫ້ປະຊາຊົນທັງຫລາຍນີ້ໄດ້ຍິນ
8 ບັນດາຜູ້ປະກາດພຣະທັມຊຶ່ງຢູ່ກ່ອນທ່ານແລະຂ້າພະເຈົ້າຕັ້ງແຕ່ບູຮານນະການໄດ້ປະກາດພຣະທັມເຖິງສົງຄາມ
ການອຶດຢາກ ແລະໂຣກລະບາດອັນມີແກ່ຫລາຍປະເທດແລະຫລາຍຣາຊອານາຈັກໃຫຍ່ໆ
9 ສ່ວນຜູ້ປະກາດພຣະທັມຜູ້ປະກາດວ່າຈະມີສັນຕິພາບ ເມື່ອເປັນຈິງຕາມຖ້ອຍຄຳຂອງຜູ້ປະກາດນັ້ນ ຈຶ່ງຮູ້ກັນວ່າພຣະ
ຜູ້ເປັນເຈົ້າຊົງໃຊ້ຜູ້ປະກາດພຣະທັມນັ້ນຈິງ”
10 ແລ້ວຮານັຍຢາຜູ້ປະກາດພຣະທັມກໍປົດແອກອອກຈາກຄໍຂອງເຢເຣມີຢາຜູ້ປະກາດພຣະທັມແລະຫັກມັນເສັຽ
11 ແລະຮານັຍຢາໄດ້ກ່າວຕໍ່ຫນ້າປະຊາຊົນທັງສິ້ນວ່າ, “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຢ່າງນັ້ນແຫລະ, ເຮົາຈະຫັກແອກ
ຂອງເນບູກາດເນັດຊາກະສັດຂອງບາບີໂລນ ຈາກຄໍຂອງບັນດາປະຊາຊາດທັງສິ້ນພາຍໃນສອງປີ” ແຕ່ເຢເຣມີຢາຜູ້
ປະກາດພຣະທັມກໍອອກໄປເສັຽ
12 ຫລັງຈາກທີ່ຮານັຍຢາຜູ້ປະກາດພຣະທັມຫັກແອກຈາກຄໍຂອງເຢເຣມີຢາຜູ້ປະກາດພຣະທັມ ພຣະທັມຂອງພຣະຜູ້
ເປັນເຈົ້າມາເຖິງເຢເຣມີຢາວ່າ,
13 “ຈົ່ງໄປບອກຮານັຍຢາວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຈົ້າໄດ້ຫັກແອກໄມ້ ແຕ່ເຮົາຈະເຮັດແອກເຫລັກໄວ້ແທນ

14 ເພາະພຣະຜູ້ເປັນເຈົ້າຈອມໂຍທາພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເຮົາໄດ້ວາງແອກເຫລັກໄວ້ເທິງຄໍບັນດາປະ
ຊາຊາດເຫລົ່ານີ້ທັງສິ້ນ ໃຫ້ເປັນທາດຂອງເນບູກາດເນັດຊາກະສັດແຫ່ງບາບີໂລນ ແລະເຂົາທັງຫລາຍຈະປົວຣະບັດ
ເຂົາ ເພາະເຮົາໄດ້ຍົກໃຫ້ເຂົາແລ້ວແມ່ນແຕ່ສັດປ່າຢູ່ທົ່ງດ້ວຍ”
15 ແລະຜູ້ປະກາດພຣະທັມໄດ້ເວົ້າກັບຮານັຍຢາຜູ້ປະກາດພຣະທັມວ່າ, “ຮານັຍຢາຂໍທ່ານຟັງ ພຣະຜູ້ເປັນເຈົ້າບໍ່ໄດ້ຊົງ
ໃຊ້ທ່ານ ແລະທ່ານໄດ້ກະທຳໃຫ້ຊົນຊາດນີ້ວາງໃຈໃນຄວາມເທັດ
16 ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວວ່າ “ເບິ່ງແມ, ເຮົາຈະຍ້າຍເຈົ້າໄປຈາກພື້ນໂລກ ໃນປີດຽວນີ້ເອງເຈົ້າຈະຕ້ອງຕາຍ
ເພາະເຈົ້າໄດ້ກ່າວຖ້ອຍຄຳເປັນການກະບົດຕໍ່ພຣະຜູ້ເປັນເຈົ້າ”
17 ໃນປີດຽວກັນນັ້ນ ໃນເດືອນທີເຈັດ ຮານັຍຢາຜູ້ປະກາດພຣະທັມກໍຕາຍ

## 29 ຈົດຫມາຍຂອງເຢເຣມີຢາ ມີໄປເຖິງພວກທີ່ຖືກກວາດຕ້ອນ

Jeremiah’s Letter to the Exiles in Babylon

1 ຕໍ່ໄປນີ້ເປັນຖ້ອຍຄຳໃນຈົດຫມາຍຊຶ່ງເຢເຣມີຢາຜູ້ປະກາດພຣະທັມຝາກໄປຈາກກຸງເຢຣູຊາເລັມເຖິງພວກຜູ້ໃຫຍ່ຂອງ
ພວກທີ່ເປັນຊະເລີຍ ແລະເຖິງບັນດາປະໂຣຫິດ ບັນດາຜູ້ປະກາດພຣະທັມ ແລະປະຊາຊົນທັງສິ້ນ ຜູ້ຊຶ່ງເນບູກາດເນັດ
ຊາໄດ້ໃຫ້ກວາດໄປຈາກກຸງເຢຣູຊາເລັມເຖິງບາບີໂລນ
2 ນີ້ເປັນເຣື່ອງຫລັງຈາກກະສັດເຢໂກນີຢາ ແລະພຣະຣາຊີນີ ພວກຂັນທີບັນດາເຈົ້ານາຍຂອງຢູດາແລະເຢຣູຊາເລັມ
ແລະບັນດາຊ່າງ ແລະຊ່າງເຫລັກໄດ້ອອກໄປຈາກກຸງເຢຣູຊາເລັມແລ້ວ
3 ຈົດຫມາຍນັ້ນໄດ້ສົ່ງໄປດ້ວຍມືຂອງເອລາຊາບຸດຂອງຊາຟານແລະເກມາຣີຢາບຸດຮີນກີຢາ ຜູ້ຊຶ່ງເຊເດກີຢາກະສັດ
ແຫ່ງຢູດາສົ່ງໄປທີ່ບາບີໂລນຍັງເນບູກາດເນັດຊາກະສັດແຫ່ງບາບີໂລນ ຈົດຫມາຍນັ້ນວ່າ
4 “ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນ ກ່າວດັ່ງນີ້ແກ່ບັນດາຜູ້ເປັນຊະເລີຍ ຜູ້ຊຶ່ງເຮົາໄດ້ເນຣະເທດ
ເຂົາໄປຈາກກຸງເຢຣູຊາເລັມເຖິງບາບີໂລນນັ້ນວ່າ
5 ຈົ່ງສ້າງເຮືອນແລະເຂົ້າຢູ່ໃນເຮືອນນັ້ນ ຈົ່ງເຮັດສວນແລະກິນຜົນຫມາກໄມ້ທີ່ໄດ້ນັ້ນ
6 ຈົ່ງມີພັຣຍາແລະມີບຸດຊາຍຍິງ ຈົ່ງຫາພັຣຍາໃຫ້ບຸດຊາຍຂອງເຈົ້າທັງຫລາຍ ແລະຍົກບຸດຍິງຂອງເຈົ້າໃຫ້ແຕ່ງງານເສັຽ
ເພື່ອນາງຈະໄດ້ມີບຸດຊາຍແລະບຸດຍິງທະວີຫລາຍຂຶ້ນທີ່ນັ້ນແລະບໍ່ຫນ້ອຍລົງ
7 ແຕ່ຈົ່ງສົ່ງເສີມສັນຕິພາບຂອງເມືອງ ຊຶ່ງເຮົາໄດ້ກວາດເຈົ້າໃຫ້ໄປເປັນຊະເລີຍຢູ່ນັ້ນ ແລະຈົ່ງອ້ອນວອນຕໍ່ພຣະຜູ້ເປັນ
ເຈົ້າເພື່ອເມືອງນັ້ນ ເພາະວ່າເຈົ້າທັງຫລາຍຈະພົບສັນຕິພາບຂອງເມືອງນັ້ນ
8 ເພາະພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ຢ່າຍອມໃຫ້ຜູ້ປະກາດພຣະທັມຂອງເຈົ້າ
ທັງຫລາຍຫລືຜູ້ທຳນວາຍຂອງເຈົ້າຜູ້ຢູ່ຖ້າມກາງຫລອກລວງເຈົ້າ ແລະຢ່າເຊື່ອຄວາມຝັນຊຶ່ງເຂົາທັງຫລາຍໄດ້ຝັນ
ເຫັນ
9 ເພາະທີ່ເຂົາປະກາດພຣະທັມແກ່ເຈົ້າໃນນາມຂອງເຮົານັ້ນເປັນຄວາມເທັດ ເຮົາບໍ່ໄດ້ໃຊ້ເຂົາໄປ ພຣະຜູ້ເປັນເຈົ້າກ່າວ
ດັ່ງນີ້ແຫລະ
10 “ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເມື່ອເຈັດສິບປີ ແຫ່ງບາບີໂລນຄົບແລ້ວ ເຮົາຈະຢ້ຽມຢາມເຈົ້າແລະຈະໃຫ້ຄຳສັນ
ຍາຂອງເຮົາສຳເຣັດເພື່ອເຈົ້າແລະຈະນຳເຈົ້າກັບມາສູ່ສະຖານທີ່ນີ້
11 ພຣະຜູ້ເປັນເຈົ້າກ່າວວ່າ ເພາະເຮົາຮູ້ແຜນງານທີ່ເຮົາມີໄວ້ສຳລັບເຈົ້າ ເປັນແຜນງານເພື່ອສັນຕິພາບ ບໍ່ແມ່ນເພື່ອ
ເປັນອັນຕະລາຍ ເພື່ອຈະໃຫ້ອະນາຄົດແລະຄວາມຫວັງໃຈແກ່ເຈົ້າ
12 ແລ້ວເຈົ້າຈະທູນຂໍຕໍ່ເຮົາ ແລະມາອ້ອນວອນຕໍ່ເຮົາ ແລະເຮົາຈະຟັງເຈົ້າ
13 ເຈົ້າຈະສແວງຫາເຮົາແລະພົບເຮົາ ເມື່ອເຈົ້າສແວງຫາເຮົາດ້ວຍສິ້ນສຸດໃຈຂອງເຈົ້າ

14 ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະໃຫ້ເຈົ້າພົບເຮົາ ແລະເຮົາຈະໃຫ້ເຈົ້າກັບສູ່ສະພາບດີແລະຮວບຮວມເຈົ້າມາຈາກບັນ
ດາປະຊາຊາດແລະຈາກທຸກບ່ອນທີ່ເຮົາຂັບໄລ່ເຈົ້າໃຫ້ໄປຢູ່ນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ ແລະເຮົາຈະນຳເຈົ້າ
ກັບມາຍັງທີ່ຊຶ່ງເຮົາເນຣະເທດເຈົ້າໃຫ້ຈາກໄປນັ້ນ
15 "ເພາະເຈົ້າທັງຫລາຍໄດ້ກ່າວວ່າ "ພຣະຜູ້ເປັນເຈົ້າໄດ້ຕັ້ງໃຫ້ມີຜູ້ປະກາດພຣະທັມສຳລັບເຮົາທັງຫລາຍຂຶ້ນໃນບາບີ
ໂລນ
16 (ພຣະຜູ້ເປັນເຈົ້າກ່າວດັ່ງນີ້ກ່ຽວກັບພຣະຣາຊາຜູ້ປະທັບເທິງພຣະທີ່ນັ່ງຂອງດາວິດແລະກ່ຽວກັບປະຊາຊົນທັງໝົດຜູ້
ອາສັຍຢູ່ໃນເມືອງນີ້ ຄືຍາດພີ່ນ້ອງຂອງທ່ານຜູ້ບໍ່ໄດ້ຖືກເນຣະເທດໄປກັບທ່ານວ່າ
17 ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະສົ່ງດາບ ການອຶດຢາກ ແລະໂຣກລະບາດມາເຫນືອເຂົາ
ທັງຫລາຍ ແລະເຮົາຈະກະທຳໃຫ້ເຂົາທັງຫລາຍເປັນເຫມືອນກັບຫມາກເດື່ອທີ່ເໜົ່າຊຶ່ງບໍ່ດີຈົນເຂົາກິນບໍ່ໄດ້
18 ເຮົາຈະຂັບໄລ່ຕິດຕາມເຂົາດ້ວຍດາບ ການອຶດຢາກ ແລະໂຣກລະບາດ ແລະຈະກະທຳເຂົາໃຫ້ເປັນທີ່ຢ້ານກົວແກ່
ຣາຊອານາຈັກທັງໝົດແຫ່ງແຜ່ນດິນໂລກ ໃຫ້ເປັນຄຳສາບ ໃຫ້ເປັນຄວາມໜ້າຢ້ານ ໃຫ້ເປັນທີ່ເຍີ້ຍຫຍັນ ເປັນຂີ້ປາກ
ຖ້ຳມກາງບັນດາປະຊາຊາດຊຶ່ງເຮົາໄດ້ຂັບໄລ່ໃຫ້ເຂົາໄປຢູ່ນັ້ນ
19 ພຣະຜູ້ເປັນເຈົ້າກ່າວວ່າ ເພາະວ່າເຂົາທັງຫລາຍບໍ່ເຊື່ອຟັງຖ້ອຍຄຳຂອງເຮົາທີ່ສົ່ງມາຍັງເຂົາຢ່າງບໍ່ຢຸດຢັ້ງ ໂດຍຜູ້ປະ
ກາດພຣະທັມຜູ້ຮັບໃຊ້ຂອງເຮົາແຕ່ເຈົ້າທັງຫລາຍບໍ່ຍອມຟັງ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ")
20 ເຈົ້າທັງປວງຜູ້ຖືກເນຣະເທດ ຜູ້ຊຶ່ງເຮົາສົ່ງໄປຈາກກຸງເຢຣູຊາເລັມເຖິງບາບີໂລນ ຈົ່ງຟັງພຣະຄຳຂອງພຣະຜູ້ເປັນເຈົ້າ
ທີ່ວ່າ
21 ພຣະຜູ້ເປັນເຈົ້າຈອມໂຍທາພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ກ່ຽວກັບອາຮັບບຸດຊາຍຂອງໂກລັຍຢາ ແລະເຊເດກີ
ຢາບຸດມາອາຊັຍຢາ ຜູ້ຊຶ່ງໄດ້ປະກາດພຣະທັມເທັດແກ່ເຈົ້າໃນນາມຂອງເຮົາ ເບິ່ງແມ, ເຮົາຈະມອບເຂົາທັງສອງໄວ້
ໃນມືຂອງເນບູກາດເນັດຊາກະສັດແຫ່ງບາບີໂລນ ແລະທ່ານຈະຂ້າເຂົາທັງສອງເສັຽຕໍ່ຫນ້າຕໍ່ຕາເຈົ້າ
22 ເຫດວ່າເຂົາທັງສອງບັນດາຜູ້ທີ່ຖືກເນຣະເທດຈາກຢູດາໄປເຖິງບາບີໂລນຈະໃຊ້ຄຳສາບຕໍ່ໄປນີ້ວ່າ "ຂໍພຣະຜູ້ເປັນເຈົ້າ
ຊົງກະທຳໃຫ້ເຈົ້າເຫມືອນເຊເດກີຢາແລະອາຮາບ ຜູ້ທີ່ກະສັດບາບີໂລນໄດ້ປີ້ງເຂົາເສັຽດ້ວຍໄຟ"
23 ເພາະເຂົາທັງສອງໄດ້ກະທຳຄວາມໂງ່ຈ້າໃນອິສຣາເອນ ໄດ້ລ່ວງປະເວນີກັບເມັຽຂອງເພື່ອນບ້ານ ແລະໄດ້ເວົ້າຖ້ອຍ
ຄຳເທັດໃນນາມຂອງເຮົາ ຊຶ່ງເຮົາບໍ່ໄດ້ບັນຊາເຂົາ ເຮົາເປັນຜູ້ທີ່ຮູ້ ແລະເຮົາເປັນພຍານ" ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ

### The Letter of Shemaiah

24 ເຈົ້າຈົ່ງບອກແກ່ເຊມັຍຢາຊາວເນເຮລາມວ່າ,
25 "ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເຈົ້າໄດ້ສົ່ງຈົດຫມາຍໃນນາມຂອງເຈົ້າໄປຍັງປະ
ຊາຊົນທັງປວງຜູ້ຢູ່ໃນກຸງເຢຣູຊາເລັມແລະຍັງເຊຟັນຢາບຸດມາອາຊັຍຢາປະໂຣຫິດ ແລະຍັງປະໂຣຫິດທັງປວງວ່າ,
26 "ພຣະຜູ້ເປັນເຈົ້າໄດ້ຊົງກະທຳເຈົ້າໃຫ້ເປັນປະໂຣຫິດແທນປະໂຣຫິດເຢຣີວອາດາ ໃຫ້ດູແລພຣະວິຫານຂອງພຣະຜູ້
ເປັນເຈົ້າ ຄວບຄຸມຄົນບ້າທຸກຄົນທີ່ປະກາດພຣະທັມ ໃຫ້ຈັບເຂົາໃສ່ຄຸກແລະໃສ່ໂສ້ເສັຽ
27 ບັດນີ້ເປັນຫຍັງເຈົ້າບໍ່ໄດ້ຕໍ່ວ່າເຢເຣມີຢາຊາວອານາໂທດຜູ້ຊຶ່ງປະກາດພຣະທັມແກ່ເຈົ້າ
28 ເພາະເຂົາໄດ້ສົ່ງຈົດຫມາຍມາຍັງເຮົາໃນບາບີໂລນວ່າ "ການທີ່ເຈົ້າເປັນຊະເລີຍນັ້ນຈະດົນນານ ຈົ່ງສ້າງເຮືອນຂອງ
ເຈົ້າແລະອາສັຍຢູ່ໃນນັ້ນ ແລະເຮັດສວນແລະກິນຜົນຫມາກໄມ້ທີ່ໄດ້ນັ້ນ"
29 ເຊຟັນຢາປະໂຣຫິດອ່ານຈົດຫມາຍນີ້ໃຫ້ເຢເຣມີຢາຜູ້ປະກາດພຣະທັມຟັງ
30 ແລ້ວພຣະຄຳຂອງພຣະຜູ້ເປັນເຈົ້າມາຍັງເຢເຣມີຢາວ່າ,
31 "ຈົ່ງຂຽນໄປເຖິງບັນດາຜູ້ເປັນຊະເລີຍທັງປວງວ່າ "ພຣະຜູ້ເປັນເຈົ້າກ່າວກ່ຽວກັບເຊມັຍຢາໄດ້ປະກາດພຣະທັມແກ່ເຈົ້າ
ເມື່ອເຮົາບໍ່ໄດ້ໃຊ້ເຂົາ ແລະໄດ້ກະທຳໃຫ້ເຈົ້າວາງໃຈໃນຄຳເທັດ

32 ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະລົງໂທດເຊມັຍຢາຊາວເນເຮລາມແລະເຊື້ອສາຍຂອງເຂົາ
ເຂົາຈະບໍ່ມີແມ່ນແຕ່ຄົນນຶ່ງທີ່ມີຊີວິດຢູ່ໃນຖ້າມກາງຊົນຊາດນີ້ທີ່ຈະໄດ້ເຫັນຄວາມດີ ຊຶ່ງເຮົາຈະກະທຳແກ່ໄພ່ພົນຂອງ
ເຮົາ ເພາະເຂົາໄດ້ເວົ້າເປັນການກະບົດຕໍ່ພຣະຜູ້ເປັນເຈົ້າ" ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

## 30 ຄຳຫມັ້ນສັນຍາຂອງພຣະຜູ້ເປັນເຈົ້າທີ່ມີຕໍ່ເຊື້ອສາຍຢາໂຄບ

Restoration Promised for Israel and Judah

1 ພຣະຜູ້ເປັນເຈົ້າຂອງຊາວອິສຣາເອນຊົງກ່າວຕໍ່ເຢເຣມີຢາວ່າ,
2 ຖ້ອຍຄຳທັງຫມົດທີ່ເຮົາໄດ້ບອກເຈົ້ານັ້ນ ຈົ່ງຂຽນໄວ້ໃນປຶ້ມຫົວນຶ່ງ ເພາະວ່າວັນເວລາຈະມາເຖິງ
3 ເມື່ອນັ້ນເຮົາຈຶ່ງຈະໃຫ້ອິສຣາເອນແລະຢູດາໄພ່ພົນຂອງເຮົາຄືນສູ່ສະພາບເດີມ ແລະຈະນຳເຂົາມາຍັງແຜ່ນດິນທີ່ເຮົາ
ໄດ້ມອບໃຫ້ບັນພະບຸຣຸດຂອງພວກເຂົາ ພວກເຂົາຈະໄດ້ເປັນເຈົ້າຂອງແຜ່ນດິນນັ້ນອີກ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວ
ດັ່ງ
ນີ້ແຫລະ"
4 ພຣະຜູ້ເປັນເຈົ້າຊົງກ່າວເຖິງອິສຣາເອນແລະຢູດາດັ່ງນີ້,
5 "ເຮົາໄດ້ຍິນສຽງຮ້ອງໄຫ້ຍ້ອນຕື່ນຕົກໃຈ ເປັນສຽງຢ້ານບໍ່ແມ່ນສຽງມ່ວນຊື່ນ
6 ບັດນີ້ຈົ່ງຖາມ ແລະຄິດເບິ່ງວ່າຜູ້ຊາຍອອກລູກມີບໍ ເປັນຫຍັງເຮົາຈຶ່ງເຫັນຜູ້ຊາຍທຸກຄົນເອົາມືອູ້ມທ້ອງເຫມືອນຜູ້ຍິງ
ຈະອອກລູກ ເປັນຫຍັງຫນ້າຕາຂອງທຸກຄົນຈຶ່ງຂາວຊີດໄປ
7 ວັນອັນຫນ້າຢ້ານນັ້ນຈະມາເຖິງ ບໍ່ມີວັນໃດເຫມືອນກັບວັນນັ້ນ ເພາະວ່າເປັນເວລາທຸກໃຈຂອງເຊື້ອສາຍຢາໂຄບ ແຕ່
ພວກເຂົາຈະຜ່ານພົ້ນວັນນັ້ນໄປໄດ້"
8 ພຣະຜູ້ເປັນເຈົ້າຜູ້ມີອຳນາດຍິ່ງໃຫຍ່ຊົງກ່າວວ່າ, "ເມື່ອວັນນັ້ນມາເຖິງ ເຮົາຈະປົດແອກອອກຈາກຄໍແລະແກ້ໂສ້ອອກ
ຈາກເຂົາ ພວກເຂົາຈະບໍ່ເປັນທາດຮັບໃຊ້ຄົນຕ່າງຊາດອີກຕໍ່ໄປ
9 ແຕ່ຈະຮັບໃຊ້ເຮົາຄືພຣະຜູ້ເປັນເຈົ້າຂອງພວກເຂົາແລະຮັບໃຊ້ດາວິດຜູ້ເຮົາຈະໃຫ້ເປັນກະສັດຂອງພວກເຂົາ
10 ຢາໂຄບຜູ້ຮັບໃຊ້ຂອງເຮົາເອີຍ ຢ່າສູ່ຢ້ານເລີຍ ຊາວອິສຣາເອນເອີຍ ຢ່າຕື່ນຕົກໃຈ ເຮົາຈະຊ່ອຍໃຫ້ໄດ້ກັບຄືນມາ
ຈາກປະເທດອັນໄກນັ້ນ ຄືຈາກແຜ່ນດິນທີ່ພວກເຈົ້າຕົກເປັນນັກໂທດ ເຊື້ອສາຍຂອງຢາໂຄບຈະກັບມາມີຊີວິດຢູ່ຢ່າງ
ສົງບສຸກ ຈະປອດພັຍແລະຈະບໍ່ມີໃຜເຮັດໃຫ້ເຂົາຢ້ານກົວ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ"
11 ເຮົາຈະຢູ່ກັບເຈົ້າ ເພື່ອຊ່ອຍເຈົ້າໃຫ້ພົ້ນພັຍ ຈະທຳລາຍບັນດາປະເທດທີ່ເຮົາໃຫ້ເຈົ້າກະຈັດກະຈາຍໄປຢູ່ນັ້ນ ຈະບໍ່ທຳ
ລາຍເຈົ້າແຕ່ຈະລົງໂທດສະຖານເບົາເສັຽກ່ອນຈຶ່ງຈະປ່ອຍໄປ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ"
12 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ປະຊາຊົນວ່າ, "ບາດແຜຂອງເຈົ້າບໍ່ສາມາດປິ່ນປົວໃຫ້ດີໄດ້ ຄວາມເຈັບປວດກໍປິ່ນປົວໄດ້
13 ຈະບໍ່ມີໃຜປົວຣະບັດຮັກສາເຈົ້າ ບໍ່ມີຢາຮັກສາບາດແຜແລະບໍ່ມີການປິ່ນປົວເຈົ້າ
14 ຄົນຮັກແພງຂອງເຈົ້າທັງຫມົດໄດ້ລືມເຈົ້າແລ້ວ ພວກເຂົາບໍ່ສົນໃຈເຈົ້າອີກຕໍ່ໄປ ເຮົາໂຈມຕີເຈົ້າເຫມືອນດັ່ງສັດຕຣູ
ໂທດຂອງເຈົ້າກໍຮຸນແຮງເພາະວ່າບາບຂອງເຈົ້າມີຫລາຍແທ້ແລະຄວາມຊົ່ວກໍຮ້າຍແຮງ
15 ຢ່າຮ້ອງໄຫ້ຍ້ອນຄວາມເຈັບປວດອີກເລີຍ ຄວາມເຈັບປວດນັ້ນປິ່ນປົວໃຫ້ດີບໍ່ໄດ້ດອກ ທີ່ເປັນດັ່ງນີ້ແມ່ນເຮົາລົງໂທດ
ເຈົ້າ ເພາະວ່າບາບຂອງເຈົ້າມີຫລາຍແທ້ ແລະຄວາມຊົ່ວກໍຮ້າຍແຮງ
16 ຜູ້ໃດທຳຮ້າຍເຈົ້າ ຈະຖືກທຳຮ້າຍຕອບ ສັດຕຣູຂອງເຈົ້າທັງຫມົດຈະຕົກເປັນຊະເລີຍ ຜູ້ໃດກົດຂີ່ຂົ່ມເຫັງເຈົ້າຈະໄດ້
ຮັບການກົດຂີ່ຂົ່ມເຫັງຕອບ ແລະຜູ້ໃດປຸ້ນເຈົ້າຈະຖືກປຸ້ນຕອບ
17 ເຮົາຈະເຮັດໃຫ້ເຈົ້າດີເປັນປົກກະຕິອີກ ຈະປິ່ນປົວບາດແຜໃຫ້ດີ ເຖິງແມ່ນສັດຕຣູຂອງເຈົ້າເວົ້າວ່າ ເມືອງຊີໂອນຖືກ
ເຂົາປະຖິ້ມແລ້ວ ບໍ່ມີໃຜສົນໃຈອີກ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ"

18 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເຮົາຈະເຮັດໃຫ້ເຊື້ອສາຍຢາໂຄບກັບຄືນສູ່ສະພາບດີອມ ແລະຈະເອັນດູກູນາຄອບຄົວ
ເຂົາທັງຫມົດ ເມືອງທຸກເມືອງຈະຖືກສ້າງຂຶ້ນໃຫມ່ ແລະເຮືອນທຸກຫລັງຈະເຮັດໃຫ້ຄືນດີຄືເກົ່າ
19 ປະຊາຊົນໃນທີ່ນັ້ນຈະຮ້ອງເພງສັຣເສີນ ຈະຮ້ອງໂຮມ່ວນຊື່ນ ເຮົາຈະເຮັດໃຫ້ເຂົາເພີ້ມທະວີຫລາຍຂຶ້ນ ແລະຈະນຳ
ກຽດມາໃຫ້ພວກເຂົາ
20 ເຮົາຈະນຳອຳນາດເກົ່າຄືນມາໃຫ້ຊົນຊາດນີ້ ຈະຈັດຕັ້ງເຂົາຂຶ້ນອີກຢ່າງຫມັ້ນຄົງ ແລະຈະລົງໂທດຄົນທັງປວງທີ່ກົດຂີ່
ຂົ່ມເຫັງເຂົາ
21 ເຈົ້ານາຍຂອງເຂົາຈະເປັນຄົນນຶ່ງໃນພວກເຂົາທັງຫລາຍ ຜູ້ປົກຄອງຈະອອກມາຈາກຖ້າມກາງເຂົາເອງ ເຮົາຈະກະທຳ
ໃຫ້ທ່ານນັ້ນເຂົ້າມາໃກ້ ແລະທ່ານນັ້ນຈະເຂົ້າໃກ້ເຮົາ ເພາະໃຜຈະກ້າເຂົ້າມາໃຫ້ເຮົາໄດ້ເອງ ພຣະເຈົ້າກ່າວ
22 ແລະເຈົ້າທັງຫລາຍຈະເປັນໄພ່ພົນຂອງເຮົາ ແລະເຮົາຈະເປັນພຣະເຈົ້າຂອງເຈົ້າ”
23 ຈົ່ງເບິ່ງພະຍຸຂອງພຣະຜູ້ເປັນເຈົ້າ ຄວາມຄຽດຮ້າຍຂອງພຣະອົງເປັນດັ່ງພະຍຸ ລົມໂຫດຮ້າຍນີ້ຈະພັດເປົ່າວົນວຽນຢູ່
ເທິງຫົວຂອງຄົນອະທັມ
24 ຄວາມຄຽດຮ້າຍນີ້ຈະບໍ່ຢຸດຢັ້ງ ຈະມີເລື້ອຍໆຈົນເທົ່າພຣະອົງໄດ້ຊົງກະທຳສຳເຣັດຕາມພຣະປະສົງແລ້ວ ໃນຄັ້ງສຸດ
ທ້າຍໄພ່ພົນຂອງພຣະອົງຈະເຂົ້າໃຈເຣື່ອງນີ້ຢ່າງແຈ່ມແຈ້ງ

## 31 ຄົນອິສຣາເອນຈະກັບຄືນປະເທດຂອງຕົນ

The Joyful Return of the Exiles

1 ພຣະເຈົ້າຊົງກ່າວວ່າ, “ເມື່ອເວລານັ້ນມາເຖິງ ເຮົາຈະເປັນພຣະເຈົ້າແຫ່ງຕະກູນທັງປວງຂອງອິສຣາເອນ ພວກເຂົາຈະ
ເປັນໄພ່ພົນຂອງເຮົາ
2 ເມື່ອປະຊາຊົນອິສຣາເອນທີ່ເຫລືອມາຈາກຕາຍໃນຖິ່ນກັນດານຕ້ອງການພັກຜ່ອນ
3 ເຮົາກໍໄດ້ສະແດງຄວາມເມດຕາແລະປາກົດໃຫ້ເຂົາເຫັນ ຊາວອິສຣາເອນເອີຍ ເຮົາໄດ້ຮັກແພງພວກເຈົ້າສເມີມາ ດັ່ງ
ນັ້ນເຮົາຈຶ່ງຈະຮັກແພງພວກເຈົ້າຢ່າງຫມັ້ນຄົງສືບຕໍ່ໄປ
4 ເຮົາຈະສ້າງເຈົ້າຂຶ້ນໃຫມ່ ເຈົ້າຈະມີກອງໂທນແລະໄດ້ຟ້ອນລຳດ້ວຍຄວາມມ່ວນຊື່ນ
5 ຈະໄດ້ປູກກົກອະງຸ່ນເທິງພູຊາມາເຣັຽອີກ ແລະຄົນທັງຫລາຍທີ່ປູກກົກອະງຸ່ນນັ້ນຈະໄດ້ກິນຫມາກຂອງມັນ
6 ເມື່ອເວລານັ້ນມາເຖິງ ຄົນເຝົ້າຍາມຈະເອີ້ນຢູ່ເທິງພູເອຟຣາອິມວ່າ “ມາເທາະ ເຮົາຈົ່ງພ້ອມກັນຂຶ້ນໄປເທິງພູຊີໂອນ
ເທາະ ໄປເຝົ້າ  ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ”
7 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຈົ່ງຮ້ອງເພງສັຣເສີນດ້ວຍຄວາມມ່ວນຊື່ນສຳລັບອິສຣາເອນທີ່ເປັນຊົນຊາດຍິ່ງໃຫຍ່ ພ
ຣະຜູ້ເປັນເຈົ້າຊົງຊ່ອຍໄພ່ພົນຂອງພຣະອົງໃຫ້ພົ້ນພັຍ ຊົງຊ່ອຍຄົນທັງປວງທີ່ເຫລືອຢູ່
8 ເຮົາຈະໂຮມເອົາເຂົາທັງຫລາຍມາຈາກທາງທິດເຫນືອ ແລະມາຈາກທົ່ວໂລກ ພ້ອມທັງຄົນຕາບອດແລະຄົນເສັຽຂາ
ຜູ້ຍິງຖືພາທີ່ກຳລັງຈະອອກລູກກໍຈະມາ ຈະກັບຄືນມາເປັນຊົນຊາດໃຫຍ່
9 ໄພ່ພົນຂອງເຮົາຈະກັບມາດ້ວຍນ້ຳຕາ ແຕ່ເຮົາຈະເລົ້າໂລມແລະເບິ່ງແຍງເຂົາ ຈະນຳເຂົາມາຮອດກະແສນ້ຳໄຫລ ໃຫ້
ຍ່າງໄປ   ຕາມທາງພຽງບ່ອນບໍ່ມີສະດຸດ ເຮົາເປັນພໍ່ຂອງອິສຣາເອນ ແລະເອຟຣາອິມເປັນລູກກົກຂອງເຮົາ
10 ຊົນຊາດທັງຫລາຍເອີຍ ຈົ່ງຟັງເດີ ຈົ່ງປະກາດຖ້ອຍຄຳຂອງເຮົາໃນແຜ່ນດິນແຄມທະເລທີ່ຢູ່ຫ່າງໄກ ເຮົາຜູ້ທຳໃຫ້ອິສ
ຣາເອນກະຈັດກະຈາຍໄປ ຈະເຕົ້າໂຮມແລະເບິ່ງແຍງເຂົາເຫມືອນຄົນລ້ຽງແກະເບິ່ງແຍງແກະຂອງຕົນ
11 ເຮົາໄດ້ຊ່ອຍໃຫ້ອິສຣາເອນເປັນອິສຣະ ແລະໃຫ້ພົ້ນຈາກເງື້ອມມືຂອງຊົນຊາດໃຫຍ່
12 ພວກເຂົາຈະມາຮ້ອງເພງດ້ວຍຄວາມມ່ວນຊື່ນຢູ່ເທິງພູຊີໂອນ ຈະຊົມຊື່ນຍິນດີໃນສິ່ງຂອງທີ່ເຮົາໃຫ້ ຄືເມັດເຂົ້າ ເຫລົ້າ
ອະງຸ່ນ ນ້ຳມັນ ຝູງແກະແລະງົວຄວາຍ ພວກເຂົາຈະເປັນເຫມືອນສວນທີ່ມີນ້ຳຫົດ ແລະຈະບໍ່ມີຄວາມໂສກເສົ້າເສັຽໃຈ
ອີກເລີຍ

13 ຂນະນັ້ນພວກຍິງສາວຈະຟ້ອນລຳຢ່າງມີຄວາມສຸກ ພວກຄົນຫນຸ່ມແລະແກ່ເຖົ້າຈະມ່ວນຊື່ນຍິນດີ ເຮົາຈະເລົ້າໂລມ
ເຂົາແລະປ່ຽນຄວາມໂສກເສົ້າເປັນຄວາມມ່ວນຊື່ນ ຄວາມເສັ່ງໃຈຈະກາຍເປັນຄວາມຍິນດີ
14 ຈະເຮັດໃຫ້ປຸໂຣຫິດມີອາຫານກິນຢ່າງສົມບູນ ແລະຈະໃຫ້ປະຊາຊາດຂອງເຮົາມີທຸກຢ່າງຕາມຄວາມຕ້ອງການ ເຮົາ
ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ”
15 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ສຽງທີ່ໄດ້ຍິນຢູ່ໃນເມືອງຣາມານັ້ນ ເປັນສຽງຮ້ອງໄຫ້ດ້ວຍຄວາມຂົມຂື່ນ ນາງຣາເຊັນ
ຮ້ອງໄຫ້ ຍ້ອນລູກຂອງຕົນ ນາງບໍ່ຍອມຟັງສຽງເລົ້າໂລມ ຍ້ອນວ່າລູກຂອງນາງໄດ້ຕາຍແລ້ວ
16 ເຈົ້າຈົ່ງເຊົາຮ້ອງໄຫ້ແລະເຊັດນໍ້າຕາເສັ່ງ ເພາະວ່າຈະມີບຳເຫນັດສຳລັບຜົນງານທີ່ເຈົ້າໄດ້ເຮັດເພື່ອລູກຂອງເຈົ້າ ເຂົາ
ທັງຫລາຍຈະໄດ້ກັບມາຈາກແຜ່ນດິນຂອງສັດຕຣູ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ”
17 ຄວາມຫວັງຂອງເຈົ້າຍັງມີຢູ່ ເພາະວ່າລູກຫລານຂອງເຈົ້າຈະໄດ້ກັບມາອີກ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ”
18 ເຮົາໄດ້ຍິນຊາວອິສຣາເອນເວົ້າດ້ວຍຄວາມທຸກໃຈວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ພວກຂ້າພຣະອົງເປັນເຫມືອນງົວປ່າ
ທີ່ດື້ດ້ານ ແຕ່ ພຣະອົງຊົງສອນພວກຂ້າພຣະອົງໃຫ້ເຊື່ອຟັງ ຂໍຊົງໂຜດໃຫ້ພວກຂ້າພຣະອົງກັບຄືນຖ້ອນ ພຣະອົງຊົງ
ເປັນພຣະຜູ້ເປັນເຈົ້າຂອງພວກຂ້າພຣະອົງ
19 ພວກຂ້າພຣະອົງໄດ້ຫລົກຫນີຈາກພຣະອົງ ແຕ່ບໍ່ເຫິງພວກຂ້າພຣະອົງກໍຢາກຄືນມາອີກ ຫລັງຈາກພຣະອົງຊົງລົງ
ໂທດແລ້ວ ພວກຂ້າພຣະອົງກໍຕີຕົນເອງດ້ວຍຄວາມເສັ່ງໃຈ ແລະຮູ້ສຶກລະອາຍຂາຍຫນ້າ ເພາະວ່າໄດ້ເຮັດບາບເມື່ອ
ຄາວຍັງຫນຸ່ມ
20 ຊາວອິສຣາເອນເອີຍ ພວກເຈົ້າເປັນລູກທີ່ຮັກຍິ່ງຂອງເຮົາ ເມື່ອໃດເຮົາກ່າວເຖິງຊື່ຂອງພວກເຈົ້າ ເຮົາກໍຄິດເຖິງດ້ວຍ
ຄວາມຮັກແພງ ຈິດໃຈຂອງເຮົາຄິດເຖິງແຕ່ພວກເຈົ້າ ເຮົາຈະເມດຕາສົງສານພວກເຈົ້າ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວ
ດັ່ງນີ້ແຫລະ”
21 ຈົ່ງຫມາຍທາງທີ່ພວກເຈົ້າຈາກໄປນັ້ນ ຊາວອິສຣາເອນເອີຍ ຈົ່ງກັບຄືນມາບ້ານເມືອງທີ່ໄດ້ຈາກໄປ
22 ລູກທີ່ບໍ່ສັດຊື່ເອີຍ ຈະຍັງລັງເລໃຈຢູ່ດົນປານໃດ ເຮົາພຣະຜູ້ເປັນເຈົ້າໄດ້ສ້າງແນວໃຫມ່ຂຶ້ນມາແລ້ວ ຄືຜູ້ຍິງທີ່ອ່ອນແອ
ຈະແຂງແຮງເຫມືອນຜູ້ຊາຍ”
23 ພຣະຜູ້ເປັນເຈົ້າອົງມີອຳນາດຍິ່ງໃຫຍ່ຂອງອິສຣາເອນຊົງກ່າວວ່າ, “ເມື່ອເຮົາທຳໃຫ້ປະຊາຊົນກັບຄືນດີຄືເກົ່າແລ້ວ
ເຂົາທັງຫລາຍຈະກ່າວຖ້ອຍຄຳໃນແຜ່ນດິນຂອງຢູດາແລະໃນຫົວເມືອງຕ່າງໆອີກເທື່ອນຶ່ງວ່າ ຄື “ໂອ ທີ່ຢູ່ແຫ່ງຄວາ
ມຊອບທັມເອີຍ ພູທີ່ບໍຣິສຸດເອີຍ ຂໍພຣະຜູ້ເປັນເຈົ້າຊົງອວຍພຣະພອນເຈົ້າ”
24 ຢູດາແລະຫົວເມືອງທັງສິ້ນນັ້ນ ທັງບັນດາຊາວນາ ຄົນລ້ຽງສັດພ້ອມກັບສັດທັງຫມົດຈະອາສັຍຢູ່ດ້ວຍກັນທີ່ນັ້ນ
25 ເພາະເຮົາຈະໃຫ້ຈິດໃຈທີ່ເມື່ອຍມີແຮງຂຶ້ນ ແລະຈິດໃຈທີ່ອ່ອນຣະທວຍທຸກດວງເຮົາຈະໃຫ້ບໍຣິບູນ
26 ເມື່ອນັ້ນ ຂ້າພະເຈົ້າໄດ້ຕື່ນຂຶ້ນແລະມອງເບິ່ງ ແລະການຫລັບນອນຂອງຂ້າພະເຈົ້າຕື່ນຂຶ້ນດ້ວຍຄວາມຊື່ນບານ

Individual Retribution

27 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມື່ອເວລານັ້ນມາເຖິງ ເຮົາຈະເຮັດໃຫ້ປະເທດອິສຣາເອນແລະຢູດາ ເຕັມໄປດ້ວຍຄົນ
ແລະສັດທັງຫລາຍ
28 ແຕ່ກ່ອນເຮົາໄດ້ເຝົ້າເບິ່ງເພື່ອທຳລາຍເຂົາ ຄືເພື່ອຖອນອອກ ເພື່ອເຮັດໃຫ້ລົ້ມລົງແລະນຳເຫດຮ້າຍມາສັນໃດ ດັ່ງນັ້ນ
ເຮົາຈຶ່ງຈະເຝົ້າເບິ່ງເຂົາເພື່ອປູກຝັງແລະສ້າງຂຶ້ນສັນນັ້ນ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ”
29 ເມື່ອເວລານັ້ນມາເຖິງ ປະຊາຊົນຈະບໍ່ກ່າວຕໍ່ໄປອີກວ່າ, “ພໍ່ກິນຫມາກອະງຸ່ນດິບ ແຕ່ລູກຊໍ້າພັດເຂັດແຂ້ວ
30 ແຕ່ວ່າໃຜກໍຕາມທີ່ກິນຫມາກອະງຸ່ນດິບຈະຕ້ອງເຂັດແຂ້ວ ແລະທຸກຄົນທີ່ເຮັດບາບຈະຕ້ອງຕາຍຍ້ອນບາບນັ້ນ

A New Covenant

31 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມື່ອວັນເວລານັ້ນມາເຖິງ ເຮົາຈະໃຫ້ຄຳຫມັ້ນສັນຍາໃຫມ່ແກ່ປະຊາຊົນອິສຣາເອນ
ແລະຢູດາ

32 ຄຳຫມັ້ນສັນຍານີ້ຈະບໍ່ເຫມືອນທີ່ເຮົາໃຫ້ບັນພະບຸຣຸດຂອງເຂົາ ຄາວຈູງມືເຂົາອອກຈາກເອຢິບນັ້ນ ເຖິງແມ່ນເຮົາເປັນພຣະຜູ້ເປັນເຈົ້າຂອງເຂົາ ເຂົາກໍບໍ່ສັດຊື່ຕໍ່ຄຳຫມັ້ນສັນຍາທີ່ເຮົາໄດ້ໃຫ້ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ"

33 ເມື່ອເວລານັ້ນມາເຖິງ ເຮົາຈະໃຫ້ຄຳຫມັ້ນສັນຍາແກ່ປະຊາຊົນອິສຣາເອນດັ່ງນີ້ ຄືຈະບັນຈຸພຣະທັມຂອງເຮົາໄວ້ໃນຈິດໃຈຂອງເຂົາ ເຮົາຈະເປັນພຣະເຈົ້າຂອງເຂົາ ແລະເຂົາຈະເປັນໄພ່ພົນຂອງເຮົາ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ"

34 ຕໍ່ໄປຈະບໍ່ມີໃຜໃນພວກເຂົາສອນເພື່ອນບ້ານ ແລະພີ່ນ້ອງຂອງຕົນວ່າ ຈົ່ງຮູ້ຈັກພຣະຜູ້ເປັນເຈົ້າ ເພາະວ່າເຂົາທັງຫມົດຕັ້ງແຕ່ຜູ້ນ້ອຍທີ່ສຸດເຖິງຜູ້ໃຫຍ່ທີ່ສຸດຈະຮູ້ຈັກເຮົາ ເຮົາຈະໃຫ້ອະພັຍບາບແກ່ເຂົາ ແລະຈະບໍ່ຈົດຈຳຄວາມຜິດຂອງເຂົາອີກຕໍ່ໄປ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ"

35 ພຣະຜູ້ເປັນເຈົ້າຊົງໃຫ້ດວງອາທິດສ່ອງແສງໃນກາງເວັນ ແລະຊົງໃຫ້ເດືອນດາວສ່ອງແສງໃນກາງຄືນ ຊົງກວນໃຫ້ທະເລມີຄື້ນດັງສັ່ນສະເທືອນ ພຣະນາມຂອງພຣະອົງຄືພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່

36 ພຣະອົງຊົງສັນຍາວ່າ ຕາບໃດທີ່ໂລກນີ້ຍັງບໍ່ສູນສິ້ນໄປ ຕາບນັ້ນຊົນຊາດອິສຣາເອນກໍຈະຍັງຢູ່

37 ຖ້າວັດແທກຟ້າເບື້ອງເທິງ ແລະສຳຣວດຮາກຖານໂລກເບື້ອງລຸ່ມໄດ້ ພຣະອົງຈຶ່ງຈະປະຖິ້ມປະຊາຊົນອິສຣາເອນຍ້ອນຄວາມຊົ່ວທັງປວງຂອງເຂົານັ້ນ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ແຫລະ"

38 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເມື່ອເວລານັ້ນມາເຖິງ ເມືອງນີ້ທັງຫມົດຕັ້ງແຕ່ຫໍຄອຍຮານາເນນ ເຖິງປະຕູແຈຈະຖືກສ້າງຂຶ້ນໃຫມ່

39 ເສັ້ນເຂດແດນຈະຍາວໄປເຖິງເທິງພູ ກາເຣັບ ແລ້ວຈະລ້ຽວໄປເຖິງໂກອາ

40 ເຖິງຮ່ອມພູບ່ອນຝັງຊາກສົບກັບຂີ້ເທົ່າໄຟ ແລະທົ່ງນາທັງຫມົດຕາມລຳນ້ຳ ກິດໂຣນ ຈົນເຖິງປະຕູມ້າໄປທາງຕາເວັນອອກ ຈະເປັນບ່ອນສັກສິດສຳລັບເຮົາ ເມືອງນີ້ຈະບໍ່ຖືກຖອນຮາກຫລືທຳລາຍອີກຕໍ່ໄປ"

## 32 ເຢເຣມີຢາຊື້ນາທີ່ອານາໂທດ

Jeremiah Buys a Field During the Siege

1 ຖ້ອຍຄຳຊຶ່ງມາຈາກພຣະຜູ້ເປັນເຈົ້າມາເຖິງເຢເຣມີຢາໃນປີທີສິບແຫ່ງເຊເດກີຢາກະສັດຂອງຢູດາ ຊຶ່ງເປັນປີທີສິບແປດຂອງເນບູກາດເນັດຊາ

2 ຄັ້ງນັ້ນກອງທັບຂອງກະສັດແຫ່ງບາບີໂລນກຳລັງລ້ອມກຸງເຢຣູຊາເລັມຢູ່ ແລະເຢເຣມີຢາຜູ້ປະກາດພຣະທັມຖືກຂັງຢູ່ໃນບໍຣິເວນທະຫານຮັກສາພຣະອົງ ຊຶ່ງຢູ່ໃນພຣະຣາຊວັງຂອງກະສັດແຫ່ງຢູດາ

3 ເພາະເຊເດກີຢາກະສັດແຫ່ງຢູດາໄດ້ຂັງທ່ານໄວ້ກ່າວວ່າ, "ເປັນຫຍັງທ່ານຈຶ່ງປະກາດພຣະທັມແລະກ່າວວ່າ "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະມອບເມືອງນີ້ໄວ້ໃນມືຂອງກະສັດແຫ່ງບາບີໂລນ ແລະເຂົາຈະຍຶດເມືອງນີ້

4 ເຊເດກີຢາກະສັດແຫ່ງຢູດາຈະຫນີໄປບໍ່ພົ້ນຈາກມືຂອງຄົນຄັນເດອານ ແຕ່ຈະຖືກມອບໄວ້ໃນມືຂອງກະສັດແຫ່ງບາບີໂລນແນ່ນອນ ແລະຈະໄດ້ເວົ້າກັນປາກຕໍ່ປາກ ແລະເບິ່ງເຫັນຕາຕໍ່ຕາ

5 ແລະເຂົາຈະນຳເຊເດກີຢາໄປຍັງບາບີໂລນ ແລະທ່ານຈະຢູ່ທີ່ນັ້ນຈົນກວ່າເຮົາຈະໄປຢ້ຽມທ່ານ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ ຖ້າເຈົ້າຈະຕໍ່ສູ້ກັບຊາວຄັນເດອານ ເຈົ້າຈະເຮັດບໍ່ສຳເຣັດ"

6 ເຢເຣມີຢາທູນວ່າ, "ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາຍັງຂ້ານ້ອຍວ່າ

7 ເບິ່ງແມ, ຮານາເມນບຸດຊັນລູມອາວຂອງເຈົ້າຈະມາຫາເຈົ້າແລະກ່າວວ່າ "ຈົ່ງຊື້ນາຂອງຂ້າພະເຈົ້າຊຶ່ງຢູ່ທີ່ອານາໂທດເພາະວ່າສິດຂອງການໄຖ່ດ້ວຍການຊື້ນັ້ນເປັນຂອງທ່ານ"

8 ແລ້ວຮານາເມນລູກອ້າຍລູກນ້ອງຂອງຂ້າພະເຈົ້າມາຫາຂ້າພະເຈົ້າທີ່ບໍຣິເວນຂອງທະຫານຮັກສາພຣະອົງຖືກຕ້ອງຕາມພຣະຄຳຂອງພຣະຜູ້ເປັນເຈົ້າ ແລະເວົ້າກັບຂ້າພະເຈົ້າວ່າ "ຈົ່ງຊື້ນາຂອງຂ້າພະເຈົ້າຊຶ່ງຢູ່ທີ່ອານາໂທດໃນແຜ່ນ

ດິນເບັນຢາມິນ ເພາະສິດຂອງການຖືກັມມະສິດແລະການໄຖ່ເປັນຂອງທ່ານ ຈົ່ງຊື້ໄວ້ເຖີດ” ແລ້ວຂ້ານ້ອຍຈຶ່ງຊາບວ່າ
ນີ້ເປັນຖ້ອຍຄຳຂອງພຣະຜູ້ເປັນເຈົ້າ
9 “ແລະຂ້ານ້ອຍກໍຊື້ນາທີ່ອານາໂທດຈາກຮານາເມນລູກອ້າຍລູກນ້ອງຂອງຂ້ານ້ອຍ ແລະໄດ້ຊັ່ງເງິນໃຫ້ແກ່ເຂົາສິບ
ເຈັດເຊເກລ
10 ຂ້ານ້ອຍກໍລົງນາມໃນໃບຕາດິນປະທັບຕາໄວ້ ໄດ້ພຍານແລະເອົາຕາຊັ່ງຊັ່ງເງິນ
11 ແລ້ວຂ້ານ້ອຍກໍຮັບໃບຕາດິນຂອງການຊື້ທີ່ປະທັບຕາແລ້ວ ຊຶ່ງມີຂໍ້ຕົກລົງແລະເງື່ອນໄຂແລະສະບັບທີ່ເປີດຢູ່
12 ແລະຂ້ານ້ອຍກໍມອບໃບຕາດິນຂອງການຊື້ໃຫ້ແກ່ບາຣຸກບຸດເນຣີຢາ ຜູ້ເປັນບຸດມາຊັຍຢາ ຕໍ່ຫນ້າຮານາເມນລູກອ້າຍ
ລູກນ້ອງຂອງຂ້ານ້ອຍ ຕໍ່ຫນ້າພຍານຜູ້ທີ່ລົງນາມໃນໃບຊື້ຂາຍ ແລະຕໍ່ຫນ້າພວກຢິວ ຜູ້ຊຶ່ງນັ່ງຢູ່ໃນບໍຣິເວນທະຫານ
ຮັກສາພຣະອົງ
13 ຂ້ານ້ອຍກໍເວົ້າກັບບາຣຸກຕໍ່ຫນ້າເຂົາທັງຫລາຍວ່າ,
14 “ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ຈົ່ງເອົາໃບຕາດິນເຫລົ່ານີ້ໄປເສັຽ ທັງໃບຕາດິນ
ຂອງການຊື້ທີ່ປະທັບຕາກັບສະບັບທີ່ເປີດນີ້ ແລະບັນຈຸໄວ້ໃນພາຊນະດິນເພື່ອຈະທົນຢູ່ໄດ້ດົນນານ
15 ເພາະພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ບ້ານເຮືອນແລະໄຮ່ນາແລະສວນອະງຸ່ນຈະ
ມີການຊື້ຂາຍກັນອີກໃນແຜ່ນດິນນີ້”

Jeremiah Prays for Understanding

16 “ຫລັງຈາກທີ່ຂ້ານ້ອຍມອບໃບຕາດິນການຊື້ໃຫ້ແກ່ບາຣຸກ ບຸດເນຣີຢາແລ້ວ ຂ້ານ້ອຍໄດ້ອະທິຖານຕໍ່ພຣະຜູ້ເປັນເຈົ້າ
ວ່າ
17 “ຂ້າແດ່ພຣະຜູ້ເປັນເຈົ້າ ຄືພຣະອົງເອງ ຜູ້ໄດ້ຊົງສ້າງຟ້າສວັນແລະແຜ່ນດິນໂລກດ້ວຍຣິດທານຸພາບອັນຍິ່ງໃຫຍ່ຂອງ
ພຣະອົງ ແລະດ້ວຍພຣະຫັດຊຶ່ງຢຽດອອກຂອງພຣະອົງ ສຳລັບພຣະອົງບໍ່ມີສິ່ງໃດທີ່ຍາກເກີນໄປ
18 ຜູ້ຊົງສຳແດງຄວາມຮັກຫມັ້ນຄົງຕໍ່ຄົນເປັນພັນໆ ແຕ່ຊົງຕອບສນອງຄວາມຜິດບາບຂອງພໍ່ໃຫ້ຕົກເຖິງລູກຫລານສືບຕໍ່
ມາ ຂ້າແດ່ພຣະຜູ້ເປັນເຈົ້າຜູ້ຍິ່ງໃຫຍ່ແລະຊົງຣິດ ພຣະນາມຂອງພຣະອົງຄືພຣະຜູ້ເປັນເຈົ້າຈອມໂຍທາ
19 ພຣະອົງຊົງເປັນໃຫຍ່ໃນການໃຫ້ຄຳປຶກສາ ຊົງຣິດທານຸພາບໃນພຣະຣາຊກິດ ພຣະເນດຂອງພຣະອົງເຫັນທຸກວິຖີ
ທາງຂອງມະນຸດ ປະທານຮາງວັນແກ່ທຸກຄົນຕາມການປະພຶດຂອງເຂົາ ແລະຕາມຜົນແຫ່ງການກະທຳຂອງເຂົາ
20 ຊົງເປັນຜູ້ສຳແດງຫມາຍສຳຄັນແລະການອັສຈັນໃນແຜ່ນດິນເອຢິບ ແລະຈົນເຖິງສມັຍນີ້ກໍຊົງສຳແດງໃນອິສຣາເອນ
ແລະຖ້າມກາງມະນຸດຊົນ ແລະຊົງທຳໃຫ້ພຣະນາມຊ່າລືໄປເໝືອນທຸກວັນນີ້
21 ພຣະອົງໄດ້ຊົງນຳອິສຣາເອນໄພ່ພົນຂອງພຣະອົງອອກຈາກແຜ່ນດິນເອຢິບ ດ້ວຍຫມາຍສຳຄັນແລະການອັສຈັນ
ແລະດ້ວຍພຣະຫັດເຂັ້ມແຂງແລະພຣະກອນທີ່ຢຽດອອກ ແລະດ້ວຍຄວາມຫນ້າຢ້ານກົວຍິ່ງນັກ
22 ແລະພຣະອົງປະທານແຜ່ນດິນນີ້ແກ່ເຂົາທັງຫລາຍ ຊຶ່ງພຣະອົງຊົງສັນຍາແກ່ບັນພະບຸຣຸດຂອງເຂົາທັງຫລາຍວ່າຈະ
ປະທານແກ່ເຂົາ ຄືແຜ່ນດິນຊຶ່ງມີນ້ຳນົມແລະນ້ຳເຜີ້ງອັນບໍຣິບູນ
23 ແລະເຂົາທັງຫລາຍກໍໄດ້ເຂົ້າໄປແລະຖືກຳມະສິດແຜ່ນດິນນັ້ນ ແຕ່ເຂົາທັງຫລາຍບໍ່ໄດ້ເຊື່ອຟັງພຣະສຸຣະສຽງຂອງ
ພຣະອົງ ຫລືດຳເນີນຕາມພຣະທັມຂອງພຣະອົງ ສິ່ງຊຶ່ງພຣະອົງຊົງບັນຊາເຂົາໃຫ້ກະທຳນັ້ນ ເຂົາທັງຫລາຍບໍ່ໄດ້ກະ
ທຳເລີຍ ເຫດສັນນັ້ນພຣະອົງຊົງກະທຳໃຫ້ເຫດຮ້າຍທັງສິ້ນນີ້ມາເຖິງເຂົາທັງຫລາຍ
24 ເບິ່ງແມ, ເຄື່ອງປິດລ້ອມໄດ້ມາເຖິງກຸງເພື່ອຈະຍຶດເອົາແລ້ວແລະເພາະເຫດດ້ວຍດາບ ການອຶດຢາກອາຫານ ແລະ
ໂຣກລະບາດ ເມືອງນີ້ກໍໄດ້ຖືກມອບໄວ້ໃນມືຂອງຄົນຄັນເດອານຜູ້ກຳລັງຕໍ່ສູ້ຢູ່ນັ້ນແລ້ວ ພຣະອົງກ່າວສິ່ງໃດກໍເປັນໄປ
ຢ່າງນັ້ນແລ້ວ ແລະພຣະອົງຊົງທອດພຣະເນດເຫັນ
25 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຍັງຊົງກ່າວແກ່ຂ້າພຣະອົງວ່າ, “ຈົ່ງເອົາເງິນຊື້ນາແລະຫາພຍານ ສາ” ເຖິງແມ່ນເມືອງ
ນັ້ນຈະຖືກມອບໄວ້ໃນມືຂອງຄົນຄັນເດອານ”

### God’s Assurance of the People’s Return

26 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາຍັງເຢເຣມີຢາວ່າ,
27 ເບິ່ງແມ, ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງບັນດາມະນຸດແລະສັດທັງປວງ ສຳລັບເຮົາມີສິ່ງໃດທີ່ຍາກເກີນຫລື
28 ເຫດສັນນັ້ນພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາຈະມອບເມືອງນີ້ໄວ້ໃນມືຂອງຊາວຄັນເດອານ ແລະໃນມືຂອງເນ
ບຸກາດເນັດຊາກະສັດແຫ່ງບາບີໂລນແລະເຂົາຈະຍຶດເອົາ
29 ຊາວຄັນເດອານຜູ້ຕໍ່ສູ້ກັບເມືອງນີ້ ຈະມາເຜົາເມືອງນີ້ເສັຽດ້ວຍໄຟໃຫ້ໄຫມ້ຫມົດ ທັງບັນດາເຮືອນທີ່ເຂົາເຜົາເຄື່ອງ
ຖວາຍພຣະບາອານທີ່ເທິງຫລັງຄາ ແລະເທເຄື່ອງດື່ມບູຊາຖວາຍແກ່ພຣະອື່ນເພື່ອຍົວະເຍົ້າເຮົາໃຫ້ພິໂຣດ
30 ເພາະເຊື້ອສາຍຂອງອິສຣາເອນແລະເຊື້ອສາຍຂອງຢູດາບໍ່ໄດ້ກະທຳສິ່ງໃດເລີຍ ນອກຈາກຄວາມຊົ່ວໃນສາຍຕາຂອງ
ເຮົາຕັ້ງແຕ່ຫນຸ່ມໆມາ ພຣະຜູ້ເປັນເຈົ້າກ່າວວ່າ ເຊື້ອສາຍອິສຣາເອນບໍ່ໄດ້ກະທຳສິ່ງໃດເລີຍນອກຈາກຍົວະເຍົ້າໃຫ້ພິ
ໂຣດຈາກຜົນງານແຫ່ງມືຂອງເຂົາ
31 ເມືອງນີ້ໄດ້ເພີ້ມຄວາມຮ້າຍແລະຄວາມພິໂຣດຂອງເຮົາ ຕັ້ງແຕ່ວັນທີ່ໄດ້ສ້າງມັນຂຶ້ນຈົນເຖິງວັນນີ້ ເຫດສັນນັ້ນເຮົາຈະ
ຖອນອອກໄປເສັຽຈາກສາຍຕາຂອງເຮົາ
32 ເພາະວ່າຄວາມຊົ່ວທັງສິ້ນຂອງເຊື້ອສາຍອິສຣາເອນ ແລະເຊື້ອສາຍຢູດາ ຊຶ່ງເຂົາໄດ້ກະທຳທີ່ຍົວະເຍົ້າໃຫ້ພິໂຣດ ຄື
ທັງຕົວເຂົາ ບັນດາກະສັດແລະເຈົ້ານາຍຂອງເຂົາ ບັນດາປະໂຣຫິດແລະຜູ້ປະກາດພຣະທັມຂອງເຂົາ ຄົນຢູດາແລະ
ຊາວກຸງເຢຣູຊາເລັມ
33 ເຂົາທັງຫລາຍໄດ້ຫັນຫລັງໃຫ້ເຮົາ ບໍ່ແມ່ນຫັນຫນ້າ ເຖິງແມ່ນເຮົາໄດ້ສອນເຂົາຢູ່ຢ່າງບໍ່ຢຸດຢັ້ງ ເຂົາກໍບໍ່ໄດ້ຟັງທີ່ຈະຮັບ
ຄຳສັ່ງສອນຂອງເຮົາ
34 ແຕ່ເຂົາທັງຫລາຍໄດ້ຕັ້ງສິ່ງທີ່ຫນ້າລັງກຽດຂອງເຂົາໄວ້ໃນວິຫານ ຊຶ່ງເອີ້ນຕາມຊື່ຂອງເຮົາກະທຳໃຫ້ມົນທິນ
35 ເຂົາທັງຫລາຍໄດ້ສ້າງແທ່ນບູຊາສຳລັບພຣະບາອານໃນຮ່ອມພູແຫ່ງບຸດຊາຍຮິນໂນມ ເພື່ອຖວາຍບຸດຊາຍແລະບຸດ
ຍິງຂອງເຂົາແກ່ພຣະໂມເລກ ໂດຍໃຫ້ລຸຍໄຟ ເຖິງແມ່ນເຮົາບໍ່ໄດ້ບັນຊາເຂົາ ຫລືມີຢູ່ໃນຈິດໃຈຂອງເຮົາວ່າ ເຂົາຄວນ
ຈະກະທຳສິ່ງຫນ້າກຽດຊັງເພື່ອໃຫ້ຢູດາຜິດໄປ
36 “ເຫດສັນນັ້ນ ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວກັບເມືອງນີ້ແກ່ເຈົ້າທັງຫລາຍວ່າ ເມືອງນີ້ໄດ້ຖືກຍົກໃຫ້
ຢູ່ໃນມືຂອງກະສັດແຫ່ງບາບີໂລນ ດ້ວຍດາບ ດ້ວຍການອຶດຢາກ ແລະດ້ວຍໂຣກລະບາດ”
37 ເຮົາຈະຮວບຮວມເຂົາມາຈາກປະເທດທັງປວງ ຊຶ່ງເຮົາໄດ້ຂັບໄລ່ເຂົາໃຫ້ໄປຢູ່ ດ້ວຍຄວາມຮ້າຍ ດ້ວຍຄວາມພິໂຣດ
ແລະຄວາມຄຽດຂອງເຮົານັ້ນ ເຮົາຈະນຳເຂົາທັງຫລາຍກັບມາຍັງທີ່ນີ້ ແລະຈະກະທຳໃຫ້ເຂົາອາສັຍຢູ່ຢ່າງປອດພັຍ
38 ເຂົາທັງຫລາຍຈະເປັນໄພ່ພົນຂອງເຮົາ ແລະເຮົາຈະເປັນພຣະຜູ້ເປັນເຈົ້າຂອງເຂົາ
39 ເຮົາຈະໃຫ້ໃຈດຽວແລະທາງດຽວແກ່ເຂົາ ເພື່ອເຂົາຈະຢຳເກງເຮົາຕລອດໄປ ເພື່ອເປັນປໂຍດແກ່ເຂົາ ແລະແກ່ລູກ
ຫລານຂອງເຂົາທີ່ຕາມເຂົາມາ
40 ເຮົາຈະກະທຳຄຳຫມັ້ນສັນຍາອັນຕລອດໄປກັບເຂົາທັງຫລາຍ ເຮົາຈະບໍ່ຫັນຈາກການກະທຳຄວາມດີແກ່ເຂົາທັງ
ຫລາຍ ແລະເຮົາຈະບັນຈຸຄວາມຢຳເກງເຮົາໄວ້ໃນໃຈຂອງເຂົາທັງຫລາຍ ເພື່ອວ່າເຂົາຈະບໍ່ໄດ້ຫັນໄປຈາກເຮົາ
41 ເຮົາຈະຊົມຊື່ນຍິນດີໃນການທີ່ຈະກະທຳຄວາມດີແກ່ເຂົາ ແລະເຮົາຈະປູກເຂົາໄວ້ໃນແຜ່ນດິນນີ້ດ້ວຍຄວາມໝາຍ
ຫມັ້ນ ດ້ວຍສຸດໃຈຂອງເຮົາ ແລະສຸດຈິດຂອງເຮົາ
42 “ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາໄດ້ນຳຄວາມຮ້າຍຍິ່ງໃຫຍ່ມາເຫນືອຊົນຊາດນີ້ສັນໃດ ເຮົາຈະນຳຄວາມດີ
ທັງສິ້ນຊຶ່ງເຮົາໄດ້ສັນຍາໄວ້ນັ້ນມາເຫນືອເຂົາສັນນັ້ນ
43 ເຂົາຈະຊື້ຂາຍນາກັນໃນແຜ່ນດິນຊຶ່ງເຈົ້າກ່າວເຖິງວ່າເປັນທີ່ຮົກຮ້າງບໍ່ມີມະນຸດຫລືສັດ ຖືກມອບ ໄວ້ໃນມືຂອງຄົນຄັນ
ເດອານ

44 ທີ່ນານັ້ນຈະຊື້ກັນດ້ວຍເງິນ ໃບຊື້ຂາຍກໍຈະຕ້ອງລົງນາມແລະປະທັບຕາ ແລະລົງນາມພຍານ ທີ່ໃນແຜ່ນດິນຂອງເບັນ
ຢາມິນ ໃນທີ່ຕ່າງໆແຖວກຸງເຢຣູຊາເລັມ ແລະໃນຫົວເມືອງຢູດາ ໃນຫົວເມືອງແຖບແດນເຊຟາລາ ແລະໃນຫົວເມືອງ
ແຖວເນເກັບ ເພາະເຮົາຈະໃຫ້ເຂົາທັງຫລາຍກັບສູ່ສະພາບເດີມ" ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

## 33 ການໃຫ້ເຢຣູຊາເລັມກັບຄືນສູ່ສະພາບເດີມ

Healing after Punishment

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງເຢເຣມີຢາຄັ້ງທີສອງ ເມື່ອທ່ານຍັງຖືກກັກຂັງຢູ່ໃນບໍລິເວນຂອງທະຫານຮັກສາ
ພຣະອົງນັ້ນວ່າ,
2 "ພຣະຜູ້ເປັນເຈົ້າຊົງປັ້ນແຜ່ນດິນໂລກເພື່ອສະຖາປະນາໄວ້ ພຣະຜູ້ເປັນເຈົ້າຄືພຣະນາມຂອງພຣະອົງກ່າວດັ່ງນີ້ວ່າ
3 ຈົ່ງທູນເຮົາ ແລະເຮົາຈະຕອບເຈົ້າ ແລະຈະບອກສິ່ງທີ່ໃຫຍ່ຍິ່ງແລະທີ່ລີ້ຊ່ອນຢູ່ ຊຶ່ງເຈົ້າບໍ່ຮູ້ນັ້ນໃຫ້ແກ່ເຈົ້າ
4 ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນໄດ້ກ່າວດັ່ງນີ້ກ່ຽວດ້ວຍເຮື່ອງບ້ານເຮືອນໃນກຸງນີ້ ແລະພຣະຣາຊ
ວັງຂອງບັນດາກະສັດແຫ່ງຢູດາ ຊຶ່ງຖືກຮື້ລົງ ເພື່ອຕໍ່ຕ້ານການຖືກລ້ອມທາງດິນແລະດາບ
5 ເຂົາທັງຫລາຍຈະມາຮົບກັບຊາວຄັນເດອານແລະເຮັດໃຫ້ຄົນກາຍເປັນສົບເຕັມບ້ານເຕັມເຮືອນ ເປັນຄົນທີ່ເຮົາ
ສັງຫານດ້ວຍຄວາມຮ້າຍແລະຄວາມພິໂຣດຂອງເຮົາ ເພາະໄດ້ຫັນຫນ້າຂອງເຮົາຫນີຈາກກຸງນີ້ເຫດດ້ວຍຄວາມອະ
ທັມຂອງເຂົາທັງຫລາຍ
6 ເຮົາຈະນຳການປິ່ນປົວແລະຮັກສາມາໃຫ້ ແລະເຮົາຈະຮັກສາເຂົາທັງຫລາຍໃຫ້ຫາຍແລະປະກາດສັນຕິພາບແລະ
ຄວາມຫມັ້ນຄົງຢ່າງອຸດົມ
7 ເຮົາຈະໃຫ້ຢູດາແລະອິສຣາເອນກັບສູ່ສະພາບເດີມ ແລະສ້າງເຂົາທັງຫລາຍເສັຽໃຫມ່ດັ່ງທີ່ເຂົາເປັນມາແຕ່ເດີມນັ້ນ
8 ເຮົາຈະຊຳຣະເຂົາຈາກໂທດບາບຂອງເຂົາຊຶ່ງມີຕໍ່ເຮົາ ແລະຈະໃຫ້ອະພັຍໂທດບາບແລະການກະບົດຕໍ່ເຮົາ
9 ແລະກຸງນີ້ຈະໃຫ້ເຮົາມີຊື່ຊຶ່ງໃຫ້ຄວາມຊື່ນບານເປັນທີ່ສັຣເສີນແລະເປັນສັກສີຕໍ່ຫນ້າບັນດາປະຊາຊາດທັງຫລາຍແຫ່ງ
ແຜ່ນດິນໂລກ ຊຶ່ງຈະໄດ້ຍິນເຖິງຄວາມດີທັງປວງຊຶ່ງເຮົາໄດ້ກະທຳເພື່ອເຂົາທັງຫລາຍ ເຂົາຈະຢ້ານແລະສະທ້ານກົວ
ເພາະຄວາມດີແລະສັນຕິພາບທັງສິ້ນຊຶ່ງເຮົາໄດ້ຈັດຫາໃຫ້ເມືອງນັ້ນ
10 "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ໃນສະຖານທີ່ນີ້ຊຶ່ງເຈົ້າກ່າວວ່າ "ເປັນບ່ອນປະຮ້າງ ບໍ່ມີມະນຸດຫລືສັດ" ໃນຫົວເມືອງ
ແຫ່ງຢູດາແລະຕາມຖນົນກຸງເຢຣູຊາເລັມຊຶ່ງຮ້າງເປົ່າ ບໍ່ມີມະນຸດຫລືຊາວເມືອງຫລືສັດ
11 ທີ່ນັ້ນຈະໄດ້ຍິນສຽງບັນເທີງແລະສຽງລື່ນເລີງແລະສຽງເຈົ້າບ່າວແລະສຽງເຈົ້າສາວ ແລະສຽງບັນດາຄົນເຫລົ່ານັ້ນທີ່
ຮ້ອງເພງ ຂນະທີ່ເຂົານຳເຄື່ອງບູຊາໂມທະນາພຣະຄຸນມາຍັງພຣະວິຫານຂອງພຣະເຈົ້າວ່າ "ຈົ່ງຖວາຍໂມທະນາແດ່
ພຣະຜູ້ເປັນເຈົ້າຈອມໂຍທາ ເພາະພຣະຜູ້ເປັນເຈົ້າປະເສີດ ເພາະຄວາມຮັກຫມັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ
ເພາະເຮົາຈະໃຫ້ແຜ່ນດິນນັ້ນກັບສູ່ສະພາບເດີມ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
12 "ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ໃນສະຖານທີ່ນີ້ຊຶ່ງເປັນທີ່ປະຮ້າງ ບໍ່ມີມະນຸດຫລືສັດ ແລະທີ່ໃນຫົວເມືອງ
ທັງຫລາຍຂອງທີ່ນີ້ ຈະເປັນທີ່ອາສັຍຂອງຜູ້ລ້ຽງທີ່ຈະໃຫ້ຝູງແກະໄດ້ພັກເຊົາເມື່ອຍ
13 ພຣະຜູ້ເປັນເຈົ້າກ່າວວ່າ ໃນຫົວເມືອງແຖວແດນພູດອຍ ໃນຫົວເມືອງແຖວເນີນເຊເຟລາ ໃນຫົວເມືອງແຖວເນເກັບ
ໃນແຜ່ນດິນແຫ່ງເບັນຢາມິນ ຕາມສະຖານທີ່ຮອບກຸງເຢຣູຊາເລັມ ໃນຫົວເມືອງຢູດາຈະມີຝູງແກະຜ່ານໜ້າມືຂອງຜູ້
ທີ່ນັບອີກ

The Righteous Branch and the Covenant with David

14 "ພຣະຜູ້ເປັນເຈົ້າກ່າວວ່າ ເບິ່ງແມ, ວັນນັ້ນຈະມາເຖິງ ຄືເມື່ອເຮົາຈະໃຫ້ຄຳສັນຍາທີ່ເຮົາຈະກະທຳໄວ້ຕໍ່ເຊື້ອສາຍອິສ
ຣາເອນແລະເຊື້ອສາຍຂອງຢູດາສຳເຣັດ

15 ໃນວັນເຫລົ່ານັ້ນແລະໃນເວລານັ້ນ ເຮົາຈະໃຫ້ຍອດແຫ່ງຄວາມຊອບທັມເກີດມາເພື່ອດາວິດ ແລະທ່ານຈະໃຫ້ຄວາມ
ຍຸດຕິທັມແລະຄວາມຊອບທັມໃນແຜ່ນດິນນັ້ນ
16 ໃນການຄັ້ງນັ້ນ ຢູດາຈະໄດ້ຮັບການຊ່ອຍໃຫ້ພົ້ນແລະເຢຣູຊາເລັມຈະອາສັຍຢູ່ຢ່າງຫມັ້ນຄົງ ແລະນີ້ເປັນຊື່ຊຶ່ງເຂົາຈະ
ເອີ້ນເມືອງນັ້ນຄື "ພຣະຜູ້ເປັນເຈົ້າຊົງເປັນຄວາມຊອບທັມຂອງເຮົາ"
17 "ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ດາວິດຈະບໍ່ຂັດສົນບຸຣຸດທີ່ຈະປະທັບເທິງພຣະທີ່ນັ່ງແຫ່ງເຊື້ອສາຍອິສຣາເອນ
18 ແລະປະໂຣຫິດເຜົ່າເລວີຈະບໍ່ຂັດສົນບຸຣຸດທີ່ຢູ່ຕໍ່ຫນ້າເຮົາ ເພື່ອຖວາຍເຄື່ອງເຜົາບູຊາ ແລະເຜົາເຄື່ອງທັນຍາບູຊາ
ແລະກະທຳການສັກກາຣະບູຊາເປັນນິດ"
19 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາຍັງເຢເຣມີຢາວ່າ,
20 "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຖ້າເຈົ້າຫັກຄຳຫມັ້ນສັນຍາຂອງເຮົາດ້ວຍມື້ແລະຫັກຄຳຫມັ້ນສັນຍາຂອງເຮົາດ້ວຍຄືນ
ໄດ້ ຈົນມື້ແລະຄືນມາເຖິງຕາມເວລາກຳນົດບໍ່ໄດ້
21 ແລ້ວຈຶ່ງຈະຫັກຄຳຫມັ້ນສັນຍາຂອງເຮົາຊຶ່ງມີຕໍ່ດາວິດຜູ້ຮັບໃຊ້ຂອງເຮົາໄດ້ ຈົນທ່ານບໍ່ມີໂອຣົດທີ່ຈະສເວີຍຣາຊເທິງ
ພຣະທີ່ນັ່ງຂອງທ່ານ ແລະຫັກຄຳຫມັ້ນສັນຍາຂອງເຮົາຊຶ່ງມີຕໍ່ປະໂຣຫິດເຜົ່າເລວີຜູ້ປົວລະບັດຂອງເຮົາໄດ້
22 ບໍຣິວານຂອງຟ້າສວັນຈະນັບບໍ່ໄດ້ ແລະເມັດຊາຍທີ່ທະເລກໍຕວງບໍ່ໄດ້ສັນໃດ ເຮົາກໍຈະໃຫ້ເຊື້ອສາຍຂອງດາວິດຜູ້ຮັບ
ໃຊ້ຂອງເຮົາແລະປະໂຣຫິດເຜົ່າເລວີຜູ້ປົວລະບັດຂອງເຮົາທະວີຫລາຍຂຶ້ນສັນນັ້ນ"
23 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງເຢເຣມີຢາວ່າ,
24 "ເຈົ້າບໍ່ໄດ້ສັງເກດເຫັນດອກຫລືວ່າ ປະຊາຊົນເຫລົ່ານີ້ເວົ້າກັນຢ່າງໃດ ຄືເວົ້າກັນວ່າ "ພຣະຜູ້ເປັນເຈົ້າຊົງປະຖິ້ມສອງ
ຕະກູນທີ່ພຣະອົງຊົງເລືອກໄວ້ເສັຽແລ້ວ" ດັ່ງນີ້ແຫລະ ເຂົາທັງຫລາຍໄດ້ດູຫມິ່ນໄພ່ພົນຂອງເຮົາ ສັນນີ້ເຂົາຈຶ່ງບໍ່ເປັນ
ປະຊາຊາດໃນສາຍຕາຂອງເຂົາທັງຫລາຍອີກຕໍ່ໄປ
25 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຖ້າເຮົາບໍ່ໄດ້ສະຖາປະນາຄຳຫມັ້ນສັນຍາຂອງເຮົາກັບມື້ແລະຄືນ ແລະສະຖາປະນາກົດ
ຕ່າງໆຂອງຟ້າສວັນແລະແຜ່ນດິນໂລກແລ້ວ
26 ເຮົາຈຶ່ງຈະປະຖິ້ມເຊື້ອສາຍຂອງຢາໂຄບແລະດາວິດຜູ້ຮັບໃຊ້ຂອງເຮົາ ແລະຈະບໍ່ເລືອກຜູ້ນຶ່ງຈາກເຊື້ອສາຍຂອງເຂົາ
ໃຫ້ປົກຄອງເຫນືອເຊື້ອສາຍຂອງອັບຣາຮາມ ອີຊາກ ແລະຢາໂຄບ ເພາະເຮົາຈະໃຫ້ເຂົາກັບສູ່ສະພາບເດີມ ແລະຈະ
ມີຄວາມກະຣຸນາເຫນືອເຂົາ"

## 34 ຄຳທີ່ເຢເຣມີຢາເຕືອນເຊເດກີຢາ

Death in Captivity Predicted for Zedekiah

1 ຖ້ອຍຄຳຊຶ່ງມາຈາກພຣະຜູ້ເປັນເຈົ້າມາເຖິງເຢເຣມີຢາ ເມື່ອເນບູກາດເນັດຊາກະສັດແຫ່ງບາບີໂລນ ແລະກອງທັບທັງ
ຫມົດຂອງພຣະອົງແລະບັນດາຣາຊອານາຈັກໃນແຜ່ນດິນໂລກຊຶ່ງຢູ່ໃຕ້ການປົກຄອງຂອງພຣະອົງ ແລະຊົນຊາດທັງ
ຫລາຍທີ່ຕໍ່ສູ້ກັບກຸງເຢຣູຊາເລັມ ແລະຫົວເມືອງທັງປວງຂອງກຸງນັ້ນວ່າ
2 "ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ຈົ່ງໄປເວົ້າກັບເຊເດກີຢາກະສັດແຫ່ງຢູດາ ແລະກ່າວແກ່
ທ່ານວ່າ "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະມອບກຸງນີ້ໄວ້ໃນມືຂອງກະສັດບາບີໂລນ ແລະເຂົາຈະເຜົາ
ເສັຽດ້ວຍໄຟ
3 ທ່ານຈະບໍ່ລອດໄປຈາກມືຂອງເຂົາ ແຕ່ຈະຖືກຈັບແນ່ນອນ ແລະຖືກມອບໄວ້ໃນມືຂອງເຂົາ ທ່ານຈະໄດ້ເຫັນກະສັດ
ແຫ່ງບາບີໂລນຕາຕໍ່ຕາ ແລະຈະໄດ້ເວົ້າກັນປາກຕໍ່ປາກ ແລະທ່ານຈະຕ້ອງໄປຍັງບາບີໂລນ"
4 ຂ້າແດ່ເຊເດກີຢາກະສັດແຫ່ງຢູດາ ຢ່າງໃດກໍດີ ຂໍຊົງຮັບຟັງຖ້ອຍຄຳຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າກ່າວກ່ຽວ
ກັບພຣະອົງດັ່ງນີ້ວ່າ ທ່ານຈະບໍ່ຕາຍດ້ວຍດາບ

5 ທ່ານຈະຕາຍດ້ວຍຄວາມສງົບ ແລະເຂົາເຜົາເຄື່ອງຫອມເພື່ອສົບບັນພະບຸຣຸດຂອງທ່ານ ຄືບັນດາກະສັດຊຶ່ງຢູ່ກ່ອນ
ທ່ານສັນໃດ ເຂົາກໍຈະເຜົາເຄື່ອງຫອມເພື່ອທ່ານວ່າ "ອະນິດຈາເອີຍ, ພຣະອົງເຈົ້າຂ້າ" ເພາະເຮົາໄດ້ກ່າວໄວ້ແລ້ວ
ພຣະຜູ້ເປັນເຈົ້າກ່າວໄວ້ດັ່ງນີ້ແຫລະ
6 ແລ້ວເຢເຣມີຢາຜູ້ປະກາດພຣະທັມໄດ້ທູນຖ້ອຍຄຳເຫລົ່ານີ້ຕໍ່ເຊເດກີຢາກະສັດແຫ່ງຢູດາໃນກຸງເຢຣູຊາເລັມ
7 ຂນະເມື່ອກອງທັບຂອງກະສັດແຫ່ງບາບີໂລນກຳລັງສູ້ຮົບກຸງເຢຣູຊາເລັມແລະຫົວເມືອງແຫ່ງຢູດາທັງໝົດທີ່ຍັງເຫລືອ
ຢູ່ ຄືເມືອງລາຄີສ ແລະເມືອງອາເຊກາ ເພາະຍັງເຫລືອຢູ່ສອງເມືອງນີ້ເທົ່ານັ້ນທີ່ເປັນຫົວເມືອງຢູດາທີ່ມີກຳແພງປ້ອມ

Treacherous Treatment of Slaves

8 ຖ້ອຍຄຳຊຶ່ງມາຈາກພຣະຜູ້ເປັນເຈົ້າມາເຖິງເຢເຣມີຢາ ຫລັງຈາກທີ່ກະສັດເຊເດກີຢາໄດ້ຊົງກະທຳພັນທະສັນຍາກັບ
ປະຊາຊົນໃນກຸງເຢຣູຊາເລັມ ວ່າຈະປ່າວປະກາດເຣື່ອງອິສຣະພາບແກ່ເຂົາທັງຫລາຍດັ່ງນີ້
9 ໃຫ້ທຸກຄົນປ່ອຍທາດເຮັບເຣີຂອງຕົນທັງຊາຍແລະຍິງເສັງໃຫ້ເປັນອິສຣະ ເພື່ອວ່າຈະບໍ່ມີຜູ້ໃດກະທຳໃຫ້ຍີວພີ່ນ້ອງ
ຂອງຕົນເປັນທາດ
10 ແລະເຂົາທັງຫລາຍກໍເຊື່ອຟັງ ຄືທັງບັນດາເຈົ້ານາຍແລະບັນດາປະຊາຊົນຜູ້ເຂົ້າກະທຳຄຳສັນຍາວ່າທຸກຄົນຈະປ່ອຍ
ທາດຂອງຕົນທັງຊາຍແລະຍິງ ເພື່ອວ່າເຂົາທັງຫລາຍຈະບໍ່ຖືກກະທຳໃຫ້ເປັນທາດອີກ ເຂົາທັງຫລາຍກໍໄດ້ເຊື່ອຟັງ
ແລະປ່ອຍທາດໃຫ້ເປັນອິສຣະ
11 ແຕ່ພາຍຫລັງເຂົາໄດ້ຫວນກັບແລະຈັບທາດຊາຍແລະຍິງຊຶ່ງເຂົາໄດ້ປ່ອຍໃຫ້ເປັນອິສຣະນັ້ນມາໃຫ້ຢູ່ໃຕ້ບັງຄັບຂອງ
ການເປັນທາດອີກ
12 ພຣະຄຳແຫ່ງພຣະຜູ້ເປັນເຈົ້າມາຍັງເຢເຣມີຢາຈາກພຣະຜູ້ເປັນເຈົ້າວ່າ,
13 "ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເຮົາໄດ້ກະທຳຄຳຫມັ້ນສັນຍາກັບບັນພະບຸຣຸດຂອງເຈົ້າ ເມື່ອ
ເຮົານຳເຂົາອອກມາຈາກແຜ່ນດິນເອຢິບ ອອກຈາກເຮືອນທາດວ່າ
14 ເມື່ອສິ້ນເຈັດປີແລ້ວເຈົ້າທຸກຄົນຈະຕ້ອງປ່ອຍພີ່ນ້ອງເຮັບເຣີຜູ້ທີ່ເຂົາເອົາມາຂາຍໄວ້ກັບເຈົ້າ ແລະໄດ້ຮັບໃຊ້ເຈົ້າມາ
ຫົກປີ ເຈົ້າຕ້ອງປ່ອຍເຂົາໃຫ້ເປັນອິສຣະພົ້ນຈາກການຮັບໃຊ້ເຈົ້າ ແຕ່ບັນພະບຸຣຸດຂອງເຈົ້າບໍ່ເຊື່ອຟັງເຮົາ ແລະບໍ່ງ່ງຫູ
ຟັງເຮົາ
15 ເມື່ອໄວໆນີ້ເຈົ້າໄດ້ກັບໃຈແລະກະທຳສິ່ງຊຶ່ງຖືກຕ້ອງໃນສາຍຕາຂອງເຮົາໂດຍການປະກາດອິສຣະພາບທຸກຄົນຕໍ່
ເພື່ອນບ້ານຂອງຕົນ ແລະເຈົ້າໄດ້ກະທຳຄຳສັນຍາຕໍ່ຫນ້າເຮົາໃນວິຫານຊຶ່ງເອີ້ນຕາມຊື່ຂອງເຮົາ
16 ແຕ່ແລ້ວເຈົ້າກັບຫວນຄືນກະທຳໃຫ້ນາມຂອງເຮົາເປັນມົນທິນ ໃນເມື່ອເຈົ້າທຸກຄົນຈັບທາດຊາຍຍິງຂອງເຈົ້າ ຊຶ່ງເຈົ້າ
ໄດ້ປ່ອຍໃຫ້ເປັນອິສຣະໄປຕາມຄວາມປາຖນາຂອງເຂົາທັງຫລາຍແລ້ວນັ້ນກັບມາໃຫ້ຢູ່ໃຕ້ບັງຄັບຂອງການເປັນທາດ
ອີກ
17 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈຶ່ງກ່າວດັ່ງນີ້ວ່າ ເຈົ້າທັງຫລາຍບໍ່ໄດ້ເຊື່ອຟັງເຮົາດ້ວຍການປ່າວຮ້ອງເຣື່ອງອິສຣະພາບຕໍ່
ພີ່ນ້ອງແລະເພື່ອນບ້ານຂອງຕົນ ພຣະຜູ້ເປັນເຈົ້າກ່າວວ່າ ເບິ່ງແມ, ເຮົາປ່າວຮ້ອງວ່າ ເຈົ້າທັງຫລາຍເປັນອິສຣະຕໍ່ດາບ
ຕໍ່ໂຣກລະບາດ ແລະຕໍ່ການອຶດຢາກ ເຮົາຈະກະທຳເຈົ້າໃຫ້ເປັນທີ່ໜ້າຢ້ານກົວແກ່ບັນດາຣາຊອານາຈັກຂອງແຜ່ນດິນ
ໂລກ
18 ແລະຄົນທີ່ກະທຳຜິດຕໍ່ຄຳຫມັ້ນສັນຍາຂອງເຮົາ ແລະບໍ່ໄດ້ກະທຳຕາມຂໍ້ຕົກລົງໃນຄຳຫມັ້ນສັນຍາຊຶ່ງເຮົາໄດ້ກະທຳຕໍ່
ຫນ້າເຮົານັ້ນ ແລະເຮົາຈະກະທຳໃຫ້ເຂົາເຫລົ່ານັ້ນເປັນເຫມືອນລູກງົວທີ່ເຂົາຕັດອອກເປັນສອງທ່ອນ ແລະເດີນຜ່ານ
ກາງທ່ອນເຫລົ່ານັ້ນໄປ
19 ເຈົ້ານາຍແຫ່ງຢູດາກໍດີ ເຈົ້ານາຍແຫ່ງກຸງເຢຣູຊາເລັມກໍດີ ຂັນທີກໍດີ ປຸໂຣຫິດແລະບັນດາປະຊາຊົນແຫ່ງແຜ່ນດິນນັ້ນ
ກໍດີ ຜູ້ຜ່ານລະຫວ່າງທ່ອນລູກງົວນັ້ນ

20 ເຮົາຈະມອບເຂົາໄວ້ໃນມືສັດຕຣູຂອງເຂົາ ແລະໃນມືຂອງບັນດາຜູ້ທີ່ສແວງຫາຊີວິດຂອງເຂົາ ສົບຂອງເຂົາຈະເປັນອາ
ຫານຂອງນົກໃນອາກາດແລະຂອງສັດໃນແຜ່ນດິນໂລກ
21 ສ່ວນເຊເດກີຢາກະສັດແຫ່ງຢູດາແລະເຈົ້ານາຍທັງຫລາຍຂອງເຂົານັ້ນ ເຮົາຈະມອບໄວ້ໃນມືສັດຕຣູຂອງເຂົາແລະໃນ
ມືຂອງບັນດາຜູ້ທີ່ສແວງຫາຊີວິດຂອງເຂົາ ໃນມືຂອງກອງທັບແຫ່ງກະສັດບາບີໂລນຊຶ່ງໄດ້ຖອຍໄປຈາກເຈົ້າແລ້ວນັ້ນ
22 ພຣະຜູ້ເປັນເຈົ້າກ່າວວ່າ ເບິ່ງແມ, ເຮົາຈະບັນຊາແລະຈະນຳເຂົາກັບມາຍັງກຸງນີ້ ແລະເຂົາຈະສູ້ຮົບກັບເມືອງນັ້ນຍຶດ
ເອົາຈົນໄດ້ ແລະເຜົາເສັຽດ້ວຍໄຟ ເຮົາຈະກະທຳໃຫ້ຫົວເມືອງຢູດາເປັນທີ່ຮ້າງເປົ່າບໍ່ມີຄົນອາສັຍ"

## 35 ຄວາມເຊື່ອຟັງຂອງຄົນຕະກູນເຣການ

The Rechabites Commended

1 ຖ້ອຍຄຳຊຶ່ງມາຈາກພຣະຜູ້ເປັນເຈົ້າເຖິງເຢເຣມີຢາໃນຣັຊການເຢໂຮອາກີມ ຣາຊບຸດຂອງໂຢຊີຢາກະສັດແຫ່ງຢູດາ
ວ່າ,
2 "ຈົ່ງໄປຫາຄົນຕະກູນເຣການແລະເວົ້າກັບເຂົາ ແລະນຳເຂົາມາທີ່ພຣະວິຫານຂອງພຣະຜູ້ເປັນເຈົ້າ ເຂົ້າມາໃນຫ້ອງ
ທາງຂ້າງຫ້ອງນຶ່ງ ແລ້ວເຊີນໃຫ້ເຂົາດື່ມເຫລົ້າອະງຸ່ນ"
3 ດັ່ງນັ້ນ ຂ້າພະເຈົ້າຈຶ່ງນຳຢາອາຊັນຢາ ລູກເຢເຣມີຢາຜູ້ເປັນລູກຮາບັສຊີນຢາ ແລະພີ່ນ້ອງຂອງເຂົາ ແລະລູກຊາຍ
ຂອງເຂົາທັງຫມົດ ແລະຄົນຕະກູນເຣການ
4 ຂ້າພະເຈົ້ານຳເຂົາມາຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ ມາໃນຫ້ອງທາງຂ້າງຂອງລູກຊາຍຂອງຮານານ ຜູ້ເປັນລູກ
ອີກດາລີຢາ ຜູ້ເປັນຄົນຂອງພຣະເຈົ້າ ຊຶ່ງຢູ່ໃກ້ກັບຫ້ອງທາງຂ້າງຂອງເຈົ້ານາຍ ເຫນືອຫ້ອງທາງຂ້າງຂອງມາອາຊີຢາ
ບຸດຊັນລູມ ຜູ້ດູແລປະຕູ
5 ແລ້ວຂ້າພະເຈົ້າກໍວາງຖົງເຫລົ້າອະງຸ່ນແລະຈອກຫລາຍຫນ່ວຍໄວ້ຫນ້າຄົນຕະກູນເຣການ ແລະຂ້າພະເຈົ້າເວົ້າກັບ
ເຂົາທັງຫລາຍວ່າ "ເຊີນດື່ມເຫລົ້າອະງຸ່ນ"
6 ແຕ່ເຂົາທັງຫລາຍຕອບວ່າ, "ເຮົາບໍ່ດື່ມເຫລົ້າອະງຸ່ນ ເພາະໂຢນາດາບບຸດເຣການຜູ້ເປັນບິດາຂອງເຮົາໄດ້ສັ່ງເຮົາວ່າ
"ເຈົ້າທັງຫລາຍຢ່າດື່ມເຫລົ້າອະງຸ່ນ ທັງຕົວເຈົ້າແລະລູກຫລານຂອງເຈົ້າຕລອດໄປ
7 ເຈົ້າຢ່າສ້າງເຮືອນ ເຈົ້າຢ່າຫວ່ານພືດ ເຈົ້າຢ່າປູກຫລືມີສວນອະງຸ່ນ ແລະເຈົ້າຈົ່ງຢູ່ໃນເຕັນຕລອດຊີວິດຂອງເຈົ້າ ເພື່ອ
ເຈົ້າຈະມີຊີວິດຍືນນານໃນແຜ່ນດິນຊຶ່ງເຈົ້າອາສັຍຢູ່"
8 ເຮົາທັງຫລາຍໄດ້ເຊື່ອຟັງສຽງຂອງໂຢນາດາບລູກເຣການຜູ້ເປັນພໍ່ຂອງເຮົາໃນສິ່ງທັງປວງຊຶ່ງທ່ານໄດ້ສັ່ງເຮົາ ຄືບໍ່ດື່ມ
ເຫລົ້າອະງຸ່ນຕລອດຊີວິດຂອງເຮົາ ທັງຕົວເຮົາ ພັຣຍາ ລູກຊາຍ ລູກຍິງຂອງເຮົາ
9 ແລະບໍ່ສ້າງເຮືອນເພື່ອຈະອາສັຍຢູ່ ເຮົາບໍ່ມີສວນອະງຸ່ນຫລືນາຫລືພືດ
10 ແຕ່ເຮົາເຄີຍຢູ່ໃນເຕັນ ແລະໄດ້ເຊື່ອຟັງແລະກະທຳທຸກສິ່ງຊຶ່ງໂຢນາດາບພໍ່ຂອງເຮົາໄດ້ສັ່ງໄວ້
11 ແຕ່ເມື່ອເນບູກາດເນັດຊາກະສັດແຫ່ງບາບີໂລນໄດ້ຍົກມາຕໍ່ສູ້ກັບແຜ່ນດິນນີ້ ເຮົາເວົ້າວ່າ "ມາເຖີດ ໃຫ້ເຮົາໄປຍັງກຸງ
ເຢຣູຊາເລັມເພາະຢ້ານກອງທັບຄົນຄັນເດອານ ແລະກອງທັບຄົນຊີເຣັຽ" ດັ່ງນັ້ນເຮົາຈຶ່ງຢູ່ໃນກຸງເຢຣູຊາເລັມ"
12 ແລ້ວຖ້ອຍຄຳຂອງພຣະຜູ້ເປັນເຈົ້າຈຶ່ງມາເຖິງເຢເຣມີຢາວ່າ,
13 "ພຣະຜູ້ເປັນເຈົ້າຈອມໂຍທາພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ຈົ່ງໄປບອກບັນດາຜູ້ຊາຍຂອງຢູດາ ແລະບອກ
ຊາວເຢຣູຊາເລັມວ່າ ພຣະຜູ້ເປັນເຈົ້າກ່າວວ່າ ເຈົ້າຈະບໍ່ຮັບຄຳແນະນຳແລະເຊື່ອຟັງຖ້ອຍຄຳຂອງເຮົາຫລື
14 ຄຳສັ່ງໂຢນາດາບລູກເຣການໃຫ້ໄວ້ແກ່ລູກຊາຍທັງຫລາຍຂອງຕົນ ບໍ່ໃຫ້ດື່ມເຫລົ້າອະງຸ່ນນັ້ນ ເຂົາກໍໄດ້ຮັກສາກັນໄວ້
ແລ້ວ ແລະເຂົາທັງຫລາຍບໍ່ໄດ້ດື່ມເລີຍຈົນເຖິງວັນນີ້ ເພາະເຂົາທັງຫລາຍໄດ້ເຊື່ອຟັງຄຳສັ່ງແຫ່ງຜູ້ເປັນພໍ່ຂອງເຂົາ ແຕ່
ເຮົາໄດ້ເວົ້າກັບພວກເຈົ້າຢ່າງບໍ່ຢຸດຢັ້ງ ແຕ່ເຈົ້າທັງຫລາຍບໍ່ໄດ້ຟັງເຮົາເລີຍ

15 ເຮົາໄດ້ສົ່ງບັນດາຜູ້ຮັບໃຊ້ຂອງເຮົາຄືຜູ້ປະກາດພຣະທັມມາຫາເຈົ້າສົ່ງເຂົາມາຢ່າງບໍ່ຢຸດຢັ້ງກ່າວວ່າ, "ບັດນີ້ເຈົ້າທຸກ
ຄົນຈົ່ງຫັນກັບຈາກທາງຊົ່ວຂອງຕົນ ແລະແກ້ໄຂການກະທຳຂອງເຈົ້າທັງຫລາຍເສັຽ ຢ່າໄປຕິດຕາມພຣະອື່ນເພື່ອບົວ
ລະບັດພຣະເຫລົ່ານັ້ນ ແລ້ວເຈົ້າຈະໄດ້ອາສັຍຢູ່ໃນແຜ່ນດິນຊຶ່ງເຮົາໄດ້ປະທານແກ່ເຈົ້າແລະບັນພະບຸຣຸດຂອງເຈົ້າ"
ແຕ່ເຈົ້າບໍ່ໄດ້ງ່ຽງຫູຫລືຟັງເຮົາ
16 ລູກທັງຫລາຍຂອງໂຢນາດາບລູກຂອງເຣກາບ ໄດ້ຮັກສາຄຳສັ່ງຊຶ່ງພໍ່ຂອງເຂົາໄດ້ສັ່ງໄວ້ ແຕ່ຊົນຊາດນີ້ບໍ່ໄດ້ເຊື່ອຟັງ
ເຮົາ
17 ເຫດສັນນີ້ພຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເບິ່ງແມ, ເຮົານຳໂທດທັງໝົດ
ຊຶ່ງເຮົາປະກາດໄວ້ມາຢູ່ເຫນືອຢູດາ ແລະບັນດາຊາວກຸງເຢຣູຊາເລັມ ເພາະວ່າເຮົາເວົ້າກັບເຂົາທັງຫລາຍແລະເຂົາກໍ
ບໍ່ຟັງ ເຮົາໄດ້ເອີ້ນເຂົາແລະເຂົາບໍ່ຂານຕອບ"
18 ແຕ່ເຢເຣມີຢາໄດ້ເວົ້າກັບຕະກູນເຣກາບວ່າ, "ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ
ເພາະວ່າເຈົ້າໄດ້ເຊື່ອຟັງຄຳສັ່ງຂອງໂຢນາດາບພໍ່ຂອງເຈົ້າແລະຖືຮັກສາຂໍ້ບັງຄັບຂອງທ່ານທັງໝົດ ແລະກະທຳທຸກ
ຢ່າງທີ່ທ່ານສັ່ງເຈົ້າ
19 ເຫດສະນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນດ່າວດັ່ງນີ້ວ່າ ໂຢນາດາບບຸດເຣກາບຈະບໍ່ຂັດສົນ
ຜູ້ຊາຍທີ່ຢືນຢູ່ຕໍ່ຫນ້າເຮົາເລີຍ"

## 36 ບາຣຸກອ່ານຫນັງສືມ້ວນໃນວິຫານ

The Scroll Read in the Temple

1 ໃນປີທີສີ່ແຫ່ງຣັຊການເຢຮົວອາກິມກະສັດແຫ່ງຢູດາ ພຣະຣາຊໂອຣົດຂອງໂຢຊີຢານັ້ນ ຖ້ອຍຄຳຕໍ່ໄປນີ້ມາຈາກພຣະ
ຜູ້ເປັນເຈົ້າເຖິງເຢເຣມີຢາວ່າ,
2 "ເຈົ້າຈົ່ງເອົາເຈັ້ຽມ້ວນນຶ່ງມາ ແລ້ວຂຽນຖ້ອຍຄຳທັງຫມົດທີ່ກ່ຽວກັບອິສຣາເອນ ຢູດາແລະຊົນຊາດທັງປວງທີ່ເຮົາໄດ້
ບອກເຈົ້າຕັ້ງແຕ່ຄາວໂຢຊີຢາເປັນກະສັດຈົນເຖິງທຸກມື້ນີ້ລົງໃນເຈັ້ຽນັ້ນ
3 ບາງທີເມື່ອປະຊາຊົນຢູດາໄດ້ຍິນເຣື່ອງການທຳລາຍທີ່ເຮົາຕັ້ງໃຈຈະນຳມາຍັງເຂົານັ້ນ ພວກເຂົາທຸກຄົນອາດຫລີກ
ຫນີຈາກທາງຊົ່ວຮ້າຍເສັຽ ແລ້ວເຮົາກໍຈະໃຫ້ອະພັຍບາບແລະຄວາມຊົ່ວຮ້າຍແກ່ເຂົາ"
4 ດັ່ງນັ້ນເຢເຣມີຢາຈຶ່ງໃຫ້ບາຣຸກບຸດເນຣີຢາຂຽນທຸກສິ່ງທີ່ພຣະຜູ້ເປັນເຈົ້າຊົງບອກລົງໃນເຈັ້ຽນັ້ນ
5 ເຢເຣມີຢາໄດ້ບອກບາຣຸກວ່າ, "ຂ້າພະເຈົ້ານັ້ນຖືກຫ້າມບໍ່ໃຫ້ໄປວິຫານອີກຕໍ່ໄປ
6 ສະນັ້ນຂ້າພະເຈົ້າຈຶ່ງຢາກໃຫ້ທ່ານໄປທີ່ນັ້ນໃນວັນປະຊາຊົນຖືສິນອົດອາຫານ ແລ້ວຈົ່ງອ່ານຫນັງສືມ້ວນທີ່ທ່ານໄດ້
ຂຽນຕາມຄຳບອກຂອງຂ້າພະເຈົ້າໃຫ້ປະຊາຊົນຟັງ ຮວມທັງປະຊາຊົນທີ່ມາຈາກຫົວເມືອງຕ່າງໆດ້ວຍ ເພື່ອໃຫ້ເຂົາ
ໄດ້ຍິນທຸກສິ່ງທີ່ພຣະຜູ້ເປັນເຈົ້າຊົງໄດ້ບອກຂ້າພະເຈົ້າ
7 ແລ້ວເຂົາອາດຈະອ້ອນວອນຕໍ່ພຣະຜູ້ເປັນເຈົ້າ ແລະຫລີກຫນີຈາກທາງຊົ່ວກໍໄດ້ ເພາະວ່າພຣະຜູ້ເປັນເຈົ້າໄດ້ຊົງຂົ່ມຂູ່
ປະຊາຊົນນີ້ດ້ວຍພຣະພິໂຣດຢ່າງຮຸນແຮງ"
8 ດັ່ງນັ້ນ ບາຣຸກຈຶ່ງເຮັດຕາມເຢເຣມີຢາບອກ ຄືເຂົາໄດ້ອ່ານພຣະຄຳຂອງພຣະຜູ້ເປັນເຈົ້າໃນວິຫານຢ່າງຖືກຕ້ອງ
9 ໃນເດືອນທີເກົ້າຂອງປີທີຫ້າແຫ່ງຣັຊການເຢຮົວອາກິມກະສັດຢູດາ ຜູ້ເປັນພຣະຣາຊໂອຣົດຂອງໂຢຊີຢາ ປະຊາຊົນ
ທັງປວງໄດ້ຢູ່ໃນກຸງເຢຣູຊາເລັມ ແລະທີ່ມາຈາກຫົວເມືອງຕ່າງໆໃນປະເທດຢູດາ ໄດ້ຈັດພິທີຖືສິນອົດອາຫານຂຶ້ນ
ຊ້ອງພຣະພັກພຣະຜູ້ເປັນເຈົ້າ
10 ຂນະນັ້ນຢູ່ທີ່ພຣະຣາຊສຳນັກຊັ້ນເທິງທາງເຂົ້າປະຕູໃຫມ່ຂອງວິຫານ ໃນຫ້ອງຂອງເກມາຣີຢາບຸດຂອງຊາຟານຜູ້ເປັນ
ຣາຊເລຂາ ບາຣຸກໄດ້ອ່ານຖ້ອຍຄຳຂອງເຢເຣມີຢາໃນຫນັງສືມ້ວນໃຫ້ປະຊາຊົນຟັງ

### The Scroll Read in The Palace

11 ເມື່ອມີກັຍຢາບຸດຂອງເກມາຣີຢາ ຜູ້ເປັນຫລານຊາຍຂອງຊາຟານໄດ້ຟັງບາຣຸກອ່ານຖ້ອຍຄຳຂອງພຣະຜູ້ເປັນເຈົ້າໃນ
ຫນັງສືມ້ວນແລ້ວ ເຂົາກໍໄປຍັງພຣະຣາຊວັງທີ່ຫ້ອງຂອງຣາຊເລຂາ
12 ແລະມີພວກເຈົ້ານາຍຫລາຍຄົນນັ່ງປະຊຸມຢູ່ທີ່ນັ້ນ ຄື ເອລີຊາມາຜູ້ເປັນຣາຊເລຂາ ເດລັຍຢາບຸດຂອງເຊມັຍຢາ ເອນ
ນາທານບຸດຂອງອັກໂບຣ໌ ເກມາຣີຢາບຸດຂອງຊາຟານ ເຊເດກີຢາບຸດຂອງຮານານີຢາ ແລະເຈົ້ານາຍຄົນອື່ນໆອີກ
ຫລາຍຄົນ
13 ມີກັຍຢາຈຶ່ງເລົ່າເຣື່ອງທີ່ຕົນໄດ້ຍິນມາທັງຫມົດໃຫ້ພວກເຈົ້ານາຍຟັງ
14 ແລ້ວພວກເຈົ້ານາຍໄດ້ໃຊ້ເຢຮູດີບຸດຂອງເນທານີຢາ ຜູ້ເປັນບຸດຂອງເຊເລມີຢາບຸດຂອງກູຊີ ໄປບອກໃຫ້ບາຣຸກນຳ
ເອົາຫນັງສືມ້ວນທີ່ເຂົາອ່ານໃຫ້ປະຊາຊົນຟັງນັ້ນມາ ບາຣຸກຈຶ່ງໄດ້ຖືຫນັງສືມ້ວນມາຫາພວກເຈົ້ານາຍ
15 ພວກເຈົ້ານາຍໄດ້ເວົ້າກັບບາຣຸກວ່າ, “ເຊີນນັ່ງລົງ ແລະອ່ານຫນັງສືມ້ວນນັ້ນໃຫ້ພວກເຮົາຟັງເບິ່ງດູ” ບາຣຸກຈຶ່ງອ່ານໃຫ້
ພວກທ່ານຟັງ
16 ຫລັງຈາກອ່ານຈົບແລ້ວ ພວກທ່ານກໍຫລຽວເບິ່ງຫນ້າກັນດ້ວຍຄວາມຢ້ານ ແລະເວົ້າຕໍ່ບາຣຸກວ່າ, “ພວກເຮົາຕ້ອງຣາຍ
ງານເຣື່ອງນີ້ໃຫ້ກະສັດຊົງຊາບ”
17 ຕໍ່ມາພວກເຈົ້ານາຍໄດ້ຖາມບາຣຸກວ່າ, “ບັດນີ້ ຈົ່ງບອກພວກເຮົາວ່າ ເຈົ້າຂຽນຖ້ອຍຄຳທັງຫມົດນີ້ໄດ້ຢ່າງໃດ ຂຽນ
ຕາມຄຳບອກຂອງເຢເຣມີຢາບໍ”
18 ບາຣຸກໄດ້ຕອບວ່າ, “ເຢເຣມີຢາໄດ້ບອກຖ້ອຍຄຳເຫລົ່ານີ້ແກ່ຂ້ານ້ອຍ ຂ້ານ້ອຍຈຶ່ງບັນທຶກໄວ້ໃນເຈັ້ຽມ້ວນດ້ວຍນ້ຳ
ມຶກ”
19 ແລ້ວພວກເຈົ້ານາຍໄດ້ບອກບາຣຸກວ່າ, “ເຈົ້າກັບເຢເຣມີຢາຕ້ອງໄປລີ້ຢູ່ສາ ຢ່າໃຫ້ໃຜຮູ້ວ່າພວກເຈົ້າລີ້ຢູ່ທີ່ໃດ”

### Jehoiakim Burns the Scroll

20 ພວກເຈົ້ານາຍໄດ້ມ້ຽນຫນັງສືມ້ວນນັ້ນໄວ້ໃນຫ້ອງຂອງເອລີຊາມາຜູ້ເປັນຣາຊເລຂາ ແລ້ວພວກເຂົາໄດ້ເຂົ້າໄປໃນພ
ຣະຣາຊສຳນັກ ເພື່ອກາບທູນຖ້ອຍຄຳທັງຫມົດນັ້ນຕໍ່ພຣະຣາຊາ
21 ຕໍ່ມາພຣະຣາຊາໄດ້ຊົງສັ່ງໃຫ້ເຢຮູດີໄປເອົາຫນັງສືມ້ວນນັ້ນມາ ເຂົາຈຶ່ງໄປເອົາມາຈາກຫ້ອງຂອງເອລີຊາມາ ແລ້ວໄດ້
ອ່ານຖວາຍພຣະຣາຊາກັບພວກເຈົ້ານາຍທັງຫມົດທີ່ຢືນຢູ່ຂ້າງໆ
22 ເວລານັ້ນເປັນເດືອນທີເກົ້າ ພຣະຣາຊາໄດ້ຊົງນັ່ງຜີງໄຟຢູ່ໃນພຣະຣາຊວັງສຳລັບຣະດູຫນາວ ແລະມີໄຟລຸກຢູ່ໃນໂຖ
ໄຟຫນ້າພຣະພັກ
23 ເມື່ອເຢຮູດີອ່ານສຸດສາມສີ່ຕອນ ພຣະຣາຊາກໍຊົງເອົາມີດນ້ອຍຕັດຕອນນັ້ນຖິ້ມໃສ່ໄຟ ຊົງເຮັດດັ່ງນີ້ເລື້ອຍໄປຈົນຫນັງ
ສືມ້ວນນັ້ນຖືກເຜົາໄຟຫມົດ
24 ແຕ່ບໍ່ເຫັນພຣະຣາຊາກັບຂ້າຣາຊການຢ້ານ ຫລືສະແດງອາການເສັຽໃຈຢ່າງໃດເລີຍ
25 ເຖິງແມ່ນວ່າເອນນາທານ ເດລັຍຢາ ແລະເກມາຣີຢາໄດ້ທູນຂໍບໍ່ໃຫ້ພຣະຣາຊາເຜົາຫນັງສືມ້ວນພຣະອົງກໍບໍ່ຊົງຮັບຟັງ
26 ຕໍ່ມາພຣະຣາຊາໄດ້ຫຊົງສັ່ງໃຫ້ເຈົ້າຊາຍເຢຣາເມເອນ ພ້ອມດ້ວຍເຊຣັຍຢາບຸດອັສຣີເອນ ແລະເຊເລມີຢາບຸດອັບເດ
ເອນ ໄປຈັບເຢເຣມີຢາຜູ້ປະກາດພຣະທັມກັບບາຣຸກສມຽນຂອງທ່ານ ແຕ່ພຣະຜູ້ເປັນເຈົ້າໄດ້ຊົງເຊື່ອງບຸກຄົນທັງສອງ
ນີ້ໄວ້

### Jeremiah Dictates Another

27 ຫລັງຈາກພຣະຣາຊາຊົງເຜົາຫນັງສືມ້ວນທີ່ບາຣຸກໄດ້ຂຽນຕາມຄຳບອກຂອງເຢເຣມີຢາແລ້ວ
28 ພຣະຜູ້ເປັນເຈົ້າກໍຊົງບອກໃຫ້ເຢເຣມີຢາຂຽນຖ້ອຍຄຳທັງຫມົດທີ່ມີຢູ່ໃນຫນັງສືມ້ວນສະບັບກ່ອນນັ້ນໄວ້ອີກ

29 ພຣະຜູ້ເປັນເຈົ້າຊົງໃຫ້ເຢເຣມີຢາບອກກະສັດເຢໂຮອາກິມວ່າ, “ພຣະອົງໄດ້ເຜົາໜັງສືມ້ວນແລະໄດ້ຖາມຂ້ານ້ອຍ
ວ່າ “ເປັນຫຍັງຈຶ່ງຂຽນຄຳວ່າກະສັດບາບີໂລນຈະມາທຳລາຍປະເທດນີ້ຢ່າງແນ່ນອນ ແລະຈະຂ້າມະນຸດກັບສັດໃນ
ປະເທດນີ້ເສັຽ
30 ດັ່ງນັ້ນແຫລະ ພຣະຜູ້ເປັນເຈົ້າຈຶ່ງບອກພຣະອົງວ່າ ເຊື້ອສາຍຂອງພຣະອົງຈະບໍ່ໄດ້ເປັນກະສັດອີກ ເຂົາຈະເອົາສົບ
ຂອງພຣະອົງຕາກແດດໄວ້ໃນເວລາກາງເວັນ ແລະຕາກນ້ຳໝອກໃນເວລາກາງຄືນ
31 ຍ້ອນການກະທຳຂອງພຣະອົງນັ້ນ ພຣະຜູ້ເປັນເຈົ້າຈະລົງໂທດພຣະອົງກັບເຊື້ອສາຍແລະຂ້າຣາຊການຂອງພຣະອົງ
ພຣະອົງກັບຊາວເຢຣູຊາເລັມແລະຊາວຢູດາບໍ່ໄດ້ເຊື່ອຟັງຄຳເຕືອນຂອງພຣະຜູ້ເປັນເຈົ້າ ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງ
ຈະນຳພັຍວິບັດມາຍັງພຣະອົງກັບປະຊາຊົນທັງໝົດຕາມທີ່ໄດ້ຂູ່ໄວ້”
32 ຕໍ່ມາເຢເຣມີຢາໄດ້ເອົາເຈັ້ຽອີກມ້ວນນຶ່ງມອບໃຫ້ບາຣຸກສມຽນຂອງຕົນ ບາຣຸກຈຶ່ງຂຽນຕາມຄຳບອກຂອງເຢເຣມີຢາ
ລົງໃສ່ເຈັ້ຽມ້ວນນັ້ນ ເຂົາໄດ້ຂຽນຖ້ອຍຄຳທີ່ມີຢູ່ໃນໜັງສືມ້ວນສະບັບທີ່ກະສັດເຢໂຮອາກິມເຜົາໄຟນັ້ນທັງໝົດ ແລະ
ເຢເຣມີຢາໄດ້ເພີ້ມຕື່ມຫລາຍຄຳທີ່ເໝືອນກັນລົງດ້ວຍ

## 37 ກະສັດເຊເດກີຢາຂໍຮ້ອງເຢເຣມີຢາ

Zedekiah’s Vain Hope

(2 ກສດ 24:17; 2 ຂຄວ 36:10)

1 ເນບູກາດເນັສຊາກະສັດບາບີໂລນ ໄດ້ແຕ່ງຕັ້ງເຊເດກີຢາພຣະຣາຊໂອຣົດຂອງໂຢຊີຢາເປັນກະສັດຢູດາແທນໂກນີ
ຢາພຣະຣາຊໂອຣົດຂອງເຢໂຮອາກິມ
2 ແຕ່ເຊເດກີຢາເອງພ້ອມທັງຂ້າຣາຊການຂອງທ່ານ ແລະປະຊາຊົນທັງຫລາຍບໍ່ໄດ້ເຊື່ອຟັງພຣະຄຳທີ່ພຣະຜູ້ເປັນເຈົ້າ
ຊົງບອກເຢເຣມີຢາເວົ້າ
3 ກະສັດເດເຊກີຢາຊົງໃຊ້ເຢຮູຄານບຸດເຊເລມີຢາ ແລະປະໂຣຫິດເຊຟັນຢາບຸດຂອງມາອາຊັຍຢາໄປຫາເຢເຣມີຢາ
ພວກເຂົາໄດ້ເວົ້າກັບເຢເຣມີຢາວ່າ, “ຂໍໃຫ້ອ້ອນວອນຕໍ່ພຣະຜູ້ເປັນເຈົ້າຂອງພວກເຮົາສຳລັບເຮົາແດ່”
4 ເຢເຣມີຢານັ້ນຍັງບໍ່ຖືກຄຸມຂັງທ່ານຍັງໄປທາມາສູ່ກັບປະຊາຊົນໄດ້ຢ່າງເສຣີ
5 ໃນລະຫວ່າງນັ້ນກອງທັບຂອງກະສັດຟາຣາໂອໄດ້ເຄື່ອນອອກມາຈາກເອຢິບ ເມື່ອຊາວບາບີໂລນຜູ້ຊຶ່ງກຳລັງໂຈມຕີ
ກຸງເຢຣູຊາເລັມຢູ່ໄດ້ຮູ້ຂ່າວນັ້ນ ພວກເຂົາກໍຖອຍທັບອອກຈາກກຸງເຢຣູຊາເລັມໄປ
6 ຕໍ່ມາ ພຣະຜູ້ເປັນເຈົ້າຂອງອິສຣາເອນຊົງກ່າວຕໍ່ເຢເຣມີຢາວ່າ,
7 “ເຈົ້າຈົ່ງບອກກະສັດຢູດາຜູ້ຊຶ່ງໃຊ້ເຈົ້າມາປຶກສາກັບເຮົານັ້ນວ່າ ກອງທັບຂອງກະສັດຟາຣາໂອທີ່ເຄື່ອນອອກມາຊ່ອຍ
ເຈົ້ານັ້ນກຳລັງຈະກັບຄືນເອຢິບບ້ານເມືອງຂອງເຂົາ
8 ແລ້ວຊາວບາບີໂລນຈະກັບມາໂຈມຕີເມືອງນີ້ ພວກເຂົາຈະຍຶດເອົາເມືອງແລະເຜົາຖິ້ມເສັຽ
9 ເຮົາພຣະຜູ້ເປັນເຈົ້າເຕືອນເຈົ້າວ່າ ຢ່າຫລອກລວງຕົນເອງໂດຍຄິດວ່າຊາວບາບີໂລນຈະບໍ່ກັບມາ ເພາະວ່າເຂົາທັງ
ຫລາຍຈະກັບມາອີກ
10 ເຖິງແມ່ນເຈົ້າຈະເຮັດໃຫ້ກອງທັບທັງໝົດຂອງບາບີໂລນທີ່ກຳລັງຕໍ່ສູ້ກັບເຈົ້າຜ່າຍແພ້ໄປຈົນຍັງເຫລືອແຕ່ຄົນທີ່ບາດ
ເຈັບນອນຢູ່ໃນຕູບຜ້າເຕັນເທົ່ານັ້ນ ຄົນເຫລົ່ານີ້ກໍຈະລຸກຂຶ້ນຕໍ່ສູ້ເຜົາເມືອງນີ້ຖິ້ມ”

### ເຢເຣມີຢາຖືກຄຸມຂັງ

Jeremiah Is Imprisoned

11 ກອງທັບບາບີໂລນໄດ້ຖອຍອອກຈາກກຸງເຢຣູຊາເລັມໄປເພາະວ່າກອງທັບຂອງກະສັດຟາຣາໂອໄດ້ເຄື່ອນເຂົ້າມາໃກ້
12 ຂນະນັ້ນເຢເຣມີຢາພວມອອກຈາກກຸງເຢຣູຊາເລັມ ມຸ້ງໜ້າໄປຍັງດິນແດນເບັນຢາມິນ ເພື່ອຮັບເອົາສ່ວນແບ່ງຂອງ
ຕົນຕໍ່ໜ້າປະຊາຊົນ

13 ເມື່ອທ່ານມາເຖິງປະຕູເບັນຢາມິນ ກໍມີທະຫານຍາມຄົນນຶ່ງຊື່ ອີຣີຢາບຸດຂອງເຊເລມີຢາ ຜູ້ເປັນບຸດຮານານີຢາໄດ້ຈັບ
ເຢເຣມີຢາແລະເວົ້າຂູ່ວ່າ, "ເຈົ້າກຳລັງໜີໄປຫາຊາວບາບີໂລນບໍ"
14 ເຢເຣມີຢາໄດ້ຕອບວ່າ, "ບໍ່ແມ່ນ ຂ້າພະເຈົ້າບໍ່ໄດ້ໜີໄປຫາຊາວບາບີໂລນ" ແຕ່ອີຣີຢາບໍ່ໄດ້ເຊື່ອທ່ານຈຶ່ງຈັບເຢເຣມີ
ຢານຳໄປຫາເຈົ້ານາຍ ພວກເຈົ້ານາຍກໍຄຽດແຄ້ນແລະຂ້ຽນຕີເຢເຣມີຢາ
15 ແລ້ວຈັບຂັງໄວ້ໃນເຮືອນຂອງໂຢນາທານຜູ້ເປັນຣາຊເລຂາ (ເຮືອນຫລັງນີ້ໄດ້ປ່ຽນໃຫ້ເປັນຄຸກ)
16 ເຢເຣມີຢາຖືກເຂົາຂັງໄວ້ໃນຫ້ອງໃຕ້ດິນ ທ່ານໄດ້ຢູ່ທີ່ນັ້ນເປັນເວລາເຫິງນານ
17 ກະສັດເຊເດກີຢາໄດ້ໃຊ້ໃຫ້ຄົນໄປນຳເອົາເຢເຣມີຢາ ແລ້ວຊົງຖາມທ່ານເປັນຄວາມລັບທີ່ພຣະຣາຊວັງວ່າ, "ມີຖ້ອຍ
ຄຳຫຍັງແດ່ທີ່ພຣະຜູ້ເປັນເຈົ້າຊົງບອກ" ເຢເຣມີຢາໄດ້ທູນຕອບວ່າ, "ມີຢູ່ ຂ້ານ້ອຍ" ທ່ານໄດ້ທູນຕໍ່ໄປວ່າ, "ເຂົາຈະ
ມອບພຣະອົງໄວ້ໃນກຳມືຂອງກະສັດບາບີໂລນ"
18 ແລ້ວທູນຖາມວ່າ, "ຂ້ານ້ອຍໄດ້ເຮັດຜິດຫຍັງແດ່ຕໍ່ສູ້ພຣະອົງ ຕໍ່ສູ້ຂ້າຣາຊການຂອງພຣະອົງ ຫລືຕໍ່ປະຊາຊົນນີ້ ພຣະ
ອົງຈຶ່ງໄດ້ຈັບຂ້ານ້ອຍຂັງໄວ້ໃນຄຸກ
19 ພວກປະກາດພຣະທັມທີ່ບອກພຣະອົງວ່າ ກະສັດບາບີໂລນຈະບໍ່ມາໂຈມຕີພຣະອົງ ຫລືໂຈມຕີປະເທດນີ້ ດຽວນີ້
ພວກເຂົາຢູ່ໃສ
20 ຂ້າແດ່ພຣະຣາຊາ ບັດນີ້ຂໍພຣະອົງຊົງຟັງແລະເຮັດຕາມຂ້ານ້ອຍທູນນີ້ຖ້ອນ ຄືຢ່າສົ່ງຂ້ານ້ອຍຄືນໄປເຮືອນຂອງໂຢ
ນາທານ ຜູ້ເປັນຣາຊເລຂາຂອງພຣະອົງ ຖ້າຊົງສົ່ງຂ້ານ້ອຍກັບຄືນໄປ ຂ້ານ້ອຍກໍຈະຕ້ອງຕາຍຢູ່ທີ່ນັ້ນແນ່ນອນ"
21 ດ້ວຍເຫດນັ້ນກະສັດເຊເດກີຢາຈຶ່ງມີຄຳສັ່ງໃຫ້ກັກຂັງເຢເຣມີຢາໄວ້ໃນກາງເດີ່ນພຣະຣາຊວັງ ຢູ່ທີ່ນັ້ນທ່ານໄດ້ຮັບເຂົ້າ
ຈີ່ມື້ລະກ້ອນຈາກຜູ້ເຮັດເຂົ້າຈີ່ ໄດ້ຮັບທຸກມື້ຈົນເທົ່າເຂົ້າຈີ່ໃນເມືອງນັ້ນໝົດໄປ ເຢເຣມີຢາໄດ້ຢູ່ໃນເດີ່ນພຣະຣາຊວັງ
ໄປຢ່າງນີ້ແຫລະ

## 38 ເຢເຣມີຢາຖືກຂັງໄວ້ໃນສ້າງ

Jeremiah in the Cistern

1 ເຊຟາຕີຢາບຸດມັດຕານ ເກດາລີຢາບຸດປັສຮູ ຢູການບຸດຂອງເຊເລມີຢາ ແລະປັສຮູບຸດຂອງມັນຄີຢາ ໄດ້ຍິນຖ້ອຍຄຳ
ທີ່ເຢເຣມີຢາບອກປະຊາຊົນ ຄືເຢເຣມີຢາໄດ້ບອກວ່າ,
2 "ພຣະຜູ້ເປັນເຈົ້າຊົງກ່າວວ່າ ຜູ້ໃດຢູ່ໃນເມືອງຈະຕ້ອງຕາຍຍ້ອນເສິກສົງຄາມ ຫລືຍ້ອນການອຶດຢາກແລະໂຣກພັຍໃຂ້
ເຈັບ ແຕ່ຖ້າຜູ້ໃດອອກໄປຍອມຈຳນົນຕໍ່ຊາວບາບີໂລນຈະບໍ່ຖືກຂ້າ ເຂົາຈະພົ້ນພັຍມີຊີວິດຢູ່ໄດ້"
3 ເຢເຣມີຢາໄດ້ບອກພວກເຂົາດ້ວຍວ່າ, "ພຣະຜູ້ເປັນເຈົ້າຊົງກ່າວວ່າ ເຮົາຈະມອບເມືອງນີ້ໃຫ້ກອງທັບຂອງກະສັດບາ
ບີໂລນໄວ້"
4 ຂນະນັ້ນ ພວກເຈົ້ານາຍໄດ້ທູນກະສັດວ່າ, "ຄົນຜູ້ນີ້ຈະຕ້ອງຖືກໂທດເຖິງຕາຍ ເພາະວ່າເຂົາໄດ້ເຮັດໃຫ້ທະຫານໃນ
ເມືອງນີ້ເສັຽກຳລັງໃຈ ແລະເຂົາຈະເຮັດຢ່າງດຽວກັນນີ້ອີກຕໍ່ທຸກຄົນທີ່ເຫລືອຢູ່ໃນເມືອງນີ້ ຄົນຜູ້ນີ້ບໍ່ໄດ້ຄິດຫາທາງ
ຊ່ອຍເຫລືອປະຊາຊົນມີແຕ່ຫາຄວາມທຸກຍາກມາໃສ່ເຂົາ"
5 ແລ້ວກະສັດເຊເດກີຢາຊົງກ່າວວ່າ, "ແມ່ນແລ້ວ ພວກເຈົ້າຢາກຈະເຮັດຫຍັງກັບເຂົາກໍໄດ້ ເຮົາຈະຫ້າມບໍ່ໄດ້ດອກ"
6 ດັ່ງນັ້ນພວກເຈົ້ານາຍຈຶ່ງຈັບເຢເຣມີຢາຜູກເຊືອກຢ່ອນລົງສ້າງຂີ້ຕົມຂອງເຈົ້າຊາຍມັນກີຢາທີ່ເດີ່ນພຣະຣາຊວັງ ເຢເຣ
ມີຢາກໍຈົມລົງໄປໃນຂີ້ຕົມ

Zedekiah Consults Jeremiah Again

7 ເມື່ອເອເບດເມເລກຊາວເອທີໂອເປັຽທີ່ເຮັດວຽກຢູ່ໃນພຣະຣາຊວັງໄດ້ຍິນຂ່າວວ່າເຂົາຈັບເຢເຣມີຢາຢ່ອນລົງໃນສ້າງ
8 ເອເບດເມເລກກໍອອກຈາກພຣະຣາຊວັງໄປທູນພຣະຣາຊາທີ່ປະຕູເບັນຢາມິນວ່າ,

9 “ຂ້າແດ່ພຣະຣາຊາ ຄົນພວກນີ້ໄດ້ເຮັດຊົ່ວຮ້າຍຕໍ່ເຢເຣມີຢາ ຄືພວກເຂົາໄດ້ຈັບທ່ານຂັງໄວ້ໃນສ້າງ ທ່ານຈະຕ້ອງອຶດ
ຢາກຕາຍຢູ່ທີ່ນັ້ນ ເພາະວ່າໃນເມືອງນີ້ບໍ່ມີອາຫານເຫລືອຢູ່ອີກເລີຍ”
10 ເມື່ອພຣະຣາຊາຊົງຊາບດັ່ງນັ້ນ ກໍຊົງສັ່ງໃຫ້ເອເບດເມເລກນຳຄົນສາມສິບຄົນຈາກທີ່ນັ້ນໄປດຶງເຢເຣມີຢາຂຶ້ນມາຈາກ
ສ້າງກ່ອນທ່ານຈະຕາຍ
11 ດັ່ງນັ້ນ ເອເບດເມເລກຈຶ່ງໄດ້ພາຄົນເຫລົ່ານັ້ນໄປຍັງຫ້ອງເກັບຂອງທີ່ພຣະຣາຊວັງ ເພື່ອເອົາເສື້ອຜ້າທີ່ຂາດແລະເກົ່າ
ແລ້ວຢ່ອນລົງໃຫ້ເຢເຣມີຢາ
12 ແລະເອເບດເມເລກບອກທ່ານວ່າ, “ຈົ່ງເອົາຜ້າຂາດນີ້ຮອງຂີ້ແຮ້ຂອງທ່ານເພື່ອບໍ່ໃຫ້ເຊືອກບາດ” ເຢເຣມີຢາກໍໄດ້ເຮັດ
ຕາມ
13 ແລ້ວພວກເຂົາໄດ້ດຶງເຊືອກເອົາທ່ານຂຶ້ນມາຈາກສ້າງ ແລະໃຫ້ຢູ່ໃນເດີ່ນພຣະຣາຊວັງນັ້ນຕໍ່ໄປ

**ກະສັດເຊເດກີຢາຂໍຄຳປຶກສາຈາກເຢເຣມີຢາ**

Zedekiah Consults Jeremiah Again

14 ກະສັດເຊເດກີຢາໄດ້ຊົງຮັບສັ່ງໃຫ້ເອົາເຢເຣມີຢາຜູ້ປະກາດພຣະທັມເຂົ້າເຝົ້າພຣະອົງ ຢູ່ທີ່ທາງເຂົ້າວິຫານປ່ອງທີ່ສາມ
ຊົງເວົ້າກັບເຢເຣມີຢາວ່າ, “ເຮົາຈະຖາມເຈົ້າຈັກຂໍ້ນຶ່ງແລະບໍ່ຢາກໃຫ້ເຈົ້າປິດບັງສິ່ງໃດໄວ້”
15 ເຢເຣມີຢາໄດ້ທູນວ່າ, “ຖ້າຂ້ານ້ອຍທູນຄວາມຈິງ ພຣະອົງກໍຈະລົງໂທດຂ້ານ້ອຍເຖິງຕາຍ ແຕ່ຖ້າຖວາຍຄຳປຶກສາ
ພຣະອົງກໍຈະບໍ່ຮັບຟັງຂ້ານ້ອຍ”
16 ດັ່ງນັ້ນກະສັດເຊເດກີຢາຈຶ່ງຊົງສັນຍາຕໍ່ເຢເຣມີຢາເປັນຄວາມລັບວ່າ, “ພຣະຜູ້ເປັນເຈົ້າຜູ້ຊົງປະທານຊີວິດໃຫ້ເຮົາຊົງ
ພຣະຊົນຢູ່ສັນໃດເຮົາຈະບໍ່ລົງໂທດເຈົ້າເຖິງຕາຍ ແລະຈະບໍ່ມອບເຈົ້າໄວ້ໃນກຳມືຂອງຄົນທີ່ຢາກຈະຂ້າເຈົ້າສັນນັ້ນ”
17 ແລ້ວເຢເຣມີຢາໄດ້ທູນກະສັດເຊເດກີຢາວ່າ, “ພຣະຜູ້ເປັນເຈົ້າຜູ້ມີອຳນາດຍິ່ງໃຫຍ່ຂອງອິສຣາເອນຊົງກ່າວດັ່ງນີ້ ຖ້າ
ພຣະອົງຊົງຍອມແພ້ພວກເຈົ້ານາຍຂອງກະສັດບາບີໂລນ ຊີວິດຂອງພຣະອົງຈະຊົງປອດພັຍ ແລະເມືອງນີ້ກໍຈະບໍ່ຖືກ
ເຜົາພິນາດ ພຣະອົງກັບ ພຣະຣາຊວົງຂອງພຣະອົງຈະມີຊີວິດຢູ່
18 ແຕ່ຖ້າບໍ່ຊົງຍອມແພ້ ເມືອງນີ້ຈະຖືກຊາວບາບີໂລນຍຶດເອົາ ເຂົາຈະເຜົາມັນໃຫ້ພິນາດ ສ່ວນພຣະອົງກໍຈະຫນີຈາກ
ເງື້ອມມືຂອງເຂົາໄປບໍ່ໄດ້”
19 ແຕ່ກະສັດເຊເດກີຢາຊົງຕອບວ່າ, “ເຮົາຢ້ານຊາວຢູດາພວກທີ່ລັກຫນີໄປຫາຊາວບາບີໂລນ ຄືເຂົາອາດມອບເຮົາໃຫ້
ແກ່ຄົນເຫລົ່ານັ້ນແລ້ວເຂົາກໍຈະທໍຣະມານເຮົາ”
20 ເຢເຣມີຢາໄດ້ທູນວ່າ, “ພຣະອົງຈະບໍ່ຖືກມອບໃຫ້ເຂົາດອກ ຂ້ານ້ອຍຂໍໃຫ້ພຣະອົງຊົງເຊື່ອຟັງພຣະດຳຣັດຂອງພຣະຜູ້
ເປັນເຈົ້າ ຕາມທີ່ຂ້ານ້ອຍໄດ້ທູນພຣະອົງນັ້ນ ແລ້ວທຸກໆສິ່ງກໍຈະເປັນໄປດ້ວຍດີສຳລັບພຣະອົງ ທັງຊີວິດຂອງພຣະອົງ
ກໍຈະປອດພັຍ
21 ແຕ່ຖ້າບໍ່ຍອມມອບຕົວ ພຣະອົງກໍຈະປະສົບຄວາມລຳບາກຕາມນິມິດທີ່ພຣະຜູ້ເປັນເຈົ້າຊົງສະແດງຕໍ່ຂ້ານ້ອຍແລ້ວ
22 ຄືຜູ້ຍິງທັງປວງທີ່ເຫລືອຢູ່ໃນພຣະຣາຊວັງຂອງກະສັດຢູດາຈະຖືກນຳອອກໄປມອບໃຫ້ພວກເຈົ້ານາຍຂອງກະສັດບາ
ບີໂລນ ພວກຜູ້ຍິງເຫລົ່ານີ້ຈະກ່າວໃນຂນະທີ່ໄປວ່າ “ພຣະສະຫາຍຜູ້ສນິດຂອງກະສັດໄດ້ຫລອກລວງພຣະອົງ ພວກ
ເຂົາໄດ້ບັງຄັບໃຫ້ພຣະອົງເຮັດຕາມຄວາມຄິດຂອງເຂົາ ແລະບັດນີ້ພຣະອົງໄດ້ຕົກຢູ່ໃນອັນຕະລາຍແລ້ວ ພຣະສະ
ຫາຍກໍຫລີກຫນີຈາກພຣະອົງໄປ”
23 ຕໍ່ມາເຢເຣມີຢາໄດ້ທູນວ່າ, “ພວກນາງນັກສນົມພ້ອມດ້ວຍມະເຫສີແລະບຸດທັງຫລາຍຂອງພຣະອົງຈະຖືກນຳໄປ
ມອບໃຫ້ຊາວບາບີໂລນແລະພຣະອົງເອງກໍຈະບໍ່ລອດພົ້ນໄປຈາກພວກເຂົາ ຈະຖືກກະສັດບາບີໂລນຈັບໄດ້ແລະ
ເມືອງນີ້ກໍຈະຖືກເຜົາພິນາດ
24 ກະສັດເຊເດກີຢາຊົງຕອບວ່າ, “ຢ່າໃຫ້ຜູ້ໃດຮູ້ຈັກເຣື່ອງທີ່ເວົ້າມານີ້ ຖ້າເຈົ້າບໍ່ໃຫ້ໃຜຮູ້ຊີວິດຂອງເຈົ້າຈະປອດພັຍ

25 ຖ້າພວກເຈົ້ານາຍຮູ້ວ່າ ເຮົາໄດ້ພົບກັບເຈົ້າ ເຂົາກໍຈະມາຖາມເລື່ອງທີ່ເຮົາເວົ້າກັນນັ້ນ ຄືເຂົາຈະສັນຍາວ່າຊິບໍ່ຂ້າເຈົ້າ
ຖ້າວ່າບອກເລື່ອງທີ່ເຮົາເວົ້າກັນນັ້ນແກ່ເຂົາ ແຕ່ຈົ່ງບອກເຂົາວ່າ
26 ເຈົ້າໄດ້ຂໍຮ້ອງບໍ່ໃຫ້ເຮົາສົ່ງເຈົ້າກັບຄືນໄປຕາຍທີ່ເຮືອນຂອງໂຢນາທານ”
27 ຕໍ່ມາມີພວກເຈົ້ານາຍໄດ້ມາຫາເຢເຣມີຢາແລະຊັກຖາມທ່ານ ທ່ານກໍບອກເຂົາຕາມທີ່ພຣະຣາຊາຊິງສັ່ງ ແລ້ວພວກ
ເຂົາກໍບໍ່ຊັກຖາມຫຍັງອີກຕໍ່ໄປ ເພາະວ່າເລື່ອງທີ່ສົນທະນາກັນນັ້ນບໍ່ມີໃຜໄດ້ຍິນ
28 ເຢເຣມີຢາຖືກຄວບຄຸມຢູ່ໃນເດີ່ນພຣະຣາຊວັງຈົນເຖິງວັນທີ່ເຢຣູຊາເລັມຖືກຍຶດ

## 39 ກຸງເຢຣູຊາເລັມແຕກ

The Fall of Jerusalem

(2 ກສດ 25:1-12; ຢຣມ 52:4-16)

1 ເນບູກາດເນັສຊາກະສັດບາບີໂລນໄດ້ຍົກທັບມາຕີກຸງເຢຣູຊາເລັມ ໃນເດືອນສິບປີທີເກົ້າແຫ່ງຣັຊການເຊເດກີຢາກະ
ສັດຢູດາ
2 ຕໍ່ມາໃນປີທີສິບເອັດແຫ່ງຣັຊການເຊເດກີຢາ ເມືອວັນທີເກົ້າເດືອນສີ່ກຸງເຢຣູຊາເລັມກໍແຕກ
3 (ເມື່ອເຂົາຍຶດກຸງເຢຣູຊາເລັມໄດ້ແລ້ວ ບັນດາພວກເຈົ້ານາຍຊັ້ນຜູ້ໃຫຍ່ຂອງກະສັດບາບີໂລນ ຄື ເນການຊາເຣເຊີ ຊັມ
ກາເນໂບ ຊາເຊຄິມຜູ້ເປັນ ຣັບຊາຣີສ ເນີກັນຊາເຣເຊີຜູ້ເປັນ ຣັບມັກ ແລະບັນດາຂ້າຣາຊການຄົນອື່ນໆອີກ ໄດ້ເຂົ້າ
ມາຕັ້ງກອງບັນຊາການຢູ່ທີ່ປະຕູໃຫຍ່ທາງເຂົ້າເມືອງ)
4 ເມື່ອເຊເດກີຢາກະສັດຢູດາ ກັບທະຫານທັງຫມົດຂອງພຣະອົງໄດ້ເຫັນເຫດການດັ່ງນັ້ນ ກໍພາກັນຫນີອອກຈາກເມືອງ
ໃນເວລາກາງຄືນທາງພຣະຣາຊອຸທະຍານ ຜ່ານໄປທາງປະຕູລະຫວ່າງກຳແພງທັງສອງແລ້ວໄດ້ມຸ້ງຫນ້າໄປທາງ
ຮ່ອມພູອາຣາບາ
5 ແຕ່ກອງທັບຂອງບາບີໂລນໄດ້ໄລ່ຕິດຕາມໄປ ແລະໄດ້ໄປທັນກະສັດເຊເດກີຢາຢູ່ໃນທົ່ງຮາບພຽງໃກ້ເມືອງເຢຣີໂກ
ພວກເຂົາໄດ້ ພຣະອົງໄວ້ແລ້ວນຳໄປມອບໃຫ້ກະສັດເນບູກາດເນັສຊາທີ່ເມືອງຣິບລາໃນດິນແດນຮາເມທ ຢູ່ທີ່ນັ້ນ
ກະສັດເນບູກາດເນັສຊາຣ໌ໄດ້ລົງໂທດພຣະອົງ
6 ກະສັດບາບີໂລນໄດ້ຕັດສິນປະຫານຊີວິດພວກບຸດຊາຍຂອງເຊເດກີຢາ ຢູ່ທີ່ເມືອງຣິບລາຕໍ່ຫນ້າຕໍ່ຕາເຊເດກີຢາເອງ
ແລະໄດ້ຕັດສິນປະຫານຊີວິດພວກເຈົ້ານາຍຂອງຢູດາດ້ວຍ
7 ແລ້ວພຣະອົງຊົງຄວັດຫນ່ວຍຕາຂອງເຊເດກີຢາອອກ ແລະເອົາໂສ້ຜູກທ່ານໄວ້ ເພື່ອຈະນຳໄປກຸງບາບີໂລນ ໃນເວ
ລາທີ່ເຊເດກີຢາຖືກລົງໂທດນີ້
8 ທະຫານຊາວບາບີໂລນໄດ້ເຜົາພຣະຣາຊວັງແລະບ້ານເຮືອນຂອງປະຊາຊົນກັບໄດ້ທຳລາຍກຳແພງກຸງເຢຣູຊາເລັມ
ຖິ້ມ
9 ແລ້ວເນບູຊາຣາດານຜູ້ບັນຊາການທະຫານຈັບປະຊາຊົນທີ່ເຫລືອຢູ່ໃນເມືອງ ຣວມທັງຄົນທີ່ຫນີເຂົ້າມາມອບຕົວຕໍ່
ທ່ານໄປເປັນຊະເລີຍທີ່ບາບີໂລນ
10 ເນບູຊາຣາດານໄດ້ປະແຕ່ຄົນທຸກຍາກບາງຄົນທີ່ບໍ່ມີໄຮ່ນາໄວ້ໃນປະເທດຢູດາ ພ້ອມທັງໄດ້ມອບສວນອະງຸ່ນແລະໄຮ່
ນາໃຫ້ພວກເຂົາດ້ວຍ

### ເນບູກາດເນັສຊາຊົງດູແລເຢເຣມີຢາ

Jeremiah, Set Free, Remembers Ebed-melech

11 ຕໍ່ມາເນບູກາດເນັສຊາກະສັດບາບີໂລນ ຊົງບອກເນບູຊາຣາດານຜູ້ບັນຊາການທະຫານວ່າ,
12 “ຈົ່ງແຕ່ງຄົນໄປຮັບເອົາເຢເຣມີຢາມາແລ້ວ ເບິ່ງແຍງເຂົາໃຫ້ດີ ຢ່າທຳຮ້າຍເຂົາ ແຕ່ຈົ່ງຊ່ວຍເຂົາຕາມທີ່ເຂົາຕ້ອງ
ການ”

13 ດັ່ງນັ້ນ ເນບູຊາຣາດານຜູ້ບັນຊາການທະຫານຮັກສາພຣະອົງ ແລະເນບູຊັສບານຜູ້ເປັນຣັບຊາຣິສ ເນີກັນຊາເຣເຊີຜູ້
ເປັນຣັບມັກ ແລະນາຍທະຫານຊັ້ນຜູ້ໃຫຍ່ອື່ນໆອີກແຫ່ງບາບີໂລນ
14 ຈຶ່ງໃຊ້ຄົນໄປຮັບເອົາເຢເຣມີຢາໄວ້ໃຕ້ຄວາມເບິ່ງແຍງຂອງເກດາລີຢາບຸດອາຮີກາມ ຜູ້ເປັນບຸດຊາຟານ ໃຫ້ນຳພາເຢ
ເຣມີຢາໄປເຖິງບ້ານເຮືອນ ດ້ວຍເຫດນັ້ນ ເຢເຣມີຢາຈຶ່ງໄດ້ຢູ່ນຳປະຊາຊົນ

**ຊົງສັນຍາວ່າຈະຊ່ອຍເອເບດເມເລກໃຫ້ລອດ**

15 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາຍັງເຢເຣມີຢາ ຂນະທີ່ທ່ານຖືກຂັງຢູ່ໃນບໍຣິເວນທະຫານຮັກສາພຣະອົງນັ້ນວ່າ,
16 "ຈົ່ງໄປບອກເອເບດເມເລກຄົນເອທີໂອເປັຽວ່າ ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ
ເບິ່ງແມ, ເຮົາຈະໃຫ້ຖ້ອຍຄຳຂອງເຮົາທີ່ມີຢູ່ຕໍ່ກຸງນີ້ສຳເຣັດໃນທາງຮ້າຍບໍ່ແມ່ນທາງດີ ແລະຈະສຳເຣັດຕໍ່ໜ້າເຈົ້າໃນ
ວັນນັ້ນ
17 ພຣະຜູ້ເປັນເຈົ້າກ່າວວ່າ ແຕ່ເຮົາຈະຊ່ອຍກູ້ເຈົ້າໃນວັນນັ້ນ ແລະເຂົາຈະບໍ່ມອບເຈົ້າໄວ້ໃນມືຂອງຄົນທີ່ເຈົ້າຢ້ານ
18 ເພາະເຮົາຈະຊ່ອຍເຈົ້າໃຫ້ລອດເປັນແນ່ ແລະເຈົ້າຈະບໍ່ລົ້ມລົງດ້ວຍດາບ ແຕ່ເຈົ້າຈະມີຊີວິດເປັນບຳເໜັດແຫ່ງການ
ສົງຄາມ ເພາະເຈົ້າໄດ້ໄວ້ວາງໃຈໃນເຮົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ"

## 40 ເຢເຣມີຢາກັບພວກທີ່ເຫລືອຢູ່ກັບເກດາລີຢາ

Jeremiah with Gedaliah the Governor

(2 ກສດ 25:22-26)

1 ຖ້ອຍຄຳຊຶ່ງມາຈາກພຣະຜູ້ເປັນເຈົ້າເຖິງເຢເຣມີຢາ ຫລັງຈາກທີ່ເນບູຊາຣາດານ ຜູ້ບັນຊາການທະຫານຮັກສາພຣະອົງ
ໄດ້ປ່ອຍໃຫ້ທ່ານໄປຈາກຣາມາ ຄັ້ງເມື່ອເຂົາຈັບທ່ານໃສ່ໂສ້ມາພ້ອມກັບຊະເລີຍພວກກຸງເຢຣູຊາເລັມແລະຢູດາ ຜູ້ທີ່
ຕ້ອງຖືກກວາດໄປເປັນຊະເລີຍຍັງບາບີໂລນ
2 ຜູ້ບັນຊາການທະຫານຮັກສາພຣະອົງໄດ້ນຳເຢເຣມີຢາມາແລ້ວເວົ້າກັບທ່ານວ່າ, "ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
ຊົງປະກາດໂທດຕໍ່ສະຖານທີ່ນີ້
3 ພຣະຜູ້ເປັນເຈົ້າຊົງກະທຳໃຫ້ເປັນໄປແລະຊົງກະທຳຕາມທີ່ພຣະອົງຊົງກ່າວໄວ້ ເພາະທ່ານທັງຫລາຍໄດ້ກະທຳບາບຕໍ່
ພຣະຜູ້ເປັນເຈົ້າແລະບໍ່ເຊື່ອຟັງພຣະສຸຣະສຽງຂອງພຣະອົງ ສິ່ງນີ້ຈຶ່ງໄດ້ເປັນມາເຫນືອທ່ານ
4 ເບິ່ງແມ, ວັນນີ້ຂ້າພະເຈົ້າປ່ອຍທ່ານຈາກໂສ້ທີ່ລ່າມມືຂອງທ່ານ ຖ້າທ່ານເຫັນຊອບທີ່ຈະມາຍັງກຸງບາບີໂລນກັບຂ້າ
ພະເຈົ້າ ກໍຈົ່ງມາເຖີດ ຂ້າພະເຈົ້າຈະດູແລທ່ານໃຫ້ດີ ແຕ່ຖ້າທ່ານບໍ່ເຫັນຊອບທີ່ຈະມາຍັງກຸງບາບີໂລນກັບຂ້າພະເຈົ້າ
ກໍຢ່າມາ ຈົ່ງເບິ່ງ, ແຜ່ນດິນທັງຫມົດນີ້ຢູ່ຕໍ່ຫນ້າທ່ານ ທ່ານຈະໄປທີ່ໃດກໍໄດ້ຕາມແຕ່ທ່ານເຫັນດີເຫັນຊອບທີ່ຈະໄປ
5 ຖ້າທ່ານຍັງຢູ່ທີ່ນີ້ ທ່ານຈົ່ງກັບໄປຫາເກດາລີຢາລູກອາຮີຄາມຜູ້ເປັນລູກຊາຟານ ຜູ້ຊຶ່ງພຣະຣາຊາແຫ່ງບາບີໂລນໄດ້
ແຕ່ງຕັ້ງໃຫ້ເປັນຜູ້ວ່າຣາຊການບັນດາຫົວເມືອງຢູດາ ແລະຢູ່ກັບເຂົາຖ້າມກາງປະຊາຊົນ ຫລືຈະໄປທີ່ໃດທີ່ທ່ານເຫັນ
ຊອບຈະໄປກໍໄດ້ ຜູ້ບັນຊາການທະຫານຮັກສາພຣະອົງ ຈຶ່ງສັ່ງອະນຸມັດສະບຽງແລະໃຫ້ຂອງຂວັນແກ່ເຢເຣມີຢາ
ແລ້ວກໍປ່ອຍທ່ານໄປ
6 ເຢເຣມີຢາກໍໄປຫາເກດາລີຢາລູກອາຮີຄາມທີ່ມິສປາ ແລະອາສັຍຢູ່ກັບເຂົາຖ້າມກາງປະຊາຊົນຊຶ່ງເຫລືອຢູ່ໃນແຜ່ນ
ດິນນັ້ນ
7 ເມື່ອບັນດາຫົວຫນ້າຂອງກອງທະຫານແລະຄົນຂອງເຂົາທັງຫລາຍໄດ້ຍິນວ່າພຣະຣາຊາແຫ່ງບາບີໂລນໄດ້ແຕ່ງຕັ້ງ
ເກດາລີຢາລູກອາຮີຄາມໃຫ້ເປັນຜູ້ວ່າຣາຊການໃນແຜ່ນດິນນັ້ນ ແລະໄດ້ມອບຊາຍຍິງກັບເດັກຜູ້ທີ່ເປັນຄົນຈົນທີ່ສຸດ
ໃນແຜ່ນດິນ ຊຶ່ງບໍ່ໄດ້ຖືກກວາດໄປເປັນຊະເລີຍຍັງບາບີໂລນໄວ້ໃຫ້ທ່ານນັ້ນ
8 ເຂົາທັງຫລາຍກໍໄປຫາເກດາລີຢາທີ່ມິສປາ ມີອິຊມາເອນລູກເນທານີຢາ ໂຢຮານານລູກກາເຣອາ ເຊຣັຍຢາບຸດຕັນຮູ
ເມທ ບັນດາລູກຂອງເອຟັຍຊາວເນໂທຟາ ເຢຊານີຢາລູກຊາວມາອາກາທັງຕົວເຂົາແລະຄົນຂອງເຂົາ

9 ເກດາລີຢາລູກອາຮີຄາມ ຜູ້ເປັນລູກຂອງຊາຟານກໍໄດ້ສາບານໃຫ້ແກ່ເຂົາແລະຄົນຂອງເຂົາກ່າວວ່າ, “ຢ່າຢ້ານໃນ
ການທີ່ຈະບົວລະບັດຄົນຄັນເດອານ ຈົ່ງອາສັຍຢູ່ໃນແຜ່ນດິນແລະບົວລະບັດພຣະຣາຊາແຫ່ງບາບີໂລນ ແລ້ວທ່ານທັງ
ຫລາຍກໍຈະຢູ່ເຢັນເປັນສຸກ
10 ສ່ວນຕົວຂ້າພະເຈົ້າ ຂ້າພະເຈົ້າຈະອາສັຍຢູ່ທີ່ມິສປາ ເພື່ອຈະເປັນຜູ້ແທນທ່ານທັງຫລາຍຄອຍຮັບຮອງຄົນຄັນເດອານ
ຜູ້ຊຶ່ງຈະມາຫາເຮົາ ແຕ່ຝ່າຍທ່ານຈົ່ງເກັບເຫລົ້າອະງຸ່ນ ຫມາກໄມ້ຣະດູຮ້ອນ ແລະນ້ຳມັນ ແລະເກັບໄວ້ໃນພາຊນະ
ແລະຈົ່ງຢູ່ໃນຫົວເມືອງຊຶ່ງທ່ານຍຶດໄດ້ນັ້ນ”
11 ໃນທຳນອງດຽວກັນ ເມື່ອພວກຢິວ ຊຶ່ງຢູ່ທີ່ໂມອາບແລະຖ້າມກາງຄົນອັມໂມນ ແລະໃນເອໂດມ ແລະໃນແຜ່ນ
ດິນອື່ນໆໄດ້ຍິນວ່າ  ພຣະຣາຊາແຫ່ງບາບີໂລນໄດ້ຖິ້ມຄົນໃຫ້ເຫລືອໄວ້ສ່ວນນຶ່ງໃນຢູດາແລະໄດ້ແຕ່ງຕັ້ງໃຫ້ເກດາລີ
ຢາລູກອາຮີຄາມຜູ້ເປັນບຸດຊາຟານໃຫ້ເປັນຜູ້ວ່າຣາຊການເຫນືອເຂົາທັງຫລາຍ
12 ແລ້ວພວກຢິວທັງປວງກໍໄດ້ກັບມາຈາກທຸກບ່ອນຊຶ່ງເຂົາຖືກຂັບໄລ່ໃຫ້ໄປຢູ່ນັ້ນ ແລະມາຍັງແຜ່ນດິນຢູດາມາຫາເກດາ
ລີຢາທີ່ມິສປາ ແລະເຂົາທັງຫລາຍໄດ້ເກັບເຫລົ້າອະງຸ່ນແລະຫມາກໄມ້ໃນຣະດູຮ້ອນໄດ້ຢ່າງຫລວງຫລາຍ

**ເກດາລີຢາຖືກລອບຂ້າ**

13 ຝ່າຍໂຢຮານານລູກຂອງກາເຣອາ ແລະບັນດາປະມຸກຂອງກອງທະຫານໄດ້ມາຫາເກດາລີຢາທີ່ມິສປາ
14 ແລະກ່າວແກ່ທ່ານວ່າ, “ທ່ານຮູ້ຫລືບໍ່ວ່າ ບາອາລີສກະສັດຂອງຄົນອັມໂມນໄດ້ສົ່ງໃຫ້ອິຊມາເອນບຸດເນທານີຢາມາ
ເອົາຊີວິດຂອງທ່ານ” ຝ່າຍເກດາລີຢາລູກອາຮີຄາມບໍ່ເຊື່ອເຂົາທັງຫລາຍ
15 ແລ້ວໂຢຮານານລູກກາເຣອາໄດ້ເວົ້າກັບເກດາລີຢາເປັນການລັບທີ່ມິສປາວ່າ, “ຈົ່ງໃຫ້ຂ້າພະເຈົ້າໄປຂ້າອິຊມາເອນ
ລູກເນທານີຢາເສັຽແລະຈະບໍ່ມີໃຜຮູ້ເຣື່ອງ ເປັນຫຍັງຈະໃຫ້ເຂົາເອົາຊີວິດຂອງທ່ານ ແລ້ວພວກຢິວຊຶ່ງມາຮວບຮວມຢູ່
ກັບທ່ານຈະກະຈັດກະຈາຍກັນໄປ ແລະຄົນຢູດາທີ່ເຫລືອຢູ່ນີ້ກໍຈະພິນາດ”
16 ແຕ່ເກດາລີຢາລູກອາຮີຄາມເວົ້າກັບໂຢຮານານບຸດກາເຣອາວ່າ, “ທ່ານຢ່າທຳສິ່ງນີ້ເລີຍ ເພາະທີ່ທ່ານເວົ້າເຖິງອິຊມາ
ເອນນັ້ນເປັນຄວາມເທັດ”

## 41

Insurrection against Gedaliah

1 ໃນເດືອນທີເຈັດອິຊມາເອນ ລູກເນທານີຢາ ຜູ້ເປັນລູກເອລີຊາມາເຊື້ອພຣະວົງ ເປັນຂ້າຣາຊການຜູ້ໃຫຍ່ຄົນນຶ່ງຂອງ
ກະສັດ ໄດ້ມາຫາເກດາລີຢາລູກອາຮີຄາມພ້ອມກັບຄົນສິບຄົນທີ່ມິສປາ ຂນະເມື່ອເຂົາຮັບປະທານອາຫານຢູ່ນຳກັນ
ທີ່ມິສປາ
2 ອິຊມາເອນລູກເນທານີຢາກັບຄົນທັງສິບທີ່ຢູ່ກັບເຂົາກໍໄດ້ລຸກຂຶ້ນຂ້າເກດາລີຢາ ລູກອາຮີຄາມຜູ້ເປັນລູກຊາຟານຜູ້ທີ່
ພຣະຣາຊາແຫ່ງບາບີໂລນໄດ້ແຕ່ງຕັ້ງໃຫ້ເປັນຜູ້ວ່າຣາຊການທີ່ແຜ່ນດິນນັ້ນເສັຽດ້ວຍດາບຈົນຕາຍ
3 ອິຊມາເອນໄດ້ຂ້າພວກຢິວທັງຫລາຍທີ່ຢູ່ກັບເກດາລີຢາທີ່ມິສປາ ແລະທະຫານຄົນຄັນເດອານຜູ້ບັງເອີນຢູ່ທີ່ນັ້ນດ້ວຍ
4 ຫລັງຈາກວັນທີ່ເກດາລີຢາຖືກຂ້າ ກ່ອນທີ່ຜູ້ໃດຮູ້ເຣື່ອງ
5 ມີຊາຍແປດສິບຄົນມາຈາກເມືອງເຊເຄມ ແລະເມືອງຊີໂລ ແລະເມືອງຊາມາເຣັຽ ທີ່ໄດ້ແຖຫນວດແລະເສື້ອຜ້າຂາດ
ແລະໄດ້ປາດຕົນໂຕເປັນບາດ ນຳເຄື່ອງທັບຍາບູຊາແລະກຳຍານມາຖວາຍທີ່ພຣະວິຫານຂອງພຣະຜູ້ເປັນເຈົ້າ
6 ແລະອິຊມາເອນລູກເນທານີຢາມາຈາກມິສປາໄດ້ຮ້ອງໄຫ້ທັງຍ່າງໄປ ເມື່ອເຂົາພົບຄົນເຫລົ່ານັ້ນຈຶ່ງເວົ້າກັບເຂົາທັງ
ຫລາຍວ່າ, “ເຊີນເຂົາມາຫາເກດາລີຢາລູກອາຮີຄາມເຖີດ”
7 ເມື່ອເຂົາທັງຫລາຍເຂົ້າມາໃນເມືອງ ອິຊມາເອນລູກເນທານີຢາ ແລະຄົນທີ່ຢູ່ກັບທ່ານກໍຂ້າເຂົາທັງຫລາຍເສັຽ ແລະ
ໂຍນເຂົາລົງໄປໃນບ່ອນຂັງນ້ຳ

8 ແຕ່ໃນພວກນັ້ນມີຢູ່ສິບຄົນດ້ວຍກັນທີ່ເວົ້າກັບອິຊມາເອນວ່າ, “ຂໍຢ່າຂ້າເຮົາເລີຍ ເພາະເຮົາມີເຂົ້າເປືອກ ເຂົ້າບເລ ນໍ້າມັນ ແລະນໍ້າເຜິ້ງເຊື່ອງໄວ້ໃນທົ່ງນາ” ດັ່ງນັ້ນລາວຈຶ່ງບໍ່ໄດ້ຂ້າເຂົາທັງຫລາຍກັບບັນດາເພື່ອນໆ

9 ບ່ອນຂັງນໍ້າຊຶ່ງອິຊມາເອນໂຍນສົບຂອງຜູ້ທີ່ເຂົາຂ້າຕາຍລົງໄປນັ້ນເປັນບ່ອນໃຫຍ່ ຊຶ່ງກະສັດອາຊາສ້າງໄວ້ເພື່ອປ້ອງກັນບາອາຊາກະສັດແຫ່ງອິສຣາເອນ ອິຊມາເອນລູກເນທານີຢາກໍເອົາຄົນທີ່ຖືກຂ້າໃສ່ໄວ້ຈົນເຕັມ

10 ແລ້ວອິຊມາເອນກໍຈັບຄົນທັງຫມົດທີ່ເຫລືອຢູ່ໃນມິສປາໄປເປັນຊະເລີຍ ຄືພວກຣາຊທິດາແລະປະຊາຊົນທັງປວງທີ່ເຫລືອຢູ່ທີ່ມິສປາ ຜູ້ທີ່ເນບູຊາຣາດານຜູ້ບັນຊາການທະຫານຮັກສາພຣະອົງໄດ້ມອບຫມາຍໃຫ້ແກ່ເກດາລີຢາລູກອາຮີຄາມ ອິຊມາເອນລູກເນທານີຢາໄດ້ຈັບເຂົາເປັນຊະເລີຍ ແລະອອກເດີນທາງຂ້າມຟາກໄປຫາຄົນອັມໂມນ

11 ແຕ່ເມື່ອໂຢຮານານລູກກາເຣອາແລະບັນດາຫົວຫນ້າຂອງກອງໂຈນຊຶ່ງຢູ່ກັບເຂົາຊາບເຣື່ອງຄວາມຊົ່ວຮ້າຍຊຶ່ງອິຊມາເອນລູກເນທານີຢາໄດ້ກະທຳແລ້ວນັ້ນ

12 ເຂົາກໍຈັດເອົາຄົນທັງຫມົດຂອງເຂົາໄປຕໍ່ສູ້ກັບອິຊມາເອນລູກເນທານີຢາ ເຂົາທັງຫລາຍໄດ້ປະທະກັນທີ່ສະໃຫຍ່ຊຶ່ງຢູ່ທີ່ເມືອງກິເບໂອນ

13 ແລະເມື່ອປະຊາຊົນຜູ້ຊຶ່ງຢູ່ກັບອິຊມາເອນເຫັນໂຢຮານານລູກກາເຣອາແລະບັນດາຫົວຫນ້າກອງທະຫານທີ່ຢູ່ກັບເຂົາ ເຂົາທັງຫລາຍກໍຊົມຊື່ນຍິນດີ

14 ປະຊາຊົນທັງປວງຊຶ່ງອິຊມາເອນຈັບເປັນຊະເລີຍມາຈາກມິສປາຈຶ່ງຫັນຫລັງແລະກັບໄປ ເຂົາໄປຫາໂຢຮານານລູກກາເຣອາ

15 ແຕ່ອິຊມາເອນລູກເນທານີຢາໄດ້ຫນີລອດຈາກໂຢຮານານພ້ອມກັບຊາຍແປດຄົນໄປຫາຄົນອັມໂມນ

16 ແລ້ວໂຢຮານານລູກກາເຣອາແລະບັນດາຫົວຫນ້າຂອງກອງທະຫານ ຊຶ່ງຢູ່ກັບທ່ານໄດ້ນຳປະຊາຊົນທີ່ເຫລືອຢູ່ທັງຫມົດຊຶ່ງອິຊມາເອນລູກເນທານີຢາໄດ້ຈັບເປັນຊະເລີຍຈາກມິສປາ ຫລັງຈາກທີ່ໄດ້ຂ້າເກດາລີຢາລູກອາຮີຄາມແລ້ວນັ້ນ ຄືທະຫານ ຜູ້ຍິງ ເດັກນ້ອຍ ແລະຂັນທີ ຜູ້ຊຶ່ງໂຢຮານານນຳກັບມາຍັງກິເບໂອນ

17 ແລະເຂົາທັງຫລາຍກໍໄປຢູ່ທີ່ເກຣູດຄິມຮາມໃກ້ເບັດເລເຮັມ ຕັ້ງໃຈຈະໄປຍັງເອຢິບ

18 ເຫດວ່າເຂົາຢ້ານຄົນຄັນເດອານ ເພາະວ່າອິຊມາເອນລູກເນທານີຢາໄດ້ຂ້າເກດາລີຢາລູກອາຮີຄາມຜູ້ຊຶ່ງກະສັດແຫ່ງບາບີໂລນໄດ້ຕັ້ງໃຫ້ເປັນຜູ້ວ່າຣາຊການເຫນືອແຜ່ນດິນນັ້ນເສັຽ

## 42 ຂ່າວຂອງເຢເຣມີຢາເຖິງໂຢຮານານ

Jeremiah Advises Survivors Not to Migrate

1 ຝ່າຍຜູ້ຫົວຫນ້າກອງທະຫານແລະໂຢຮານານບຸດກາເຣອາ ແລະອາຊາຣີຢາບຸດໂຮຊັຍຢາ ແລະປະຊາຊົນທັງປວງຈາກຜູ້ນ້ອຍທີ່ສຸດເຖິງຜູ້ໃຫຍ່ທີ່ສຸດໄດ້ເຂົ້າມາໃກ້

2 ແລະເວົ້າກັບເຢເຣມີຢາຜູ້ປະກາດພຣະທັມວ່າ, “ຂໍໃຫ້ຄຳອ້ອນວອນຂອງຂ້າພະເຈົ້າທັງຫລາຍມາຢູ່ຕໍ່ຫນ້າທ່ານແລະຂໍທ່ານອ້ອນວອນຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານເພື່ອເຮົາທັງຫລາຍ ເພື່ອຄົນທີ່ເຫລືອຢູ່ນີ້ທັງໝົດ (ເພາະເຮົາມີຄົນເຫລືອໜ້ອຍຈາກຄົນຈຳນວນຫລາຍ ຕາມທີ່ທ່ານເຫັນຢູ່ກັບຕາແລ້ວ)

3 ຂໍພຣະຜູ້ເປັນເຈົ້າຂອງທ່ານສຳແດງຫົນທາງແກ່ເຮົາວ່າເຮົາຄວນຈະໄປທາງໃດ ແລະຂໍສຳແດງສິ່ງທີ່ເຮົາຄວນຈະກະທຳ”

4 ເຢເຣມີຢາຜູ້ປະກາດພຣະທັມກ່າວແກ່ເຂົາທັງຫລາຍວ່າ, “ຂ້າພະເຈົ້າໄດ້ຍິນທ່ານແລ້ວ ເບິ່ງແມ, ຂ້າພະເຈົ້າຈະອ້ອນວອນຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຕາມຄຳຂໍຮ້ອງຂອງທ່ານທັງຫລາຍແລະພຣະຜູ້ເປັນເຈົ້າຊົງຕອບທ່ານປະການໃດຂ້າພະເຈົ້າຈະບອກແກ່ທ່ານ ຂ້າພະເຈົ້າຈະບໍ່ປິດບັງສິ່ງໃດໄວ້ຈາກທ່ານເລີຍ”

5 ແລ້ວເຂົາທັງຫລາຍເວົ້າກັບເຢເຣມີຢາວ່າ, “ຂໍພຣະຜູ້ເປັນເຈົ້າຈົ່ງເປັນພຍານທີ່ຊື່ສັດແລະແນ່ນອນຕໍ່ສູ້ຂ້າພະເຈົ້າທັງ
ຫລາຍ ຖ້າຂ້າພະເຈົ້າທັງຫລາຍບໍ່ໄດ້ກະທຳຕາມບັນດາພຣະຄຳຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຜູ້ຊົງໃຊ້
ທ່ານ
6 ບໍ່ວ່າຈະດີຫລືຮ້າຍ ຂ້າພະເຈົ້າທັງຫລາຍຈະເຊື່ອຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ ຜູ້ຊຶ່ງຂ້າ
ພະເຈົ້າທັງຫລາຍສົ່ງທ່ານໃຫ້ໄປຫານັ້ນ ເພື່ອເຮົາຈະຢູ່ເຢັນເປັນສຸກ ເມື່ອເຮົາເຊື່ອຟັງພຣະສຸຣະສຽງແຫ່ງພຣະຜູ້ເປັນ
ເຈົ້າພຣະເຈົ້າຂອງເຮົາ”
7 ຄັນຄົບສິບວັນແລ້ວຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາຍັງເຢເຣມີຢາ
8 ແລ້ວທ່ານຈຶ່ງໃຫ້ໄປນຳໂຢຮານານລູກກາເຣອາ ແລະບັນດາຜູ້ຫົວຫນ້າຂອງກອງທະຫານຜູ້ຢູ່ກັບທ່ານ ແລະປະຊາ
ຊົນທັງປວງຕັ້ງແຕ່ນ້ອຍທີ່ສຸດເຖິງຄົນໃຫຍ່ທີ່ສຸດ
9 ແລະບອກເຂົາວ່າພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນ ຜູ້ຊຶ່ງທ່ານໄດ້ໃຊ້ໃຫ້ຂ້າພະເຈົ້ານຳເອົາຄຳອ້ອນວອນຂອງ
ທ່ານໄປສເນີພຣະອົງນັ້ນ ໄດ້ຊົງກ່າວດັ່ງນີ້ວ່າ
10 “ຖ້າເຈົ້າທັງຫລາຍຈະຢູ່ຕໍ່ໄປໃນແຜ່ນດິນນີ້ ເຮົາຈະສ້າງເຈົ້າທັງຫລາຍຂຶ້ນແລະບໍ່ທຳລາຍລົງ ເຮົາຈະປູກເຈົ້າໄວ້ ແລະ
ບໍ່ຖອນເຈົ້າເສັຽ ເພາະເຮົາໄດ້ກັບໃຈຈາກເຫດຮ້າຍຊຶ່ງເຮົາໄດ້ກະທຳໄປແລ້ວ
11 ຢ່າຢ້ານກະສັດແຫ່ງບາບີໂລນຜູ້ຊຶ່ງເຈົ້າຢ້ານຢູ່ນັ້ນ ພຣະຜູ້ເປັນເຈົ້າກ່າວວ່າ ຢ່າຢ້ານເຂົາເລີຍ ເພາະເຮົາຢູ່ກັບເຈົ້າທັງ
ຫລາຍ ເພື່ອຊ່ອຍເຈົ້າແລະຊ່ອຍກູ້ເຈົ້າໃຫ້ພົ້ນຈາກມືຂອງເຂົາ
12 ເຮົາຈະໃຫ້ຄວາມກະຣຸນາແກ່ເຈົ້າ ເພື່ອເຂົາຈະໄດ້ກະຣຸນາເຈົ້າແລະຍອມໃຫ້ເຈົ້າຢູ່ໃນແຜ່ນດິນຂອງເຈົ້າເອງ
13 ແຕ່ຖ້າເຈົ້າທັງຫລາຍເວົ້າວ່າ “ເຮົາຈະບໍ່ຢູ່ໃນແຜ່ນດິນນີ້” ໂດຍບໍ່ເຊື່ອຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງເຈົ້າ
14 ແລະກ່າວວ່າ “ບໍ່ເອົາ ເຮົາຈະເຂົ້າໄປໃນແຜ່ນດິນເອຢິບ ບ່ອນຊຶ່ງເຮົາຈະບໍ່ເຫັນສົງຄາມ ຈະບໍ່ໄດ້ຍິນສຽງເປົ່າເຂົາສັດ
ຈະບໍ່ຫິວເຂົ້າຈີ່
15 ແລະເຮົາທັງຫລາຍຈະອາສັຍຢູ່ທີ່ນັ້ນ” ຄົນຢູດາທີ່ເຫລືອຢູ່ເອີຍ ຂໍຟັງພຣະຄຳຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າ
ຈອມໂຍທາພຣະເຈົ້າຂອງອິສຣາເອນກ່າວດັ່ງນີ້ວ່າ ຖ້າເຈົ້າມຸ້ງຫນ້າຈະເຂົ້າເອຢິບແລະໄປອາສັຍທີ່ນັ້ນ
16 ແລ້ວດາບຊຶ່ງເຈົ້າຢ້ານຢູ່ນັ້ນຈະຕາມເຈົ້າໄປທີ່ນັ້ນໃນແຜ່ນດິນເອຢິບ ແລະການອຶດຢາກຊຶ່ງເຈົ້າຢ້ານຢູ່ນັ້ນຈະຕິດຕາມ
ເຈົ້າໄປເຖິງເອຢິບແລະເຈົ້າຈະຕາຍທີ່ນັ້ນ
17 ທຸກຄົນຊຶ່ງມຸ້ງຫນ້າໄປຍັງເອຢິບ ເພື່ອຈະຢູ່ທີ່ນັ້ນຈະຕາຍເສັຽດ້ວຍດາບ ດ້ວຍການອຶດຢາກ ດ້ວຍໂຣກລະບາດ ເຂົາ
ຈະບໍ່ມີຄົນທີ່ເຫລືອຢູ່ຫລືທີ່ລອດຕາຍຈາກເຫດຮ້າຍຊຶ່ງເຮົາຈະນຳມາເຫນືອເຂົາ
18 “ເພາະພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເຮົາຖອກເທຄວາມໃຈຮ້າຍຂອງເຮົາ ແລະ
ຄວາມພິໂຣດຂອງເຮົາລົງເຫນືອຊາວເຢຣູຊາເລັມຢ່າງໃດເຮົາຈະຖອກເທຄວາມພິໂຣດຂອງເຮົາເຫນືອເຈົ້າທັງຫລາຍ
ເມື່ອເຈົ້າໄປຍັງເອຢິບຢ່າງນັ້ນ ເຈົ້າຈະເປັນຄຳສາບ ເປັນທີ່ຫນ້າຢ້ານ ເປັນຄຳແຊ່ງແລະເປັນຂີ້ປາກ ເຈົ້າຈະບໍ່ເຫັນທີ່ນີ້
ອີກ
19 ຄົນຢູດາທີ່ຍັງເຫລືອຢູ່ເອີຍ ພຣະຜູ້ເປັນເຈົ້າໄດ້ກ່າວກັບທ່ານແລ້ວວ່າ “ຢ່າໄປຍັງເອຢິບ” ຈົ່ງຮູ້ຄັກແນ່ວ່າໃນວັນນີ້ຂ້າ
ພະເຈົ້າໄດ້ຕັກເຕືອນທ່ານ
20 ວ່າທ່ານທັງຫລາຍໄດ້ຫລົງລໍ້ລວງຈິດໃຈຂອງທ່ານເອງ ເພາະທ່ານໄດ້ໃຊ້ຂ້າພະເຈົ້າໄປຫາພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງທ່ານວ່າ “ຂໍອ້ອນວອນເພື່ອເຮົາຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ ແລະພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
ກ່າວປະການໃດ ຂໍບອກແກ່ເຮົາ ແລະເຮົາຈະກະທຳຕາມ”
21 ແລະໃນວັນນີ້ຂ້າພະເຈົ້າໄດ້ປະກາດພຣະທັມນັ້ນແກ່ທ່ານທັງຫລາຍແລ້ວ ແຕ່ທ່ານບໍ່ໄດ້ຟັງພຣະສຸຣະສຽງແຫ່ງພຣະ
ຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານໃນສິ່ງໃດໆ ຊຶ່ງພຣະອົງຊົງໃຊ້ຂ້າພະເຈົ້າມາບອກທ່ານ

22 ເຫດສັນນັ້ນ ບັດນີ້ຈົ່ງຮູ້ຢ່າງຄັກແນ່ວ່າ ທ່ານທັງຫລາຍຈະຕາຍດ້ວຍດາບ ດ້ວຍການອຶດຢາກ ແລະດ້ວຍໂຣກລະບາດ
ໃນສະຖານທີ່ຊຶ່ງທ່ານທັງຫລາຍປາຖນາຈະໄປອາສັຍຢູ່"

## 43 ຍ້າຍພູມລຳເນົາໄປເອຢິບ

Taken to Egypt, Jeremiah Warns of Judgment

1 ເມື່ອເຢເຣມີຢາຈົບການເວົ້າຕໍ່ປະຊາຊົນທັງປວງເຖິງພຣະຄຳເຫລົ່ານີ້ທັງສິ້ນຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາ
ທັງຫລາຍ ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາໄດ້ຊົງໃຊ້ທ່ານໃຫ້ໄປເວົ້າກັບເຂົາທັງຫລາຍນັ້ນແລ້ວ
2 ອາຊາຣີຢາລູກໂຮຊັຍຢາ ແລະໂຢຮານານລູກກາເຣອາແລະບັນດາຜູ້ຊາຍທີ່ທິວດີໄດ້ເວົ້າກັບເຢເຣມີຢາວ່າ, "ທ່ານ
ເວົ້າຕົວະ ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາບໍ່ໄດ້ໃຊ້ທ່ານໃຫ້ມາເວົ້າວ່າ "ຢ່າໄປເອຢິບທີ່ຈະອາສັຍຢູ່ທີ່ນັ້ນ"
3 ແຕ່ບາຣຸກລູກເນຣີຢາ ໄດ້ຍົວະທ່ານໃຫ້ຕໍ່ສູ້ກັບເຮົາ ເພື່ອຈະມອບເຮົາໄວ້ໃນມືຂອງຄົນຄັນເດອານ ເພື່ອເຂົາທັງຫລາຍ
ຈະໄດ້ຂ້າເຮົາຫລືກວາດເຮົາໄປເປັນຊະເລີຍໃນບາບີໂລນ
4 ໂຢຮານານລູກກາເຣອາແລະບັນດາຫົວໜ້າຂອງກອງທະຫານແລະປະຊາຊົນທັງສິ້ນບໍ່ເຊື່ອຟັງພຣະສຸຣະສຽງຂອງ
ພຣະຜູ້ເປັນເຈົ້າທີ່ຈະອາສັຍຢູ່ໃນແຜ່ນດິນຢູດາ
5 ແຕ່ໂຢຮານານລູກກາເຣອາແລະບັນດາຜູ້ຫົວໜ້າຂອງກອງທະຫານໄດ້ພາຄົນຢູດາທີ່ເຫລືອຢູ່ໄປ ຄືຜູ້ຊຶ່ງກັບມາຢູ່ໃນ
ແຜ່ນດິນຢູດາ ຈາກບັນດາປະຊາຊາດທີ່ເຂົາຖືກຂັບໄລ່ໃຫ້ໄປຢູ່ນັ້ນ
6 ຄືພວກຜູ້ຊາຍ ຜູ້ຍິງ ເດັກນ້ອຍ ບັນດາທິດາ ແລະທຸກຄົນຊຶ່ງເນບູຊາຣາດານຜູ້ບັນຊາການທະຫານຮັກສາພຣະອົງໄດ້
ເຫລືອໄວ້ໃຫ້ແກ່ເກດາລີຢາລູກອາຣີຄາມຜູ້ເປັນລູກຊາຟານ ທັງເຢເຣມີຢາຜູ້ປະກາດພຣະທັມ ແລະບາຣຸກລູກເນຣີ
ຢາ
7 ແລະເຂົາທັງຫລາຍໄດ້ມາຍັງແຜ່ນດິນເອຢິບ ເພາະເຂົາທັງຫລາຍບໍ່ເຊື່ອຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າ ແລະ
ເຂົາກໍມາເຖິງນະຄອນຕາປານເຣດ
8 ແລ້ວຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາຍັງເຢເຣມີຢາໃນນະຄອນຕາປານເຣດວ່າ,
9 "ຈົ່ງຖືກ້ອນຫີນໃຫຍ່ໆໄວ້ ຈົ່ງເຊື່ອງໄວ້ທີ່ໃນດິນດາກໜຽວທີ່ທາງຍ່າງຊຶ່ງຢູ່ທີ່ທາງເຂົ້າໄປສູ່ນະຄອນຕາປານເຣດຕໍ່ຫ
ນ້າຕໍ່ຕາຄົນຢູດາ
10 ແລະຈົ່ງກ່າວແກ່ເຂົາທັງຫລາຍວ່າ "ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເບິ່ງແມ,
ເຮົາຈະໃຊ້ແລະນຳເນບູກາດເນັດຊາກະສັດແຫ່ງບາບີໂລນ ຜູ້ຮັບໃຊ້ຂອງເຮົາ ແລະທ່ານຈະຕັ້ງພຣະທີ່ນັ່ງຂອງທ່ານ
ເໜືອຫີນເຫລົ່ານີ້ ຊຶ່ງເຮົາໄດ້ເຊື່ອງໄວ້ ແລະທ່ານຈະເອົາຄ້າຍພັກອັນມີຍົດສັກຫລາຍຂອງທ່ານມາຕັ້ງໄວ້ເທິງຫີນ
ເຫລົ່ານີ້
11 ທ່ານຈະມາໂຈມຕີແຜ່ນດິນເອຢິບມອບຜູ້ທີ່ກຳນົດໃຫ້ເກີດໂຣກລະບາດແກ່ໂຣກລະບາດ ຜູ້ຖືກກຳນົດໃຫ້ເປັນຊະ
ເລີຍແກ່ການເປັນຊະເລີຍ ແລະຜູ້ທີ່ກຳນົດໃຫ້ຖືກດາບໃຫ້ແກ່ດາບ
12 ແລະທ່ານຈະກໍ່ໄຟໃນວິຫານຂອງພຣະແຫ່ງເອຢິບ ແລະທ່ານຈະເຜົາເສັຽແລະເກັບໄປເປັນຊະເລີຍ ແລະຈະຊຳຣະ
ແຜ່ນດິນເອຢິບເໝືອນຜູ້ລ້ຽງແກະຊຳຣະເສື້ອຄຸມໃຫ້ໝົດໂຕເຫົາ ແລະທ່ານຈະໄດ້ໄປເສັຽຈາກທີ່ນັ້ນດ້ວຍຄວາມ
ສຸກ
13 ທ່ານຈະຫັກເສົາສັກສິດແຫ່ງເມືອງເຮລີໂອໂປຣິດເສັຽ ແລະທ່ານຈະເອົາໄຟເຜົາວິຫານຂອງພຣະແຫ່ງເອຢິບເສັຽ"

## 44 ເຢເຣມີຢາກ່າວທຳນວາຍໃຫ້ພວກຢິວທີ່ຢູ່ໃນເອຢິບ

Denunciation of Persistent Idolatry

1 ພຣະຄຳທີ່ມາເຖິງເຢເຣມີຢາກ່ຽວກັບບັນດາຢິວທີ່ອາສັຍຢູ່ໃນແຜ່ນດິນເອຢິບທີ່ມິກໂດນ ທີ່ຕາປານເຮດ ທີ່ເມັມຟິສ ແລະໃນແຜ່ນດິນປັດໂຣດ

2 "ພຣະຜູ້ເປັນເຈົ້າຈອມໂຍທາພຣະເຈົ້າແຫ່ງອິສຣາເອນໄດ້ກ່າວດັ່ງນີ້ວ່າ ເຈົ້າທັງຫລາຍໄດ້ເຫັນບັນດາເຫດຮ້າຍທີ່ເຮົານຳມາເຫນືອກຸງເຢຣູຊາເລັມແລະເຫນືອຫົວເມືອງຢູດາທັງສິ້ນ ເບິ່ງແມ, ທຸກມື້ນີ້ເມືອງເຫລົ່ານັ້ນກໍເປັນທີ່ຮ້າງເປົ່າບໍ່ມີຜູ້ໃດອາສັຍຢູ່ໃນນັ້ນ

3 ເພາະຄວາມອະທັມຊຶ່ງເຂົາທັງຫລາຍໄດ້ກະທຳໄດ້ຍົວະເຍົ້າເຮົາໃຫ້ມີຄວາມພິໂຣດ ດ້ວຍການທີ່ເຂົາທັງຫລາຍໄປເຜົາເຄື່ອງຫອມແລະບົວຣະບັດພຣະອື່ນຊຶ່ງເຂົາບໍ່ຮູ້ຈັກ ບໍ່ວ່າເຂົາເອງຫລືເຈົ້າທັງຫລາຍຫລືບັນພະບຸຣຸດຂອງເຈົ້າ

4 ຢ່າງໃດກໍດີເຮົາໄດ້ໃຊ້ບັນດາຜູ້ຮັບໃຊ້ຂອງເຮົາ ຄືຜູ້ປະກາດພຣະທັມມາຍັງເຈົ້າຢ່າງບໍ່ຢຸດຢ່ອນກ່າວວ່າ "ຢ່າກະທຳສິ່ງອັນຫນ້າກຽດນີ້ ຊຶ່ງເຮົາກຽດຊັງ"

5 ແຕ່ເຂົາບໍ່ຟັງຫລືງ່ຽງຫູຟັງ ເພື່ອຈະຫັນກັບຈາກຄວາມຊົ່ວຮ້າຍຂອງເຂົາແລະບໍ່ເຜົາເຄື່ອງຫອມແກ່ພຣະອື່ນ

6 ເຫດສັນນັ້ນ ເຮົາຈຶ່ງໄດ້ເທຄວາມພິໂຣດແລະຄວາມຄຽດຮ້າຍຂອງເຮົາອອກໃຫ້ພຸ່ງຂຶ້ນໃນຫົວເມືອງຢູດາແລະໃນຖນົນຫົນທາງຂອງກຸງເຢຣູຊາເລັມ ແລະເມືອງເຫລົ່ານັ້ນກໍກາຍເປັນບ່ອນປະຮ້າງແລະບ່ອນຮ້າງເປົ່າເໝືອນທຸກວັນນີ້

7 ບັດນີ້ ພຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເປັນຫຍັງເຈົ້າທັງຫລາຍຈຶ່ງເຮັດຄວາມຊົ່ວຮ້າຍນີ້ແກ່ຕົວເຈົ້າເອງ ແລະຕັດເອົາຜູ້ຊາຍຜູ້ຍິງທັງເດັກນ້ອຍແລະຜູ້ກິນນົມອອກຈາກເຈົ້າແລະອອກຈາກຖ້າມກາງຢູດາ ບໍ່ມີຄົນທີ່ເຫລືອຢູ່ໄວ້ແກ່ເຈົ້າເລີຍ

8 ເປັນຫຍັງເຈົ້າທັງຫລາຍຈຶ່ງຍົວະເຍົ້າເຮົາໃຫ້ພິໂຣດດ້ວຍການທີ່ມືຂອງເຈົ້າກະທຳຄືການເຜົາເຄື່ອງຫອມໃຫ້ແກ່ພຣະອື່ນໃນແຜ່ນດິນເອຢິບທີ່ເຈົ້າມາຢູ່ນັ້ນ ເພື່ອເຈົ້າຈະຕ້ອງຖືກຕັດອອກແລະເປັນທີ່ສາບແຊ່ງ ແລະເປັນຂີ້ປາກຖ້າມກາງບັນດາປະຊາຊາດແຫ່ງແຜ່ນດິນໂລກ

9 ເຈົ້າໄດ້ລືມຄວາມອະທັມຂອງບັນພະບຸຣຸດຂອງເຈົ້າ ຄວາມອະທັມຂອງບັນດາກະສັດແຫ່ງຢູດາ ບັນດາຄວາມອະທັມຂອງນາງສນົມແລະມະເຫສີຂອງເຂົາທັງຫລາຍ ຄວາມອະທັມຂອງເຈົ້າເອງ ແລະຄວາມອະທັມຂອງເມັຽຂອງເຈົ້າຊຶ່ງເຂົາທັງຫລາຍໄດ້ກະທຳໃນແຜ່ນດິນຢູດາແລະໃນຖນົນຫົນທາງຂອງກຸງເຢຣູຊາເລັມນັ້ນແລ້ວຫລື

10 ຈົນເຖິງມື້ນີ້ແລ້ວເຂົາທັງຫລາຍກໍຍັງບໍ່ໄດ້ຖ່ອມຕົວລົງ ຫລືຢ້ານກົວຫລືດຳເນີນຕາມພຣະທັມຫລືຕາມກົດຫມາຍຂອງເຮົາ ຊຶ່ງເຮົາໄດ້ມອບໄວ້ຕໍ່ຫນ້າເຈົ້າທັງຫລາຍແລະຫນ້າບັນພະບຸຣຸດຂອງເຈົ້າ

11 "ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາພຣະເຈົ້າແຫ່ງອິສຣາເອນຈຶ່ງກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະມຸ້ງຫນ້າຂອງເຮົາຕໍ່ສູ້ເຈົ້າຫມາຍລົງໂທດ ຈະຕັດຢູດາອອກໃຫ້ໝົດສິ້ນ

12 ເຮົາຈະເອົາຊົນຢູດາທີ່ເຫລືອຢູ່ຜູ້ຊຶ່ງມຸ້ງຫນ້າມາທີ່ແຜ່ນດິນເອຢິບເພື່ອຈະອາສັຍຢູ່ທີ່ນັ້ນ ແລະເຂົາທັງຫລາຍຈະຕາຍຈົນຫມົດ ເຂົາຈະລົ້ມລົງໃນແຜ່ນດິນເອຢິບ ເຂົາຈະຖືກຟັນດ້ວຍດາບແລະດ້ວຍການອຶດຢາກ ຕັ້ງແຕ່ຜູ້ນ້ອຍທີ່ສຸດຈົນເຖິງຜູ້ໃຫຍ່ທີ່ສຸດ ເຂົາທັງຫລາຍຈະຕາຍດ້ວຍດາບແລະດ້ວຍການອຶດຢາກ ແລະເຂົາຈະກາຍເປັນຄຳສາບ ເປັນທີ່ຫນ້າກຽດ ເປັນຄຳແຊ່ງແລະເປັນຂີ້ປາກ

13 ເຮົາຈະຕ້ອງລົງໂທດຄົນເຫລົ່ານັ້ນ ຜູ້ອາສັຍຢູ່ໃນແຜ່ນດິນເອຢິບ ດັ່ງທີ່ເຮົາລົງໂທດກຸງເຢຣູຊາເລັມດ້ວຍດາບ ດ້ວຍການອຶດຢາກ ແລະດ້ວຍໂຣກລະບາດ

14 ຈົນຄົນຢູດາທີ່ເຫລືອຢູ່ຜູ້ຊຶ່ງອາສັຍໃນແຜ່ນດິນເອຢິບນັ້ນຈະບໍ່ລອດພົ້ນຫລືເຫລືອກັບໄປຍັງແຜ່ນດິນຢູດາ ບ່ອນຊຶ່ງເຂົາປາຖນາຈະກັບໄປອາສັຍຢູ່ ເພາະວ່າເຂົາຈະບໍ່ໄດ້ກັບໄປ ນອກຈາກຜູ້ລີ້ພັຍບາງຄົນ"

15 ແລ້ວບັນດາຜູ້ຊາຍຜູ້ຮູ້ວ່າເມັຽຂອງຕົນໄດ້ຖວາຍເຄື່ອງຫອມແກ່ພຣະອື່ນ ແລະບັນດາຜູ້ຍິງທີ່ຢືນຢູ່ໃກ້ເປັນທີ່ຊຸມນຸມໃຫຍ່ ຄືບັນດາປະຊາຊົນຜູ້ອາສັຍໃນປັດໂຣດໃນແຜ່ນດິນເອຢິບໄດ້ຕອບເຢເຣມີຢາວ່າ,

16 “ສຳລັບຖ້ອຍຄຳຊຶ່ງທ່ານໄດ້ບອກແກ່ເຮົາໃນພຣະນາມຂອງພຣະຜູ້ເປັນເຈົ້ານັ້ນ ເຮົາຈະບໍ່ຟັງທ່ານ
17 ແຕ່ເຮົາຈະກະທຳທຸກສິ່ງທີ່ເຮົາໄດ້ບະບົນໄວ້ ຄືເຜົາເຄື່ອງຫອມຖວາຍເຈົ້າແມ່ແຫ່ງຟ້າສວັນ ແລະເທເຄື່ອງດື່ມຖວາຍ
ແກ່ພຣະນາງເຈົ້າດັ່ງທີ່ເຮົາໄດ້ກະທຳ ທັງພວກເຮົາແລະບັນພະບຸຣຸດຂອງເຮົາ ບັນດາກະສັດແລະເຈົ້ານາຍຂອງເຮົາ
ໃນຫົວເມືອງຢູດາແລະໃນຖນົນຫົນທາງກຸງເຢຣູຊາເລັມ ເຮັດຢ່າງນັ້ນແລ້ວເຮົາຈຶ່ງມີອາຫານບໍຣິບູນແລະຢູ່ເຢັນເປັນ
ສຸກແລະບໍ່ເຫັນເຄາະຮ້າຍຢ່າງໃດ
18 ຕັ້ງແຕ່ເຮົາເຊົາການເຜົາເຄື່ອງຫອມແຫ່ງເຈົ້າຟ້າສວັນ ແລະເທເຄື່ອງດື່ມຖວາຍແກ່ພຣະນາງເຈົ້າ ເຮົາກໍຂັດສົນທຸກ
ຢ່າງ ແລະຖືກຜານດ້ວຍດາບແລະດ້ວຍການອຶດຢາກ”
19 ແລະພວກຜູ້ຍິງເວົ້າວ່າ, “ເມື່ອເຮົາເຜົາເຄື່ອງຫອມຖວາຍເຈົ້າແມ່ແຫ່ງເຈົ້າຟ້າສວັນ ແລະເທເຄື່ອງດື່ມຖວາຍແກ່ພຣະ
ນາງເຈົ້າທີ່ເຮົາໄດ້ເຮັດເຂົ້າໜົມຕາມຮູບນາງ ແລະທີ່ໄດ້ເທເຄື່ອງດື່ມຖວາຍແກ່ພຣະນາງເຈົ້າ ເຮົາກະທຳນອກເໜືອ
ຄວາມຊອບຂອງຜົວຂອງເຮົາຫລື
20 ແລ້ວເຢເຣມີຢາໄດ້ຕອບບັນດາປະຊາຊົນທັງພວກຜູ້ຊາຍແລະຜູ້ຍິງ ຄືປະຊາຊົນທັງປວງຜູ້ໃຫ້ຄຳຕອບແກ່ທ່ານວ່າ,
21 “ສຳລັບເຄື່ອງຫອມທີ່ທ່ານໄດ້ເຜົາຖວາຍໃນຫົວເມືອງຢູດາ ແລະໃນຖນົນຫົນທາງກຸງເຢຣູຊາເລັມ ທັງຕົວທ່ານບັນພະ
ບຸຣຸດຂອງທ່ານ ບັນດາພຣະຣາຊາແລະເຈົ້ານາຍຂອງທ່ານແລະປະຊາຊົນ ພຣະຜູ້ເປັນເຈົ້າບໍ່ໄດ້ຊົງຈົດຈຳໄວ້ດອກ
ຫລື ພຣະອົງບໍ່ໄດ້ຊົງນຶກເຖິງຫລື
22 ພຣະຜູ້ເປັນເຈົ້າຈະຊົງທົນຕໍ່ການກະທຳອັນຊົ່ວຮ້າຍຂອງທ່ານແລະການອັນໜ້າກຽດຊຶ່ງທ່ານໄດ້ກະທຳນັ້ນ ຕໍ່ໄປອີກ
ບໍ່ໄດ້ແລ້ວ ເຫດສັນນັ້ນແຜ່ນດິນຂອງທ່ານຈຶ່ງໄດ້ກາຍເປັນບ່ອນຮ້າງເປົ່າແລະບ່ອນປະຮ້າງ ແລະເປັນບ່ອນສາບແຊ່ງ
ປາສຈາກຄົນອາສັຍດັ່ງທຸກວັນນີ້
23 ເພາະວ່າທ່ານໄດ້ເຜົາເຄື່ອງຫອມແລະເພາະວ່າທ່ານໄດ້ກະທຳບາບຕໍ່ພຣະຜູ້ເປັນເຈົ້າ ແລະບໍ່ເຊື່ອຟັງພຣະສຸຣະສຽງ
ຂອງພຣະຜູ້ເປັນເຈົ້າ ຫລືດຳເນີນຕາມພຣະທັມຂອງພຣະອົງ ແລະຕາມພຣະໂອວາດຂອງພຣະອົງ ໂທດນີ້ຈຶ່ງໄດ້ຕົກ
ແກ່ທ່ານດັ່ງທຸກວັນນີ້”
24 ເຢເຣມີຢາໄດ້ກ່າວແກ່ປະຊາຊົນທັງສິ້ນແລະແກ່ພວກຜູ້ຍິງທັງສິ້ນວ່າ, “ບັນດາທ່ານທັງຫລາຍແຫ່ງຢູດາຜູ້ຢູ່ໃນແຜ່ນ
ດິນເອຢິບ ຈົ່ງຟັງພຣະຄຳຂອງພຣະຜູ້ເປັນເຈົ້າ
25 ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ຕົວເຈົ້າແລະເມັຽຂອງເຈົ້າໄດ້ຢືນຢັນດ້ວຍປາກ
ຂອງເຈົ້າທັງຫລາຍເອງ ແລະໄດ້ກະທຳດ້ວຍມືຂອງເຈົ້າທັງຫລາຍໃຫ້ສຳເຣັດ ກ່າວວ່າ “ເຮົາຈະແກ້ບະບົນຂອງເຮົາ
ຊຶ່ງເຮົາໄດ້ບະບົນໄວ້ແນ່ນອນ ຄືເຜົາເຄື່ອງຫອມຖວາຍຣາຊີນີແຫ່ງຟ້າສວັນ ແລະເທເຄື່ອງດື່ມຖວາຍແກ່ພຣະນາງ
ເຈົ້າ” ແລ້ວກໍຕັ້ງຢູ່ໃນການບະບົນຂອງເຈົ້າແລະແກ້ບະບົນຂອງເຈົ້າ
26 ເຫດສັນນັ້ນບັນດາເຈົ້າທັງຫລາຍແຫ່ງຢູດາຜູ້ຢູ່ໃນແຜ່ນດິນເອຢິບ ຈົ່ງຟັງພຣະຄຳຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນ
ເຈົ້າກ່າວວ່າ ເບິ່ງແມ, ເຮົາວ່າປາກຂອງຄົນໃດແຫ່ງຢູດາຕລອດທົ່ວແຜ່ນດິນເອຢິບຈະບໍ່ອອກຊື່ຂອງເຮົາໂດຍກ່າວ
ວ່າ “ຕາບໃດພຣະຜູ້ເປັນເຈົ້າຊົງພຣະຊົນຢູ່”
27 ເບິ່ງແມ, ເຮົາຄອຍເບິ່ງຢູ່ເພື່ອໃຫ້ລົງໂທດ ບໍ່ແມ່ນຄວາມດີ ຄົນຢູດາທັງສິ້ນຜູ້ຢູ່ໃນແຜ່ນດິນເອຢິບຈະຖືກຟັນເສັຽດ້ວຍ
ດາບ ແລະດ້ວຍການອຶດຢາກ ຈົນກວ່າຈະເຖິງສຸດປາຍຂອງເຂົາ
28 ແລະບັນດາຜູ້ທີ່ຫນີພົ້ນດາບຈະກັບຈາກແຜ່ນດິນເອຢິບໄປຍັງແຜ່ນດິນຢູດາ ມີຈຳນວນຫນ້ອຍ ແລະຄົນຢູດາທີ່ເຫລືອ
ຢູ່ທັງສິ້ນຊຶ່ງມາອາສັຍຢູ່ທີ່ແຜ່ນດິນເອຢິບຈະຮູ້ວ່າຄຳຂອງໃຜຈະໝັ້ນຍືນ ເປັນຄຳກ່າວຂອງເຮົາຫລືຄຳກ່າວຂອງເຂົາ
ທັງຫລາຍ
29 ພຣະຜູ້ເປັນເຈົ້າກ່າວວ່ານີ້ຈະເປັນຫມາຍສຳຄັນແກ່ເຈົ້າ ຄືເຮົາຈະລົງໂທດເຈົ້າໃນທີ່ນີ້ເພື່ອເຈົ້າຈະໄດ້ຮູ້ວ່າຄຳກ່າວ
ຂອງເຮົາຈະຕັ້ງຫມັ້ນຄົງຢູ່ເພື່ອຕໍ່ສູ້ເຈົ້າໃຫ້ເກີດຄວາມຮ້າຍແນ່ນອນ

30 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະມອບຟາຣາໂອໂຮຟຣາ ກະສັດແຫ່ງເອຢິບໄວ້ໃນມືສັດຕຣູຂອງເຂົາ
ແລະໃນມືຂອງຄົນເຫລົ່ານັ້ນທີ່ສແວງຫາຊີວິດຂອງເຂົາ ດັ່ງທີ່ເຮົາໄດ້ມອບກະສັດແຫ່ງຢູດາໄວ້ໃນມືຂອງເນບູກາດ
ເນັດຊາແຫ່ງບາບີໂລນ ຜູ້ຊຶ່ງເປັນສັດຕຣູຂອງເຂົາແລະສແວງຫາຊີວິດຂອງເຂົາ"

## 45 ຂ່າວຂອງເຢເຣມີຢາເຖິງບາຣຸກ

A Word of Comfort to Baruch

1 ຖ້ອຍຄຳຊຶ່ງເຢເຣມີຢາຜູ້ປະກາດພຣະທັມບອກແກ່ບາຣຸກລູກເນຣີຢາ ເມື່ອເຂົາຂຽນຖ້ອຍຄຳເຫລົ່ານີ້ລົງໃນຫນັງສື
ຕາມຄຳບອກຂອງເຢເຣມີຢາ ໃນປີທີສີ່ແຫ່ງຣັຊການເຢໂຮອາກີມ ຣາຊບຸດຂອງໂຢຊີຢາ ກະສັດແຫ່ງຢູດາວ່າ,
2 ບາຣຸກເອີຍ ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນຊົງກ່າວແກ່ທ່ານດັ່ງນີ້ວ່າ
3 ເຈົ້າວ່າ "ວິບັດແກ່ຂ້າພະເຈົ້າ ເພາະພຣະຜູ້ເປັນເຈົ້າຊົງເພີ້ມຄວາມທຸກເຂົ້າທີ່ຄວາມເຈັບຂອງຂ້າພະເຈົ້າ ຂ້າພະເຈົ້າກໍ
ເມື່ອຍດ້ວຍການຄ່ຳຄວນຂອງຂ້າພະເຈົ້າ ຂ້າພະເຈົ້າບໍ່ປະສົບຄວາມສງົບເລີຍ"
4 ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ ເຈົ້າຈົ່ງບອກເຂົາວ່າ ເບິ່ງແມ, ສິ່ງໃດທີ່ເຮົາກໍ່ສ້າງຂຶ້ນ ເຮົາຈະທຳລາຍລົງ ແລະສິ່ງໃດ
ທີ່ໄດ້ປູກເຮົາຈະຖອນຂຶ້ນ ຄືແຜ່ນດິນທັງຫມົດ
5 ແລະເຈົ້າຈະຫາສິ່ງໃຫຍ່ໂຕເພື່ອຕົວເອງ ຫລືຢ່າຫາມັນເລີຍ ເພາະພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະ
ນຳເຫດຮ້າຍມາເຫນືອມະນຸດທັງປວງ ແຕ່ເຮົາຈະໃຫ້ຊີວິດຂອງເຈົ້າແກ່ເຈົ້າເປັນບຳເຫນັດແຫ່ງການສົງຄາມໃນທຸກ
ສະຖານທີ່ ທີ່ເຈົ້າຈະໄປ"

## 46 ຄຳທຳນວາຍກ່ຽວກັບເອຢິບ

Judgment on Egypt

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າຊຶ່ງມາເຖິງເຢເຣມີຢາຜູ້ປະກາດພຣະທັມກ່ຽວກັບເຣື່ອງບັນດາປະຊາຊາດ
2 ເຣື່ອງເອຢິບ ກ່ຽວກັບກອງທັບຂອງຟາຣາໂອ ເນໂກ ກະສັດແຫ່ງເອຢິບຊຶ່ງຢູ່ທີ່ຣີມແມ່ນ້ຳເອີຟຣາດ ທີ່ເມືອງກາເຄມິສ
ແລະຊຶ່ງ ເນບຸກາດເນັດຊາກະສັດແຫ່ງບາບີໂລນໄດ້ໂຈມຕີແຕກໃນປີທີສີ່ແຫ່ງຣັຊການເຢໂຮອາກີມຣາຊບຸດຂອງໂຢ
ຊີຢາກະສັດແຫ່ງຢູດາວ່າ
3 ຈົ່ງຕຽມສາຍແອວແລະກັ້ງບັງ ແລະເຂົ້າໃກ້ຊິດສົງຄາມ
4 ຈົ່ງຜູກອານມ້າ ພົນມ້າເອີຍ ຈົ່ງຂຶ້ນມ້າເຖີດ ຈົ່ງສວມຫມວກຂອງເຈົ້າເຂົ້າປະຈຳທີ່ ຈົ່ງຂັດຫອກຂອງເຈົ້າ ຈົ່ງສວມເສື້ອ
ເກາະຂອງເຈົ້າໄວ້
5 ເປັນຫຍັງເຮົາເຫັນເຂົາທັງຫລາຍຕົກໃຈແລະຖອຍຫລັງໄປ ເຂົາທັງຫລາຍບໍ່ຫລຽວກັບ ຄວາມໜ້າຢ້ານຢູ່ທຸກດ້ານ
ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
6 ຄົນທີ່ແລ່ນໄວກໍຫນີໄປບໍ່ລອດ ນັກຮົບກໍຫນີໄປບໍ່ລອດ ເຂົາທັງຫລາຍໄດ້ສະດຸດແລະລົ້ມລົງ ໃນແດນເຫນືອຂ້າງແມ່
ນ້ຳເອີຟຣາດ
7 ຜູ້ໃດຂຶ້ນມາເຫມືອນດັ່ງແມ່ນ້ຳນິນ ເຫມືອນດັ່ງແມ່ນ້ຳຊຶ່ງນ້ຳຂອງມັນຊັດຂຶ້ນ
8 ເອຢິບໂປໂລຂຶ້ນມາເໝືອນດັ່ງແມ່ນ້ຳນິນ ເຫມືອນດັ່ງແມ່ນ້ຳຂອງມັນຊັດຂຶ້ນ ເຂົາເວົ້າວ່າ ຂ້າຈະຂຶ້ນໄປ ຂ້າຈະຄຸມ
ໂລກ ຂ້າຈະທຳລາຍຫົວເມືອງແລະຊາວເມືອງນັ້ນ
9 ມ້າທັງຫລາຍເອີຍ ມຸ່ງຫນ້າໄປກ່ອນເຖີດ ຣົດຮົບທັງຫລາຍຈົ່ງແລ່ນເທີນ ຈົ່ງໃຫ້ນັກຮົບອອກໄປ ຄືເອທີໂອເປັຽແລະ
ຄົນປູດຜູ້ຖືກັ້ງບັງຄົນລູດິມຜູ້ຖືແລະກົ່ງທະນູ

10 ວັນນັ້ນເປັນວັນແຫ່ງພຣະຜູ້ເປັນເຈົ້າຈອມໂຍທາ ເປັນວັນແຫ່ງການແກ້ແຄ້ນ ທີ່ຈະແກ້ແຄ້ນສັດຕຣູຂອງພຣະອົງ ດາບ
ຈະກິນຈົນອີ່ມ ແລະດື່ມເລືອດຂອງເຂົາຈົນເຕັມຄາບ ເພາະພຣະອົງເຈົ້າພຣະຜູ້ເປັນເຈົ້າຈອມໂຍທາທຳການບູຊາໃນ
ແດນເໜືອຂ້າງແມ່ນ້ຳເອີຟຣາດ
11 ທິດາພົມມະຈາຣີແຫ່ງເອຢິບເອີຍ ຈົ່ງຂຶ້ນໄປທີ່ກິເລອາດ ແລະໄປເອົາຢາ ເຈົ້າໄດ້ໃຊ້ຢາມາຫລາຍແລ້ວ ແລະກໍໄຮ້ຜົນ
ສຳລັບເຈົ້ານັ້ນຮັກສາບໍ່ຫາຍ
12 ບັນດາປະຊາຊາດໄດ້ຍິນເຖິງຄວາມອາຍຂອງເຈົ້າ ແລະໂລກກໍເຕັມດ້ວຍສຽງຄໍ່າຄວນຂອງເຈົ້າ ເພາະວ່ານັກຮົບສະ
ດຸດຕໍ່ກັນ ເຂົາທັງຫລາຍໄດ້ລົ້ມລົງດ້ວຍກັນ”

Babylon Will Strike Egypt

13 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າກ່າວກັບເຢເຣມີຢາຜູ້ປະກາດພຣະທັມວ່າ ເຣື່ອງການມາຂອງເນບູກາດເນັດຊາກະສັດ
ແຫ່ງບາບີໂລນ ເພື່ອຈະໂຈມຕີແຜ່ນດິນເອຢິບວ່າ,
14 “ຈົ່ງປະກາດໃນເອຢິບ ແລະປ່າວຮ້ອງໃນມິກໂດນ ຈົ່ງປ່າວຮ້ອງໃນເມມຟິສ ແລະຕາປານເຮສ ຈົ່ງກ່າວວ່າ “ຢືນໃຫ້
ພ້ອມໄວ້ແລະຕຽມຕົວພ້ອມ ເພາະວ່າດາບຈະກິນຢູ່ຮອບຕົວເຈົ້າ
15 ເປັນຫຍັງພຣະອາປິສຈຶ່ງໜີເສັຽ ເປັນຫຍັງຮູບງົວເຖິກຂອງເຈົ້າບໍ່ຢືນໝັ້ນຢູ່ ເພາະວ່າພຣະຜູ້ເປັນເຈົ້າໄດ້ຊົງຊຸກເຂົາ
ລົ້ມລົງ
16 ຝູງຊົນຂອງເຈົ້າກໍສະດຸດແລະລົ້ມລົງ ແລະເຂົາທັງຫລາຍເວົ້າແກ່ກັນແລະກັນວ່າ “ລຸກຂຶ້ນເທີນ ໃຫ້ເຮົາກັບໄປຍັງຊົນ
ຊາດຂອງເຮົາ ໄປຍັງແຜ່ນດິນທີ່ເຮົາຖືກຳເນີດ ເພາະເຣື່ອງດາບຂອງຜູ້ບີບບັງຄັບ”
17 ຈົ່ງເອີ້ນຊື່ຟາຣາໂອ ກະສັດແຫ່ງເອຢິບວ່າ “ຜູ້ເວົ້າສາມຫາວ ຜູ້ປ່ອຍໃຫ້ໂອກາດຜ່ານໄປ”
18 ພຣະບໍຣົມມະຫາກະສັດ ຜູ້ຊຶ່ງພຣະນາມຂອງພຣະອົງ ຄືພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ “ຕາບໃດເຮົາມີຊີວິດຢູ່
ຈະມີຜູ້ນຶ່ງມາເໝືອນດັ່ງພູຕາໂບຖ້າມກາງພູທັງຫລາຍ ແລະເໝືອນດັ່ງພູກາເມນຂ້າງທະເລ
19 ຊາວເອຢິບເອີຍ ຈົ່ງຕຽມສິ່ງຂອງສຳລັບຕົວເຈົ້າເພື່ອການຖືກກວາດໄປເປັນຊະເລີຍ ເພາະວ່າເມືອງເມມຟິສຈະກາຍ
ເປັນທີ່ປະຮ້າງ ເປັນທີ່ສລັກຫັກພັງປາສຈາກຜູ້ອາສັຍ
20 “ເອຢິບ ເປັນງົວສາວໂຕງາມ ແຕ່ໂຕເຫລືອກຈາກທິດເໜືອມາຈັບນາງ
21 ແມ່ນແຕ່ຄົນທີ່ຮັບຈ້າງມາທີ່ຢູ່ຖ້າມກາງນາງກໍເໝືອນລູກງົວທີ່ໄດ້ເກືອໄວ້ ເຂົາທັງຫລາຍຫັນກັບແລະໜີໄປດ້ວຍກັນ
ເຂົາທັງຫລາຍບໍ່ຕໍ່ຕ້ານ ເພາະວັນແຫ່ງພັຍວິບັດໄດ້ມາເໜືອເຂົາທັງຫລາຍເປັນເວລາແຫ່ງການລົງໂທດເຂົາ
22 “ນາງທຳສຽງເໝືອນດັ່ງງູທີ່ກຳລັງເລືອອອກໄປ ເພາະສັດຕຣູຂອງນາງເດີນຂະບວນເຂົ້າມາດ້ວຍກຳລັງທັບແລະມາສູ້
ກັບນາງດ້ວຍຂວານ ເໝືອນດັ່ງຄົນເຫລົ່ານັ້ນທີ່ປ້ຳຕົ້ນໄມ້
23 ພຣະຜູ້ເປັນເຈົ້າກ່າວວ່າ ເຂົາທັງຫລາຍຈະຕັດປ່າຂອງນາງລົງ ແມ້ວ່າປ່ານັ້ນຜູ້ໃດຈະເຂົ້າໄປບໍ່ໄດ້ ເພາະວ່າພວກເຂົາ
ທັງຫລາຍມີຈຳນວນຫລາຍກວ່າຕັກແຕນນັບບໍ່ຖ້ວນ
24 ທິດາຂອງເອຢິບຈະຖືກກະທຳໃຫ້ໄດ້ອາຍ ນາງຈະຖືກມອບໄວ້ໃນມືຂອງຊົນຊາດນຶ່ງຈາກທິດເໜືອ”
25 ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວວ່າ, “ເຮົາຈະນຳການລົງໂທດມາເໜືອພຣະອາໂມນ
ແຫ່ງເທເບສ ແລະຟາຣາໂອ ແລະເອຢິບແລະບັນດາພຣະແລະກະສັດທັງປວງຂອງເມືອງນັ້ນລົງເໜືອຟາຣາໂອແລະ
ຄົນເຫລົ່ານັ້ນກໍວາງໃຈໃນທ່ານ
26 ເຮົາຈະມອບເຂົາທັງຫລາຍໄວ້ໃນມືຂອງບັນດາຜູ້ທີ່ສແວງຫາຊີວິດຂອງເຂົາໃນມືຂອງເນບູກາດເນັສຊາ ກະສັດແຫ່ງ
ບາບີໂລນ ແລະຂ້າຣາຊການຂອງທ່ານ ພຣະຜູ້ເປັນເຈົ້າກ່າວວ່າ ພາຍຫລັງເອຢິບຈຶ່ງຈະມີຄົນອາສັຍຢ່າງສມັຍກ່ອນ

God Will Save Israel

(ຢຣມ 30:10-11)

27 ຢາໂຄບ ຜູ້ຮັບໃຊ້ຂອງເຮົາເອີຍ ຢ່າຢ້ານເລີຍ ຫລືອິສຣາເອນເອີຍ ຢ່າຕົກໃຈເລີຍ ເພາະເຮົາຈະຊ່ອຍເຈົ້າໃຫ້ລອດໄດ້ຈາກທີ່ໄກ ແລະຊ່ອຍລູກຫລານຂອງເຈົ້າຈາກແຜ່ນດິນທີ່ເຂົາເປັນຊະເລີຍ ຢາໂຄບຈະກັບມາແລະມີຄວາມສງົບແລະຄວາມສະບາຍ ແລະບໍ່ມີຜູ້ໃດກະທຳໃຫ້ເຂົາຢ້ານກົວ

28 ພຣະຜູ້ເປັນເຈົ້າກ່າວວ່າ ຢາໂຄບຜູ້ຮັບໃຊ້ຂອງເຮົາເອີຍ ຢ່າຢ້ານເລີຍ ເພາະເຮົາຢູ່ກັບເຈົ້າ ເຮົາຈະກະທຳໃຫ້ບັນດາປະຊາຊາດທັງສິ້ນມາເຖິງຊຶ່ງອາວະສານ ຄືປະຊາຊາດທີ່ເຮົາໄດ້ຂັບເຈົ້າໃຫ້ໄປຢູ່ນັ້ນ ແຕ່ສ່ວນເຈົ້າເຮົາຈະບໍ່ກະທຳໃຫ້ເຖິງອາວະສານ  ເຮົາຈະຕີສອນເຈົ້າຕາມຂນາດ ເຮົາຈະບໍ່ປ່ອຍໃຫ້ເຈົ້າບໍ່ຖືກທຳໂທດເປັນອັນຂາດ”

## 47 ຄຳທຳນວາຍກ່ຽວກັບຟີລິສຕິນ

Judgment on the Philistines

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າຊຶ່ງມາເຖິງເຢເຣມີຢາຜູ້ປະກາດພຣະທັມກ່ຽວກັບເຣື່ອງຟີລິສຕິນ ກ່ອນທີ່ຟາຣາໂອໂຈມຕີເມືອງກາຊາ

2 “ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ ເບິ່ງແມ, ນ້ຳທັງຫລາຍກຳລັງຂຶ້ນຈາກທິດເຫນືອ ແລະຈະກາຍເປັນກະແສນ້ຳຖ້ວມມັນຈະຖ້ວມແຜ່ນດິນແລະສາຣະພັດຊຶ່ງຢູ່ໃນນັ້ນ ທັງເມືອງແລະຜູ້ທີ່ອາສັຍຢູ່ໃນເມືອງ ຄົນຈະຮ້ອງໄຫ້ ແລະຊາວແຜ່ນດິນນັ້ນທຸກຄົນຈະຄ່ຳຄວນ

3 ເມື່ອໄດ້ຍິນສຽງຕີນມ້າແລ່ນກະທົບພື້ນດິນ ແລະສຽງຣົດຮົບຂອງເຂົາກະທົບພື້ນດິນແລະສຽງລໍ້ຣົດກໍດັງກຶກກ້ອງພວກພໍ່ກໍບໍ່ໄດ້ຫັນກັບມາເບິ່ງລູກທັງຫລາຍຂອງຕົນ ເພາະມືຂອງເຂົາກໍອ່ອນເພັຽເຕັມທີແລ້ວ

4 ເພາະວັນທີ່ຈະມາເຖິງຊຶ່ງຈະທຳລາຍຟີລິສຕິນທັງສິ້ນ ຊຶ່ງຈະຕັດຈາກເມືອງຕີເຣແລະເມືອງຊີໂດນ ຜູ້ອຸປະຖັມທຸກຄົນທີ່ເຫລືອຢູ່ ເພາະພຣະຜູ້ເປັນເຈົ້າຈະຊົງທຳລາຍຄົນຟີລິສຕິນ ຄືຊາວຊາຍທະເລແຖວກັບໂຕທີ່ເຫລືອຢູ່ນັ້ນ

5 ເມືອງກາຊາໄດ້ເປັນເໝືອນຫົວລ້ານ ແລະເມືອງອັສເກໂລນກໍພິນາດ ຄົນອານາກິມທີ່ເຫລືອຢູ່ເອີຍເຈົ້າຈະປາດເນື້ອຫນັງຂອງເຈົ້າອີກດົນປານໃດ

6 ດາບແຫ່ງພຣະຜູ້ເປັນເຈົ້າ ອີກເທົ່າປານໃດທ່ານຈຶ່ງຈະຢຸດ ຈົ່ງສອດຕົວເຂົ້າໄວ້ໃນຝັກເສັຽເທີນ ຈົ່ງຢຸດພັກ ແລະຢູ່ເສີຍໆ

7 ເມື່ອພຣະຜູ້ເປັນເຈົ້າຊົງສັ່ງ ມັນຈະຢຸດໄດ້ຢ່າງໃດ ພຣະຜູ້ເປັນເຈົ້າຊົງແຕ່ງຕັ້ງໃຫ້ດາບນັ້ນ ຕໍ່ສູ້ອັສເກໂລນແລະຕໍ່ສູ້ແຄມທະເລ”

## 48 ຄຳທຳນວາຍກ່ຽວກັບໂມອາບ

Judgment on Moab Concerning Mo’ab

1 ກ່ຽວດ້ວຍເຣື່ອງໂມອາບ ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນຊົງກ່າວດັ່ງນີ້ວ່າ “ວິບັດແກ່ເນໂບເພາະເປັນທີ່ຖືກປະຮ້າງ ກີຣິອາທາອິມໄດ້ອາຍແລະພັງລົງ

2 ບໍ່ມີການສັຣເສີນໂມອາບອີກ ແລ້ວໃນເມືອງເຮສໂບນນັ້ນເຂົາປອງຮ້າຍເຂົ້າຕໍ່ສູ້ກັບໂມອາບວ່າ, “ມາເຖີດ ໃຫ້ເຮົາຕັດມັນອອກເສັຽ ຢ່າໃຫ້ເປັນປະຊາຊາດ” ເມືອງມັດເມນເອີຍ ເຈົ້າກໍຈະຖືກກະທຳໃຫ້ງຽບເຫມືອນກັນ ດາບຈະໄລ່ຕິດເຈົ້າໄປ

3 “ຟັງເດີ ມີສຽງຮ້ອງມາແຕ່ໂຮໂຣນາອິມວ່າ “ການທຳລາຍມ້າງເພຢ່າງໃຫຍ່ຫລວງ”

4 ເມືອງໂມອາບຖືກທຳລາຍເສັຽແລ້ວ ໄດ້ຍິນສຽງຮ້ອງໃຫ້ຊ່ອຍຈົນເຖິງເມືອງໂຊອາ

5 ເພາະເຂົາທັງຫລາຍຂຶ້ນໄປຮ້ອງໄຫ້ທີ່ທາງຂຶ້ນເມືອງລູຮິດ ເພາະເຂົາໄດ້ຍິນສຽງຮ້ອງໄຫ້ ເພາະການທຳລາຍທີ່ທາງລົງຈາກເມືອງໂຮໂຣນາອິມ

6 ຫນີເທາະ ເອົາຕົວລອດເຖີດ ຈະເປັນເຫມືອນລໍປ່າທີ່ໃນຖິ່ນກັນດານ

7 ເພາະວ່າເຈົ້າໄດ້ວາງໃຈໃນທີ່ກຳບັງເຂັ້ມແຂງແລະໃນຊັບສິນບັດຂອງເຈົ້າ ເຈົ້າຈະຕ້ອງຖືກຍຶດດ້ວຍ ເພາະເຄໂມສຈະຕ້ອງຖືກກວາດໄປເປັນຊະເລີຍ ພ້ອມກັບປະໂຣຫິດແລະເຈົ້ານາຍຂອງເຂົາ

8 ຜູ້ທຳລາຍຈະມາເຫນືອເມືອງທຸກເມືອງແລະບໍ່ມີເມືອງໃດຈະລອດພົ້ນໄປໄດ້ ທີ່ທາງລຸ່ມຈະຕ້ອງພິນາດ ແລະທີ່ຮາບພຽງຈະຕ້ອງຖືກທຳລາຍ ດັ່ງທີ່ພຣະຜູ້ເປັນເຈົ້າຊົງໄດ້ກ່າວໄວ້

9 ຈົ່ງໃຫ້ປີກແກ່ໂມອາບ ເພື່ອວ່າມັນຈະບິນໄປເສັຽ ຫົວເມືອງຂອງມັນຈະກາຍເປັນທີ່ຖືກສາບ ບໍ່ມີຄົນອາສັຍຢູ່ໃນນັ້ນເລີຍ

10 "ຜູ້ໃດກະທຳງານຂອງພຣະເຈົ້າຢ່າງອືດອາດ ຜູ້ນັ້ນກໍຖືກສາບ ຜູ້ທີ່ກັນບໍ່ໃຫ້ດາບຂອງຕົນກະທຳໃຫ້ເລືອດຕົກຜູ້ນັ້ນຈະຖືກສາບ

11 ໂມອາບສະບາຍຕັ້ງແຕ່ຫນຸ່ມໆມາແລະໄດ້ຢູ່ຢ່າງສງັດງຽບເທິງຂີ້ຕະກອນ ມັນບໍ່ໄດ້ຖືກຖອກຈາກພາຊນະນີ້ໃສ່ອີກພາຊນະນຶ່ງຈັກເທື່ອ ຫລືຕ້ອງຖືກກວາດໄປເປັນຊະເລີຍ ດັ່ງນັ້ນ ຣົດຊາດຈຶ່ງຍັງຢູ່ໃນນັ້ນ

12 ພຣະຜູ້ເປັນເຈົ້າກ່າວວ່າ, "ເຫດສັນນັ້ນ ເບິ່ງແມ, ວັນເວລາຈະມາເຖິງ ເມື່ອເຮົາຈະສົ່ງຜູ້ເທມາໃຫ້ເຂົາເພື່ອຖ່າຍເທເຂົາແລະເທພາຊນະຂອງເຂົາໃຫ້ກ້ຽງ ແລະທຸບໄຫຂອງເຂົາໃຫ້ແຕກເປັນປ່ຽງໆ

13 ແລ້ວໂມອາບກໍຈະໄດ້ອາຍເພາະພຣະເຄໂມສ ເຫມືອນຢ່າງທີ່ປະຊາຊົນອິສຣາເອນໄດ້ອາຍເພາະເບັດເອນ ອັນເປັນທີ່ວາງໃຈຂອງເຂົາ

14 "ເຈົ້າວ່າຢ່າງໃດໄດ້ ວ່າເຮົາເປັນພວກວິຣະຊົນແລະທະຫານເອກ

15 ຜູ້ທຳລາຍເມືອງໂມອາບແລະຫົວເມືອງຂອງມັນມາເຖິງແລ້ວ ແລະຄົນຫນຸ່ມໆທີ່ເກັ່ງທີ່ສຸດຂອງເມືອງກໍລົງໄປສູ່ການຖືກຂ້າ ພຣະບໍຣົມມະຫາກະສັດຜູ້ຊົງພຣະນາມວ່າ ພຣະຜູ້ເປັນເຈົ້າຈອມໂຍທາຊົງກ່າວດັ່ງນີ້ແຫລະ

16 ພັຍວິບັດຂອງໂມອາບຢູ່ໃກ້ພຽງຄືບດຽວ ແລະຄວາມທຸກໃຈຂອງເຂົາກໍເລັ່ງກ້າວເຂົ້າມາ

17 ບັນດາທ່ານທີ່ຢູ່ຮອບເຂົາ ຈົ່ງເສັຽໃຈກັບເຂົາເຖີດ ທັງຄົນທີ່ຮູ້ຈັກຊື່ເຂົານຳ ຈົ່ງກ່າວວ່າ"ໄມ້ຄ້ອນອັນຊົງຣິດໄດ້ຫັກແລ້ວຄືໄມ້ຄ້ອນອັນຮຸ່ງເຮືອງນັ້ນ"

18 ຊາວເມືອງດີໂບນເອີຍ ຈົ່ງລົງມາຈາກສັກສີຂອງເຈົ້າ ແລະນັ່ງເທິງດິນທີ່ແຕກຣະແຫງ ເພາະຜູ້ທຳລາຍໂມອາບໄດ້ມາສູ້ກັບເຈົ້າ ເຂົາໄດ້ທຳລາຍທີ່ກຳບັງເຂັ້ມແຂງຂອງເຈົ້າແລ້ວ

19 ຊາວເມືອງອາໂຣເອີເອີຍ ຈົ່ງຢືນເຝົ້າຢູ່ຂ້າງທາງ ຈົ່ງຖາມຜູ້ຊາຍທີ່ຫນີມາແລະຜູ້ຍິງທີ່ລອດພົ້ນມາວ່າ "ມີເຣື່ອງຫຍັງເກີດຂຶ້ນ"

20 ໂມອາບຖືກກະທຳໃຫ້ອັບອາຍ ເພາະມັນແຕກເສັຽແລ້ວ ຄ່ຳຄວນແລະຮ້ອງຮ່ຳໄຮຢູ່ ຈົ່ງບອກແຄວແມ່ນ້ຳອາໂນນວ່າໂມອາບໄດ້ຖືກປະຮ້າງແລ້ວ

21 "ການພິພາກສາໄດ້ຕົກເຫນືອທີ່ຮາບພຽງເຫນືອໂຮໂລນ ແລະຢາຊາ ແລະເມຟາອາດ

22 ແລະດີໂບນ ແລະເນໂບ ແລະເບັດດິບລາທາອິມ

23 ແລະກີຣິອາທາອິມ ແລະເບັດກາມູນ ແລະເບັດເມໂອນ

24 ແລະເກຣິໂອທ ແລະໂບສຣາ ແລະຫົວເມືອງທັງໝົດຂອງແຜ່ນດິນໂມອາບ ທັງໄກແລະໃກ້

25 ພຣະຜູ້ເປັນເຈົ້າກ່າວວ່າ ສັດຂອງໂມອາບຖືກຕັດອອກແລ້ວ ແລະແຂນຂອງມັນຫັກໄປ

26 "ຈົ່ງທຳໃຫ້ເຂົາມືນເມົາ ເພາະວ່າເຂົາໄດ້ຍົກຍໍຕົວຂຶ້ນຕໍ່ສູ້ພຣະຜູ້ເປັນເຈົ້າ ເຫດສັນນັ້ນໂມອາບຈະຕ້ອງກິ້ງເກືອກຕົວຢູ່ໃນສິ່ງທີ່ຕົນໄດ້ຮາກອອກມາ ແລະເຂົາຈະຖືກເຍາະເຍີ້ຍນຳ

27 ອິສຣາເອນບໍ່ຖືກເຈົ້າເຍາະເຍີ້ຍຫລື ໄປພົບເຂົາຖ້າມກາງໂຈນຫລື ເມື່ອເຈົ້າເວົ້າເຖິງເຂົາ ເຈົ້າຈຶ່ງສັ່ນຫົວ

28 ຊາວເມືອງໂມອາບເອີຍ ຈົ່ງອອກເສັຽຈາກຫົວເມືອງ ໄປອາສັຍຢູ່ໃນຫີນ ຈົ່ງເປັນເຫມືອນນົກກາງແກ ຊຶ່ງເຮັດຮັງຢູ່ທີ່ຂ້າງປາກ ຖ້ຳ

29 ເຮົາໄດ້ຍິນເຖິງຄວາມຈອງຫອງຂອງໂມອາບ ເຂົາຈອງຫອງຫລາຍ ໄດ້ຍິນເຖິງຄວາມຫຍາບຊ້າ ຄວາມຈອງຫອງ
ແລະເຖິງຄວາມຍົກຕົນຂຶ້ນເພີ່ນໃນໃຈຂອງເຂົາ
30 ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຮູ້ຄວາມອວດອີ່ງຂອງເຂົາ ຄວາມໂອ້ອວດຂອງເຂົາເປັນຄວາມເທັດ ການກະທຳທັງ
ຫລາຍຂອງເຂົາກໍບໍ່ເປັນຄວາມຈິງ
31 ເຫດສັນນັ້ນ ເຮົາຈຶ່ງຄ່ຳຄວນເພື່ອໂມອາບ ເຮົາຮ້ອງໄຫ້ຮ່ຳໄຮເພື່ອໂມອາບທັງປວງ ເຮົາໂອ່ຍຄວນເພື່ອຄົນຂອງກີເຮ
ເຣສ
32 ເຄືອອະງຸ່ນແຫ່ງຊິບມາ ເຮົາຮ້ອງໄຫ້ເພື່ອເຈົ້າຫລາຍກວ່າເພື່ອຢາເຊີ ກິ່ງທັງຫລາຍຂອງເຈົ້າໄດ້ລາມຂ້າມທະເລໄປຈົນ
ເຖິງຢາເຊີ ຜູ້ທຳລາຍໄດ້ໂຈມຕີຫມາກໄມ້ຣະດູຮ້ອນແລະການເກັບຫມາກອະງຸ່ນຂອງເຈົ້າ
33 ຄວາມຍິນດີແລະຄວາມຊື່ນບານໄດ້ຖືກກວາດອອກໄປແລ້ວ ຈາກເຮືອນສວນໄຮ່ນາແລະແຜ່ນດິນຂອງໂມອາບ ເຮົາ
ໄດ້ກະທຳໃຫ້ເຫລົ້າອະງຸ່ນຢຸດໄຫລຈາກບໍ່ຍ່ຳອະງຸ່ນ ບໍ່ມີຄົນຢ່ຳດ້ວຍສຽງໂຮ່ຮ້ອງເພາະຄວາມຊື່ນບານ ສຽງໂຮ່ຮ້ອງ
ນັ້ນບໍ່ແມ່ນສຽງໂຮ່ຮ້ອງແຫ່ງຄວາມຊື່ນບານ
34 “ເມືອງເຮສໂບນແລະເມືອງເອເລອາເລໄດ້ຮ້ອງຮ່ຳໄຮ ເຂົາທັງຫລາຍສົ່ງສຽງຮ້ອງໄກເຖິງເມືອງຢາຮັສຈາກໂຊອາເຖິງ
ໂຮໂຣນາອິມ ແລະເອກລາທເຊລີຊີຢາ ເພາະນ້ຳທັງຫລາຍແຫ່ງນິມຣິມກໍຮ້າງເປົ່ານຳ
35 ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະນຳອາວະສານມາສູ່ຜູ້ທີ່ຖວາຍເຄື່ອງບູຊາໃນສະຖານນະມັສການທີ່ສູງແລະເຜົາ
ເຄື່ອງຫອມບູຊາຖວາຍພຣະຂອງເຂົາໃນໂມອາບ
36 ເຫດສັນນັ້ນໃຈຂອງເຮົາຈຶ່ງຄ່ຳຄວນເພື່ອໂມອາບເຫມືອນດັ່ງປີ່ ແລະໃຈຂອງເຮົາຄ່ຳຄວນເຫມືອນດັ່ງປີ່ເພື່ອຄົນເມືອງ
ກີເຮເຣສ ເພາະສະນັ້ນຊັບສົມບັດທີ່ເຂົາໄດ້ມາກໍໄດ້ພິນາດ
37 ທຸກຫົວກໍຖືກແຖ ແລະທຸກຫນວດກໍຖືກຕັດ ເທິງມືທັງປວງກໍມີຮອຍບາດປາດ ແລະມີຜ້າກະສອບຄຽນທີ່ແອວ
38 ເທິງຫລັງຄາເຮືອນທັງສິ້ນຂອງໂມອາບແລະຕາມບັນດາເດີ່ນເມືອງ ມີແຕ່ສຽງຄ່ຳຄວນທົ່ວໄປ ເພາະເຮົາທຸບໂມອາບ
ເຫມືອນເຮົາທຸບພາຊນະທີ່ເຮົາບໍ່ຕ້ອງການ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
39 ໂມອາບແຕກແລ້ວ ເຂົາທັງຫລາຍຄ່ຳຄວນ ໂມອາບຫັນຫລັງກັບດ້ວຍຄວາມອັບອາຍແລ້ວ ດັ່ງນັ້ນແຫລະໂມອາບໄດ້
ກາຍເປັນທີ່ເຍາະເຍີ້ຍ ແລະເປັນທີ່ຕົກໃຈແກ່ບັນດາຜູ້ທີ່ຢູ່ລ້ອມຮອບເຂົາ”
40 ເພາະພຣະຜູ້ເປັນເຈົ້າກ່າວວ່າ “ຜູ້ນຶ່ງຈະບິນຄືນົກອິນຊີ ແລະກາງປີກອອກສູ້ໂມອາບ
41 ເຂົາຈະເອົາຫົວເມືອງໄປ ແລະທີ່ກຳບັງເຂັ້ມແຂງຈະຖືກຍຶດ ຈິດໃຈຂອງບັນດານັກຮົບແຫ່ງໂມອາບໃນວັນນັ້ນ ຈະ
ເຫມືອນຈິດໃຈຂອງຜູ້ຍິງຊຶ່ງກຳລັງເຈັບທ້ອງອອກລູກ
42 ໂມອາບຈະຖືກທຳລາຍແລະບໍ່ເປັນຊົນຊາດນຶ່ງອີກຕໍ່ໄປ ເພາະວ່າເຂົາຍົກຕົວຂຶ້ນຕໍ່ສູ້ພຣະຜູ້ເປັນເຈົ້າ
43 ພຣະຜູ້ເປັນເຈົ້າກ່າວວ່າ ຊາວເມືອງໂມອາບເອີຍ ຄວາມຕົກໃຈ ຫລຸມພາງແລະກັບ ຢູ່ຕໍ່ຫນ້າເຈົ້າ
44 ຜູ້ໃດທີ່ຫນີຍ້ອນຄວາມຕົກໃຈຈະຕົກຫລຸມພາງກໍຈະຕິດກັບ ເພາະເຮົາຈະນຳສິ່ງເຫລົ່ານີ້ມາເຫນືອໂມອາບໃນປີແຫ່ງ
ການລົງໂທດເຂົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
45 “ຜູ້ລີ້ພັຍໄດ້ໄປຢືນຢູ່ຢ່າງຫມົດແຮງທີ່ໃນເງົາເມືອງເຮສໂບນ ເພາະວ່າໄຟໄດ້ອອກມາຈາກເຮືອນຊີໂຮນ ມັນໄດ້ທຳ
ລາຍຫນ້າຜາກຂອງໂມອາບ ແລະຍອດຫົວຂອງພວກລູກແຫ່ງຄວາມອຶກກະທຶກ
46 ໂມອາບເອີຍ, ວິບັດແກ່ເຈົ້າ ຊົນຊາດແຫ່ງພຣະເຄໂມສກຳລັງວອດວາຍຢູ່ແລ້ວ ເພາະບັນດາລູກຊາຍຂອງເຈົ້າຖືກຈັບ
ໄປເປັນຊະເລີຍ ແລະລູກຍິງຂອງເຈົ້າກໍເຂົ້າໃນຄວາມເປັນຊະເລີຍ
47 ແຕ່ເຮົາຍັງຈະໃຫ້ໂມອາບກັບສູ່ສະພາບເດີມໃນການເວລາຕໍ່ໄປ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ” ເທົ່ານີ້ເປັນຂໍ້ພິ
ພາກສາໂມອາບ

## 49 ຄໍາທໍານວາຍກ່ຽວກັບຄົນອັມໂມນ

Judgment on the Ammonites

1 ກ່ຽວກັບເຣື່ອງຄົນອັມໂມນ ພຣະຜູ້ເປັນເຈົ້າຊົງກ່າວວ່າ "ອິສຣາເອນບໍ່ມີລູກຊາຍຫລື ເຂົາບໍ່ມີທາຍາດຫລື ແລ້ວເປັນ
ຫຍັງພຣະມິນໂກມຈຶ່ງຮັບກາດເປັນມໍຣະດົກ ແລະປະຊາຊົນຂອງອາສັຍຢູ່ໃນຫົວເມືອງຂອງທ່ານ

2 ພຣະຜູ້ເປັນເຈົ້າກ່າວວ່າ ເຫດສັນນັ້ນ ວັນເວລາຈະມາເຖິງ ເມື່ອເຮົາຈະກະທໍາໃຫ້ໄດ້ຍິນສຽງສັນຍານສົງຄາມ ສູ້ກັບ
ນະຄອນຣັບບາຂອງຄົນອັມໂມນ ມັນຈະກາຍເປັນກອງຊາກເມືອງທີ່ຮ້າງເປົ່າ ແລະຊົນນະບົດຂອງເມືອງນັ້ນຈະຖືກ
ເຜົາເສັຽດ້ວຍໄຟ ແລ້ວອິສຣາເອນຈະເຂົ້າຍຶດຜູ້ທີ່ເຂົ້າຍຶດເຂົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

3 ເຮສໂບນເອີຍ ຈົ່ງຄໍ່າຄວນ ເພາະເມືອງອາອີຖືກປະຮ້າງ ລູກສາວແຫ່ງນະຄອນຣັບບາເອີຍ ຈົ່ງຮ້ອງຮໍ່າໄຮ ຈົ່ງເອົາຜ້າ
ກະສອບຄາດແອວໄວ້ ຈົ່ງໂອ່ຍຄາງແລ່ນໄປແລ່ນມາຢູ່ຖ້າມກາງຄ້າຍທັງຫລາຍ ເພາະພຣະມິນໂກມຈະຕ້ອງຖືກ
ກວາດໄປເປັນຊະເລີຍພ້ອມກັບປະໂຣຫິດແລະເຈົ້ານາຍຂອງມັນ

4 ລູກສາວຜູ້ບໍ່ສັດຊື່ເອີຍ, ເປັນຫຍັງເຈົ້າໂອ້ອວດຕົວດ້ວຍຮ່ອມພູທັງຫລາຍ ທີ່ຮ່ອມພູຂອງເຈົ້າມີນໍ້າໄຫລ ຜູ້ວາງໃຈໃນ
ສົມບັດຂອງຕົນວ່າ "ຜູ້ໃດຈະມາສູ້ຂ້ອຍ"

5 ພຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາກ່າວວ່າ ເຮົາຈະນໍາຄວາມຕື່ນຕົກໃຈມາເຫນືອເຈົ້າ ຈາກທຸກຄົນທີ່ຢູ່ຮອບຕົວ
ເຈົ້າ ແລະເຈົ້າຈະຖືກຂັບໄລ່ອອກໄປ ຊາຍທຸກຄົນຕໍ່ຫນ້າເຂົາອອກໄປ ແລະຈະບໍ່ມີຜູ້ໃດຮວບຮວມຄົນລີ້ພັຍໄດ້

6 ແຕ່ພາຍຫລັງເຮົາຈະໃຫ້ຄົນອັມໂມນກັບສູ່ສະພາບເດີມ" ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

### ຄໍາພຍາກອນກ່ຽວກັບເມືອງເອໂດມ

Judgment on the Edom

7 ກ່ຽວກັບເຣື່ອງເມືອງເອໂດມ ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ "ສະຕິປັນຍາບໍ່ມີໃນເຕມານອີກແລ້ວຫລື ຄໍາ
ປຶກສາພິນາດໄປຈາກຜູ້ສລຽວສລາດແລ້ວຫລື ສະຕິປັນຍາຂອງເຂົາຫາຍສູນໄປແລ້ວຫລື

8 ຊາວເມືອງເດດານເອີຍ ຈົ່ງຫນີ ຈົ່ງຫັນກັບ ຈົ່ງອາສັຍໃນທີ່ເລິກ ເພາະວ່າເຮົາຈະນໍາພັຍວິບັດຂອງເອຊາວມາເຫນືອ
ເຂົາ ເມື່ອເຮົາລົງໂທດເຂົາ

9 ຖ້າຄົນເກັບຫມາກອະງຸ່ນມາຫາເຈົ້າ ເຂົາຈະບໍ່ຖິ້ມຫມາກອະງຸ່ນຄ້າງໄວ້ດອກຫລື ຖ້າຂະໂມຍມາເວລາກາງຄືນ ເຂົາ
ຈະບໍ່ທໍາລາຍພຽງພໍແກ່ຕົວເຂົາເທົ່ານັ້ນຫລື

10 ແຕ່ເຮົາໄດ້ເປືອຍເອຊາວຢ່າງສິ້ນເຊີງ ເຮົາໄດ້ເປີດທີ່ຫລົບລີ້ຂອງເຂົາ ແລະເຂົາບໍ່ສາມາດລີ້ຕົວໄດ້ ລູກຫລານຂອງ
ເຂົາຖືກທໍາລາຍແລະພີ່ນ້ອງຂອງເຂົາ ແລະເພື່ອນບ້ານຂອງເຂົາ ບໍ່ມີເຂົາອີກແລ້ວ

11 ຈົ່ງຖິ້ມເດັກກໍາພ້າພໍ່ຂອງເຈົ້າໄວ້ເທີນ ເຮົາຈະໃຫ້ເຂົາມີຊີວິດຢູ່ ແລະໃຫ້ແມ່ຫມ້າຍຂອງເຈົ້າວາງໃຈໃນເຮົາເຖີດ"

12 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ຖ້າຄົນທີ່ຍັງບໍ່ສົມຄວນຈະດື່ມຈາກຖ້ວຍນັ້ນຍັງຕ້ອງດື່ມ ເຈົ້າຈະພົ້ນໂທດໄປໄດ້
ຫລື ເຈົ້າຈະພົ້ນໂທດໄປບໍ່ໄດ້ ເຈົ້າຈະຕ້ອງດື່ມ

13 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາໄດ້ສາບານໂດຍຊື່ຂອງເຮົາແລ້ວວ່າ ໂບສຣາຈະຕ້ອງກາຍເປັນຄວາມຮ້າງເປົ່າ ເປັນ
ຂີ້ປາກ ເປັນທີ່ປະຮ້າງ ແລະເປັນຄໍາສາບແຊ່ງແລະຫົວເມືອງທັງໝົດຂອງເຂົາຈະເປັນບ່ອນປະຮ້າງຕລອດໄປ"

14 ຂ້າພະເຈົ້າໄດ້ຍິນຂ່າວຈາກພຣະຜູ້ເປັນເຈົ້າ ທູດຄົນນຶ່ງຖືກສົ່ງໄປຖ້າມກາງບັນດາປະຊາຊາດ ບອກວ່າ "ຈົ່ງຮວບຮວມ
ເຈົ້າທັງຫລາຍເຂົ້າກັນແລະມາຕໍ່ສູ້ເມືອງນັ້ນ ແລະລຸກຂຶ້ນເພື່ອກະທໍາສົງຄາມເທີນ

15 ເພາະວ່າ ເຮົາຈະກະທໍາເຈົ້າໃຫ້ນ້ອຍຖ້າມກາງບັນດາປະຊາຊາດ ໃຫ້ເປັນທີ່ດູຫມິ່ນຖ້າມກາງມະນຸດ

16 ເພາະຄວາມອວດດີຂອງເຈົ້າໄດ້ຫລອກລວງເຈົ້າ ທັງຄວາມທະນົງຕົວແຫ່ງໃຈຂອງເຈົ້າ ເຈົ້າຜູ້ຊຶ່ງອາສັຍຢູ່ໃນໂກນຫີນ
ດານ ຜູ້ຍຶດຍອດພູໄວ້ ເຖິງເຈົ້າເຮັດຮັງຂອງເຈົ້າສູງເຫມືອນດັ່ງຮັງນົກອິນຊີ ເຮົາກໍຈະຊຸກເຈົ້າລົງມາຈາກທີ່ນັ້ນ ພຣະຜູ້
ເປັນເຈົ້າກ່າວດັ່ງນີ້ແຫລະ

17 “ເອໂດມຈະກາຍເປັນທີ່ຮົກຮ້າງ ທຸກຄົນທີ່ຜ່ານເຂົາໄປຈະປລາດໃຈ ແລະເຍາະເຍີ້ຍເພາະຄວາມຫາຍະນະທັງໝົດ
ຂອງມັນ
18 ເໝືອນດັ່ງເມື່ອເມືອງໂຊໂດມ ແລະເມືອງໂກໂມຣາ ແລະທົ່ວເມືອງໃກ້ຄຽງຂອງມັນຖືກທຳລາຍ ພຣະຜູ້ເປັນເຈົ້າກ່າວ
ບໍ່ມີຜູ້ໃດຈະຕັ້ງຢູ່ທີ່ນັ້ນ ບໍ່ມີຜູ້ໃດຈະອາສັຍໃນເມືອງນັ້ນ
19 ເບິ່ງແມ, ເຮົາຈະກະທຳໃຫ້ເຂົາທັງຫລາຍຫນີໄປຈາກມັນໂດຍໄວ ເຫມືອນດັ່ງສິງຂຶ້ນມາຈາກດົງລຸ່ມແມ່ນ້ຳຈໍແດນ
ໂດດເຂົ້າໃສ່ຄອກແກະທີ່ແຂງແຮງ ແລະເຮົາຈະແຕ່ງຕັ້ງຜູ້ທີ່ເຮົາເລືອກສັນໄວ້ເຫນືອມັນ ໃຜເປັນເຫມືອນເຮົາ ໃຜຈະ
ນັດເຮົາ ຜູ້ລ້ຽງແກະຄົນໃດຈະທົນຢືນຢູ່ຕໍ່ຫນ້າເຮົາໄດ້
20 ເຫດສັນນັ້ນຈົ່ງຟັງແຜນງານຊຶ່ງພຣະຜູ້ເປັນເຈົ້າຊົງກະທຳໄວ້ຕໍ່ສູ້ເມືອງເອໂດມ ແລະບັນດາພຣະປະສົງຊຶ່ງພຣະອົງໄດ້
ຊົງກ່າວຕໍ່ສູ້ຊາວເມືອງເຕມານ ຄືເຖິງໂຕນ້ອຍໆທີ່ຢູ່ໃນຝູງກໍຕ້ອງຖືກລາກເອົາໄປ ທຸກຄົນຈະມີຄວາມຢ້ານກົວ.
21 ແຜ່ນດິນໂລກຈະສັ່ນສະເທືອນເພາະສຽງທີ່ມັນລົ້ມ ສຽງຄ່ຳຄວນຂອງເຂົາຈະໄດ້ຍິນເຖິງທະເລແດງ
22 ຜູ້ນຶ່ງຈະເຫາະຂຶ້ນແລະບິນລົງເຫມືອນດັ່ງນົກອິນຊີ ແລະກາງປີກຂອງມັນອອກຕໍ່ສູ້ໂບສຣາ ແລະຈິດໃຈຂອງນັກຮົບ
ແຫ່ງເອໂດມໃນວັນນັ້ນຈະເປັນເຫມືອນຈິດໃຈຂອງຍິງເຈັບທ້ອງອອກລູກ”

**ຄຳພະຍາກອນກ່ຽວກັບເມືອງດາມັສກັສ**

Judgment on Damascus

23 ກ່ຽວກັບເຣື່ອງເມືອງດາມັສກັສ ເມືອງຮາມັທ ແລະເມືອງອາປັດໄດ້ຂາຍຫນ້າ ເພາະເຂົາທັງຫລາຍໄດ້ຍິນຂ່າວຮ້າຍ
ເຂົາກໍຢ້ານ ເຂົາເສັຽໃຈເຫມືອນລົມພະຍຸໃນນ້ຳທະເລແລະມັນສງົດງຽບບໍ່ໄດ້
24 ເມືອງດາມັສກັສກໍອ່ອນເພັຽແລ້ວ ເຂົາຫັນຫນີ ແລະຄວາມຢ້ານກົວຈັບຕົວສັ່ນຈັບເຂົາໄວ້ ຄວາມແສນຣະທົມແລະ
ຄວາມເສົ້າຍຶດເຂົາໄວ້ ເຫມືອນດັ່ງຜູ້ຍິງກຳລັງອອກລູກ
25 ເມືອງທີ່ມີຊື່ສຽງນັ້ນຖືກປະຖິ້ມແລ້ວ ຄືເມືອງທີ່ເຕັມດ້ວຍຄວາມຊື່ນບານນັ້ນ
26 ເຫດສັນນັ້ນຄົນຫນຸ່ມໆຂອງເມືອງນັ້ນຈະລົ້ມລົງຕາມເດີ່ນເມືອງ ແລະບັນດາທະຫານຂອງເມືອງນັ້ນຈະຖືກທຳລາຍ
ໃນວັນນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ແຫລະ
27 ແລະເຮົາຈະກໍ່ໄຟຂຶ້ນໃນກຳແພງເມືອງດາມັສກັສ ແລະໄຟນັ້ນຈະກິນພຣະຣາຊວັງຂອງເບນຮາດາດຈົນໝົດ”

**ຄຳພຍາກອນກ່ຽວກັບເຜົ່າເກດາ ແລະຣາຊອານາຈັກຮາໂຊ**

Judgment on Kedar and Hazor

28 ກ່ຽວກັບເຣື່ອງເຜົ່າເກດາ ແລະຣາຊອານາຈັກຮາໂຊ ຊຶ່ງເນບູກາດເນັດຊາກະສັດແຫ່ງບາບີໂລນໂຈມຕີ ພຣະຜູ້ເປັນ
ເຈົ້າກ່າວດັ່ງນີ້ວ່າ ຈົ່ງລຸກຂຶ້ນ ບຸກເຂົ້າໄປສູ້ເຜົ່າເກດາ ຈົ່ງທຳລາຍປະຊາຊົນແຫ່ງຕາເວັນອອກເສັຽ
29 ເຕັນແລະຝູງແບ້ ແກະຂອງເຂົາຈະຖືກຍຶດ ທັງມ່ານແລະເຄື່ອງຂອງທັງໝົດຂອງເຂົາ ອູດຂອງເຂົາຈະຖືກນຳເອົາໄປ
ຈາກເຂົາ ແລະຄົນຈະຮ້ອງແກ່ເຂົາວ່າ “ຄວາມຢ້ານພີລຶກຄວາມກົວມີຢູ່ທົ່ວທິບ”
30 ພຣະຜູ້ເປັນເຈົ້າກ່າວວ່າ ຊາວເມືອງຮາໂຊເອີຍ ຫນີເທີນ ຈົ່ງສັນຈອນໄປໄກ ໄປອາສັຍໃນທີ່ເລິກ ເພາະເນບູກາດເນັດ
ຊາກະສັດແຫ່ງບາບີໂລນໄດ້ສັ່ງແຜນງານຕໍ່ສູ້ເຈົ້າ ແລະກໍ່ຕັ້ງຄວາມປະສົງໄວ້ສູ້ເຈົ້າ
31 ພຣະຜູ້ເປັນເຈົ້າກ່າວວ່າ ຈົ່ງລຸກຂຶ້ນ ມຸ້ງຫນ້າໄປສູ້ປະຊາຊາດນຶ່ງທີ່ຮັ່ງມີ ຊຶ່ງອາສັຍຢູ່ຢ່າງຫມັ້ນຄົງ ບໍ່ມີປະຕູເມືອງ ແລະ
ບໍ່ມີປະຕູຮົ້ວຢູ່ແຕ່ລຳພັງ
32 ອູດຂອງເຂົາທັງຫລາຍຈະກາຍເປັນຂອງທີ່ປຸ້ນມາໄດ້ ແລະຝູງງົວຂອງເຂົາຈະເປັນຂອງທີ່ຍຶດມາ ພຣະຜູ້ເປັນເຈົ້າກ່າວ
ວ່າ ເຮົາຈະກະຈັດກະຈາຍເຂົາໄປທຸກທິດທາງຂອງລົມ ຄືເຂົາທີ່ແຖຜົມຈອນຫູຂອງເຂົາ ແລະເຮົາຈະນຳພັຍວິບັດມາ
ຈາກທຸກ ດ້ານຂອງເຂົາ
33 ເມືອງຮາໂຊຈະເປັນທີ່ອາສັຍຂອງຫມາປ່າ ເປັນບ່ອນປະຮ້າງຢູ່ຕລອດໄປ ບໍ່ມີໃຜຈະຕັ້ງຢູ່ທີ່ນັ້ນ ບໍ່ມີມະນຸດຄົນໃດຈະ
ອາສັຍໃນທີ່ນັ້ນ”

**ຄຳພຍາກອນກ່ຽວກັບເມືອງເອລາມ**

judgment on Elam

34 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າ ຊຶ່ງມາຍັງເຢເຣມີຢາຜູ້ປະກາດພຣະທັມກ່ຽວກັບເຣື່ອງເມືອງເອລາມ ໃນຕອນຕົ້ນຣັຊ
ການເຊເດກີຢາກະສັດແຫ່ງຢູດາ

35 ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ, "ເບິ່ງແມ, ເຮົາຈະຫັກຄັນທະນູຂອງເອລາມ ຊຶ່ງເປັນຫົວໃຈແຫ່ງກຳລັງຂອງ
ເຂົາທັງຫລາຍ

36 ແລະເຮົາຈະນຳລົມທັງສີ່ທິດຈາກຟ້າທັງສີ່ສ່ວນມາສູ່ເອລາມ ແລະເຮົາຈະກະຈາຍເຂົາໄປຕາມລົມເຫລົ່ານັ້ນທັງຫມົດ
ຈະບໍ່ມີປະຊາຊາດໃດຊຶ່ງຜູ້ຖືກຂັບໄລ່ອອກໄປຈາກເອລາມຈະມາບໍ່ເຖິງ

37 ເຮົາຈະກະທຳໃຫ້ເອລາມສັ່ນຕໍ່ຫນ້າສັດຕຣູຂອງເຂົາທັງຫລາຍ ແລະຕໍ່ຫນ້າຜູ້ທີ່ສແວງຫາຊີວິດຂອງເຂົາ ພຣະຜູ້ເປັນ
ເຈົ້າກ່າວວ່າ ເຮົາຈະນຳເຫດຮ້າຍມາເຖິງເຂົາທັງຫລາຍ ຄືຄວາມພິໂຣດອັນແຮງກ້າ ເຮົາຈະໃຊ້ໃຫ້ດາບໄລ່ນຳເຂົາທັງ
ຫລາຍ ຈົນກວ່າເຮົາຈະໄດ້ເຜົາຜານເຂົາທັງໝົດ

38 ແລ້ວເຮົາຈະຕັ້ງພຣະທີ່ນັ່ງຂອງເຮົາໃນເອລາມ ແລະທຳລາຍກະສັດແລະບັນດາເຈົ້ານາຍຂອງເຂົາທັງຫລາຍ ພຣະຜູ້
ເປັນເຈົ້າກ່າວດັ່ງນີ້

39 ພຣະຜູ້ເປັນເຈົ້າກ່າວວ່າ ແຕ່ໃນການຕໍ່ໄປ ເຮົາຈະໃຫ້ເອລາມກັບສູ່ສະພາບເດີມ

## 50 ຄຳທຳນວາຍກ່ຽວກັບກຸງບາບີໂລນ

Judgment on Babylon

1 ພຣະຄຳຊຶ່ງພຣະຜູ້ເປັນເຈົ້າຊົງກ່າວກັບເຣື່ອງບາບີໂລນ ກ່ຽວກັບເຣື່ອງແຜ່ນດິນຂອງຊາວຄັນເດອານໂດຍເຢເຣມີຢາ
ຜູ້ປະກາດພຣະທັມວ່າ,

2 "ຈົ່ງປະກາດຖ້າມກາງບັນດາປະຊາຊາດແລະປ່າວຮ້ອງ ຈົ່ງຕັ້ງທຸງຂຶ້ນແລະປ່າວຮ້ອງ ຢ່າປິດບັງໄວ້ເລີຍ ແລະວ່າ "ບາ
ບີໂລນຖືກຍຶດແລ້ວ ພຣະເບນກໍໄດ້ອາຍ ພຣະເມໂຣດັກກໍຢ້ານກົວ ຮູບໂຄຣົບທັງຫລາຍຂອງເມືອງນັ້ນຖືກກະທຳໃຫ້
ໄດ້ອາຍ ແລະຮູບປັ້ນທັງຫລາຍກໍຢ້ານກົວ"

3 ເພາະວ່າມີປະຊາຊາດນຶ່ງອອກຈາກທິດເຫນືອໄດ້ມາຕໍ່ສູ້ເມືອງນັ້ນ ຊຶ່ງກະທຳໃຫ້ແຜ່ນດິນຂອງນາງເປັນທີ່ຮ້າງເປົ່າ
ແລະບໍ່ມີແມ່ນແຕ່ຄົນນຶ່ງອາສັຍໃນທີ່ນັ້ນ ທັງມະນຸດແລະສັດຈະຫນີໄປຫມົດ

4 "ພຣະຜູ້ເປັນເຈົ້າກ່າວວ່າ ໃນວັນເຫລົ່ານັ້ນ ແລະໃນເວລານັ້ນ ປະຊາຊົນອິສຣາເອນແລະປະຊາຊົນຢູດາຈະມາຮວມ
ກັນຈະຮ້ອງໄຫ້ ແລະເຂົາທັງຫລາຍຈະສແວງຫາພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາ

5 ເຂົາທັງຫລາຍຈະຖາມຫາທາງໄປຊີໂອນໂດຍຫັນຫນ້າໄປສູ່ເມືອງນັ້ນ ກ່າວວ່າ "ມາເຖີດ ໃຫ້ພວກເຮົາມາຕິດສນິດ
ກັບພຣະຜູ້ເປັນເຈົ້າໂດຍທຳຄຳຫມັ້ນສັນຍາອັນຕລອດໄປຈະບໍ່ລືມເລີຍ"

6 "ປະຊາຊົນຂອງເຮົາເປັນແກະທີ່ຫລົງ ບັນດາຜູ້ລ້ຽງຂອງເຂົາທັງຫລາຍໄດ້ພາເຂົາຫລົງໄປ ຫັນເຂົາທັງຫລາຍໄປຢູ່
ເທິງພູ ເຂົາທັງຫລາຍໄດ້ເດີນຈາກພູໄປຫາຈ້າຍພູ ເຂົາໄດ້ລືມຄອກຂອງເຂົາແລ້ວ

7 ບັນດາຜູ້ທີ່ພົບເຫັນກໍກິນເຂົາ ແລະສັດຕຣູຂອງເຂົາໄດ້ກ່າວວ່າ "ເຮົາບໍ່ມີຄວາມຜິດ ເພາະເຂົາທັງຫລາຍໄດ້ກະທຳ
ບາບຕໍ່ພຣະຜູ້ເປັນເຈົ້າ ຜູ້ເປັນທີ່ຢູ່ອັນແທ້ຈິງຂອງເຂົາທັງຫລາຍ ຄືພຣະຜູ້ເປັນເຈົ້າອັນເປັນຄວາມຫວັງຂອງບັນພະບຸ
ຣຸດຂອງເຂົາທັງຫລາຍ

8 "ຈົ່ງຫນີຈາກຖ້າມກາງບາບີໂລນ ຈົ່ງອອກໄປຈາກແຜ່ນດິນຂອງຊາວຄັນເດອານ ແລະເປັນເຫມືອນໂຕແບ້ທີ່ນຳຫນ້າ
ຝູງ

9 ເພາະ ເບິ່ງແມ, ເຮົາຈະປຸກປັ່ນແລະນຳບັນດາປະຊາຊາດໃຫຍ່ຫມູ່ນຶ່ງຈາກປະເທດເຫນືອມາຕໍ່ສູ້ບາບີໂລນ ແລະເຂົາທັງຫລາຍຈະລຽນແຖວມາຕໍ່ສູ້ກັບນາງ ຊຶ່ງນັ້ນແຫລະນາງຈະຖືກຍຶດ ລູກທະນູຂອງເຂົາທັງຫລາຍກໍເຫມືອນນັກຮົບທີ່ມີສີມືຜູ້ບໍ່ເຄີຍກັບຄືນເມືອມືເປົ່າ

10 ພຣະຜູ້ເປັນເຈົ້າກ່າວວ່າ ປະເທດຄັນເດອານຈະຖືກປຸ້ນ ບັນດາຜູ້ທີ່ປຸ້ນເຂົາຈະອີ່ມຫນຳສຳຣານ

11 “ບັນດາຜູ້ປຸ້ນມໍຣະດົກຂອງເຮົາເອີຍ ແມ່ນວ່າເຈົ້າຈະຍິນດີ ແມ່ນວ່າເຈົ້າຈະຮຸ່ງເຮືອງ ແມ່ນເຈົ້າຈະຊື່ນຊົມຢ່າງງົວແມ່ຢູ່ທີ່ຫຍ້າ ແລະຮ້ອງຢ່າງມ້າພັນໂຕເຖິກ

12 ມານດາຂອງເຈົ້າຈະອັບອາຍຂາຍໜ້າ ແລະນາງທີ່ໄດ້ເກີດເຈົ້າມາຈະຖືກຫລົບຫລູ່ກຽດ ນາງຈະເປັນບັນດາປະຊາຊາດທີ່ບໍ່ຢູ່ທາງທ້າຍ ເປັນຖິ່ນກັນດານທີ່ແຫ້ງແລ້ງແລະທະເລຊາຍ

13 ເມືອງນັ້ນຈະບໍ່ມີຄົນຢູ່ອາສັຍ ເພາະພຣະພິໂຣດຂອງພຣະຜູ້ເປັນເຈົ້າ ແຕ່ຈະເປັນບ່ອນຮ້າງເປົ່າຢ່າງທີ່ສຸດ ຊຶ່ງຄົນທີ່ຜ່ານເມືອງບາບີໂລນໄປຈະຕົກຕະລຶງ ແລະເຍີ້ຍຫຍັນເພາະຮອຍຕີທັງໝົດຂອງເມືອງນັ້ນ

14 ຈົ່ງລຽນແຖວຕົວຂອງເຈົ້າທັງຫລາຍເຂົ້າມາສູ້ບາບີໂລນໃຫ້ຮອບຂ້າງ ບັນດາເຈົ້າທີ່ໂກ່ງຄັນທະນູຈົ່ງຍິງນາງ ຢ່າເສັຽດາຍລູກທະນູ ເພາະນາງໄດ້ກະທຳບາບຕໍ່ພຣະຜູ້ເປັນເຈົ້າ

15 ເປັ່ງສຽງໂຮ່ຮ້ອງສູ້ນາງໃຫ້ຮອບຂ້າງ ນາງຍອມແພ້ແລ້ວ ເຄື່ອງປ້ອງກັນຂອງນາງລົ້ມລົງແລ້ວ ກຳແພງຂອງນາງຖືກພັງລົງມາແລ້ວ ເພາະນີ້ເປັນການແກ້ແຄ້ນຂອງພຣະຜູ້ເປັນເຈົ້າ ຈົ່ງທຳການແກ້ແຄ້ນນາງ ທຳກັບນາງເຫມືອນນາງໄດ້ກະທຳມາແລ້ວ

16 ຈົ່ງຕັດຜູ້ຫວ່ານເສັຽຈາກບາບີໂລນ ແລະຕັດຜູ້ທີ່ຖືກ່ຽວໃນຣະດູກ່ຽວ ເຫດເພາະດາບຂອງຜູ້ບີບບັງຄັບ ທຸກຄົນຈຶ່ງຫັນເຂົ້າຫາຊົນຊາດຂອງຕົນ ແລະທຸກຄົນຈະຫນີໄປຍັງແຜ່ນດິນຂອງຕົນ

17 “ອິສຣາເອນເປັນເຫມືອນແກະທີ່ຖືກສິງຂັບໄລ່ໄປ ທຳອິດກະສັດອັສຊີເຣັຽກິນເຂົາ ໃນທີ່ສຸດນີ້ເນບູກາດເນັດຊາກະສັດແຫ່ງບາບີໂລນໄດ້ແຫ້ນກະດູກຂອງເຂົາ

18 ເຫດສັນນັ້ນພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະນຳການລົງໂທດມາເຫນືອກະສັດແຫ່ງບາບີໂລນແລະແຜ່ນດິນຂອງທ່ານ ດັ່ງທີ່ເຮົາໄດ້ລົງໂທດກະສັດແຫ່ງອັສຊີເຣັຽ

19 ເຮົາຈະໃຫ້ອິສຣາເອນກັບສູ່ເດີ່ນຫຍ້າຂອງເຂົາ ແລະເຂົາຈະກິນຢູ່ເທິງກາເມນແລະໃນບາຊານ ແລະເຂົາຈະອີ່ມໃຈເທິງຈ້າຍພູເອຟຣາອິມແລະໃນກິເລອາດ

20 ພຣະຜູ້ເປັນເຈົ້າກ່າວວ່າ ໃນວັນເຫລົ່ານັ້ນແລະໃນເວລານັ້ນ ຈະຫາບາບຜິດໃນອິສຣາເອນແລະຈະຫາບໍ່ໄດ້ເລີຍ ຈະຫາບາບໃນຢູດາກໍຈະຫາບໍ່ໄດ້ເລີຍ ເພາະເຮົາຈະໃຫ້ອະພັຍແກ່ຊົນທີ່ເຫລືອຢູ່ເຫລົ່ານັ້ນຜູ້ທີ່ເຮົາເຫລືອໄວ້ໃຫ້

21 ພຣະຜູ້ເປັນເຈົ້າກ່າວວ່າ, “ຈົ່ງຂຶ້ນໄປຕໍ່ສູ້ແຜ່ນດິນເມຣາທາອິມ ແລະຕໍ່ສູ້ເມືອງເປໂກດ ຈົ່ງຂ້າເຂົາແລະຕາມທຳລາຍເສັຽໃຫ້ໝົດ ແລະຈົ່ງກະທຳທຸກຢ່າງຕາມທີ່ເຮົາໄດ້ບັນຊາເຈົ້າໄວ້

22 ສຽງສົງຄາມຢູ່ໃນແຜ່ນດິນ ແລະການທຳລາຍຢ່າງໃຫຍ່ຫລວງກໍຢູ່ໃນນັ້ນ

23 ຄ້ອນທຸບຂອງແຜ່ນດິນໂລກທັງຫມົດ ໄດ້ຖືກຕັດລົງແລະຖືກຫັກເສັຽແລ້ວ ບາບີໂລນກາຍເປັນຄວາມສະດຸ້ງໃຈຖ້າມກາງບັນດາປະຊາຊາດ

24 ບາບີໂລນເອີຍ ເຮົາວາງບ້ວງນັ້ນແລະເຈົ້າບໍ່ຮູ້ເຣື່ອງ ເຂົາມາພົບເຈົ້າແລະຈັບເຈົ້າເພາະເຈົ້າໄດ້ຕໍ່ສູ້ກັບພຣະຜູ້ເປັນເຈົ້າ

25 ພຣະຜູ້ເປັນເຈົ້າໄດ້ຊົງເປີດຄັງອາວຸດຂອງພຣະອົງ ແລະຊົງໃຫ້ອາວຸດແຫ່ງພຣະພິໂຣດຂອງພຣະອົງອອກມາ ເພາະພຣະຜູ້ເປັນເຈົ້າຈອມໂຍທາ ຊົງມີພຣະຣາຊກິດທີ່ຈະກະທຳໃນແຜ່ນດິນແຫ່ງຊາວຄັນເດອານ

26 ຈົ່ງມາແຕ່ທຸກທີ່ທຸກບ່ອນໄປຕໍ່ສູ້ກັບນາງ ຈົ່ງເປີດບັນດາສາງຂອງນາງ ຈົ່ງກອງນາງໄວ້ເຫມືອນດັ່ງກອງເຂົ້າແລະທຳລາຍເສັຽຈົນໝົດ ຢ່າໃຫ້ນາງເຫລືອຢູ່ເລີຍ

27 ຈົ່ງຂ້າງົວເຖິກຂອງນາງໃຫ້ຫມົດ ໃຫ້ພວກມັນລົງໄປສູ່ການຖືກຂ້າ ວິບັດແກ່ມັນທັງຫລາຍເພາະວັນເວລາຂອງມັນມາເຖິງແລ້ວ ຄືເວລາແຫ່ງການລົງໂທດມັນ

28 “ຟັງເດີ ເຂົາທັງຫລາຍໄດ້ຫນີແລະລອດພົ້ນຈາກແຜ່ນດິນບາບີໂລນ ໄປປະກາດການແກ້ແຄ້ນຂອງພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງເຮົາໃນຊີໂອນ ຄືການແກ້ແຄ້ນແທນພຣະວິຫານຂອງພຣະອົງ
29 “ຈົ່ງເອີ້ນນັກທະນູມາຕໍ່ສູ້ກັບບາບີໂລນ ຄືບັນດາຄົນທີ່ກົ່ງທະນູ ຈົ່ງຕັ້ງຄ້າຍໄວ້ຮອບມັນ ຢ່າໃຫ້ຜູ້ໃດຫນີລອດພົ້ນໄປໄດ້
ຈົ່ງກະທຳກັບມັນຕາມການກະທຳຂອງມັນ ຈົ່ງກະທຳແກ່ມັນຢ່າງທີ່ມັນໄດ້ກະທຳມານັ້ນ ເພາະມັນຈອງຫອງລອງດີ
ກັບພຣະຜູ້ເປັນເຈົ້າ ພຣະອົງຜູ້ບໍຣິສຸດແຫ່ງອິສຣາເອນ
30 ເຫດສັນນັ້ນ ຄົນຫນຸ່ມໆຂອງມັນຈະລົ້ມລົງທີ່ເດີ່ນຂອງມັນ ແລະທະຫານຂອງມັນທັງສິ້ນຈະຖືກທຳລາຍໃນວັນນັ້ນ
ພຣະຜູ້ເປັນເຈົ້າກ່າວດັ່ງນີ້
31 ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ ຜູ້ຈອງຫອງເອີຍ ເຮົາຕໍ່ສູ້ກັບເຈົ້າ ເພາະວ່າວັນເວລາຂອງເຈົ້າມາເຖິງແລ້ວ ຄືເວ
ລາທີ່ເຮົາຈະລົງໂທດເຈົ້າ
32 ຜູ້ຈອງຫອງຈະສະດຸດແລະລົ້ມລົງ ຈະບໍ່ມີຜູ້ໃດຈູງເຂົາຂຶ້ນໄດ້ ແລະເຮົາຈະກໍ່ໄຟໃນບັນດາຫົວເມືອງຂອງມັນ ແລະໄຟ
ຈະກິນບັນດາທີ່ຢູ່ຮອບມັນໝົດສິ້ນ
33 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ປະຊາຊົນອິສຣາເອນຖືກບີບບັງຄັບ ແລະປະຊາຊົນຢູດາກໍພອຍໄປດ້ວຍ ຜູ້ທີ່ຈັບເຂົາ
ທັງຫລາຍໄປເປັນຊະເລີຍໄດ້ຍຶດເຂົາໄວ້ຫມັ້ນ ເຂົາທັງຫລາຍປະຕິເສດບໍ່ຍອມໃຫ້ເຂົາໄປ
34 ພຣະຜູ້ໄຖ່ຂອງເຂົາທັງຫລາຍນັ້ນເຂັ້ມແຂງ ພຣະນາມຂອງພຣະອົງຄືພຣະຜູ້ເປັນເຈົ້າຈອມໂຍທາ ພຣະອົງຈະຊົງແກ້
ຄະດີຂອງເຂົາເປັນແນ່ ເພື່ອພຣະອົງຈະປະທານຄວາມສງົບແກ່ແຜ່ນດິນໂລກ ແຕ່ປະທານຄວາມບໍ່ສງົບແກ່ຊາວ
ເມືອງບາບີໂລນ
35 “ພຣະຜູ້ເປັນເຈົ້າກ່າວວ່າ ໃຫ້ດາບຢູ່ເຫນືອຊາວຄັນເດອານ ແລະເຫນືອຊາວເມືອງບາບີໂລນ ແລະເຫນືອເຈົ້ານາຍ
ແລະນັກປາດຂອງເຂົາ
36 ໃຫ້ດາບຢູ່ເຫນືອຜູ້ທຳນວາຍ ເພື່ອເຂົາຈະກາຍເປັນຄົນໂງ່ໄປ ໃຫ້ດາບຢູ່ເຫນືອບັນດານັກຣົບຂອງເຂົາ ເພື່ອເຂົາທັງ
ຫລາຍຈະຕົກໃຈ
37 ໃຫ້ດາບຢູ່ເຫນືອມ້າທັງຫລາຍຂອງເຂົາ ແລະຣົດຮົບຂອງເຂົາ ແລະຢູ່ເຫນືອກອງທະຫານຊົນຕ່າງດ້າວຖ້າມກາງເຂົາ
ເພື່ອເຂົາທັງຫລາຍຈະກາຍເປັນຜູ້ຍິງໄປ ໃຫ້ດາບຢູ່ເຫນືອຊັບສົມບັດທັງສິ້ນຂອງເຂົາ ເພື່ອວ່າຊັບສົມບັດນັ້ນຈະຖືກ
ປຸ້ນເສັງ
38 ໃຫ້ຄວາມແຫ້ງແລ້ງຢູ່ເຫນືອນ້ຳທັງຫລາຍຂອງມັນ ເພື່ອນ້ຳທັງຫລາຍນັ້ນຈະໄດ້ແຫ້ງໄປ ເພາະເປັນແຜ່ນດິນແຫ່ງຮູບ
ໂຄຣົບ ແລະເຂົາທັງຫລາຍກໍປ່ວງບ້າກັບຮູບນັ້ນ
39 “ເຫດສັນນັ້ນ ສັດປ່າທັງຫລາຍແລະບັນດາຫມາຈອກຈະອາສັຍໃນບາບີໂລນ ແລະນົກກະຈອກເທດຈະອາສັຍຢູ່ໃນ
ນັ້ນ ເມືອງນັ້ນຈະບໍ່ມີປະຊາຊົນຢູ່ອີກຕໍ່ຕລອດໄປ ຄືບໍ່ມີຊາວເມືອງອາສັຍຢູ່ຕລອດຊົ່ວຊາດເຊື້ອສາຍ
40 ພຣະຜູ້ເປັນເຈົ້າກ່າວວ່າ ເມື່ອພຣະຜູ້ເປັນເຈົ້າໄດ້ຊົງຂວ້ຳເມືອງໂຊໂດມແລະເມືອງໂກໂມຣາແລະຫົວເມືອງໃກ້ຄຽງ
ດັ່ງນັ້ນ ຈະບໍ່ມີຄົນຢູ່ທີ່ນັ້ນ ແລະບໍ່ມີມະນຸດຄົນໃດອາສັຍຢູ່ໃນເມືອງນັ້ນ
41 “ເບິ່ງແມ, ຊົນຊາດນຶ່ງມາຈາກທິດເຫນືອ ປະຊາຊາດອັນເຂັ້ມແຂງຊາດນຶ່ງແລະກະສັດຫລາຍອົງຈະຖືກເລົ້າໃຈໃຫ້ມາ
ຈາກທີ່ໄກທີ່ສຸດຂອງແຜ່ນດິນໂລກ
42 ເຂົາທັງຫລາຍຈັບຄັນທະນູແລະຫອກ ເຂົາທັງຫລາຍໂຫດຮ້າຍ ແລະບໍ່ມີຄວາມກະຣຸນາ ສຽງຂອງເຂົາທັງຫລາຍກໍ
ເຫມືອນສຽງທະເລຟາດຟົ້ງ ເຂົາທັງຫລາຍຂີ່ມ້າເປັນແຖວຖັນເປັນຄົນເຂົ້າສູ້ສົງຄາມກັບເຈົ້າ ລູກສາວແຫ່ງບາບີໂລນ
ເອີຍ
43 “ກະສັດແຫ່ງບາບີໂລນໄດ້ຍິນຂ່າວເຣື່ອງນັ້ນ ແລະພຣະຫັດຂອງພຣະອົງກໍອ່ອນລົງ ຄວາມແສນຣະທົມຍຶດຫົວໃຈ
ເຂົາ ເຈັບປວດເຫມືອນດັ່ງຜູ້ຍິງກຳລັງອອກລູກ

44 “ເບິ່ງແມ, ເຮົາຈະກະທຳໃຫ້ເຂົາທັງຫລາຍຫນີໄປຈາກມັນຢ່າງກະທັນຫັນ ເຫມືອນດັ່ງສິງຂຶ້ນມາຈາກດົງລຸ່ມແມ່ນ້ຳຈໍ
ແດນໂດດເຂົ້າໃສ່ຄອກແກະທີ່ແຂງແຮງແລະເຮົາຈະແຕ່ງຕັ້ງຜູ້ທີ່ເຮົາເລືອກສັນໄວ້ເຫນືອມັນ ໃຜເປັນເຫມືອນເຮົາ ໃຜ
ຈະນັດເຮົາ ຜູ້ລ້ຽງແກະຄົນໃດຈະທົນຢືນຢູ່ຕໍ່ຫນ້າເຮົາໄດ້
45 ເຫດສັນນັ້ນຈົ່ງຟັງແຜນງານຊຶ່ງພຣະຜູ້ເປັນເຈົ້າຊົງກະທຳໄວ້ຕໍ່ສູ້ບາບີໂລນ ແລະບັນດາພຣະປະສົງຊຶ່ງພຣະອົງໄດ້ຊົງ
ກ່າວຕໍ່ສູ້ກັບແຜ່ນດິນຂອງຊາວຄັນເດອານ ແມ່ນແຕ່ໂຕນ້ອຍໆທີ່ຢູ່ໃນຝູງກໍຕ້ອງຖືກລາກເອົາໄປ ແລະທຸກຄົນຈະເກີດ
ຢ້ານກົວອັນໃຫຍ່
46 ແຜ່ນດິນໂລກຈະສັ່ນສະເທືອນເພາະສຽງຂອງການທີ່ບາບີໂລນຖືກຈັບເປັນຊະເລີຍ ແລະສຽງຄ່ຳຄວນຂອງມັນດັງໄປ
ຖ້ວນກາງບັນດາປະຊາຊາດ”

## 51 ພຣະເຈົ້າຊົງພິພາກສາລົງໂທດກຸງບາບີໂລນ

Further Judgment on Babylonia

1 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ເບິ່ງແມ, ເຮົາຈະປຸກວິນຍານຂອງຜູ້ທຳລາຍ ຕໍ່ສູ້ກັບບາບີໂລນ ຕໍ່ສູ້ກັບຊາວປະເທດ
ຄັນເດອານ
2 ເຮົາຈະສົ່ງຜູ້ຝັດໄປຍັງບາບີໂລນ ແລະເຂົາທັງຫລາຍຈະຝັດມັນ ແລະເຂົາທັງຫລາຍຈະບໍ່ໃຫ້ແຜ່ນດິນຂອງມັນຮ້າງ
ເປົ່າ ເມື່ອເຂົາທັງຫລາຍມາລ້ອມມັນໄວ້ທຸກດ້ານໃນວັນແຫ່ງຄວາມຍາກລຳບາກ
3 ຢ່າໃຫ້ນັກທະນູກົ່ງຄັນທະນູໄດ້ ຢ່າໃຫ້ເຂົາສວມເສື້ອເກາະລຸກຂຶ້ນໄດ້ ຢ່າໄວ້ຊີວິດຄົນຫນຸ່ມໆຂອງມັນເລີຍ ຈົ່ງທຳ
ລາຍກອງທະຫານຂອງມັນທັງຫມົດ
4 ເຂົາທັງຫລາຍຈະຖືກຂ້າລົ້ມລົງໃນແຜ່ນດິນຂອງຊາວຄັນເດອານ ແລະບາດເຈັບຢູ່ທີ່ຖນົນເມືອງນັ້ນ
5 ເພາະວ່າອິສຣາເອນແລະຢູດາບໍ່ໄດ້ຖືກປະຖິ້ມໂດຍພຣະຜູ້ເປັນເຈົ້າຂອງເຂົາທັງຫລາຍ ພຣະຜູ້ເປັນເຈົ້າຈອມໂຍທາ
ແຕ່ແຜ່ນດິນຂອງຊາວຄັນເດອານນັ້ນເຕັມດ້ວຍຄວາມຜິດຕໍ່ອົງບໍຣິສຸດແຫ່ງອິສຣາເອນ
6 “ຈົ່ງຫນີເສັຽຈາກຖ້າມກາງບາບີໂລນ ໃຫ້ທຸກຄົນເອົາຊີວິດຂອງຕົນລອດເຖີດ ໃນການລົງໂທດມັນນັ້ນເຈົ້າຢ່າຖືກຕັດ
ອອກເລີຍ ເພາະນີ້ເປັນເວລາແກ້ແຄ້ນແຫ່ງພຣະຜູ້ເປັນເຈົ້າ ເປັນການຊຶ່ງພຣະອົງຊົງຕອບສນອງ
7 ບາບີໂລນໄດ້ເຄີຍເປັນຖ້ວຍທອງຄຳໃນພຣະຫັດຂອງພຣະຜູ້ເປັນເຈົ້າ ກະທຳໃຫ້ແຜ່ນດິນໂລກທັງສິ້ນມຶນເມົາໄປ ບັນ
ດາປະຊາຊາດໄດ້ດື່ມເຫລົ້າອະງຸ່ນຂອງມັນ ເຫດສັນນັ້ນ ປະຊາຊາດຕ່າງໆຈຶ່ງບ້າໄປ
8 ບາບີໂລນໄດ້ລົ້ມລົງແລະແຕກໄປຢ່າງກະທັນຫັນ ຈົ່ງຄ່ຳຄວນເພື່ອມັນເຖີດ ຈົ່ງເອົາຢາມາໃຫ້ມັນບັນເທົາຄວາມປວດ
ບາງທີ່ຈະຮັກສາມັນໃຫ້ຫາຍໄດ້
9 ເຮົາທັງຫລາຍຢາກຈະຮັກສາບາບີໂລນໃຫ້ຫາຍ ແຕ່ມັນບໍ່ຫາຍ ປະຖິ້ມມັນເສັຽເຖີດ ແລະໃຫ້ເຮົາໄປ ຕ່າງໄປຍັງປະ
ເທດຂອງຕົນ ເພາະວ່າການພິພາກສາມັນໄດ້ຂຶ້ນໄປເຖິງຟ້າສວັນ ແລະໄດ້ຖືກຍົກຂຶ້ນເຖິງຟາກຟ້າ
10 ພຣະຜູ້ເປັນເຈົ້າຊົງນຳຄວາມຍຸດຕິທັມອອກມາໃຫ້ເຮົາ ມາເຖີດ ໃຫ້ເຮົາປະກາດພຣະຣາຊກິດຂອງພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງເຮົາທີ່ໃນຊີໂອນ
11 “ຈົ່ງຝົນລູກທະນູ ຈົ່ງຈັບໂລ່ຂຶ້ນມາ ພຣະຜູ້ເປັນເຈົ້າຊົງເລົ້າໃຈບັນດາກະສັດຂອງພຣະອົງກ່ຽວດ້ວຍເຣື່ອງບາບີໂລນ ກໍ
ຄືການທຳລາຍມັນເສັຽ ເພາະນັ້ນແຫລະເປັນການແກ້ແຄ້ນຂອງພຣະຜູ້ເປັນເຈົ້າ ຄືການແກ້ແຄ້ນແທນພຣະວິຫານ
ຂອງພຣະອົງ
12 ຈົ່ງຍົກທຸງເທິງກຳແພງເມືອງບາບີໂລນ ຈົ່ງເຮັດໃຫ້ຄົນເຝົ້າເຂັ້ມແຂງ ຈົ່ງຕັ້ງຄົນຍາມຂຶ້ນ ຈົ່ງຕຽມກອງດັກສະກັດໄວ້
ເພາະພຣະຜູ້ເປັນເຈົ້າຊົງວາງແຜນງານແລະທັງຊົງກະທຳເສັດຕາມທີ່ພຣະອົງຊົງກ່າວໄວ້ກ່ຽວກັບຊາວເມືອງບາບີ
ໂລນ

13 ເຈົ້າຜູ້ອາສັຍຕາມນໍ້າຫລວງຫລາຍ ຜູ້ມີສົມບັດຫລວງຫລາຍເອີຍ ອາວະສານຂອງເຈົ້າມາເຖິງແລ້ວ ເສັ້ນຊີວິດຂອງ
ເຈົ້າໄດ້ຖືກຕັດຂາດແລ້ວ
14 ພຣະຜູ້ເປັນເຈົ້າຈອມໂຍທາໄດ້ຊົງສາບານເອງວ່າ ເຮົາຈະໃຫ້ເຈົ້າມີຄົນເຕັມເມືອງໃຫ້ຫລາຍເໝືອນຕັກແຕນ ແລະ
ເຂົາທັງຫລາຍຈະເປັ່ງສຽງໂຮ່ຮ້ອງມີຊັຍເຫນືອເຈົ້າ
15 ຜູ້ຊົງສ້າງໂລກດ້ວຍຣິດເດດຂອງພຣະອົງ ຜູ້ຊົງສະຖາປະນາພິພົບໄວ້ດ້ວຍພຣະສະຕິປັນຍາຂອງພຣະອົງ ແລະຊົງແຜ່
ທ້ອງຟ້າອອກດ້ວຍຄວາມເຂົ້າໃຈຂອງພຣະອົງ
16 ເມື່ອພຣະອົງຊົງເປັ່ງພຣະສຸຣະສຽງກໍມີສຽງນໍ້າຟາດຟົ້ງໃນທ້ອງຟ້າ ແລະຊົງກະທໍາໃຫ້ຫມອກລອຍຂຶ້ນຈາກປາຍພິພົບ
ຊົງກະທໍາຟ້າແມບເພື່ອຝົນ ແລະຊົງນໍາລົມມາຈາກພຣະຄັງຂອງພຣະອົງ
17 ມະນຸດທຸກຄົນຊົ່ວຊ້າແລະບໍ່ມີຄວາມຮູ້ ຊ່າງທອງທຸກຄົນຈະໄດ້ອາຍເພາະຮູບໂຄຣົບຂອງຕົນ ເພາະຮູບໂຄຣົບຫລໍ່
ຂອງເຂົາເປັນຂອງປອມ ແລະບໍ່ມີລົມຫາຍໃຈໃນຮູບໂຄຣົບນັ້ນ
18 ມັນເປັນຂອງໄຮ້ຄ່າ ແລະເປັນຜົນງານທີ່ຫນ້າເຍາະເຍີ້ຍ ມັນຈະຕ້ອງພິນາດເມື່ອເຖິງເວລາການລົງໂທດ
19 ພຣະອົງຜູ້ຊົງເປັນສ່ວນຂອງຢາໂຄບບໍ່ເຫມືອນສິ່ງເຫລົ່ານີ້ ເພາະພຣະອົງຊົງເປັນຜູ້ທີ່ກໍ່ຮ່າງທຸກສິ່ງຂຶ້ນ ແລະອິສຣາ
ເອນເປັນເຜົ່າທີ່ເປັນມໍຣະດົກຂອງພຣະອົງ ພຣະຜູ້ເປັນເຈົ້າຈອມໂຍທາເປັນພຣະນາມຂອງພຣະອົງ

### Israel the Creator's Instrument

20 "ເຈົ້າເປັນຄ້ອນແລະເຄື່ອງມືຂອງເຮົາ ເຮົາທຸບບັນດາປະຊາຊາດເປັນປ່ຽງໆດ້ວຍເຈົ້າ ເຮົາທໍາລາຍຣາຊອານາຈັກທັງ
ຫລາຍດ້ວຍເຈົ້າ
21 ເຮົາທຸບມ້າແລະຄົນຂີ່ໃຫ້ແຕກຊະຊາຍໄປດ້ວຍເຈົ້າ
22 ເຮົາທຸບບັນດາຣົດຮົບແລະຄົນຂັບໃຫ້ເປັນປ່ຽງໆດ້ວຍເຈົ້າ ເຮົາທຸບຜູ້ຊາຍແລະຜູ້ຍິງເປັນປ່ຽງໆດ້ວຍເຈົ້າ ເຮົາທຸບຄົນ
ແກ່ແລະຄົນຫນຸ່ມເປັນປ່ຽງໆດ້ວຍເຈົ້າ ເຮົາທຸບຄົນຫນຸ່ມແລະຍິງພົມມະຈາຣີເປັນປ່ຽງໆດ້ວຍເຈົ້າ
23 ເຮົາທຸບຜູ້ລ້ຽງແກະແລະຝູງແກະເປັນປ່ຽງໆດ້ວຍເຈົ້າ ເຮົາທຸບຊາວນາແລະງົວຄູ່ແອກຂອງເຂົາເປັນປ່ຽງໆດ້ວຍເຈົ້າ
ເຮົາທຸບເຈົ້າເມືອງແລະຜູ້ຊ່ອຍເປັນປ່ຽງໆດ້ວຍເຈົ້າ

### The Doom of Babylon

24 ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະສນອງບາບີໂລນແລະບັນດາຊາວປະເທດຄັນເດອານຕໍ່ຫນ້າຕໍ່ຕາຂອງເຈົ້າ ຊຶ່ງບັນດາ
ຄວາມຊົ່ວຮ້າຍຊຶ່ງເຂົາໄດ້ກະທໍາໃນຊີໂອນ
25 ພຣະຜູ້ເປັນເຈົ້າກ່າວວ່າ ພູຊຶ່ງທໍາລາຍເອີຍ ເຮົາຕໍ່ສູ້ເຈົ້າ ເຈົ້າຜູ້ທໍາລາຍແຜ່ນດິນໂລກທັງສິ້ນ ເຮົາຈະຢຽດມືຂອງເຮົາ
ອອກຕໍ່ສູ້ເຈົ້າ ແລະກິ້ງເຈົ້າລົງມາຈາກຫນ້າຜາແລະກະທໍາໃຫ້ເຈົ້າເປັນພູທີ່ຖືກໄຫມ້
26 ເຂົາຈະບໍ່ເອົາຫີນຈາກເຈົ້າໄປທໍາສີລາມຸມເອກ ແລະບໍ່ເອົາໄປທໍາຮາກຖານ ແຕ່ເຈົ້າຈະເປັນຂອງປະຮ້າງເປັນນິດ
ພຣະຜູ້ເປັນເຈົ້າກ່າວດັ່ງນີ້
27 "ຈົ່ງຕັ້ງທຸງໄວ້ເທິງແຜ່ນດິນໂລກ ຈົ່ງເປົ່າເຂົາສັດຖ້າມກາງປະຊາຊາດທັງຫລາຍ ຈົ່ງຕຽມປະຊາຊາດທັງຫລາຍໄວ້ເຮັດ
ສົງຄາມກັບມັນ ຈົ່ງເອີ້ນຣາຊອານາຈັກຕໍ່ໄປນີ້ມາສູ້ກັບມັນ ອາຣາຣັດ ມິນນີ ແລະອັສເຄນັດ ຈົ່ງຕັ້ງຈອມທັບໄວ້ຕໍ່ສູ້
ມັນ ຈົ່ງໃຊ້ຝູງມ້າຂຶ້ນໄປເຫມືອນດັ່ງຝູງຕັກແຕນໂຕມີຂົນນັ້ນ
28 ຈົ່ງຕຽມບັນດາປະຊາຊາດມາທໍາສົງຄາມກັບມັນ ຄືຕຽມບັນດາກະສັດແຫ່ງເມເດສ ພ້ອມທັງເຈົ້າເມືອງແລະເຈົ້າ
ແຂວງທັງຫລາຍ ແລະທຸກແຜ່ນດິນທີ່ຂຶ້ນແກ່ເມເດສ
29 ແຜ່ນດິນທີ່ສັ່ນສະເທືອນ ແລະບິດໂຕດ້ວຍຄວາມເຈັບ ເພາະບັນດາພຣະປະສົງຂອງພຣະຜູ້ເປັນເຈົ້າຕໍ່ບາບີໂລນກໍຕັ້ງ
ຫມັ້ນຢູ່ ທີ່ຈະກະທໍາໃຫ້ແຜ່ນດິນບາບີໂລນເປັນທີ່ຮ້າງເປົ່າປາສຈາກຄົນອາສັຍ
30 ນັກຮົບແຫ່ງບາບີໂລນຢຸດຮົບແລ້ວ ເຂົາທັງຫລາຍຄ້າງຢູ່ໃນທີ່ກໍາບັງເຂັ້ມແຂງຂອງເຂົາ ກໍາລັງຂອງເຂົາໄດ້ຖອຍແລ້ວ
ເຂົາທັງຫລາຍກາຍເປັນເຫມືອນດັ່ງຜູ້ຍິງ ທີ່ອາສັຍຂອງມັນກໍກໍາລັງໄຟໄຫມ້ ແລະປະຕູຮົ້ວຂອງມັນກໍຫັກ

31 ນັກແລ່ນຄົນນຶ່ງແລ່ນໄປພົບນັກແລ່ນອີກຄົນນຶ່ງ ທູດຄົນນຶ່ງແລ່ນໄປພົບທູດອີກຄົນນຶ່ງ ເພື່ອທູນກະສັດແຫ່ງບາບີໂລນ
ວ່າເມືອງຂອງພຣະອົງຖືກຍຶດໄວ້ທຸກດ້ານແລ້ວ
32 ທ່າລຸຍຂ້າມກໍຖືກຍຶດແລ້ວ ເຄື່ອງປ້ອງກັນກໍຖືກໄຟໄຫມ້ ແລະບັນດາທະຫານກໍເກີດຕື່ນຕົກໃຈ
33 ເພາະພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ລູກສາວແຫ່ງບາບີໂລນກໍເຫມືອນລານ
ນວດເຂົ້າໃນເວລາທີ່ມັນຖືກຢຽບຍ່ຳໃນບໍ່ຊ້າເວລາກ່ຽວກໍຈະມາເຖິງແລ້ວ”
34 ໃຫ້ຊາວເມືອງຊີໂອນເວົ້າວ່າ, “ເນບູກາດເນັສຊາກະສັດແຫ່ງບາບີໂລນໄດ້ກິນຂ້າພະເຈົ້າແລ້ວ ທ່ານໄດ້ທຳລາຍຂ້າ
ພະເຈົ້າແລ້ວ ທ່ານໄດ້ທຳໃຫ້ຂ້າພະເຈົ້າເປັນພາຊນະຫວ່າງເປົ່າ ທ່ານໄດ້ກືນຂ້າພະເຈົ້າດັ່ງແຂ້ ທ່ານກິນຂອງແຊບ
ຂອງຂ້າພະເຈົ້າຈົນເຕັມທ້ອງ ແລະທ່ານໄດ້ໄລ່ຂ້າພະເຈົ້າອອກໄປ
35 ໃຫ້ຊາວຊີໂອນກ່າວວ່າ, “ຄວາມທາຣຸນທີ່ໄດ້ກະທຳແກ່ຂ້າພະເຈົ້າແລະແກ່ພີ່ນ້ອງຂອງຂ້າພະເຈົ້າຈົ່ງຕົກເທິງບ່າບາ
ໂລນ” ໃຫ້ເຢຣູຊາເລັມກ່າວວ່າ, “ທີ່ຂ້າພະເຈົ້າຕ້ອງຕາຍນັ້ນຊາວປະເທດຄັນເດອານກໍຮັບຜິດຊອບ”
36 ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ເບິ່ງແມ, ເຮົາຈະແກ້ຄະດີຂອງເຈົ້າ ແລະກະທຳການແກ້ແຄ້ນເພື່ອເຈົ້າ
ເຮົາຈະເຮັດໃຫ້ທະເລຂອງມັນບົກ ແລະກະທຳແມ່ນ້ຳທັງຫລາຍຂອງມັນໃຫ້ແຫ້ງ
37 ແລະບາບີໂລນຈະກາຍເປັນສິ່ງສລັກຫັກພັງ ເປັນບ່ອນທີ່ຫມາປ່າຢູ່ ເປັນຄວາມໜ້າຢ້ານ ແລະເປັນທີ່ເຍາະເຍີ້ຍປາສ
ຈາກຄົນອາສັຍ
38 ພຣະຜູ້ເປັນເຈົ້າກ່າວວ່າ, “ເຂົາທັງຫລາຍຈະຮ້ອງແຜດສຽງນຳກັນເຫມືອນດັ່ງສິງ ເຂົາທັງຫລາຍຈະຄາງເຫມືອນສິງ
ຫນຸ່ມ
39 ຂນະທີ່ເຂົາທັງຫລາຍຮ້ອນໃຈ ເຮົາຈະຕຽມການລ້ຽງໃຫ້ ແລະກະທຳໃຫ້ເຂົາທັງຫລາຍມຶນເມົາ ຈົນເຂົາທັງຫລາຍຈະ
ສລົບສໄລໄປ ແລະນອນຫລັບຢູ່ຕລອດໄປ ບໍ່ຕື່ນເລີຍ
40 ເຮົາຈະນຳເຂົາທັງຫລາຍລົງມາດັ່ງລູກແກະໄປສູ່ການຂ້າ ເຫມືອນແກະເຖິກແລະແບ້ເຖິກ
41 “ບາບີໂລນຖືກຍຶດແລ້ວ ຊຶ່ງເປັນທີ່ສັຣເສີນຂອງແຜ່ນດິນໂລກຖືກຈັບແລ້ວ ບາບີໂລນໄດ້ກາຍເປັນສາເຫດໃຫ້ປລາດ
ໃຈຖ້າມກາງບັນດາປະຊາຊາດແລ້ວ
42 ທະເລຂຶ້ນມາເຫນືອບາບີໂລນເມືອງນັ້ນຖຸມແລ້ວດ້ວຍສຽງອຶກກະທຶກຂອງຄື້ນຟອງທະເລນັ້ນ
43 ຫົວເມືອງຂອງມັນກາຍເປັນຄວາມຮ້າງເປົ່າ ເປັນແຜ່ນດິນທີ່ແຫ້ງແລ້ງແລະເປັນທະເລຊາຍ ເປັນແຜ່ນດິນທີ່ບໍ່ມີຜູ້ໃດ
ອາສັຍຢູ່ ແລະບໍ່ມີມະນຸດຄົນໃດຂ້າມໄປ
44 ແລະເຮົາຈະລົງໂທດພຣະເບນໃນບາບີໂລນ ທ່ານກືນຫຍັງເຂົ້າໄປແລ້ວ ເຮົາຈະເອົາອອກຈາກປາກທ່ານເສັຽ ບັນດາ
ປະຊາຊາດຈະບໍ່ໄຫລໄປຫາທ່ານອີກ ກຳແພງແຫ່ງບາບີໂລນລົ້ມລົງແລ້ວ
45 “ໄພ່ພົນຂອງເຮົາເອີຍ ຈົ່ງອອກໄປເສັຽຈາກຖ້າມກາງມັນ ໃຫ້ທຸກຄົນເອົາຊີວິດຂອງຕົນລອດຈາກຄວາມພິໂຣດອັນ
ຮ້ອນແຮງຂອງພຣະຜູ້ເປັນເຈົ້າເທີ້ນ
46 ຢ່າໃຫ້ໃຈຂອງເຈົ້າວິຕົກແລະຢ່າໃຫ້ຢ້ານຕໍ່ຂ່າວຊຶ່ງໄດ້ຍິນໃນແຜ່ນດິນນັ້ນ ເມື່ອມີຂ່າວມາໃນປີນຶ່ງ ຕໍ່ມາອີກປີນຶ່ງກໍມີ
ຂ່າວມາ ແລະຄວາມທາຣຸນກໍມີຢູ່ໃນແຜ່ນດິນ ແລະຜູ້ປົກຄອງກໍຕໍ່ສູ້ກັບຜູ້ປົກຄອງ
47 “ເຫດສັນນັ້ນ ວັນເວລາຈະມາເຖິງ ເມື່ອເຮົາຈະລົງໂທດຮູບໂຄຣົບແຫ່ງບາບີໂລນ ແຜ່ນດິນທັງໝົດຂອງມັນຈະຕ້ອງ
ໄດ້ອາຍ ແລະບັນດາຊາວບາບີໂລນຊຶ່ງຖືກຂ້າຈະລົ້ມລົງທີ່ຖ້າມກາງມັນ
48 ແລ້ວຟ້າສວັນແລະແຜ່ນດິນໂລກ ແລະສັພສິ່ງທີ່ມີຢູ່ໃນນັ້ນ ຈະຮ້ອງເພງເພາະຄວາມຊື່ນບານເຫນືອບາບີໂລນ ເພາະ
ວ່າຜູ້ທຳລາຍຈະມາຈາກທິດເຫນືອຕໍ່ສູ້ກັບເຂົາທັງຫລາຍພຣະຜູ້ເປັນເຈົ້າກ່າວດັ່ງນີ້
49 ບາບີໂລນຈະຕ້ອງລົ້ມລົງເຫດດ້ວຍຄົນທີ່ຖືກຂ້າແຫ່ງອິສຣາເອນ ດັ່ງຜູ້ທີ່ຖືກຂ້າແຫ່ງແຜ່ນດິນໂລກທັງຫລາຍໄດ້ລົ້ມ
ລົງເພາະບາບີໂລນ

50 “ເຈົ້າທັງຫລາຍຜູ້ທີ່ລອດພົ້ນໄປຈາກດາບ ຟ້າວໄປເທີນ ຢ່າຢືນເສີຍຢູ່ ຈົ່ງລະນຶກເຖິງພຣະຜູ້ເປັນເຈົ້າຈາກທີ່ໄກ ແລະ
ໃຫ້ກຸງເຢຣູຊາເລັມເຂົ້າມາໃນຈິດໃຈຂອງເຈົ້າ
51 ວ່າ “ເຮົາໄດ້ອາຍ ເພາະເຮົາໄດ້ຍິນຄຳເຍາະເຍີ້ຍ ຄວາມອັບອາຍຄຸມໜ້າເຮົາໄວ້ ເພາະຄົນຕ່າງຊາດໄດ້ເຂົ້າໃນສະ
ຖານບໍຣິສຸດແຫ່ງພຣະວິຫານຂອງພຣະຜູ້ເປັນເຈົ້າ”
52 ພຣະຜູ້ເປັນເຈົ້າກ່າວວ່າ, “ເຫດສັນນັ້ນ ວັນເວລາຈະມາເຖິງ ເມື່ອເຮົາຈະລົງໂທດຮູບໂຄຣົບຂອງມັນ ແລະຄົນທີ່ບາດ
ເຈັບຈະຄ່ຳຄວນຢູ່ທົ່ວແຜ່ນດິນທັງສິ້ນຂອງມັນ
53 ພຣະຜູ້ເປັນເຈົ້າກ່າວວ່າ ເຖິງແມ່ນບາບີໂລນຈະຂຶ້ນໄປເທິງສວັນ ແລະເຖິງແມ່ນມັນຈະສ້າງປ້ອມກັນທີ່ສູງອັນເຂັ້ມ
ແຂງຂອງມັນໄວ້ ບັນດາຜູ້ທຳລາຍກໍຍັງມາຈາກເຮົາເໜືອມັນ
54 “ຟັງເດີ ມີສຽງຮ້ອງມາຈາກບາບີໂລນ ສຽງໄວ້ທຸກຈາກແຜ່ນດິນຂອງຄົນຄັນເດອານ
55 ເພາະພຣະຜູ້ເປັນເຈົ້າ ກຳລັງຊົງກະທຳໃຫ້ບາບີໂລນເປັນບ່ອນປະຮ້າງ ແລະກະທຳສຽງທີ່ໃຫຍ່ໂຕຂອງມັນໃຫ້ງຽບ
ຄື້ນຂອງເຂົາທັງຫລາຍຟາດຟົ້ງເໝືອນນ້ຳມາກ ສຽງອຶກກະທຶກຂອງເຂົາກໍເປັ່ງອອກມາ
56 ເພາະວ່າຜູ້ທຳລາຍໄດ້ມາເໜືອມັນ ມາເໜືອບາບີໂລນ ບັນດານັກຮົບຂອງມັນຖືກຍຶດແລ້ວ ຄັນທະນູຂອງເຂົາທັງ
ຫລາຍຖືກຫັກຖິ້ມ ເພາະພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າແຫ່ງການຕອບແທນ ພຣະອົງຈະຊົງສນອງເປັນແນ່
57 ເຮົາຈະກະທຳໃຫ້ເຈົ້ານາຍຂອງມັນ ແລະນັກປາດຂອງມັນມຶນເມົາ ເຈົ້າເມືອງຂອງມັນ ຜູ້ບັງຄັບບັນຊາຂອງມັນ ແລະ
ນັກຮົບຂອງມັນ ເຂົາທັງຫລາຍຈະນອນຫລັບຢູ່ຕລອດໄປ ບໍ່ຕື່ນອີກເລີຍ ພຣະບໍຣົມມະຫາກະສັດຜູ້ຊົງພຣະນາມວ່າ
ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້
58 “ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ກຳແພງອັນກວ້າງຂວາງຂອງບາບີໂລນ ຈະຖືກມ້າງເພລົງໃຫ້ພຽງສເມີພື້ນ
ດິນ ແລະປະຕູເມືອງສູງຂອງມັນຈະຖືກເຜົາດ້ວຍໄຟ ບັນດາປະຊາຊົນທຳງານຢ່າງໄຮ້ປໂຍດ ແລະຊົນຊາດທັງຫລາຍ
ຈະໄດ້ເຮັດວຽກສຳລັບໄຟຈົນເມື່ອຍໄປແລ້ວ
59 ຖ້ອຍຄຳຊຶ່ງເຢເຣມີຢາຜູ້ປະກາດພຣະທັມໄດ້ສັ່ງແກ່ເຊມັຍຢາບຸດເນຣີຢາຜູ້ເປັນບຸດມາຊັຍຢາ ເມື່ອເຂົາໄປຍັງບາບີ
ໂລນກັບເຊເດກີຢາກະສັດແຫ່ງຢູດາ ໃນປີທີສີ່ແຫ່ງຣັຊການຂອງທ່ານນັ້ນ ເຊຣັຍຢາເປັນຫົວໜ້າຈັດທີ່ພັກ
60 ເຢເຣມີຢາໄດ້ຂຽນບັນດາໂທດທັງຫລາຍຊຶ່ງຈະມາເຖິງບາບີໂລນນັ້ນໄວ້ໃນໜັງສື ຖ້ອຍຄຳເຫລົ່ານີ້ເປັນຄຳທີ່ຂຽນໄວ້
ກ່ຽວກັບເຣື່ອງບາບີໂລນ
61 ແລະເຢເຣມີຢາເວົ້າກັບເຊຣັຍຢາວ່າ, “ເມື່ອທ່ານມາເຖິງບາບີໂລນແລ້ວ ທ່ານຈົ່ງອ່ານຖ້ອຍຄຳເຫລົ່ານີ້ທັງໝົດເດີ
62 ແລະກ່າວວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງໄດ້ກ່າວກັບສະຖານທີ່ນີ້ວ່າ ພຣະອົງຈະຊົງຕັດອອກເສັຽ ເພື່ອວ່າຈະບໍ່
ມີສິ່ງໃດອາສັຍຢູ່ໃນນັ້ນ ບໍ່ວ່າມະນຸດຫລືສັດ ແລະຈະເປັນບ່ອນຮ້າງເປົ່າຢູ່ເປັນນິດ
63 ເມື່ອທ່ານອ່ານໜັງສືນີ້ຈົບແລ້ວ ຈົ່ງເອົາກ້ອນຫີນມັດຕິດມັນໄວ້ ແລະໂຍນມັນຖິ້ມໄປກາງແມ່ນ້ຳເອີຟຣາດ
64 ແລະຈົ່ງກ່າວວ່າ, “ບາບີໂລນຈະຈົມລົງຢ່າງນີ້ແຫລະ ບໍ່ລອຍຂຶ້ນອີກເລີຍ ເຫດດ້ວຍໂທດຊຶ່ງເຮົາຈະນຳມາເໜືອມັນ”
ຖ້ອຍຄຳຂອງເຢເຣມີຢາມີພຽງນີ້

## 52 ເຊເດກີຢາຖືກຄຸກຈົນເທົ່າຕາຍ

The Destruction of Jerusalem Reviewed

(2 ກສດ 24:18-25.26; 2 ຂຄວ 36:11-20; ຢຣມ 39:1-10)

1 ເຊເດກີຢາໄດ້ເປັນກະສັດເມື່ອອາຍຸຊາວເອັດປີ ຊົງປົກຄອງຢູ່ທີ່ກຸງເຢຣູຊາເລັມເປັນເວລາສິບເອັດປີ ພຣະມານດາ
ຂອງພຣະອົງຊື່ ຮາມູຕານ ຊຶ່ງເປັນບຸດສາວຂອງເຢເຣມີຢາຊາວເມືອງລິບນາ
2 ໃນສາຍພຣະເນດຂອງພຣະຜູ້ເປັນເຈົ້ານັ້ນ ຊົງເຫັນວ່າກະສັດເຊເດກີຢາໄດ້ຊົງທຳສິ່ງທີ່ຊົ່ວຮ້າຍຫລາຍ ເຊັ່ນດຽວກັນ
ກັບກະສັດເຢໂຮອາຄິມໄດ້ທຳ

3 ສະນັ້ນ ສະພາບຂອງສັງຄົມໃນກຸງເຢຣູຊາເລັມ ແລະໃນຢູດາຈຶ່ງຊົ່ວຮ້າຍຫລາຍ ຈົນພຣະຜູ້ເປັນເຈົ້າຊົງພຣະພິໂຣດ ແລະປະຖິ້ມຊາວເມືອງນີ້ ກະສັດເຊເດກີຢາໄດ້ກະບົດຕໍ່ສູ້ກະສັດບາບີໂລນ

4 ຕໍ່ມາໃນວັນທີສິບເດືອນສິບຂອງປີທີເກົ້າແຫ່ງຣັຊການເຊເດກີຢາກະສັດຢູດາ ເນບູກາດເນັສຊາກະສັດບາບີໂລນໄດ້ຍົກທັບມາອ້ອມກຸງເຢຣູຊາເລັມ ໄດ້ຕັ້ງຄ້າຍໄວ້ນອກເມືອງ ແລະສ້າງກຳແພງອ້ອມເມືອງ

5 ກຸງເຢຣູຊາເລັມຈຶ່ງຖືກປິດລ້ອມຈົນເຖິງປີທີສິບເອັດແຫ່ງຣັຊການເຊເດກີຢາ

6 ເມື່ອວັນທີເກົ້າເດືອນສີ່ປີດຽວກັນນັ້ນ ໄດ້ເກີດການອຶດຢາກຂຶ້ນຢ່າງຮ້າຍແຮງ ຈົນປະຊາຊົນບໍ່ມີຫຍັງຈະກິນ

7 ແລ້ວພວກສັດຕຣູໄດ້ມ້າງກຳແພງເມືອງບ່ອນນຶ່ງອອກ ທະຫານທັງຫມົດທີ່ຢູ່ໃນເມືອງຈຶ່ງພາກັນຫນີ ໄປຕາມທາງປະຕູເມືອງລະຫວ່າງກຳແພງທັງສອງ ພວກເຂົາໄດ້ຫນີອອກໄປທາງສວນອຸທະຍານໃນເວລາກາງຄືນ ຝ່າຍຄົນຄັນເດອານກໍລ້ອມຢູ່ຮອບກຸງ ແລະເຂົາທັງຫລາຍມຸ້ງຫນ້າໄປທາງຮ່ອມພູອາຣາບາ

8 ແຕ່ກອງທັບຂອງຄົນຄັນເດອານໄດ້ໄລ່ຕິດຕາມກະສັດໄປ ແລະໄປທັນເຊເດກີຢາໃນທີ່ທົ່ງຮາບພຽງໃກ້ເມືອງເຢຣິໂກ ທະຫານທັງຫມົດຂອງພຣະອົງໄດ້ຫນີປະພຣະອົງໄປ

9 ຫລັງຈາກຈັບເຊເດກີຢາໄດ້ແລ້ວ ເຂົາກໍນຳພຣະອົງມາມອບໃຫ້ກະສັດເນບູກາດເນັສຊາ ຊຶ່ງຊົງປະທັບຢູ່ເມືອງຣິບລາ ໃນດິນແດນຮາມັດ ແລະຊົງຕັດສິນລົງໂທດກະສັດເຊເດກີຢາຢູ່ທີ່ນັ້ນ

10 ກະສັດແຫ່ງບາບີໂລນໄດ້ປະຫານບຸດຊາຍທັງຫລາຍຂອງເຊເດກີຢາຕໍ່ຫນ້າຕໍ່ຕາທ່ານແລະໄດ້ປະຫານຊີວິດພວກເຈົ້ານາຍທັງສິ້ນຂອງຢູດາເສັຽທີ່ເມືອງຣິບລາ

11 ພຣະອົງໄດ້ຄວັດຫນ່ວຍຕາຂອງເຊເດກີຢາອອກ ແລະໄດ້ຜູກໂສ້ນຳໄປຍັງບາບີໂລນ ແລ້ວຂັງໄວ້ໃນຄຸກຈົນວັນທີ່ທ່ານສິ້ນຊີວິດ

12 ມື້ວັນທີສິບເດືອນຫ້າ ຊຶ່ງເປັນປີທີສິບເກົ້າແຫ່ງຣັຊການເນບູກາດເນັສຊາກະສັດແຫ່ງບາບີໂລນ ເນບູຊາເຣດານຜູ້ເປັນຣາຊເລຂາແລະຜູ້ບັນຊາການທະຫານ ໄດ້ເຂົ້າໄປໃນກຸງເຢຣູຊາເລັມ

13 ແລ້ວເຂົາໄດ້ເຜົາພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະພຣະຣາຊວັງ ແລະບັນດາເຮືອນທັງສິ້ນຂອງກຸງເຢຣູຊາເລັມ ແລະບ້ານເຮືອນຂອງບຸກຄົນສຳຄັນຖິ້ມ

14 ສ່ວນກອງທັບທັງສິ້ນຂອງຄົນຄັນເດອານ ຜູ້ຢູ່ກັບຜູ້ບັງຄັບບັນຊາທະຫານຮັກສາພຣະອົງໄດ້ທຳລາຍກຳແພງເມືອງທັງຫມົດທີ່ຢູ່ຮອບກຸງເຢຣູຊາເລັມລົງ

15 ແລະເນບູກາດເນັສຊາໄດ້ຈັບປະຊາຊົນທີ່ເຫລືອຢູ່ໃນເມືອງ ຮວມທັງຄົນທີ່ຫນີເຂົ້າມາມອບຕົວຕໍ່ທ່ານກັບພວກນາຍຊ່າງທີ່ເຫລືອຢູ່ໄປເປັນຊະເລີຍທີ່ບາບີໂລນ

16 ແຕ່ເນບູຊາເຣດານຜູ້ບັນຊາການທະຫານຮັກສາພຣະອົງໄດ້ປະຄົນທີ່ທຸກຍາກທີ່ສຸດໃນແຜ່ນດິນໄວ້ໃຫ້ເປັນຄົນທຳສວນອະງຸ່ນ ແລະເຮັດໄຮ່ໄຖນາ

17 ບັນດາເສົາທອງສຳຣິດຊຶ່ງຢູ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະເສົາແລະຂັນນັ້ນທອງສຳຣິດ ຊຶ່ງຢູ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້ານັ້ນຄົນຄັນເດອານໄດ້ທຸບເສັຽເປັນທ່ອນໆ ແລະຂົນເອົາທອງສຳຣິດທັງຫມົດໄປຍັງບາບີໂລນ

18 ພວກເຂົາຍັງໄດ້ຂົນເອົາເຄື່ອງໃຊ້ສຳລັບທຳຄວາມສະອາດແທ່ນບູຊາ ຄືສຽມ ຊວ້ານ ຄຸໃສ່ຂີ້ເທົ່າໄຟ ຖາດແລະມີດຕັດໄສ້ຕະກຽງ ໂອໃສ່ເລືອດເວລາຂ້າສັດຖວາຍບູຊາ ຫມໍ້ສຳລັບເຄື່ອງຫອມບູຊາ ແລະເຄື່ອງທອງສຳຣິດທັງຫມົດທີ່ໃຊ້ໃນພິທີການຂອງວິຫານ

19 ພວກເຂົາໄດ້ຂົນເອົາທຸກສິ່ງທີ່ທຳດ້ວຍຄຳຫລືເງິນໄປ ຄື ຫມໍ້ນ້ອຍ ອ່າງໃສ່ຖ່ານຫີນ ໂອໃສ່ເລືອດ ຄຸໃສ່ຂີ້ເທົ່າໄຟ ຕີນຕັ້ງຕະກຽງ ຖາດເຄື່ອງຫອມບູຊາ ຈອກເຄື່ອງດື່ມບູຊາ

20 ເຄື່ອງທອງສຳຣິດທີ່ກະສັດໂຊໂລໂມນທຳໄວ້ໃນພຣະວິຫານ ຄືເສົາສອງເສົາ ຕີນເສົາ ອ່າງໃຫຍ່ໃສ່ນ້ຳ ຮູບງົວສິບສອງໂຕທີ່ຮອງຮັບອ່າງໃຫຍ່ນັ້ນ ເຄື່ອງເຫລົ່ານີ້ຫນັກຫລາຍຈົນຊັ່ງບໍ່ໄດ້

21 ເສົາສອງເສົານັ້ນ ແຕ່ລະເສົາແທກໄດ້ດັ່ງນີ້ ລວງສູງສິບແປດສອກ ລວງອ້ອມສິບສອງສອກ ຂ້າງໃນເປັນໂກນ ຄວາມ
ຫນາຂອງເສົາສີ່ນີ້ວ
22 ຢູ່ເທິງຫົວເສົາມີບົວທອງສຳຣິດ ບົວແຕ່ລະດອກສູງຫ້າສອກ ມີຮູບພວງມາລັຍແລະຮູບຫມາກພິລາອ້ອມຮອບບົວນັ້ນ
ສິ່ງທັງຫມົດນີ້ທຳດ້ວຍທອງສຳຣິດ
23 ເທິງພວງມາລັຍໂດຍຮອບມີຮູບຫມາກພິລາຮ້ອຍຫນ່ວຍ ແຕ່ຫລຽວຂຶ້ນໄປຈາກເບື້ອງລຸ່ມເຫັນມີເກົ້າສິບຫົກຫນ່ວຍ
24 ນອກຈາກນັ້ນ ຜູ້ບັນຊາການທະຫານຮັກສາພຣະອົງໄດ້ຈັບເຊຣັຍຢາມະຫາປະໂຣຫິດ ເຊຟັນຢາຜູ້ຮອງປະໂຣຫິດ
ແລະຄົນອື່ນໆອີກທີ່ຮັບໃຊ້ຢູ່ໃນພຣະວິຫານສາມຄົນໄປເປັນຊະເລີຍ
25 ທ່ານໄດ້ຈັບເອົາຜູ້ບັນຊາການທະຫານຄົນນຶ່ງ ທີ່ປຶກສາມະຫາກະສັດເຈັດຄົນ ຮອງຜູ້ບັນຊາການທະຫານຊຶ່ງຮັບຫນ້າ
ທີ່ເກນທະຫານ ແລະຄົນສຳຄັນອື່ນໆອີກຫົກສິບຄົນໄປຈາກເມືອງນັ້ນ
26 ເນບູຊາຣາດານໄດ້ຈັບຄົນເຫລົ່ານີ້ນຳໄປມອບໃຫ້ກະສັດບາບີໂລນທີ່ເມືອງຣິບລາ
27 ກະສັດແຫ່ງບາບີໂລນຊົງຕີເຂົາ ແລະລົງໂທດເຂົາຈົນຕາຍຢູ່ເມືອງຣິບລາ ດິນແດນຮາມັທ
28 ຕໍ່ໄປນີ້ແມ່ນຈຳນວນປະຊາຊົນຢູດາທີ່ຖືກກະສັດເນບູກາດເນັສຊາກວາດຕ້ອນອອກຈາກປະເທດໄປເປັນຊະເລີຍ ຄື
ໃນຣັຊການປີທີເຈັດກວາດຕ້ອນໄປ ພວກຢິວສາມພັນຊາວສາມຄົນ
29 ໃນປີທີສິບແປດແຫ່ງຣັຊການເນບູກາດເນັສຊາທ່ານຂົນຊະເລີຍຈາກກຸງເຢຣູຊາເລັມແປດຮ້ອຍສາມສິບສອງຄົນ
30 ໃນປີທີຊາວສາມແຫ່ງຣັຊການເນບູກາດເນັສຊາ ເນບູຊາຣາດານຜູ້ບັງຄັບບັນຊາທະຫານຮັກສາພຣະອົງຈັບຢິວເປັນ
ຊະເລີຍເຈັດຮ້ອຍສີ່ສິບຫ້າຄົນ ຮວມຄົນທັງຫມົດເປັນສີ່ພັນກັບຫົກຮ້ອຍຄົນ

### ເຢຮົວອາຄິນຮັບການປົດປ່ອຍແລະຮັບກຽດໃນບາບີໂລນ

Jehoiachin Favored in Captivity

(2 ກສດ 25:27-30)

31 ແລະໃນປີທີສາມສິບເຈັດແຫ່ງການເປັນຊະເລີຍຂອງເຢຮົວອາຄິນກະສັດແຫ່ງຢູດານັ້ນ ເມື່ອວັນທີຊາວຫ້າໃນເດືອນ
ທີສິບສອງ ເອວິນເມໂຣດັກກະສັດແຫ່ງບາບີໂລນ ໃນປີທີ່ທ່ານຂຶ້ນສເວີຍຣາຊ ທ່ານໄດ້ຍົກຫົວຂອງເຢຮົວອາຄິນກະ
ສັດແຫ່ງຢູດາຂຶ້ນ ແລະໄດ້ນຳທ່ານອອກມາຈາກຄຸກ
32 ພຣະອົງກ່າວຢ່າງເມດຕາຕໍ່ທ່ານ ແລະໃຫ້ນັ່ງເທິງທີ່ນັ່ງເຫນືອກວ່າບັນດາກະສັດທັງຫລາຍທີ່ຢູ່ໃນບາບີໂລນ
33 ດັ່ງນັ້ນເຢຮົວອາຄິນຈຶ່ງໄດ້ຖ່າຍເຄື່ອງນຸ່ງນັກໂທດອອກຈາກກາຍແລະໄດ້ຮັບປະທານອາຫານທີ່ໂຕະສເວີຍຂອງພຣະ
ຣາຊາທຸກວັນຈົນສິ້ນພຣະຊົນ
34 ສ່ວນງົບປະມານທີ່ໃຫ້ນັ້ນທ່ານໄດ້ຮັບຂອງພຣະຣາຊທານຈາກກະສັດຕາມຄວາມຕ້ອງການຢູ່ສເມີ ຕລອດເມື່ອທ່ານ
ມີຊີວິດຢູ່ຈົນ ວັນຕາຍຂອງທ່ານ